

# ອາຊຽນ

## ຄູ່ມືວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສຳລັບຜູ້ຕອບໂຕ້ດ່ານໜ້າ:

### ການປົກປ້ອງສິດທິຂອງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ



Australian Aid | ASEAN-Australia Counter Trafficking

**ຂໍ້ຄວາມປະຕິເສດຄວາມຮັບຜິດຊອບ:** ຄູ່ມືອາຊຽນ ວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສໍາລັບຜູ້ຕອບໂຕ້ດ່ານໜ້າ ແມ່ນໄດ້ຮັບການພັດທະນາຂຶ້ນໂດຍ ຄະນະກໍາມາທິການອາຊຽນ ວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິແມ່ຍິງ ແລະ ເດັກນ້ອຍ (ACWC) ເຊິ່ງໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT). ຄວາມຄິດເຫັນຕ່າງໆທີ່ສະແດງໃນເອກະສານສະບັບນີ້ ຈະບໍ່ແມ່ນການສະແດງເຖິງສະພາບ ຫຼື ທັດສະນະທີ່ເປັນທາງການຂອງອາຊຽນ ແລະ ລັດສະມາຊິກອາຊຽນ, ແລະ ບໍ່ແມ່ນຄວາມຄິດເຫັນຂອງລັດຖະບານອົດສະຕຣາລີ ຫຼື ສະຖາບັນອື່ນໆ.

# ອາຊຽນ

## ຄູ່ມືວ່າດ້ວຍການບໍ່ເຮັດໃພອັນຕະລາຍ ສຳລັບຜູ້ຕອບໂຕ້ດ່ານໜ້າ:

### ການປົກປ້ອງສິດທິຂອງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

# ສາລະບານ


**ຄຳຂອບໃຈ** ..... **II**

**ຄຳນຳໂດຍ ACWC** ..... **III**

**ຄຳເຫັນຈາກເອກອັກຄະລັດຖະທູດອິດສະຕຣາລີ ປະຈຳອາຊຽນ** ..... **V**

**ການນຳໃຊ້ຄູ່ມືນີ້** ..... **1**

ສຳລັບໃຜ ..... 1

ວິທີການນຳໃຊ້ ..... 1

ເອກະສານອື່ນໆທີ່ເປັນປະໂຫຍດ ..... 1

**ວິທີການ** ..... **2**

**ກອບແນວຄວາມຄິດຫຼັກ ແລະ ຄຳນິຍາມ** ..... **3**

**ການບໍ່ເຮັດໄພອັນຕະລາຍ ໃນການຕ້ານການຄ້າມະນຸດແມ່ນຫຍັງ?** ..... **6**

**ແນວຄວາມຄິດຂອງການບໍ່ເຮັດໄພອັນຕະລາຍ** ..... **6**

**ການບໍ່ເຮັດໄພອັນຕະລາຍ ແລະ ການຄ້າມະນຸດ** ..... **6**

**ກອບການເຮັດວຽກລະຫວ່າງປະເທດ ເພື່ອຄວາມກ້າວໜ້າ ການບໍ່ເຮັດໄພອັນຕະລາຍ** ..... **7**

**ຄູ່ມື ແລະ ກອບການເຮັດວຽກຂອງອາຊຽນ ເພື່ອຄວາມກ້າວໜ້າການບໍ່ເຮັດໄພອັນຕະລາຍ** ..... **8**

**ການນຳໃຊ້ ການບໍ່ເຮັດໄພອັນຕະລາຍໃນໄລະການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໂດຍກົງ** ..... **10**

**ການກຳນົດຕົວຜູ້ຖືກເຄາະຮ້າຍ** ..... 11

1. ຜູ້ຖືກເຄາະຮ້າຍບໍ່ໄດ້ຖືກກຳນົດຕົວ ໃນຖານະຜູ້ຖືກເຄາະຮ້າຍ ..... 13
2. ການຖືເປັນຄະດີອາຍາ, ຈັບຕົວ, ກັກຂັງ ແລະ ຖືກເນລະເທດ ..... 19
3. ການເປັນຜູ້ຖືກເຄາະຮ້າຍຊ້ຳຄືນ ໃນລະຫວ່າງການສຳພາດ ..... 21
4. ບໍ່ມີຄວາມເຂັ້ມແຂງ/ບໍ່ມີອຳນາດ, ຖືກບັງຄັບໃຫ້ກຳນົດຕົວ ແລະ ຊ່ວຍເຫຼືອ ..... 29
5. ການຖືກສັງຄົມປະນາມ ແລະ ປະຕິເສດຈາກຄອບຄົວ ແລະ ຊຸມຊົນ ..... 31
6. ຄວາມກົດດັນ ແລະ ກັງວົນໃນລະຫວ່າງຂະບວນການສິ່ງຕໍ່ ..... 33

**ການຟື້ນຟູ, ສະທ້ອນຄືນ ແລະ ສູນພັກເຊົາ** ..... **36**

1. ບໍ່ມີຊ່ວງເວລາສະທ້ອນຄືນ ເພື່ອຕັດສິນໃຈຕໍ່ກັບທາງເລືອກ ..... 38
2. ຂາດການເຂົ້າເຖິງສູນພັກເຊົາ ຫຼື ທີ່ພັກອາໄສຊົ່ວຄາວ ..... 40
3. ສູນພັກເຊົາ ແລະ ການຊ່ວຍເຫຼືອອື່ນໆ ແມ່ນຂຶ້ນກັບການຮ່ວມມືໃນການດຳເນີນຄະດີທາງອາຍາ ..... 42
4. ສູນພັກເຊົາ ທີ່ຈຳກັດເສລີພາບໃນການເຄື່ອນຍ້າຍ ແລະ ການສື່ສານຂອງຜູ້ຖືກເຄາະຮ້າຍ ..... 44
5. ຂາດການບໍລິການ ແລະ ການສະໜັບສະໜູນສະເພາະດ້ານ ແລະ ສະເພາະບຸກຄົນ ..... 48

**ການກັບຄືນ ແລະ ການກັບຄືນສູ່ສັງຄົມ** ..... **51**

1. ການບັງຄັບໃຫ້ກັບຄືນຖິ່ນກຳເນີດ ..... 53
2. ການກັບຄືນທີ່ບໍ່ປອດໄພ ແລະ ບໍ່ມີກຽດສັກສີ ..... 56
3. ການສະໜັບສະໜູນ ແລະ ການບໍລິການການກັບຄືນສູ່ສັງຄົມ ມີຂໍ້ຈຳກັດ ແລະ/ຫຼື ບໍ່ສອດຄ່ອງກັບຄວາມຕ້ອງການຂອງ ຜູ້ຖືກເຄາະຮ້າຍ ..... 57
4. ການບໍລິການ ການສະໜັບສະໜູນ ແລະ ການກັບຄືນສູ່ສັງຄົມ ທີ່ບໍ່ໄດ້ອີງໃສ່ຊຸມຊົນ ..... 62
5. ໂຄງການ ການກັບຄືນສູ່ສັງຄົມ ທີ່ເປັນການສົ່ງເສີມແນວຄິດດັ້ງເດີມກ່ຽວກັບບົດບາດຍິງ-ຊາຍ ແລະ ບັນຖັດຖານ ທາງສັງຄົມທີ່ເປັນອັນຕະລາຍ ..... 64

**ດ້ານການແພດ ແລະ ສຸຂະພາບຈິດ** ..... **65**

1. ຂາດການເຂົ້າເຖິງການປິ່ນປົວ ແລະ ການເບິ່ງແຍງດ້ານຈິດໃຈໂດຍທັນທີ ..... 67
2. ການບໍລິການດ້ານສຸຂະພາບທີ່ຈຳກັດຫຼື ໄລຍະສັ້ນ ..... 69
3. ຂາດການເບິ່ງແຍງ ທີ່ຮັບຮູ້ເຖິງຄວາມບອບຊ້ຳດ້ານຈິດໃຈ ..... 71
4. ຂາດການເບິ່ງແຍງທີ່ເໝາະສົມທາງວັດທະນະທຳ ແລະ ເປັນລາຍບຸກຄົນ ..... 73

**ຂະບວນການຍຸຕິທຳທາງອາຍາ** ..... **75**

1. ການໃຫ້ຂໍ້ມູນທີ່ຜິດພາດ, ການຂົ່ມຂູ່ ຫຼື ການບັງຄັບ ເພື່ອໃຫ້ການຕໍ່ສູ້ຜູ້ທີ່ຂູດຮີດເຂົາເຈົ້າ ..... 77
2. ການສູນເສຍຄວາມເປັນສ່ວນຕົວ ແລະ ບໍ່ລະບຸຊື່ ..... 79
3. ຂາດການປົກປ້ອງ - ການແກ້ແຄ້ນຈາກຜູ້ຄ້າມະນຸດ ..... 80
4. ການເປັນຜູ້ຖືກເຄາະຮ້າຍຊ້ຳຄືນໃນຂະບວນຍຸຕິທຳທາງອາຍາ ..... 84
5. ການດຳເນີນຄະດີ ແລະ ການຕັດສິນ ທີ່ອີງຕາມອັກຄະຕິ ແລະ ແນວຄິດແບບດັ້ງເດີມ ..... 88
6. ຄວາມກົດດັນດ້ານເສດຖະກິດ ແລະ ການຊົດເຊີຍ ຫຼື ການປິ່ນປົວ ..... 90
7. ຂາດທີ່ປຶກສາ ແລະ ຜູ້ຕາງໜ້າທາງດ້ານກົດໝາຍ ..... 93

**ເອກະສານອ້າງອີງ** ..... 94

**ເອກະສານຊ້ອນທ້າຍ 1: ຕາຕະລາງ ສະແດງການແຍກຈຳນວນຜູ້ເຂົ້າຮ່ວມໃນກອງປະຊຸມປຶກສາຫາລືລະດັບຊາດ** ..... **96**

# ຄໍາຂອບໃຈ

ຄູ່ມືອາຊຽນວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສະບັບນີ້ ແມ່ນຂຽນໂດຍ ທ່ານ ນາງ ເຈີນ ເຈີນ ລີ (Chen Chen Lee). ເຊິ່ງເປັນໂຄງການຂອງຄະນະກໍາມາທິການອາຊຽນ ວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິແມ່ຍິງ ແລະ ເດັກນ້ອຍ (ACWC) ພາຍໃຕ້ *ໂຄງການໄລຍະຍາວ ກ່ຽວກັບການເພີ່ມຄວາມອາດສາມາດໃຫ້ແກ່ຜູ້ຕອບໂຕ້ດ່ານໜ້າ ໃນການຕ້ານການຄ້າມະນຸດ ດ້ວຍການໃຊ້ວິທີການທີ່ເນັ້ນໃສ່ຜູ້ຖືກເຄາະຮ້າຍ ແລະ ການຄໍານຶງເຖິງຄວາມລະອຽດອ່ອນດ້ານເພດຍິງ-ຊາຍ* ("ໂຄງການ") ທີ່ໄດ້ຮັບການສະໜັບສະໜູນໂດຍແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT).

ຄະນະກໍາມາທິການ ACWC ຂໍສະແດງຄວາມຂອບໃຈມາຍັງ ທ່ານ ນາງ ສຣີ ດັນຕີ ອັນວາ (Sri Danty Anwar), (ຕາງໜ້າດ້ານການສົ່ງເສີມສິດທິແມ່ຍິງຂອງອິນໂດເນເຊຍ ປະຈໍາຄະນະກໍາມາທິການ ACWC ສໍາລັບການຄຸ້ມຄອງໂຄງການ ແລະ ຄູ່ມືອາຊຽນວ່າດ້ວຍການບໍ່ເຮັດໄພອັນຕະລາຍ. ຂໍສະແດງຄວາມຂອບໃຈເປັນພິເສດ ມາຍັງສະມາຊິກຄະນະເຮັດວຽກດ້ານວິຊາການ: ທ່ານ ນາງ ສຣີ ດັນຕີ ອັນວາ (Sri Danty Anwar,ຄະນະກໍາມາທິການ ACWC ອິນໂດເນເຊຍ), ທ່ານ ນາງ ຍັນຕີ ກູສຸມາວາດນີ (Yanti Kusumawardhani, ຄະນະກໍາມາທິການ ACWC ອິນໂດເນເຊຍ), ສາດສະດາຈານ ລໍເດຊີຕາ ໂສເບຣເວກາ-ຊານ (Lourdesita Sobrevega-Chan, ຄະນະກໍາມາທິການ ACWC ຟີລິບປິນ), ດຣ. ຣັດຊະດາ ໄຊຍະຄຸບຕາ (Ratchada Jayagupta, ຄະນະກໍາມາທິການ ACWC ປະເທດໄທ), ທ່ານ ວັນໄຊ ໂຣດຈະນະວົງ (Wanchai Roujanavong, ຄະນະກໍາມາທິການ ACWC ປະເທດໄທ). ຂໍສະແດງຄວາມຂອບໃຈມາຍັງ ຜູ້ເຂົ້າຮ່ວມທຸກທ່ານທີ່ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລືລະດັບຊາດ ທີ່ໄດ້ຈັດຂຶ້ນໃນປະເທດກໍາປູເຈຍ, ອິນໂດເນເຊຍ, ສປປ ລາວ, ຟີລິບປິນ, ໄທ ແລະ ຫວຽດນາມ.

ຄະນະກໍາມາທິການ ACWC ຂໍສະແດງຄວາມຂອບໃຈມາຍັງທີມງານຂອງແຜນງານ ASEAN-ACT ທີ່ໄດ້ປະກອບສ່ວນເຂົ້າໃນການພັດທະນາຄູ່ມືອາຊຽນວ່າດ້ວຍການບໍ່ເຮັດໄພອັນຕະລາຍ, ໂດຍສະເພາະ ທ່ານ ນາງ ນູຣູ ຄົວເຣຍ (Nurul Qoiriah), ຜູ້ອໍານວຍການວຽກງານຄວາມສະເໝີພາບ, ສິດທິຜູ້ຖືກເຄາະຮ້າຍ, ຄວາມພິການ ແລະ ການຮວມເອົາທຸກຄົນໃນສັງຄົມ. ພະແນກຄວາມທຸກຍາກ, ການລຶບລ້າງ ແລະ ບົດບາດຍິງ-ຊາຍ ສໍານັກງານເລຂາທິການອາຊຽນ ຍັງໄດ້ໃຫ້ການສະໜັບສະໜູນອັນລໍ້າຄ່າ ໃນການເຮັດໃຫ້ຄູ່ມືນີ້ສໍາເລັດຜົນ.

# ຄຳນຳໂດຍ ACWC

ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍມາຍັງ ຄະນະກຳມາທິການອາຊຽນ ວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດຂອງແມ່ຍິງ ແລະ ເດັກນ້ອຍ (ACWC) ທີ່ໄດ້ສຳເລັດ ຄູ່ມືຂອງອາຊຽນ ວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສຳລັບຜູ້ຕອບໂຕ້ດ່ານໜ້າ: ການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຄະນະກຳມາທິການ ACWC ຮູ້ສຶກພາກພູມໃຈເປັນຢ່າງຍິ່ງຕໍ່ກັບຂໍ້ລິເລີ່ມດັ່ງກ່າວ ຊຶ່ງເປັນຂີດໝາຍສຳຄັນໃນການຍົກສູງບົດບາດຂອງແມ່ຍິງ ແລະ ເດັກນ້ອຍອາຊຽນ ໃນການຕ້ານກັບການຄ້າມະນຸດ.

ໃນຊຸມປີຜ່ານມາ, ຄະນະກຳມາທິການ ACWC ຍັງຄົງສືບຕໍ່ເລັ່ງລັດຄວາມພະຍາຍາມແບບຮວມໝູ່ຂອງອາຊຽນໃນການຢັບຢັ້ງທຸກຮູບແບບຂອງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນພາກພື້ນ ໂດຍຜ່ານການຈັດຕັ້ງປະຕິບັດ ແຜນດຳເນີນງານຂອງພາກພື້ນອາຊຽນ ວ່າດ້ວຍ ການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ກັບແມ່ຍິງ (RPA EVAW) ຢ່າງຕັ້ງໜ້າ ຕັ້ງແຕ່ປີ 2016. ນອກນັ້ນ, ຄະນະກຳມາທິການ ACWC ຍັງໃຫ້ຄຳໝັ້ນສັນຍາຢ່າງໜັກແໜ້ນ ເພື່ອສະໜັບສະໜູນການປະຕິບັດພັນທະຂອງອາຊຽນໃຫ້ປະກົດຜົນເປັນຈິງ ຕາມສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ACTIP) ຫຼັງຈາກໄດ້ຮັບຮອງໃນປີ 2015. ຄະນະກຳມາທິການ ACWC ສືບຕໍ່ຊີ້ນຳການຈັດຕັ້ງປະຕິບັດແຜນດຳເນີນງານ RPA EVAW ແລະ ຈະເຮັດວຽກປະສານສົມທົບກັບອົງກອນຕ່າງໆລະດັບຂະແໜງການທີ່ກ່ຽວຂ້ອງ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດສົນທິສັນຍາ ACTIP ໃນທົ່ວອາຊຽນຢ່າງເຕັມຮູບແບບ.

ຄະນະກຳມາທິການ ACWC ຮັບຮູ້ວ່າ ສົນທິສັນຍາ ACTIP ໄດ້ຮັບການຍອມຮັບຈາກ ອົງການສະຫະປະຊາຊາດ ວ່າເປັນໜຶ່ງໃນມາດຕະຖານສູງສຸດໃນການປົກປ້ອງ, ປາບປາມ ແລະ ການຮ່ວມມືໃນການຕ້ານການຄ້າມະນຸດ, ເຊິ່ງໃນບາງຂົງເຂດທີ່ໄດ້ຮັບການພິຈາລະນາວ່າມີຄວາມຄືບໜ້າຫຼາຍກວ່າ ອະນຸສັນຍາວ່າດ້ວຍ ການປ້ອງກັນ, ການປາບປາມ ແລະ ລົງໂທດຕໍ່ການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (2000), ໂດຍສະໜັບສະໜູນແກ່ ສົນທິສັນຍາຂອງສະຫະປະຊາຊາດ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ.

ຕໍ່ກັບສິ່ງດັ່ງກ່າວນີ້, ຄະນະກຳມາທິການ ACWC ໄດ້ເຫັນຄຸນຄ່າຂອງການສະໜັບສະໜູນຂອງລັດຖະບານອົດສະຕຣາລີ ທີ່ໄດ້ໃຫ້ທຶນສະໜັບສະໜູນແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT) ໃນການເລັ່ງລັດຄວາມພະຍາຍາມຂອງອາຊຽນ ໃນການຕ້ານການຄ້າມະນຸດ, ສ້າງຄວາມຄືບໜ້າອັນສຳຄັນທີ່ອາຊຽນໄດ້ບັນລຸຜົນໃນຊຸມປີຜ່ານມາ, ໂດຍສະເພາະໃຫ້ການຊີ້ນຳໃນລະດັບພາກພື້ນ ເພື່ອແກ້ໄຂຄວາມຕ້ອງການອັນຈຳເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ສິ່ງດັ່ງກ່າວ ແມ່ນລວມເຖິງເອົາ 'ຄຳແນະນຳຂອງ ASEAN ກ່ຽວກັບ ການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ ດ້ານບົດບາດຍິງ-ຊາຍ' ແລະ 'ຄຳແນະນຳ ແລະ ຂັ້ນຕອນໃນການແກ້ໄຂຄວາມຕ້ອງການອັນຈຳເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນພາກພື້ນ'.

ພວກເຮົາຍັງໃຫ້ຄວາມສຳຄັນ ໃນການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ການຄວາມເຄົາລົບ ແລະ ການຟື້ນຟູກຽດສັກສີຂອງເຂົາເຈົ້າ ແລະ ໃຫ້ການສະໜັບສະໜູນເຂົາເຈົ້າໃນການກັບຄືນສູ່ສັງຄົມ ແລະ ສ້າງຊີວິດໃໝ່ໃຫ້ແກ່ເຂົາເຈົ້າ. ເພື່ອໃຫ້ປະຕິບັດໄດ້ເຊັ່ນນັ້ນ, ຄະນະກຳມາທິການ ACWC ໄດ້ໃຫ້ບູລິມະສິດໃນການສ້າງຂີດຄວາມສາມາດໃຫ້ແກ່ຜູ້ຕອບໂຕ້ດ່ານໜ້າໃນການໃຫ້ການບໍລິການສະໜັບສະໜູນ ແລະ ປົກປ້ອງຜູ້ຖືກເຄາະຮ້າຍຢ່າງມີປະສິດທິພາບ, ດ້ວຍຄວາມເຫັນອົກເຫັນໃຈ, ຮອບດ້ານ ແລະ ບໍ່ມີການຕັດສິນເຂົາເຈົ້າ.

ຄູ່ມືອາຊຽນວ່າດ້ວຍການບໍ່ເຮັດໄພອັນຕະລາຍ ສໍາລັບຜູ້ຕອບໂຕ້ດ່ານໜ້າ ແມ່ນຜົນງານອັນໃຫ່ຍຫຼວງຈາກການຮ່ວມມືທີ່ເຂັ້ມແຂງກັບແຜນງານ ASEAN-ACT ໃນການປັບປຸງການປົກປ້ອງຜູ້ຖືກເຄາະຮ້າຍໃນອາຊີຕາເວັນອອກສ່ຽງໃຕ້ ໂດຍຜ່ານການນໍາໃຊ້ວິທີການທີ່ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ຄໍານຶງເຖິງບົດບາດຍິງ-ຊາຍ ໃນທຸກຂັ້ນຕອນຂອງການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໂດຍກົງ. ເຊິ່ງມີຈຸດປະສົງເພື່ອຊ່ວຍເຫຼືອຜູ້ຕອບໂຕ້ທໍາອິດ ແລະ ສະໜັບສະໜູນບຸກຄົນຈາກທັງລັດຖະບານ ແລະ ອົງການຈັດຕັ້ງບໍ່ສັງກັດລັດຖະບານ ຜູ້ທີ່ໄດ້ຕິດຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍໄດ້ເອົາໃຈໃສ່ໃນການພິຈາລະນາ ແລະ ຮັບປະກັນວ່າຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ ໄດ້ຮັບການແກ້ໄຂຢ່າງເຕັມສ່ວນ ແລະ ສິດຂອງເຂົາເຈົ້າຕໍ່ກັບຄວາມປອດໄພ ແລະ ຮັບປະກັນວ່າເຂົາເຈົ້າໄດ້ຮັບການປົກປ້ອງ ໃນເວລາດໍາເນີນການໃຫ້ການຊ່ວຍເຫຼືອ ແລະ ການເຮັດວຽກກັບເຂົາເຈົ້າ.

ຄູ່ມືດັ່ງກ່າວນີ້ ແມ່ນສະທ້ອນໃຫ້ເຫັນເຖິງຄວາມເປັນຈິງ ແລະ ສິ່ງທ້າທາຍທີ່ຜູ້ປະຕິບັດຕົວຈິງໄດ້ປະເຊີນ ໃນການໃຫ້ການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ໃຫ້ຂໍ້ສະເໜີແນະນໍາມາດຕະການພາກປະຕິບັດຕົວຈິງ ເພື່ອປ້ອງກັນ ແລະ ຫຼຸດຜ່ອນໄພອັນຕະລາຍທີ່ເກີດຂຶ້ນກັບຜູ້ຖືກເຄາະຮ້າຍ ແລະ ຜູ້ອື່ນໆ. ໃນຂະນະທີ່ຄູ່ມືນີ້ ອາດບໍ່ໄດ້ກວມເອົາທຸກຄວາມສະຫຼັບຊັບຊ້ອນຂອງສະຖານະການໃນແຕ່ລະປະເທດສະມາຊິກອາຊຽນ, ຄູ່ມືດັ່ງກ່າວນີ້ ກໍ່ໄດ້ຮອບຮອມເອົາຄວາມເປັນເອກະພາບຢ່າງກວ້າງຂວາງ ກ່ຽວກັບຄວາມເປັນຈິງໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້, ໂດຍອີງໃສ່ສົນທິສັນຍາ ACTIP ແລະ ກອບວຽກງານອື່ນໆຂອງອາຊຽນ. ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ຄູ່ມືນີ້ຈະເຮັດໜ້າທີ່ ເປັນຂໍ້ມູນອ້າງອີງທີ່ເປັນປະໂຫຍດໃຫ້ແກ່ຜູ້ປະຕິບັດຕົວຈິງທັງໝົດ ໃນການປະຕິບັດໜ້າທີ່ປະຈໍາວັນ ເພື່ອຮັບປະກັນວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນແມ່ຍິງທຸກຄົນໄດ້ຮັບການປະຕິບັດຕາມສິດທິຂອງເຂົາເຈົ້າ ຢ່າງເຕັມສ່ວນ.



**ທ່ານ ນາງ ຮູ ເນີມິຕາ (Hou Nirmita)**
**ຮອງລັດຖະມົນຕີກະຊວງພົວພັນແມ່ຍິງ**
**ຜູ້ຕາງໜ້າດ້ານການສົ່ງເສີມສິດທິແມ່ຍິງຂອງກໍາປູເຈຍ ປະຈໍາຄະນະກໍາມາທິການ ACWC**
**ປະທານຄະນະກໍາມາທິການ ACWC**

# ຄຳເຫັນຈາກເອກອັກຄະລັດຖະທູດອົດສະຕຣາລີ ປະຈຳອາຊຽນ

ອົດສະຕຣາລີ ມີປະຫວັດສາດໃນການຮ່ວມມືອັນຍາວນານ ແລະ ເຂັ້ມແຂງ ຮ່ວມກັບອາຊຽນ ແລະ ລັດສະມາຊິກອາຊຽນໃນການປັບປຸງການຕອບໂຕ້ການຄ້າມະນຸດ. ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ (ASEAN-ACT) ໄດ້ສືບຕໍ່ຄວາມໝາຍໝັ້ນຂອງອົດສະຕຣາລີ ໃນການແກ້ໄຂບັນຫາການຄ້າມະນຸດໃນອາຊີຕາເວັນອອກສ່ຽງໃຕ້ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດ ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ສົນທິສັນຍາ ACTIP). ແຜນງານ ASEAN-ACT ມີຈຸດສຸມທີ່ສຳຄັນໃນການໃຫ້ການສະໜັບສະໜູນສິດທິຂອງຜູ້ຖືກເຄາະຮ້າຍ ແລະ ສົ່ງເສີມຄວາມສະເໝີພາບຍິງ-ຊາຍ, ຄວາມພິການ ແລະ ການລວມເອົາທຸກຄົນໃນສັງຄົມ. ດ້ວຍເຫດນີ້, ແຜນງານ ASEAN-ACT ຈຶ່ງມີຄວາມຮ່ວມມືຢ່າງກວ້າງຂວາງກັບພາກສ່ວນທີ່ກ່ຽວຂ້ອງ ຂອງລັດຖະບານ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານໃນພາກພື້ນ ເພື່ອສົ່ງເສີມ ແລະ ປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງເຂົາເຈົ້າ.

*ຄູ່ມືອາຊຽນວ່າດ້ວຍການບໍ່ເຮັດໄພອັນລະລາຍ ສຳລັບຜູ້ຕອບໂຕ້ດ່ານໜ້າ* ເປັນຜົນງານຂອງຄວາມພະຍາຍາມຈາກການຮ່ວມມື ທີ່ນຳພາໂດຍ ຄະນະກຳມາທິການ ACWC ໂດຍການສະໜັບສະໜູນຂອງແຜນງານ ASEAN-ACT. ເຊິ່ງມີຈຸດປະສົງເພື່ອເປັນແຫຼ່ງຂໍ້ມູນໃນພາກປະຕິບັດຕົວຈິງ ສຳລັບຜູ້ຕອບໂຕ້ທຳອິດໃນຄະດີຄ້າມະນຸດ ແລະ ເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ກັບໄພອັນຕະລາຍໃນທຸກຂັ້ນຕອນການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ. ເນື່ອງຈາກຄວາມສະຫຼັບຊັບຊ້ອນທີ່ກ່ຽວຂ້ອງກັບການຄ້າມະນຸດ, ຄວາມສ່ຽງທີ່ອາດຈະເກີດຂຶ້ນຈາກກິດຈະກຳການຕ້ານການຄ້າມະນຸດ. ໄພອັນຕະລາຍເກີດຂຶ້ນໃນຫຼາຍຮູບແບບ ແລະ ສາມາດເກີດຂຶ້ນບໍ່ສະເພາະແຕ່ກັບຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງເຂົາເຈົ້າເທົ່ານັ້ນ ແຕ່ຍັງລວມເຖິງ ຜູ້ທີ່ໄດ້ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນຜູ້ຖືກເຄາະຮ້າຍ. ຄູ່ມືນີ້ ຮັບຮູ້ເຖິງຄວາມຕ້ອງການທີ່ຫຼາກຫຼາຍ ແລະ ຄວາມຕ້ອງການສະເພາະບຸກຄົນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຄອບຄົວຂອງເຂົາເຈົ້າ ແລະ ການສະເໜີວິທີການ ແລະ ເຄື່ອງມືສຳລັບເຈົ້າໜ້າທີ່ດ່ານໜ້າທີ່ສາມາດນຳໃຊ້ ເພື່ອຮອງຮັບຄວາມເປັນມາທີ່ຫຼາກຫຼາຍ ແລະ ປະສົບການຂອງຜູ້ຖືກເຄາະຮ້າຍ.

ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍ ແລະ ຍິນດີຕໍ່ກັບ ຄະນະກຳມາທິການ ACWC ແລະ ຄູ່ຮ່ວມງານອາຊຽນຂອງພວກເຮົາ ໃນການພັດທະນາຄູ່ມືສະບັບນີ້ໃຫ້ສຳເລັດຜົນ. ເຊິ່ງໄດ້ສະທ້ອນໃຫ້ເຫັນເຖິງຄວາມໝາຍໝັ້ນຮ່ວມກັນຂອງພວກເຮົາ ໃນການເຊື່ອມສານເອົາວິທີການທີ່ຖືເອົາຜູ້ຖືກເຄາະຮ້າຍເປັນໃຈກາງ, ການຄຳນຶງເຖິງບົດບາດຍິງ-ຊາຍ ແລະ ການຮວມເອົາທຸກຄົນໃນສັງຄົມເຂົ້າໃນການເຮັດວຽກກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ການປຶກສາຫາລືຢ່າງກວ້າງຂວາງທີ່ໄດ້ຈັດຂຶ້ນໃນລະດັບຊາດ ຮ່ວມກັບທົ່ວປະເທດສະມາຊິກອາຊຽນ ແລະ ຄູ່ຮ່ວມພັດທະນາອື່ນໆທີ່ກ່ຽວຂ້ອງ ໄດ້ເປັນການຊ່ວຍເຮັດໃຫ້ຄູ່ມືສະບັບນີ້ ເປັນຜົນງານຂອງອາຊຽນຢ່າງແທ້ຈິງ. ອົດສະຕຣາລີ ຫວັງວ່າຈະໄດ້ຮ່ວມມືຢ່າງຕໍ່ເນື່ອງກັບ ຄະນະກຳມາທິການ ACWC ແລະ ອາຊຽນ ໃນການຈັດຕັ້ງປະຕິບັດສົນທິສັນຍາ ACTIP ຢ່າງມີປະສິດທິພາບ ໃນປີຕໍ່ໆໄປ.



**ພະນະທ່ານ ວິວ ມັນເຄວິດ**

**ເອກອັກຄະລັດຖະທູດອົດສະຕຣາລີ ປະຈຳອາຊຽນ**

# ການນຳໃຊ້ຄູ່ມືນີ້

ຜູ້ຕອບໂຕ້ດ່ານໜ້າ ມີບົດບາດສຳຄັນໃນການຕ້ານ ແລະ ສະໜັບສະໜູນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ເຂົາເຈົ້າມັກຈະເປັນຈຸດທຳອິດໃນການຕິດຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນຂັ້ນຕອນການກຳນົດຕົວຜູ້ຖືກເຄາະຮ້າຍ. ເຂົາເຈົ້າຍັງສະໜັບສະໜູນຄວາມຕ້ອງການໃນການປົກປ້ອງໄລຍະຍາວ, ດ້ານສຸຂະພາບ, ສູນພັກເຊົາ, ການກອບກູ້ ແລະ ການຟື້ນຟູຄືນຂອງຜູ້ຖືກເຄາະຮ້າຍ. ຜູ້ຕອບໂຕ້ດ່ານໜ້າ ແລະ ຜູ້ໃຫ້ການສະໜັບສະໜູນ ມີບົດບາດສຳຄັນໃນການຍຶດໝັ້ນສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

## ສຳລັບໃຜ

ຄູ່ມືສະບັບນີ້ ແມ່ນສຳລັບຜູ້ຕອບໂຕ້ດ່ານໜ້າ ໃນລັດສະມາຊິກອາຊຽນ ຜູ້ທີ່ໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍໂດຍກົງ ເຊິ່ງລວມມີ:

- ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ (ເຈົ້າໜ້າທີ່ຕຳຫຼວດ, ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ, ເຈົ້າໜ້າທີ່ພາສີ, ໜ່ວຍງານລັບ, ເຈົ້າໜ້າທີ່ລາດຕະເວນຊາຍແດນ, ເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງ);
- ຜູ້ນຳໃຊ້ອື່ນໆເຊັ່ນ: ນັກສັງຄົມສົງເຄາະ, ໜ່ວຍງານປົກປ້ອງຜູ້ຖືກເຄາະຮ້າຍ ແລະ ພະຍານ/ຜູ້ປະສານງານ, ຜູ້ແປພາສາ, ເຈົ້າໜ້າທີ່ດ້ານການແພດ ແລະ ສຸຂະພາບ, ນັກຈິດຕະວິທະຍາ/ຈິດຕະແພດ, ຜູ້ຈັດການສູນພັກເຊົາ, ອົງການຈັດຕັ້ງທາງສັງຄົມ, ທະນາຍຄວາມ/ຜູ້ໃຫ້ການສະໜັບສະໜູນ/ອາສາສະໝັກ (paralegal) ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ສູນກາງສະຫະພັນແມ່ຍິງ, ເຈົ້າໜ້າທີ່ກວດສອບດ້ານແຮງງານ ແລະ ຜູ້ອື່ນໆ.

ນອກຈາກນີ້ ຍັງສາມາດໃຊ້ເປັນເອກະສານອ້າງອີງສຳລັບເຈົ້າໜ້າທີ່ຕຸລາການ ໃນການຕັດສິນຄະດີຄ້າມະນຸດ (TIP), ຜູ້ສ້າງນະໂຍບາຍ ແລະ ຜູ້ຈັດການແຜນງານ ທີ່ມີສ່ວນຮ່ວມໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນງານ ການປົກປ້ອງ ແລະ ຊ່ວຍເຫຼືອ ແລະ ແຜນງານສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

## ວິທີການນຳໃຊ້

ຄູ່ມືສະບັບນີ້ ມີຈຸດປະສົງສ້າງຂຶ້ນເພື່ອເປັນແຫຼ່ງຂໍ້ມູນໃນພາກປະຕິບັດຕົວຈິງ ເພື່ອນຳໃຊ້ໃນບໍລິບົດຂອງອາຊຽນ. ເຊິ່ງຖືກອອກແບບ ເພື່ອຊ່ວຍທ່ານໃຫ້ມີຄວາມເຂົ້າໃຈ ແລະ ນຳໃຊ້ຫຼັກການບໍ່ເຮັດໄພອັນຕະລາຍ ໃນລະຫວ່າງການຊ່ວຍເຫຼືອ ແລະ ປົກປ້ອງຜູ້ຖືກເຄາະຮ້າຍໂດຍກົງ. ຜູ້ປະຕິບັດຕົວຈິງຄວນນຳໃຊ້ຄູ່ມືນີ້ເຂົ້າໃນການປະເມີນ ຫຼື ຄາດຄະເນກິດຈະກຳຂອງເຂົາເຈົ້າ ຫຼື ການປະຕິບັດ ເພື່ອຫຼີກລ້ຽງ ຫຼື ຫຼຸດຜ່ອນໄພອັນຕະລາຍ ທີ່ບໍ່ໄດ້ຕັ້ງໃຈ ຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ບຸກຄົນອື່ນໆທີ່ກ່ຽວຂ້ອງ.

ຄູ່ມື ໄດ້ກຳນົດໄພອັນຕະລາຍທີ່ອາດຈະເກີດຂຶ້ນກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນ 5 ຂົງເຂດຫຼັກ: i) ການກຳນົດຕົວຜູ້ຖືກເຄາະຮ້າຍ; ii) ການກອບກູ້, ການສະທ້ອນຄືນ ແລະ ການພັກເຊົາ; iii) ການສົ່ງກັບ ແລະ ການກັບຄືນສູ່ສັງຄົມ; iv) ການຮັກສາສຸຂະພາບ ແລະ ຈິດໃຈ ແລະ v) ຂະບວນການຍຸຕິທຳທາງອາຍາ.

ຊຸດຄູ່ມື ການບໍ່ເຮັດໄພອັນຕະລາຍ ໄດ້ໃຫ້ການແນະນຳທີ່ສອດຄ່ອງກັບໄພອັນຕະລາຍທີ່ໄດ້ກຳນົດໄວ້ໃນແຕ່ລະຂົງເຂດ. ຄູ່ມືນີ້ຮັບຮູ້ເຖິງທຶນສະໜັບສະໜູນ, ຊັບພະຍາກອນ ແລະ ຂໍ້ຈຳກັດຫຼາຍປະການທີ່ຜູ້ຕອບໂຕ້ດ່ານໜ້າໄດ້ພົບພໍ້ ໃນການດຳເນີນວຽກງານຂອງເຂົາເຈົ້າ. ເນື່ອງຈາກຄູ່ມືນີ້ ໄດ້ຄອບຄຸມໃນທົ່ວອາຊຽນທັງໝົດ, ຜູ້ອ່ານ ຄວນຈະຄຳນຶງວ່າ ຄຳແນະນຳ ຕໍ່ກັບໄພອັນຕະລາຍບາງອັນ ອາດຈະມີຄວາມກ່ຽວຂ້ອງໃນເຂດອຳນາດຂອງສານໃດໜຶ່ງ ຫຼາຍກວ່າເຂດອຳນາດຂອງສານອື່ນໆ.

## ເອກະສານອື່ນໆທີ່ເປັນປະໂຫຍດ

ຄູ່ມືສະບັບນີ້ ບໍ່ໄດ້ສ້າງຂຶ້ນເພື່ອເປັນວິທີການອັນດຽວ ໃນການຫຼີກລ້ຽງໄພອັນຕະລາຍຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ, ແຕ່ມັນໄດ້ສະເໜີ ຄຳແນະນຳ ແລະ ຂໍ້ແນະນຳ. ນອກຈາກນັ້ນ ຄວນຈະອ່ານຮ່ວມກັບເອກະສານອື່ນໆ ທີ່ໄດ້ໃຫ້ຄຳແນະນຳ ຫຼື ຄຳແນະນຳກ່ຽວກັບການເຮັດວຽກກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ລາຍການເອກະສານທີ່ເປັນປະໂຫຍດ ໄດ້ລະບຸໄວ້ໃນທ້າຍຄູ່ມືສະບັບນີ້. ພວກເຮົາຮຽກຮ້ອງໃຫ້ຜູ້ນຳໃຊ້ ພິຈາລະນາຂໍ້ມູນເສີມທີ່ຈຳເປັນເຫຼົ່ານີ້ ໃນຄູ່ມືນີ້ ແລະ ນຳໃຊ້ຂໍ້ມູນເຫຼົ່ານີ້ ຕາມຄວາມຈຳເປັນ.

# ວິທີການ

ຄູ່ມືສະບັບນີ້ໄດ້ສ້າງຂຶ້ນຈາກ ຄູ່ມືການບໍ່ເຮັດໄພອັນຕະລາຍ ສຳລັບການເຮັດວຽກກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ໄດ້ພັດທະນາຂຶ້ນໂດຍແຜນງານ ASEAN-ACT ໃນເດືອນ ພຶດສະພາ 2021 ສຳລັບພະນັກງານແຜນງານ ASEAN-ACT ແລະ ຄູ່ຮ່ວມງານ. ເຊິ່ງໄດ້ຖືກພັດທະນາຂຶ້ນບົນພື້ນຖານ ການທົບທວນເອກະສານທີ່ມີຢູ່ ທີ່ໄດ້ພິມເຜີຍແຜ່ ໂດຍໜ່ວຍງານຕ່າງໆຂອງອົງການສະຫະປະຊາຊາດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ຜູ້ຊ່ຽວຊານ ແລະ ອື່ນໆ. ລາຍການສິ່ງພິມທີ່ໄດ້ມີການແນະນຳ ສຳລັບຄູ່ມືສະບັບນີ້ ໄດ້ຄັດຕິດໃນເອກະສານຊ້ອນທ້າຍ.

ນອກນັ້ນ ຍັງໄດ້ຮວບຮວມເອົາຂໍ້ມູນທີ່ໄດ້ຮັບຈາກກອງປະຊຸມວິຊາການລະດັບປະເທດ ທີ່ໄດ້ຈັດຂຶ້ນໃນຫົກປະເທດ ໃນບັນດາປະເທດອາຊຽນ: ກຳປູເຈຍ, ອິນໂດເນເຊຍ, ສປປ ລາວ, ຟີລິບປິນ, ໄທ ແລະ ຫວຽດນາມ. ການສຳພາດແບບເຄິ່ງໂຄງສ້າງ (Semi-structured interviews) ຍັງໄດ້ຈັດຂຶ້ນກັບພາກສ່ວນທີ່ກ່ຽວຂ້ອງຈາກມາເລເຊຍ ແລະ ສິງກະໂປ.

ມີຄະນະເຮັດວຽກດ້ານວິຊາການ ທີ່ປະກອບດ້ວຍສະມາຊິກທີ່ໄດ້ຮັບການຄັດເລືອກຈາກຄະນະກຳມາທິການ ACWC ແລະ ພະນັກ ງານຈາກສຳນັກງານເລຂາທິການອາຊຽນ ເພື່ອເຮັດໃຫ້ຄູ່ມືສະບັບນີ້ສຳເລັດຜົນ.[1]

ທີ່ສຳຄັນ ຄູ່ມືສະບັບນີ້ ໄດ້ຮັບການພັດທະນາຂຶ້ນບົນພື້ນຖານ ແລະ ຄວບຄູ່ກັບຄູ່ມື ແລະ ມາດຕະຖານອາຊຽນທີ່ມີຢູ່,[2] ແລະ ອ້າງອີງເຖິງຄູ່ມື ແລະ ກອບການເຮັດວຽກລະຫວ່າງປະເທດ. ໂດຍມີເປົ້າໝາຍ ສະໜັບສະໜູນການຈັດຕັ້ງປະຕິບັດສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ACTIP).

**ພາກສ່ວນທີ່ກ່ຽວຂ້ອງ**

**ທັງໝົດ 236 ທ່ານ**

**ທີ່ໄດ້ປະກອບສ່ວນເຂົ້າໃນຄູ່ມືສະບັບນີ້**



**60%** ມາຈາກລັດຖະບານ

**40%** ມາຈາກພາກສ່ວນທີ່ບໍ່ສັງກັດລັດຖະບານ

1 ຄະນະເຮັດວຽກດ້ານວິຊາການ (TWG) ໄດ້ພົບປະກັນແບບເຊິ່ງໜ້າ ທີ່ຈາກາຕາ ໃນວັນທີ 6-7 ມິຖຸນາ 2022 ເພື່ອປຶກສາຫາລື ແລະ ເຮັດໃຫ້ຄູ່ມືສຳເລັດຜົນ. ສະມາຊິກຂອງຄະນະກຳມາທິການ ACWC ບາງທ່ານໄດ້ເຂົ້າຮ່ວມກອງປະຊຸມທາງອອນລາຍ.

2 ຄູ່ມືແນະນຳຂອງຄະນະກຳມາທິການ ACWC ກ່ຽວກັບການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ (2015) ແລະ ກ່ຽວກັບ ຄຳແນະນຳ ແລະ ຂັ້ນຕອນໃນການແກ້ໄຂຄວາມຕ້ອງການອັນຈຳເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນພາກພື້ນ (n.d).

# ກອບແນວຄວາມຄິດຫຼັກ ແລະ ຄໍານິຍາມ

**ໜ່ວຍງານ:** ຄວາມສາມາດຂອງບຸກຄົນ (ຫຼື ກຸ່ມ) ໃນການຕັດສິນໃຈເລືອກຢ່າງມີປະສິດທິພາບ ແລະ ປ່ຽນທາງເລືອກເຫຼົ່ານັ້ນໄປສູ່ຜົນໄດ້ຮັບທີ່ຕ້ອງການ. ໜ່ວຍງານສາມາດເຂົ້າໃຈໄດ້ວ່າເປັນຂະບວນການທີ່ຜູ້ຍິງ ແລະ ຜູ້ຊາຍ ໄດ້ນໍາໃຊ້ເງິນບໍລິຈາກຂອງເຂົາເຈົ້າ ແລະ ໃຊ້ປະໂຫຍດຈາກໂອກາດທາງດ້ານເສດຖະກິດ ເພື່ອບັນລຸຜົນໄດ້ຮັບທີ່ຕ້ອງການ.[3] ຕົວຢ່າງ ການເລືອກອາຊີບ ທີ່ນັກຮຽນມັກຈະໄດ້ຮັບອິດທິພົນ ມາຈາກການຕັດສິນໃຈໃນຄອບຄົວ ແທນທີ່ເຂົາເຈົ້າຈະເປັນຜູ້ເລືອກເອງ.

**ຜົນປະໂຫຍດສູງສຸດຂອງເດັກ:** ມາດຕາ 3 (1) ຂອງສົນທິສັນຍາສະຫະປະຊາຊາດ ວ່າດ້ວຍສິດທິເດັກ (CRC), ເຮັດໜ້າທີ່ເປັນພື້ນຖານສໍາລັບຫຼັກການຜົນປະໂຫຍດສູງສຸດຂອງເດັກ. ເຖິງວ່າຈະບໍ່ໄດ້ກໍານົດຜົນປະໂຫຍດສູງສຸດຂອງເດັກໄວ້ຢ່າງຊັດເຈນ, ແຕ່ຫຼັກການດັ່ງກ່າວ ສາມາດເຂົ້າໃຈໄດ້ວ່າເປັນແນວຄິດສາມສ່ວນ ທີ່ລວມມີສິດທິທີ່ສໍາຄັນ, ສິດທິຂັ້ນພື້ນຖານ ແລະ ການຕີຄວາມໝາຍຫຼັກການຂອງກົດໝາຍ ແລະ ກົດລະບຽບຂອງຂັ້ນຕອນທີ່ມີເປົ້າໝາຍ ເພື່ອຮັບປະກັນການໄດ້ຮັບສິດທິທັງໝົດຢ່າງເຕັມສ່ວນ ແລະ ມີປະສິດທິພາບເຊິ່ງຖືກຮັບຮູ້ໃນສົນທິສັນຍາ CRC ແລະ ການພິຈາລະນາຕົ້ນຕໍ ເພື່ອຮັບປະກັນການພັດທະນາແບບກອມລວມຂອງເດັກ.[4]

**ເດັກ:** ມະນຸດທຸກຄົນທີ່ອາຍຸຕໍ່າກວ່າ 18 ປີ.[5]

**ການເບິ່ງແຍງຢ່າງເໝາະສົມທາງດ້ານວັດທະນະທໍາ:** ໝາຍເຖິງຂໍ້ກໍານົດກ່ຽວກັບການເບິ່ງແຍງທີ່ເອົາໃຈໃສ່ໃນຫຼາຍຮູບແບບ ຈາກບຸກຄົນທີ່ມີພື້ນຖານ ແລະ ມີປະສົບການທີ່ຫຼາກຫຼາຍ ແລະ ສະແດງຄວາມເຈັບປ່ວຍ ແລະ ວິທີ ທີ່ພວກເຂົາໄດ້ຕອບໂຕ້ຕໍ່ກັບການເບິ່ງແຍງດູແລ. ພິຈາລະນາ ແລະ ເຄົາລົບດ້ານສັງຄົມ, ວັດທະນະທໍາ, ເສດຖະກິດ, ຊົນເຜົ່າ ຫຼື ພາສາຂອງເຂົາເຈົ້າ.[6]

**ຄວາມພິການ:** ຄວາມພິການແມ່ນແນວຄວາມຄິດທີ່ໄດ້ພັດທະນາຂຶ້ນ ແລະ ເປັນຜົນມາຈາກປະຕິສໍາພັນລະຫວ່າງບຸກຄົນທີ່ມີຄວາມບົກຜ່ອງ ແລະ ທັດສະນະຄະຕິ ແລະ ສິ່ງແວດລ້ອມທີ່ເປັນອຸປະສັກ ທີ່ຂັດຂວາງການມີສ່ວນຮ່ວມຂອງເຂົາເຈົ້າໃນສັງຄົມຢ່າງເຕັມສ່ວນ ແລະ ມີປະສິດທິພາບ ບົນພື້ນຖານຄວາມເທົ່າທຽມກັບບຸກຄົນອື່ນ.[7]

**ຄົນພິການ:** ລວມມີບຸກຄົນທີ່ມີຄວາມບົກຜ່ອງທາງດ້ານຮ່າງກາຍ, ຈິດໃຈ, ສະຕິປັນຍາ ຫຼື ປະສາດສໍາພັດໄລຍະຍາວ ເຊິ່ງມີປະຕິສໍາພັນກັບອຸປະສັກຕ່າງໆ ທີ່ອາດຈະຂັດຂວາງການມີສ່ວນຮ່ວມຂອງເຂົາເຈົ້າໃນສັງຄົມໄດ້ຢ່າງເຕັມສ່ວນ ແລະ ມີປະສິດທິພາບ ບົນພື້ນຖານຄວາມເທົ່າທຽມກັບບຸກຄົນອື່ນ.[8]

**ເພດ/ບົດບາດຍິງ-ຊາຍ (Gender):** ໝາຍເຖິງການກໍານົດໂດຍສັງຄົມກ່ຽວກັບບົດບາດ, ພຶດຕິກໍາ, ກິດຈະກໍາ ແລະ ຄຸນລັກສະນະ ທີ່ພິຈາລະນາວ່າເປັນລັກສະນະ ແລະ ຄວາມສໍາພັນລະຫວ່າງຜູ້ຍິງ ແລະ ຜູ້ຊາຍ. ຄວາມບໍ່ເທົ່າທຽມກັນດ້ານບົດບາດຍິງ-ຊາຍ ລວມທັງ ໂອກາດ, ການເຂົ້າເຖິງ ແລະ ການຄວບຄຸມຊັບພະຍາກອນ ແລະ ການຕັດສິນໃຈນັ້ນ ໄດ້ຮັບອິດທິພົນມາຈາກວິທີການທີ່ສັງຄົມມີທັດສະນະຕໍ່ກັບຜູ້ຍິງ ແລະ ຜູ້ຊາຍໃນທຸກໄວ.

**ແນວຄວາມຄິດດັ້ງເດີມກ່ຽວກັບເພດ/ບົດບາດຍິງ-ຊາຍ:** ຮູບພາບ, ຄວາມເຊື່ອ, ທັດສະນະຄະຕິ ຫຼື ສົມມຸດຕິຖານກ່ຽວກັບກຸ່ມສະເພາະຂອງເພດຍິງ ແລະ ເພດຊາຍ. ແນວຄິດດັ້ງເດີມປົກກະຕິຈະເປັນແນວຄິດດ້ານລົບ ແລະ ບົນພື້ນຖານ ບັນທັດຖານທາງດ້ານເພດ, ບົດບາດ ແລະ ການພົວພັນທີ່ສົມມຸດຂຶ້ນ.

**ວິທີການທີ່ຄໍານຶງບົດບາດຍິງ-ຊາຍ:** ວິທີການທີ່ຄໍານຶງເຖິງບົດບາດຍິງ-ຊາຍ ແມ່ນຄໍານຶງເຖິງຄວາມຕ້ອງການສະເພາະທາງດ້ານເພດ (ຍິງ-ຊາຍ) ຂອງທຸກຄົນຕາມປະເພດໄພອັນຕະລາຍ ແລະ ການຂູດຮີດ ທີ່ເຂົາເຈົ້າໄດ້ຮັບ. ເຊິ່ງຊ່ວຍໃຫ້ພວກເຮົາອອກແບບ ແລະ ດໍາເນີນການຕອບໂຕ້ ແລະ ສະໜອງກິດຈະກໍາທີ່ເໝາະສົມກັບຄວາມຕ້ອງການເຫຼົ່ານັ້ນ. ທີ່ໄດ້ເພີ່ມທະວີຄວາມສາມາດຂອງ

---

3 ທະນາຄານໂລກ. (2012). ການສົ່ງເສີມໜ່ວຍງານຂອງແມ່ຍິງ. ຂໍ້ມູນຈາກ ບົດລາຍງານການພັດທະນາໂລກ 2012: https://siteresources.worldbank.org/INTWDR2012/ Resources/7778105-1299699968583/7786210-1315936222006/chapter-4.pdf

4 https://ec.europa.eu/home-affairs/pages/glossary/best-interests-child-bic_en

5 ເບິ່ງທີ່ສົນທິສັນຍາ CRC ມາດຕາ 1.

6 ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ - IOM (2009). *ການເບິ່ງແຍງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຄໍາແນະນໍາສໍາລັບຜູ້ໃຫ້ບໍລິການດ້ານສຸຂະພາບ.* ເຈນີວາ: IOM.

7 ຄໍານໍາຂອງສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ

8 ມາດຕາ 1 ຂອງສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ

ພວກເຮົາໃນການແກ້ໄຂກັບອັກຄະຕິດ້ານບົດບາດຍິງ-ຊາຍ, ການໄຈ້ແຍກຂໍ້ມູນຂອງຜູ້ຖືກເຄາະຮ້າຍທີ່ 'ບໍ່ເໝາະສົມ'[9], ສົ່ງເສີມການມີສ່ວນຮ່ວມຂອງເພດຊາຍ ແລະ ເດັກຊາຍ ໃນການແກ້ໄຂບັນຫາການຈຳແນກແນວຄິດດັ້ງເດີມກ່ຽວກັບຄວາມເປັນຜູ້ຊາຍ ແລະ ຄວາມເປັນຜູ້ຍິງ ແລະ ແກ້ໄຂຮາກເຫງົ້າຂອງບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ.[10]

**ການແຈ້ງ ການຂໍຄວາມຍິນຍອມ:** ໝາຍເຖິງການຕັດສິນໃຈຂອງບຸກຄົນ ໂດຍສະໝັກໃຈ, ຕົກລົງໃຫ້ສຳພາດ, ການຮັກສາ, ຂັ້ນຕອນ, ການຊ່ວຍເຫຼືອ ຫຼື ກິດຈະກຳອື່ນໆທີ່ໄດ້ເຮັດ. ຂໍ້ມູນທີ່ຊັດເຈນ ແລະ ເຂົ້າໃຈໄດ້ກ່ຽວກັບຄວາມສ່ຽງ ແລະ ຜົນປະໂຫຍດຂອງກິດຈະກຳທີ່ສະເໜີ ລວມທັງ ທາງເລືອກທີ່ມີຢູ່ ທີ່ຕ້ອງສະໜອງໃຫ້ແກ່ຜູ້ຖືກເຄາະຮ້າຍ/ບຸກຄົນ ເພື່ອໃຫ້ພວກເຮົາໄດ້ເຮັດການຕັດສິນໃຈທີ່ຖືກຕ້ອງ. ຄວນມີຜູ້ແປພາສາ ເພື່ອຮັບປະກັນວ່າ ບຸກຄົນນັ້ນເຂົ້າໃຈຂໍ້ມູນທີ່ໄດ້ມີການສື່ສານອອກມາ.

**ການທັບຊ້ອນກັນຂອງບັນຫາ (Intersectionality):** ໝາຍເຖິງວິທີການເຊື່ອມໂຍງຄຸນລັກສະນະຂອງແຕ່ລະບຸກຄົນ ລວມທັງ ດ້ານເພດ/ບົດບາດຍິງ-ຊາຍ, ອາຍຸ ແລະ ຄວາມພິການ. ຕົວຢ່າງ, ບຸກຄົນໃດໜຶ່ງ ອາດຈະມີປະສົບການໃນການຖືກຈຳແນກຍ້ອນເພດ ແລະ ຄວາມພິການຂອງເຂົາເຈົ້າ. ສິ່ງດັ່ງກ່າວນີ້ ອາດນຳໄປສູ່ການແຍກເຂົາເຈົ້າອອກ ຫຼື ຄວາມສ່ຽງທີ່ເພີ່ມຂຶ້ນ ຂອງບຸກຄົນນັ້ນ ແລະ ຈຳເປັນຕ້ອງໄດ້ພິຈາລະນາຢ່າງຮອບດ້ານ. ການທັບຊ້ອນກັນຂອງບັນຫາ ຊີ້ໃຫ້ເຫັນເຖິງຄວາມສຳຄັນ ໃນການທີ່ບໍ່ເບິ່ງລັກສະນະໃດໜຶ່ງຢ່າງໂດດດ່ຽວ ແລະ ການນຳເອົາວິທີການແບບກວມລວມ ໄປສູ່ການຮວມຕົວຢູ່ໃນສັງຄົມ.[11]

**ກຸ່ມທີ່ມີຄວາມສ່ຽງ:** ໝາຍເຖິງກຸ່ມຄົນທີ່ແຕກຕ່າງກັນ ເຊິ່ງເປັນຜູ້ທີ່ມີຄວາມສ່ຽງສູງຕໍ່ການຄ້າມະນຸດ ເນື່ອງຈາກ ປັດໄຈຕ່າງໆ ເຊັ່ນ: ສັນຊາດ, ສະຖານະພາບການແຕ່ງງານ, ບົດບາດຍິງ-ຊາຍ, ຊົນເຜົ່າ, ເຊື້ອຊາດ, ອາຍຸ, ຄວາມພິການ ຫລື ສະຖານະພາບການເຄື່ອນຍ້າຍແຮງງານ ຂອງເຂົາເຈົ້າ.

**ການຊົດເຊີຍຄ່າເສຍຫາຍ:** ວິທີການທີ່ຊົດເຊີຍຕໍ່ກັບຄວາມເສຍຫາຍບາງສ່ວນທີ່ໄດ້ກະທຳຕໍ່ກັບຜູ້ຖືກເຄາະຮ້າຍ ແລະ ເພື່ອເປັນວິທີການສ້າງທາງສັງຄົມ ເພື່ອໃຫ້ຜູ້ກະທຳຜິດຮັບຜິດຊອບ, ໃນຂະນະທີ່ມີການສະເໜີຂອບເຂດທີ່ເປັນໄປໄດ້ສູງສຸດ ສຳລັບການຟື້ນຟູຄືນ.[12] ມັນລວມມີ ການສົ່ງຄືນຊັບສິນ ຫຼື ການຈ່າຍຄ່າເສຍຫາຍ ຫຼື ໄພອັນຕະລາຍທີ່ເກີດຂຶ້ນ, ການຊົດເຊີຍຄືນຄ່າໃຊ້ຈ່າຍທີ່ເກີດຂຶ້ນ ເຊິ່ງເປັນຜົນມາຈາກການຕົກເປັນຜູ້ຖືກເຄາະຮ້າຍ, ການໃຫ້ການບໍລິການ ແລະ ການຟື້ນຟູຄືນດ້ານສິດທິ.[13]

**ຜູ້ສະໜອງການບໍລິການ:** ໝາຍເຖິງບຸກຄົນ/ສະຖາບັນ/ໜ່ວຍງານ, ອົງການທີ່ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມທັງ ແຕ່ບໍ່ໄດ້ຈຳກັດ ການຊ່ວຍເຫຼືອດ້ານສັງຄົມ, ຈິດຕະວິທະຍາ, ການແພດ, ກົດໝາຍ, ການປົກປ້ອງ ແລະ ການດຳລົງຊີວິດ, ບໍ່ວ່າຈະເປັນການບໍລິການຈາກລັດຖະບານ ຫຼື ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ.[14]

**ການຮວມເອົາທຸກຄົນໃນສັງຄົມ:** ແມ່ນຂະບວນການໃນການປັບປຸງຄວາມສາມາດ, ໂອກາດ ແລະ ກຽດສັກສີຂອງຄົນ, ຄວາມດ້ອຍໂອກາດ ຍ້ອນບົດບາດຍິງ-ຊາຍຂອງເຂົາເຈົ້າ, ເຊື້ອຊາດ, ຊົນເຜົ່າ, ສາສະໜາ, ຄວາມພິການ, ຫລື ສະຖານະພາບການເຄື່ອນຍ້າຍແຮງງານ ທີ່ມີສ່ວນຮ່ວມໃນສັງຄົມ.[15]

**ຜູ້ຖືກເຄາະຮ້າຍ ຫຼື ຜູ້ລອດຊີວິດຈາກການຄ້າມະນຸດ:** ຄູ່ມືສະບັບນີ້ໃຊ້ຄຳສັບ 'ຜູ້ຖືກເຄາະຮ້າຍ' ແທນທີ່ຈະໃຊ້ຄຳສັບ 'ຜູ້ລອດຊີວິດ' ໃນການອ້າງອີງເຖິງບຸກຄົນທີ່ຖືກຄ້າມະນຸດ.[16] ເຖິງວ່າທັງສອງຄຳສັບ ຈະສາມາດນຳໃຊ້ສະຫຼັບກັນໄດ້, ແຕ່ມັນອາດຈະມີຄວາມ ໝາຍສຳຄັນທີ່ແຕກຕ່າງກັນ ໃນເວລານຳໃຊ້ໃນບໍລິບົດຂອງກົດໝາຍ ແລະ ຄວາມຍຸຕິທຳ, ການສະໜັບສະໜູນຜູ້ຖືກເຄາະຮ້າຍ ແລະ ການໃຫ້ການບໍລິການ[17] ຄຳວ່າ 'ຜູ້ຖືກເຄາະຮ້າຍ' ມີຄວາມໝາຍສຳຄັນດ້ານກົດໝາຍ ໃນລະບົບຍຸຕິທຳທາງອາຍາ

---

9 ອ້າງອີງເຖິງການອະທິບາຍເຖິງແນວຄວາມຄິດຂອງຜູ້ຖືກເຄາະຮ້າຍ ໃນພາກຂອງການກຳນົດຕົວຜູ້ຖືກເຄາະຮ້າຍໃນຄູ່ມືສະບັບນີ້.

10 ດັດປັບມາຈາກຫ້ອງການຂອງຜູ້ລາຍງານພິເສດ OSCE ແລະ ຜູ້ປະສານງານຮ່ວມສຳລັບການຕ້ານການຄ້າມະນຸດ, *ການນຳໃຊ້ວິທີການທີ່ຄຳນຶງເຖິງບົດບາດຍິງ-ຊາຍ ໃນການຕ້ານການຄ້າມະນຸດ* (ວຽນນາ, 2021)

11 ຄຳນິຍາມນີ້ ດັດປັບມາຈາກຄຳສັບທາງອອນລາຍຂອງກອງເລຂາ ສະວີເດັນ ສຳລັບການວິໄຈເພດພາວະhttps://www.genus.se/en/wordpost/intersectionality/ ແລະ ຄຳນິຍາມ ທີ່ກຳນົດໄວ້ໃນພົດຈະນານຸກົມ Merriam-Webster https://www.merriam-webster.com/words-at-play/intersectionality-meaning.

12 ອົງການ UNODC (1999). *ຄູ່ມືຄວາມຍຸຕິທຳສຳລັບຜູ້ຖືກເຄາະຮ້າຍ: ກ່ຽວກັບການນຳໃຊ້ ແລະ ການປະຕິບັດຖະແຫຼງການວ່າດ້ວຍຫຼັກການພື້ນຖານຂອງຄວາມຍຸຕິທຳສຳລັບຜູ້ຖືກເຄາະຮ້າຍຈາກອາຊະຍາກຳ ແລະ ການສວຍໃຊ້ອຳນາດ:* ນິວຢອກ: ອົງການ UNODC.

13 ຖະແຫຼງການຂອງອົງການສະຫະປະຊາຊາດ ວ່າດ້ວຍຫຼັກການພື້ນຖານຂອງຄວາມຍຸຕິທຳ ສຳລັບຜູ້ຖືກເຄາະຮ້າຍຈາກອາຊະຍາກຳ ແລະ ການສວຍໃຊ້ອຳນາດ. ມະຕິຂອງສະມັດຊາໃຫຍ່ 40/34. 29 ພະຈິກ 1985. ເບິ່ງທີ່ e https://www.ohchr.org/en/instruments-mechanisms/instruments/declaration-basic-principles-justice-victims-crime-and-abuse

14 ອາຊຽນ (2016). *ຄຳແນະນຳໃນການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ*. ຈາກາຕາ: ກອງເລຂາອາຊຽນ

15 ຄຳນິຍາມນີ້ເອົາມາຈາກທະນາຄານໂລກ (2013). *ບັນຫາການຮວມເອົາທຸກຄົນໃນສັງຄົມ (Inclusion Matters): ພື້ນຖານຄວາມສີວິໄລຮ່ວມກັນ.* ວໍຊິງຕັນດີຊີ: ທະນາຄານໂລກ

16 ອີງຕາມຍຸດທະສາດສິດທິຂອງຜູ້ຖືກເຄາະຮ້າຍ ຂອງແຜນງານ ASEAN-ACT (2021).

17 ຄູ່ມື ແລະ ຫຼັກການພື້ນຖານວ່າດ້ວຍສິດທິໃນການເຂົ້າເຖິງການປຽວຢາ ແລະ ການຊົດໃຊ້ໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ຖືກລະເມີດກົດໝາຍວ່າດ້ວຍສິດທິມະນຸດລະຫວ່າງປະເທດທັງໝົດ ແລະ ການລະເມີດກົດໝາຍວ່າດ້ວຍມະນຸດສະທຳລະຫວ່າງປະເທດຢ່າງຮ້າຍແຮງ, C.H.R. res. 2005/35, U.N. Doc. E/CN.4/2005/ L.10/ Add.11 (19 ເມສາ 2005).

ແລະ ອ້າງເຖິງບຸກຄົນຜູ້ທີ່ໄດ້ຮັບໄພອັນຕະລາຍ ທີ່ເປັນຜົນສະທ້ອນມາຈາກການກະທຳຜິດທາງອາຍາ. ກົດໝາຍ ທີ່ໃຫ້ສິດສະເພາະບຸກຄົນ ແລະ ຖານະທາງດ້ານກົດໝາຍ ໃຊ້ຄຳວ່າ 'ຜູ້ຖືກເຄາະຮ້າຍ' ແລະ ໜ່ວຍງານບັງຄັບໃຊ້ກົດໝາຍ ໃຊ້ຄຳນີ້ໃນການປະຕິບັດວຽກຂອງເຂົາເຈົ້າ. 'ຜູ້ລອດຊີວິດ' ຖືກນຳໃຊ້ຢ່າງກວ້າງຂວາງ ໂດຍອົງການທີ່ໃຫ້ການບໍລິການ ເພື່ອຮັບຮູ້ເຖິງຄວາມເຂັ້ມແຂງ ແລະ ຄວາມກ້າຫານທີ່ຈະຂ້າມຜ່ານການຕົກເປັນຜູ້ຖືກເຄາະຮ້າຍ.

**ວິທີການທີ່ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ:** ວິທີການທີ່ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແມ່ນການເນັ້ນໃສ່ຢ່າງເປັນລະບົບຕໍ່ກັບຄວາມຕ້ອງການ ແລະ ຄວາມກັງວົນຂອງຜູ້ຖືກເຄາະຮ້າຍ ເພື່ອຮັບປະກັນວ່າການໃຫ້ບໍລິການດ້ວຍຄວາມເອົາໃຈໃສ່ ແລະ ຄຳນຶງເຖິງຄວາມອ່ອນໄຫວ ໃນລັກສະນະທີ່ບໍ່ມີການຕັດສິນ.[18]

ມັນໝາຍເຖິງການວາງບູລິມະສິດ ແລະ ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍຢູ່ແຖວໜ້າຂອງການຕອບໂຕ້ໃດໜຶ່ງ.[19]

ມັນບໍ່ມີຄຳນິຍາມສະເພາະໃດໜຶ່ງ ແຕ່ UNHCR ໄດ້ໃຫ້ຄຳນິຍາມວ່າ: ໃນບໍລິບົດຂອງການຂູດຮີດທາງເພດ ແລະ ການລ່ວງລະເມີດທາງເພດ ແລະ ການຄຸກຄາມທາງເພດ, ວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ເປັນວິທີການທີ່ມີສ່ວນຮ່ວມກັບຜູ້ຖືກເຄາະຮ້າຍ ທີ່ໃຫ້ບູລິມະສິດໃນການຮັບຟັງຜູ້ຖືກເຄາະຮ້າຍ, ຫຼີກລ້ຽງການຕົກເປັນຜູ້ຖືກເຄາະຮ້າຍຊ້ຳຄືນອີກ, ແລະ ເນັ້ນໃສ່ຄວາມປອດໄພ, ສິດທິ, ຄວາມເປັນຢູ່ທີ່ດີ, ການສະແດງຄວາມຕ້ອງການ ແລະ ທາງເລືອກຢ່າງເປັນລະບົບ. ດ້ວຍເຫດນັ້ນ ຈຶ່ງເຮັດໃຫ້ການຄຸ້ມຄອງຜູ້ຖືກເຄາະຮ້າຍກັບຄືນມາຫຼາຍເທົ່າທີ່ເປັນໄປໄດ້ ແລະ ຮັບປະກັນການບໍລິການ ແລະ ການໃຫ້ການຊ່ວຍເຫຼືອທີ່ເອົາໃຈໃສ່ ແລະ ຄຳນຶງເຖິງຄວາມອ່ອນໄຫວ ໃນລັກສະນະທີ່ບໍ່ແມ່ນການຕັດສິນ."[20]

ຂະບວນການຂອງບາຫຼີ ໄດ້ກຳນົດວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງວ່າ: ເປັນການຄຳນຶງເຖິງຄວາມຕ້ອງການສະເພາະບຸກຄົນຂອງຜູ້ຖືກເຄາະຮ້າຍ ແລະ ປັບແຕ່ງການຕອບສະໜອງການປົກປ້ອງຕາມຄວາມເໝາະສົມ. ເຊິ່ງຄວນອີງໃສ່ຫຼັກການພື້ນຖານຂອງຫຼັກການຄວາມປອດໄພ, ການຮັກສາຄວາມລັບ ແລະ ການບໍ່ຈຳແນກ. ທີ່ບໍ່ຄຳນຶງວ່າຜູ້ຖືກເຄາະຮ້າຍ ຈະມີສ່ວນຮ່ວມໃນຂະບວນການຍຸຕິທຳທາງອາຍາ ຫຼື ບໍ່.[21]

**ການເບິ່ງແຍງຄວາມບອບຊ້ຳທາງດ້ານຈິດໃຈ:** ການຮັບຮູ້ເຖິງຜົນກະທົບຂອງປະສົບການຄວາມບອບຊ້ຳທາງດ້ານຈິດໃຈ (ໂດຍສະເພາະ ຄວາມຮຸນແຮງດ້ານຮ່າງກາຍ ຫຼື ຈິດໃຈ ທີ່ອາດຈະລວມເອົາການລ່ວງລະເມີດກ່ອນ ແລະ ໃນລະຫວ່າງ ທີ່ໄດ້ປະສົບພົບພໍ້ຈາກການຄ້າມະນຸດ ທີ່ເກີດຂຶ້ນແທ້ຈິງ) ຂອງຊີວິດ ແລະ ພຶດຕິກຳສະເພາະບຸກຄົນ, ແລະ ຕໍ່ກັບການຮັບຮູ້ຂອງຕົນເອງ ແລະ ຮ່າງກາຍຂອງເຂົາເຈົ້າ.[22] ເປັນການຮັບຮູ້ເຖິງສັນຍານ ແລະ ອາການຂອງຄວາມບອບຊ້ຳທາງດ້ານຈິດໃຈຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ເຊັ່ນດຽວກັບວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ, ແມ່ນເນັ້ນໃສ່ຄວາມປອດໄພຂອງຜູ້ຖືກເຄາະຮ້າຍ, ການຮັກສາຄວາມປອດໄພ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍ ຕໍ່ກັບນະໂຍບາຍ ແລະ ການປະຕິບັດ ທີ່ອາດຈະເຮັດໃຫ້ຜູ້ຖືກເຄາະຮ້າຍມີຄວາມບອບຊ້ຳທາງດ້ານຈິດໃຈ.[23]

---

18 ຄູ່ມືທາງອີເລັກໂຕຣນິກ ຂອງໜ່ວຍງານສະເພາະກິດຕ້ານການຄ້າມະນຸດ: ວິທີການທີ່ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ. ຫ້ອງການສຳລັບຜູ້ຖືກເຄາະຮ້າຍ ອາຊະຍາກຳ, ແຜນງານ ຫ້ອງການຄວາມຍຸຕິທຳ, ກະຊວງຍຸຕິທຳຂອງສະຫະລັດອາເມລິກາ. https://www.ovcttac.gov/taskforceguide/eguide/1-understanding-human-trafficking/13-victim-centered-approach/ (ເຂົ້າເບິ່ງຂໍ້ມູນວັນທີ 15 ຕຸລາ 2021)

19 ວິທີການເອົາຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດເປັນໃຈກາງ. ສູນຄວາມຮູ້ທາງອອນລາຍຂອງອົງການ UN Women ເພື່ອຢຸດຕິຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ. https://www.endvawnow.org/en/articles/1790-victim-survivor-centred-approach.html (ເຂົ້າເບິ່ງຂໍ້ມູນວັນທີ 15 ຕຸລາ 2021)

20 https://www.unhcr.org/5fdb345e7.pdf

21 https://www.baliprocess.net/UserFiles/baliprocess/File/RSO-CIFAL-curriculum%20Enhancing%20a%20Victim-Centered%20Approach_A4_Final_2017-02-14_for-web.pdf

22 ອົງການ IOM (2009). *ການເບິ່ງແຍງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຄຳແນະນຳສຳລັບຜູ້ໃຫ້ບໍລິການດ້ານສຸຂະພາບ.* ເຈນີວາ: IOM.

23 ຄູ່ມືທາງອີເລັກໂຕຣນິກ ຂອງໜ່ວຍງານສະເພາະກິດຕ້ານການຄ້າມະນຸດ: ວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ. ຫ້ອງການສຳລັບຜູ້ຖືກເຄາະຮ້າຍ ອາຊະຍາກຳ, ແຜນງານ ຫ້ອງການຄວາມຍຸຕິທຳ, ກະຊວງຍຸຕິທຳຂອງສະຫະລັດອາເມລິກາ. https://www.ovcttac.gov/taskforceguide/eguide/4-supporting-victims/41-using-a-trauma-informed-approach/ (ເຂົ້າເບິ່ງຂໍ້ມູນວັນທີ 15 ຕຸລາ 2021)

# ການບໍ່ເຮັດໄພອັນຕະລາຍ ໃນການຕ້ານການຄ້າມະນຸດແມ່ນຫຍັງ?

## ແນວຄວາມຄິດຂອງການບໍ່ເຮັດໄພອັນຕະລາຍ

ວິທີການບໍ່ເຮັດໄພອັນຕະລາຍ ຮັບຮູ້ວ່າການກະທຳທີ່ມີເຈດຕະນາດີ ແມ່ນອອກແບບມາເພື່ອຊ່ວຍເຫຼືອ ຫຼື ໃຫ້ການຊ່ວຍຢຸດສາເຫດຂອງໄພອັນຕະລາຍ.

ມັນຮຽກຮ້ອງໃຫ້ຜູ້ຈັດການແຜນງານ/ໂຄງການ ແລະ ຜູ້ປະຕິບັດຕົວຈິງ ປະເມີນຄວາມເປັນໄປໄດ້ຂອງໄພອັນຕະລາຍ ຕໍ່ກັບການກະທຳໃດໜຶ່ງທີ່ໄດ້ສະເໜີ. ຄວນມີການພັດທະນາ ການປະເມີນຄວາມສ່ຽງ ແລະ ການຄຸ້ມຄອງແຜນການ ໂດຍການປຶກສາຫາລືກັບບຸກຄົນ/ຊຸມຊົນທີ່ໄດ້ຮັບຜົນກະທົບ ເພື່ອຊ່ວຍຕິດຕາມ ແລະ ຫຼຸດຜ່ອນຄວາມສ່ຽງທີ່ອາດຈະເກີດຂຶ້ນ.

ຄວາມສ່ຽງອື່ນໆອາດຈະບໍ່ເຫັນໄດ້ຢ່າງຊັດເຈນ - ຕົວຢ່າງ, ການສະໜອງທີ່ພັກເຊົາ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍ ບົນພື້ນຖານການເຫັນດີຂອງເຂົາເຈົ້າ ເພື່ອເຂົ້າຮ່ວມໃນການດຳເນີນຄະດີທາງກົດໝາຍຕໍ່ກັບຜູ້ກະທຳຜິດ ຫຼື ການນຳໃຊ້ຂໍ້ຄວາມ ແລະ ຮູບພາບ ໂດຍບໍ່ຕັ້ງໃຈ ເພື່ອເນັ້ນຢໍ້າເຖິງແນວຄິດດັ້ງເດີມກ່ຽວກັບຜູ້ຍິງ ແລະ ຜູ້ຊາຍ ທີ່ປະກອບສ່ວນພາໃຫ້ເກີດຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ.

ສິ່ງນີ້ຮຽກຮ້ອງໃຫ້ຜູ້ປະຕິບັດຕົວຈິງ ຕ້ອງໄດ້ໂອ້ລົມກັບຜູ້ຖືກເຄາະຮ້າຍແຕ່ລະຄົນ ເພື່ອໃຫ້ເຂົ້າໃຈເຖິງໄພອັນຕະລາຍ ຈາກມູມມອງຂອງເຂົາເຈົ້າ. ມັນຍັງຮຽກຮ້ອງໃຫ້ຜູ້ປະຕິບັດຕົວຈິງ ນຳເອົາຜູ້ຖືກເຄາະຮ້າຍມາມີສ່ວນຮ່ວມໃນຂະບວນການຕັດສິນໃຈ. ການຕັດສິນໃຈ ແລະ ການດຳເນີນການທີ່ຕິດພັນກັບຜູ້ຖືກເຄາະຮ້າຍ ຄວນຈະໄດ້ຮັບການແນະນຳ ຈາກການປະເມີນຄວາມສ່ຽງ ແລະ ໄພອັນຕະລາຍຂອງຜູ້ຖືກເຄາະຮ້າຍ.

## ການບໍ່ເຮັດໄພອັນຕະລາຍ ແລະ ການຄ້າມະນຸດ

ແຜນງານ ແລະ ກິດຈະກຳການຕ້ານການຄ້າມະນຸດ ໂດຍສ່ວນໃຫຍ່ແລ້ວມີເຈດຕະນາທີ່ດີ ແລະ ບໍ່ໄດ້ມີເຈດຕະນາທີ່ຈະສ້າງຄວາມເປັນອັນຕະລາຍຕໍ່ກັບຊີວິດ ແລະ ສະຫວັດດີພາບຂອງຜູ້ຖືກຄ້າມະນຸດ ແລະ ຄອບຄົວຂອງເຂົາເຈົ້າ. ເຖິງຢ່າງໃດກໍຕາມຫຼາຍຄັ້ງການກະທຳດັ່ງກ່າວອາດຈະກໍ່ໃຫ້ເກີດໄພອັນຕະລາຍ. ສິ່ງດັ່ງກ່າວນີ້ ກ່ຽວຂ້ອງກັບຄວາມສ່ຽງທີ່ຮຸນແຮງ ແລະ ມີຄວາມສະຫຼັບຊັບຊ້ອນຂອງການຄ້າມະນຸດ, ຄວາມບອບບາງຂອງຜູ້ຖືກເຄາະຮ້າຍຫຼາຍຄົນ ແລະ ຄວາມເປັນໄປໄດ້ທີ່ມີຄວາມບອບຊໍ້າທາງດ້ານຈິດໃຈ ເພີ່ມຂຶ້ນ.

ອັນຕະລາຍມັກຈະເກີດຂຶ້ນແບບຄາດບໍ່ເຖິງ ແລະ ບໍ່ໄດ້ຕັ້ງໃຈ. ມັນສາມາດເກີດຂຶ້ນໄດ້ຫຼາຍຮູບແບບ - ທາງດ້ານຮ່າງກາຍ, ຈິດໃຈ, ກົດໝາຍ, ເສດຖະກິດ ແລະ ສັງຄົມ.

ບາງຄວາມສ່ຽງຂອງໄພອັນຕະລາຍນັ້ນ ເຫັນໄດ້ຢ່າງຊັດເຈນ - ຕົວຢ່າງ, ອາຊະຍາກຳ ແລະ ການກັກຂັງຜູ້ຖືກເຄາະຮ້າຍສຳລັບການມີສ່ວນຮ່ວມຂອງເຂົາເຈົ້າກ່ຽວກັບກິດຈະກຳທີ່ຜິດກົດໝາຍ ເຊັ່ນ ການເປັນໂສເພນີ, ການນຳໃຊ້ຢາເສບຕິດ ແລະ ການເຂົ້າ-ອອກເມືອງຢ່າງຜິດກົດໝາຍ.

**ເນື່ອງຈາກວ່າຜູ້ຖືກເຄາະຮ້າຍແຕ່ລະຄົນ ມີເອກະລັກທາງດ້ານສັງຄົມ ແລະ ປະສົບການຈາກການຖືກຄ້າມະນຸດ ມັນຈຶ່ງບໍ່ມີວິທີການ "ອັນດຽວທີ່ເໝາະສົມກັບທຸກຄົນ" ເພື່ອຫຼຸດຜ່ອນຄວາມສ່ຽງ. ແຕ່ຜູ້ປະຕິບັດຕົວຈິງ ຈຳເປັນຕ້ອງໄດ້ນຳໃຊ້ດຸນພິນິດ ແລະ ຄວາມຊ່ຽວຊານຂອງຕົນເອງ ໃນເວລາເຮັດວຽກກັບຜູ້ຖືກເຄາະຮ້າຍ ເພື່ອວິເຄາະ, ປະເມີນ ແລະ ຫຼຸດຜ່ອນຄວາມສ່ຽງທີ່ອາດຈະເກີດຂຶ້ນ.**

ຄວນມີການພິຈາລະນາພິເສດ ຕໍ່ກັບຜູ້ທີ່ຖືກຈຳແນກຢູ່ແລ້ວ ເຊັ່ນ: ຜູ້ຍິງ ແລະ ເດັກຍິງ, ກຸ່ມຄົນຊົນເຜົ່າ, ຄົນພິການ, ຜູ້ເຄື່ອນຍ້າຍແຮງງານ ແບບບໍ່ປົກກະຕິ ແລະ ຜູ້ອື່ນໆ.

# ກອບການເຮັດວຽກລະຫວ່າງປະເທດ ເພື່ອຄວາມກ້າວໜ້າ ການບໍ່ເຮັດໄພ ອັນຕະລາຍ

***ອານຸສັນຍາສາກົນວ່າດ້ວຍການປ້ອງກັນ, ປາບປາມ ແລະ ລົງໂທດການຄ້າມະນຸດ (2000),*** ເຊິ່ງຮັບຮູ້ກັນວ່າເປັນ ***ອານຸສັນຍາປາເຣໂມ,*** ໄດ້ຮຽກຮ້ອງໃຫ້ລັດ ປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເຄົາລົບສິດທິມະນຸດຂອງເຂົາເຈົ້າຢ່າງເຕັມສ່ວນ. ມາດຕາ 6 ໄດ້ກຳນົດເຖິງການປົກປ້ອງຄວາມເປັນສ່ວນຕົວ ແລະ ເອກະລັກຂອງຜູ້ຖືກເຄາະຮ້າຍ; ສະໜອງຂໍ້ມູນໃຫ້ແກ່ຜູ້ຖືກເຄາະຮ້າຍ ກ່ຽວກັບການດຳເນີນຄະດີຂອງສານ; ຮັບປະກັນການຟື້ນຟູທາງດ້ານຮ່າງກາຍ, ຈິດໃຈ ແລະ ສັງຄົມແກ່ຜູ້ຖືກເຄາະຮ້າຍ; ສະໜອງຄວາມປອດໄພດ້ານຮ່າງກາຍໃຫ້ແກ່ຜູ້ຖືກເຄາະຮ້າຍ ແລະ ໃຫ້ຜູ້ຖືກເຄາະຮ້າຍຮຽກຮ້ອງຄ່າຊົດເຊີຍຈາກຄວາມເສຍຫາຍນັ້ນ.

***ຫ້ອງການຂອງຄະນະກຳມາທິການໃຫຍ່ເພື່ອສິດທິມະນຸດ (OHCHR) ຄູ່ມື ແລະ ຫຼັກການກ່ຽວກັບຂໍ້ສະເໜີແນະນຳ ກ່ຽວກັບສິດທິມະນຸດ ແລະ ການຄ້າມະນຸດ*** ຮຽກຮ້ອງໃຫ້ລັດ ຮັບປະກັນວ່າການນຳໃຊ້ມາດຕະການຕ້ານການຄ້າມະນຸດ ຈະບໍ່ມີຜົນກະທົບທາງດ້ານລົບຕໍ່ກັບສິດທິມະນຸດ ແລະ ກຽດສັກສີຂອງບຸກຄົນ ລວມທັງ ບຸກຄົນທີ່ຖືກຄ້າມະນຸດ (ຄູ່ມື 1); ຮັບປະກັນການກຳນົດຕົວຜູ້ຖືກເຄາະຮ້າຍຢ່າງຖືກຕ້ອງ ແລະ ໂດຍໄວ (ຄູ່ມື 2); ເພື່ອໃຫ້ການບັງຄັບໃຊ້ກົດໝາຍມີການຄຳນຶງເຖິງສິດທິ ແລະ ຄວາມຕ້ອງການຂອງຜູ້ຖືກຄ້າມະນຸດ (ຄູ່ມື 5); ເພື່ອຂະຫຍາຍຂອບເຂດການປົກປ້ອງ ແລະ ການສະໜັບສະໜູນຜູ້ຖືກເຄາະຮ້າຍທຸກຄົນ ໂດຍບໍ່ມີການຈຳແນກ (ຄູ່ມື 6); ເພື່ອສ້າງມາດຕະການສະເພາະ ສຳລັບການປົກປ້ອງຜູ້ຖືກເຄາະຮ້າຍທີ່ເປັນເດັກນ້ອຍ (ຄູ່ມື 8).

***ຄຳແນະນຳຂອງອົງການ UNICEF ກ່ຽວກັບການປົກປ້ອງຜູ້ຖືກເຄາະຮ້າຍທີ່ເປັນເດັກ (2006)*** ໄດ້ກຳນົດການກະກຽມການກັບຄືນ ເພື່ອຫຼຸດຜ່ອນຄວາມເຈັບປວດທາງດ້ານຈິດໃຈ/ອາລົມ ທີ່ເກີດຂຶ້ນຕໍ່ເດັກ ແລະ ພິຈາລະນາ ຄວາມສ່ຽງທີ່ຈະຖືກສັງຄົມປະນາມ ແລະ ໃນການເປັນຜູ້ຖືກເຄາະຮ້າຍຊ້ຳຄືນອີກ (ວັກທີ 9.2); ປະເທດຕ່າງໆ ຮັບປະກັນວ່າຜູ້ຖືກເຄາະຮ້າຍທີ່ເປັນພະຍານ ສາມາດໃຫ້ຫຼັກຖານໄດ້ຢ່າງປອດໄພ ແລະ ພະຍາຍາມຫຼຸດຜ່ອນຄວາມບອບຊ້ຳທາງດ້ານຈິດໃຈຊ້ຳສອງ ທີ່ຜູ້ຖືກເຄາະຮ້າຍມັກຈະປະເຊີນໃນຫ້ອງປະຊຸມສານ (ວັກທີ 10.1) ແລະ ການປົກປ້ອງຜູ້ທີ່ເຂົ້າຮ່ວມງານຄົ້ນຄວ້າທັງໝົດ ຈາກໄພອັນຕະລາຍທາງດ້ານອາລົມ ຫຼື ດ້ານຮ່າງກາຍ ທີ່ອາດຈະເປັນຜົນມາຈາກການເຮັດຄົ້ນຄວ້າກ່ຽວກັບການຄ້າເດັກ (ວັກທີ 12.1).

***ຄວາມຄິດເຫັນທົ່ວໄປຂອງ CRC ສະບັບເລກທີ 13 (2011) ກ່ຽວກັບສິດທິຂອງເດັກທີ່ຈະມີອິດສະລະພາບຈາກຄວາມຮຸນແຮງທຸກຮູບແບບ*** ໂດຍກຳນົດໄວ້ວ່າ ສິດທິຂອງເດັກຕ້ອງໄດ້ຖືກຮັບຮູ້/ຮັບຟັງ ແລະ ຄວາມຄິດເຫັນຂອງເຂົາເຈົ້າ ທີ່ອີງຕາມຄວາມເໝາະສົມຕ້ອງໄດ້ຮັບການເຄົາລົບຢ່າງເປັນລະບົບໃນຂະບວນການຕັດສິນໃຈທັງໝົດ ແລະ ການສ້າງຄວາມເຂັ້ມແຂງ ແລະ ການມີສ່ວນຮ່ວມຂອງເຂົາເຈົ້ານັ້ນ ຕ້ອງເປັນໃຈກາງໃນການຍຸດທະສາດໃນການປົກປ້ອງ ແລະ ການເບິ່ງແຍງເດັກ. (ພາກທີ 1.3(e)).

***ຄວາມຄິດເຫັນທົ່ວໄປຂອງ CEDAW ສະບັບເລກທີ 38 (2020) ວ່າດ້ວຍການຄ້າມະນຸດໃນແມ່ຍິງ ແລະ ເດັກໃນບໍລິບົດຂອງການເຄື່ອນຍ້າຍແຮງງານທົ່ວໂລກ*** ຮຽກຮ້ອງໃຫ້ລັດກຳນົດການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ລອດຊີວິດຈາກການຄ້າມະນຸດ, ເພື່ອປົກປ້ອງບໍ່ໃຫ້ເຂົາເຈົ້າເປັນຜູ້ຖືກເຄາະຮ້າຍຊ້ຳຄືນອີກ ແລະ ຮັບປະກັນວ່າເຂົາເຈົ້າໄດ້ເຂົ້າເຖິງຄວາມຍຸຕິທຳ ແລະ ລົງໂທດຜູ້ກະທຳຜິດ (ວັກທີ 6).

***ສົນທິສັນຍາສາກົນວ່າດ້ວຍສິດຂອງຄົນພິການ*** ຮຽກຮ້ອງໃຫ້ລັດຕໍ່ຕ້ານຕໍ່ກັບແນວຄິດດັ້ງເດີມ, ອັກຄະຕິ ແລະ ການປະຕິບັດທີ່ເປັນໄພອັນຕະລາຍ ທີ່ກ່ຽວຂ້ອງກັບບຸກຄົນທີ່ເປັນຄົນພິການ ລວມທັງ ເພດ ແລະ ອາຍຸ ໃນທຸກດ້ານຂອງຊີວິດ (ມາດຕາ 8).

***ຖະແຫຼງການຂອງອົງການສະຫະປະຊາຊາດ ວ່າດ້ວຍຫຼັກການພື້ນຖານຂອງຄວາມຍຸຕິທຳ ສຳລັບຜູ້ຖືກເຄາະຮ້າຍຈາກອາຊະຍາກຳ ແລະ ການສວຍໃຊ້ອຳນາດ*** ແນະນຳໃຫ້ຜູ້ຖືກເຄາະຮ້າຍຈາກອາຊະຍາກຳ ມີສິດທີ່ຈະໄດ້ຮັບການຖືກປະຕິບັດດ້ວຍຄວາມເຫັນອົກເຫັນໃຈ ແລະ ຄວາມເຄົາລົບ, ຄວາມຍຸຕິທຳ ແລະ ການຊົດໃຊ້ໂດຍທັນທີ, ເພື່ອໃຫ້ຂໍ້ມູນ, ໄດ້ຮັບຟັງ ແລະ ສະແດງຄວາມຄິດເຫັນຂອງເຂົາເຈົ້າ ແລະ ພິຈາລະນາໃນຂັ້ນຕອນທີ່ເໝາະສົມ, ເພື່ອໃຫ້ຄວາມຊ່ວຍເຫຼືອຢ່າງເໝາະສົມ ໃນທຸກຂັ້ນຕອນຂອງກົດໝາຍ.

***ຄູ່ມືຂອງອົງການ IOM ວ່າດ້ວຍການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໂດຍກົງ (2007)*** ໄດ້ເນັ້ນໃຫ້ເຫັນເຖິງຄວາມສຳຄັນຂອງການບໍ່ເຮັດໄພອັນຕະລາຍ ບົນພື້ນຖານຫຼັກການໃນການເຮັດວຽກຮ່ວມກັບຜູ້ຖືກຄ້າມະນຸດ. ເຊິ່ງໄດ້ໃຫ້ເຫດຜົນວ່າ ບຸກຄົນທີ່ເຮັດວຽກຮ່ວມກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຄວາມຮັບຜິດຊອບດ້ານຈັນຍາທຳ ໃນການປະເມີນໄພອັນຕະ ລາຍທີ່ອາດຈະເກີດຂຶ້ນ ທີ່ກ່ຽວຂ້ອງກັບການປະຕິບັດທີ່ເຂົາເຈົ້າໄດ້ສະເໜີໃຫ້ດຳເນີນການຢ່າງຖີ່ຖ້ວນ ແລະ ເໝາະສົມ.

# ຄູ່ມື ແລະ ກອບການເຮັດວຽກຂອງ ອາຊຽນ ເພື່ອຄວາມກ້າວໜ້າການບໍ່ເຮັດໄພອັນຕະລາຍ

***ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ*** ກໍານົດໃຫ້ລັດສະມາຊິກອາຊຽນ ເຄົາລົບ ແລະ ປົກປ້ອງສິດທິມະນຸດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (TIP). ມາດຕາ 14 ການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກໍານົດໃຫ້ບັນດາປະເທດອາຊຽນ ສ້າງຄູ່ມືໃນຫຼາຍຂົງເຂດ ລວມທັງ ການກໍານົດຕົວຜູ້ຖືກເຄາະຮ້າຍຢ່າງເໝາະສົມ, ຄວາມປອດໄພດ້ານຮ່າງກາຍຂອງຜູ້ຖືກເຄາະຮ້າຍ, ການປົກປ້ອງຄວາມເປັນສ່ວນຕົວ ແລະ ຕົວຕົນຂອງຜູ້ຖືກເຄາະຮ້າຍ, ການບໍ່ຖືເປັນຄະດີອາຍາສໍາລັບການກະທໍາທີ່ຜິດກົດໝາຍ ທີ່ກະທໍາໂດຍຜູ້ຖືກເຄາະຮ້າຍ, ບໍ່ກັກຂັງຜູ້ຖືກເຄາະຮ້າຍໃນສະຖານທີ່ກັກຂັງ ຫຼື ຄ້າຍຄຸມຂັງ, ມີຄ່າຊົດເຊີຍສໍາລັບຄວາມເສຍຫາຍທີ່ໄດ້ຮັບ ແລະ ການໃຫ້ການປົກປ້ອງ ແລະ ການເບິ່ງແຍງທີ່ຈໍາເປັນ ແລະ ອື່ນໆ.

***ແຜນປະຕິບັດງານອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ*** ໄດ້ຢັ້ງຢືນໃນມາດຕາ 14 ຂອງສົນທິສັນຍາ ACTIP ແລະ ໄດ້ແນະນໍາການບໍລິການສະເພາະ ລວມທັງ ການບໍລິການດ້ານສຸຂະພາບ ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຜູ້ຖືກເຄາະຮ້າຍເຂົ້າເຖິງການຟື້ນຟູຄືນທາງດ້ານຮ່າງກາຍ, ຈິດໃຈ ແລະ ສັງຄົມ, ຄະດີຄ້າມະນຸດໄດ້ຖືກດໍາເນີນຄະດີ ເຖິງວ່າຈະບໍ່ມີຄໍາໃຫ້ການຂອງຜູ້ຖືກເຄາະຮ້າຍ, ການພັດທະນາກົນໄກການປົກປ້ອງທີ່ມີປະສິດທິພາບ ແລະ ເໝາະສົມ ແກ່ພະຍານໃນຄະດີຄ້າມະນຸດ ແລະ ອື່ນໆ.

***ແຜນປະຕິບັດງານໂບໂຮ*** (ແຜນງານຫຼາຍພາກສ່ວນຂອງອາຊຽນ) ສະໜັບສະໜູນການຈັດຕັ້ງປະຕິບັດສົນທິສັນຍາ ACTIP ແລະ APA. ແມ່ນໄດ້ເນັ້ນໃຫ້ເຫັນເຖິງກິດຈະກໍາລະດັບພາກພື້ນທີ່ກົມກຽວກັນ ເພື່ອຕ້ານການຄ້າມະນຸດໃນສີ່ຂົງເຂດຂອງ APA: i) ການປ້ອງກັນການຄ້າມະນຸດ; ii) ການປົກປ້ອງຜູ້ຖືກເຄາະຮ້າຍ ; iii) ການບັງຄັບໃຊ້ກົດໝາຍ ແລະ ດໍາເນີນຄະດີອາຊະຍາກໍາຄ້າມະນຸດ ແລະ iv) ການຮ່ວມມື ແລະ ປະສານງານໃນພາກພື້ນ ແລະ ສາກົນ.

***ຄູ່ມືອາຊຽນ ກ່ຽວກັບການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ*** ໄດ້ແນະນໍາວ່າ "ກ່ອນທີ່ຈະດໍາເນີນການໃດໜຶ່ງ ຄວນທີ່ຈະພິຈາລະນາ ເພື່ອຮັບປະກັນໃນການຫຼຸດຜ່ອນຄວາມສ່ຽງໃດໜຶ່ງ ທີ່ອາດຈະເກີດຂຶ້ນຕໍ່ກັບຜູ້ຖືກເຄາະຮ້າຍ"[24] ມັນຮຽກຮ້ອງໃຫ້ມີການຮັກສາຄວາມລັບ ແລະ ການຂໍຄວາມຍິນຍອມໃນທຸກຂັ້ນຕອນຂະບວນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ. ຮຽກຮ້ອງໃຫ້ຜູ້ຖືກເຄາະຮ້າຍ ມີສ່ວນຮ່ວມຢ່າງມີຄວາມໝາຍໃນການວາງແຜນ ແລະ ຈັດຕັ້ງປະຕິບັດການຊ່ວຍເຫຼືອ ແລະ ຜູ້ສະໜອງການບໍລິການ ໄດ້ຮັບຮູ້ ແລະ ເຄົາລົບຄວາມຕ້ອງການສະເພາະ ແລະ ຄວາມກັງວົນຂອງແມ່ຍິງ ແລະ ເດັກຍິງ.

***ຄະນະກໍາມາທິການອາຊຽນວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິແມ່ຍິງ ແລະ ເດັກນ້ອຍ (ACWC) ຄູ່ມື ແລະ ຂັ້ນຕອນໃນລະດັບພາກພື້ນ ເພື່ອແກ້ໄຂຄວາມຕ້ອງການອັນຈໍາເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ*** ຮຽກຮ້ອງໃຫ້ລັດສະມາຊິກອາຊຽນ ສ້າງກົນໄກ ແລະ ຂັ້ນຕອນ ເພື່ອອໍານວຍຄວາມສະດວກໃນການກໍານົດຕົວຜູ້ຖືກເຄາະຮ້າຍຢ່າງຖືກຕ້ອງ ແລະ ທັນການ. ມັນຮຽກ ຮ້ອງໃຫ້ມີການປົກປ້ອງ ແລະ ສະໜັບສະໜູນໂດຍທັນທີ ໂດຍບໍ່ຂຶ້ນກັບຄວາມຕັ້ງໃຈຂອງຜູ້ຖືກເຄາະຮ້າຍໃນການເຂົ້າຮ່ວມການດໍາເນີນຄະດີທາງກົດໝາຍ. ສິ່ງນີ້ລວມມີການປົກປ້ອງຈາກໄພອັນຕະລາຍເພີ່ມເຕີມ; ການປົກປ້ອງຄວາມເປັນສ່ວນຕົວ; ການຊ່ວຍເຫຼືອ ແລະ ສະໜັບສະໜູນໂດຍທັນທີ; ການແກ້ໄຂສະຖານະພາບຂອງຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ; ແລະ ການປົກປ້ອງຈາກການຖືກກັກຂັງ ແລະ ດໍາເນີນຄະດີ.

***ຄູ່ມືອາຊຽນສໍາລັບຜູ້ປະຕິບັດຕົວຈິງ: ການຕອບໂຕ້ດ້ານຍຸຕິທໍາທາງອາຍາ ຕໍ່ກັບການຄ້າມະນຸດ*** ແນະນໍາຜູ້ຖືກເຄາະຮ້າຍ ໃນການ ຊອກຫາ ແລະ ໄດ້ຮັບການປິ່ນປົວ, ໃຫ້ເຂົ້າເຖິງສູນພັກເຊົາ ແລະ ການປົກປ້ອງໃນທັນທີ, ແລະ ໄດ້ຮັບການປົກປ້ອງຈາກການແກ້ແຄ້ນຈາກຜູ້ຄ້າມະນຸດ. ມັນຍັງຮຽກຮ້ອງໃຫ້ການດໍາເນີນຄະດີອາຍາຂອງຄະດີຄ້າມະນຸດ ໃຫ້ດໍາເນີນການໂດຍໄວທີ່ສຸດ ເພື່ອຫຼຸດຜ່ອນຄວາມກົດດັນ ແລະ ເຄັ່ງຕຶງ ທີ່ຜູ້ຖືກເຄາະຮ້າຍໄດ້ຮັບ.

---

24 ເບິ່ງມາດຕາ 2.1

***ຖະແຫຼງການອາຊຽນ ວ່າດ້ວຍສິດທິຂອງເດັກໃນບໍລິບົດຂອງແຮງງານເຄື່ອນຍ້າຍ*** ຕົກລົງວ່າລັດສະມາຊິກທັງໝົດເຮັດວຽກເພື່ອພັດທະນາຂັ້ນຕອນ ແລະ ທາງເລືອກທີ່ມີປະສິດທິພາບ ໃນການກັກຂັງເດັກທີ່ເປັນແຮງງານເຄື່ອນຍ້າຍ ເພື່ອຫຼຸດຜ່ອນຜົນກະທົບ ແລະ ໃນກໍລະນີທີ່ເປັນໄປໄດ້, ເດັກຄວນຈະຢູ່ກັບຄອບຄົວຂອງເຂົາເຈົ້າ, ບໍ່ຖືກກັກຂັງ, ມີສະພາບແວດລ້ອມທີ່ສະອາດ ແລະ ປອດໄພ.

***ຖະແຫຼງການອາຊຽນ ວ່າດ້ວຍສິດທິມະນຸດ*** ໄດ້ຢືນຢັນເຖິງສິດທິຂອງແມ່ຍິງ, ເດັກນ້ອຍ, ໄວໜຸ່ມ, ຜູ້ເຖົ້າ/ຄົນສູງອາຍຸ, ຄົນພິການ, ແຮງງານເຄື່ອນຍ້າຍ, ກຸ່ມສ່ຽງ ແລະ ຄົນຜູ້ດ້ອຍໂອກາດ ເຊິ່ງເປັນພາກສ່ວນໜຶ່ງທີ່ບໍ່ສາມາດແບ່ງແຍກ, ຂາດບໍ່ໄດ້ ແລະ ຕັດອອກຈາກສ່ວນໜຶ່ງຂອງສິດທິມະນຸດ ແລະ ສິດເສລີພາບຂັ້ນພື້ນຖານ.[25]

***ແຜນປະຕິບັດງານພາກພື້ນອາຊຽນ ວ່າດ້ວຍການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ*** ໄດ້ຮຽກຮ້ອງໃຫ້ລັດສະມາຊິກທັງໝົດ ນໍາໃຊ້ທຸກມາດຕະການທີ່ຈໍາເປັນ ແລະ ພຽງພໍ ເພື່ອຮັບຮູ້ສິດທິເດັກໂດຍແທ້ຈິງ ເພື່ອປົກປ້ອງເຂົາເຈົ້າຈາກຄວາມຮຸນແຮງທຸກຮູບແບບ ໂດຍບໍ່ມີການຈໍາແນກໃດໆ. ລັດສະມາຊິກທັງໝົດ ຕ້ອງຮັບຮູ້, ເຄົາລົບ ແລະ ສົ່ງເສີມການຮັບຟັງຄວາມຄິດເຫັນສິດທິຂອງເດັກ ອີງຕາມຄວາມເໝາະສົມ ທີ່ຈະມີຜົນກະທົບຕໍ່ເດັກ, ເຊິ່ງຕ້ອງສາມາດນໍາໃຊ້ສິດຂອງເຂົາເຈົ້າໃນການສະແດງທັດສະນະຢ່າງເປັນອິດສະລະ ຕາມພັດທະນາການຄວາມສາມາດຂອງເຂົາເຈົ້າ.

***ແຜນປະຕິບັດງານພາກພື້ນອາຊຽນ ວ່າດ້ວຍການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ (2016-2025)*** ຮຽກຮ້ອງໃຫ້ລັດ "ມີການຈັດຕັ້ງປະຕິບັດການປະສານງານ ແລະ ການລົງທຶນແບບຍືນຍົງ" ເພື່ອແກ້ໄຂ "ຮາກເຫງົ້າຂອງບັນຫາທີ່ສະຫຼັບຊັບຊ້ອນ ແລະ ທີ່ຂັບເຄື່ອນນໍາໄປສູ່ "ຄວາມຮຸນແຮງຕໍ່ແມ່ຍິງ".

***ແຜນເປີດນໍາໃຊ້ແຜນແມ່ບົດອາຊຽນ ປີ 2025: ການປົກປັກຮັກສາສິດທິຂອງຄົນພິການ*** ໄດ້ຮັບຮູ້ເຖິງພັນທະຂອງລັດສະມາຊິກ ໃນການເຄົາລົບ, ສົ່ງເສີມ ແລະ ປົກປ້ອງສິດທິຂອງຄົນພິການ.

***ກອບຂອງອາຊຽນກ່ຽວກັບການເຮັດວຽກດ້ານຍຸດທະສາດການສົ່ງເສີມດ້ານບົດບາດຍິງ-ຊາຍ 2021-2025*** ໄດ້ຮັບຮອງເອົາວິທີການທີ່ອີງໃສ່ສິດທິເປັນພື້ນຖານ ເຊິ່ງເປັນໜຶ່ງໃນຫຼັກການ ແລະ ຄ່ານິຍົມຂອງຕົນ, ເຊິ່ງໝາຍເຖິງຄວາມເຂົ້າໃຈທີ່ວ່າແມ່ຍິງຂາດການເຂົ້າເຖິງການບໍລິການຂັ້ນພື້ນຖານ ແລະ ການມີສ່ວນຮ່ວມດ້ານເສດຖະກິດ, ສັງຄົມ ແລະ ການເມືອງ ທີ່ປະຕິເສດສິດທິມະນຸດຂອງເຂົາເຈົ້າ ແລະ ຮຽກຮ້ອງໃຫ້ມີການດໍາເນີນການ ເພື່ອສະໜັບສະໜູນແມ່ຍິງ ແລະ ເດັກຍິງ ເພື່ອໃຫ້ມີສ່ວນຮ່ວມໃນການສະແດງຄວາມຕ້ອງການຂອງເຂົາເຈົ້າ, ການຮຽກຮ້ອງຄວາມຮັບຜິດຊອບ ແລະ ຮຽກຮ້ອງສິດທິຂອງເຂົາເຈົ້າ.

---

25 ເບິ່ງທີ່ວັກ. 12.2 ຂອງວິໄສທັດຂອງປະຊາຄົມອາຊຽນ ປີ 2025

# ການນຳໃຊ້ ການບໍ່ເຮັດໄພອັນຕະລາຍ ໃນໄລະການປົກປ້ອງ ແລະ ຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍ ໂດຍກົງ

ຄູ່ມືນີ້ ພິຈາລະນາເຖິງຄວາມສ່ຽງຂອງໄພອັນຕະລາຍໃນຫ້າຂົງເຂດ ໃນການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໂດຍກົງ:



**ການກຳນົດຕົວຜູ້ຖືກເຄາະຮ້າຍ;**



**ການກອບກູ້, ການສະທ້ອນຄືນ ແລະ ສູນພັກເຊົາ;**



**ການສົ່ງກັບຄືນ ແລະ ການກັບຄືນສູ່ສັງຄົມ;**



**ການຊ່ວຍເຫຼືອດ້ານການແພດ ແລະ ຈິດໃຈ; ແລະ**



**ຂະບວນການຍຸຕິທຳທາງ ອາຍາ**

ເຖິງວ່າຈະມີການໃຫ້ແນວທາງ ແລະ ຄຳແນະນຳ ການບໍ່ເຮັດໄພອັນຕະລາຍ ໃນແຕ່ລະຂົງເຂດ, ແຕ່ມັນອາດຈະບໍ່ກວ້າງຂວາງ ແລະ ເລິກເຊິ່ງເທົ່າທີ່ຄວນ ສຳລັບຜູ້ປະຕິບັດຕົວຈິງທີ່ກ່ຽວຂ້ອງ. ຜູ້ປະຕິບັດຕົວຈິງ ຄວນຈະອ້າງອີງ ແລະ ມີການປຶກສາຕໍ່ກັບລາຍການ ແຫຼ່ງຂໍ້ມູນໃນເອກະສານຊ້ອນທ້າຍຂອງຄູ່ມືສະບັບນີ້.



ຮູບພາບໂດຍ ຣາວີນາ ຣັດເຊວ



# ການກຳນົດຕົວຜູ້ຖືກເຄາະຮ້າຍ

ຂັ້ນຕອນການກຳນົດຕົວຜູ້ຖືກເຄາະຮ້າຍ ແມ່ນຂັ້ນຕອນທີ່ບຸກຄົນໄດ້ຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (TIP), ຊຶ່ງຈະເຮັດໃຫ້ເຂົາເຈົ້າ ໄດ້ຮັບສິດທິ, ການບໍລິການ, ການປົກປ້ອງ ແລະ ການຊ່ວຍເຫຼືອເຊັ່ນ: ການບໍລິການດ້ານການແພດ ແລະ ສຸຂະພາບ, ທີ່ພັກເຊົາ ແລະ ຄວາມຕ້ອງການດ້ານອາຫານຂັ້ນພື້ນຖານ, ການໃຫ້ຄຳປຶກສາ ແລະ ການເບິ່ງແຍງດ້ານຈິດຕະວິທະຍາ ແລະ ອື່ນໆ.[26] ການກຳນົດຕົວຢ່າງຖືກຕ້ອງ ແລະ ທັນການ ແມ່ນອຳນວຍຄວາມສະດວກໃນການກອບກູ້ ແລະ ເບິ່ງແຍງຜູ້ຖືກເຄາະຮ້າຍໄດ້ທັນການ. ເຊິ່ງເປັນການຂັດຂວາງຂະບວນການຄ້າມະນຸດ ແລະ ສະໜັບສະໜູນໃຫ້ແກ່ການດຳເນີນຄະດີແກ່ຜູ້ກະທຳຜິດ.



26 ຂະບວນການບາຫຼີ (2015). *ຄູ່ມືດ້ານນະໂຍບາຍວ່າດ້ວຍການກຳນົດຕົວຜູ້ຖືກເຄາະຮ້າຍ: ການແນະນຳຄູ່ມື ສຳລັບຜູ້ສ້າງນະໂຍບາຍ ແລະ ຜູ້ປະຕິບັດຕົວຈິງ.* ບາງກອກ, ຫ້ອງການ ການສະໜັບສະໜູນລະດັບພາກພື້ນ ຂອງຂະບວນການບາຫຼີ.

**ຄູ່ມື ແລະ ຂັ້ນຕອນໃນລະດັບພາກພື້ນຂອງ ເພື່ອແກ້ໄຂຄວາມຕ້ອງການອັນຈຳເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ** ໄດ້ລະບຸວ່າ *ການກຳນົດຕົວທີ່ຖືກຕ້ອງ ແລະ ທັນເວລາ ແມ່ນມີຄວາມສຳຄັນຕໍ່ກັບຄວາມປອດໄພ ແລະ ສະຫວັດດີພາບຂອງເຂົາເຈົ້າ.* ມັນມີຄວາມຈຳເປັນເພື່ອຮັບປະກັນວ່າ ຜູ້ກະທຳຜິດຈາກການຄ້າມະນຸດ ໄດ້ຖືກຈັບຕົວ ແລະ ລົງໂທດສຳລັບຄວາມຜິດຂອງເຂົາເຈົ້າ. ມັນຍັງຮຽກຮ້ອງໃຫ້ມີກົນໄກ ແລະ ຂັ້ນຕອນ ເພື່ອແນະນຳ ແລະ ອຳນວຍຄວາມສະດວກໃນການກຳນົດຕົວຜູ້ຖືກເຄາະຮ້າຍ - ເຊິ່ງຄວນຈະເປັນມາດຕະຖານໃນທົ່ວພາກພື້ນອາຊຽນ.

**ມີໃຜແດ່ທີ່ອາດຈະມີສ່ວນຮ່ວມ (ທາງການ ແລະ ບໍ່ເປັນທາງການ) ໃນການກຳນົດຕົວຜູ້ຖືກເຄາະຮ້າຍ?**



**ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ**



**ຄອບຄົວ, ຍາດພີ່ນ້ອງ ຫຼື ໝູ່ເພື່ອນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ**



**ເຈົ້າໜ້າທີ່ຕຳຫຼວດ**



**ຄະນະສະເພາະກິດໃນການຕ້ານການຄ້າມະນຸດ**



**ເຈົ້າໜ້າທີ່ຄຸ້ມຄອງຊາຍແດນ**



**ເຈົ້າໜ້າທີ່ກວດກາແຮງງານ**



**ເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງ ແລະ ເຈົ້າໜ້າທີ່ພາສີ**



**ພະນັກງານໄອຍະການ**



**ຜູ້ໃຫ້ການຊ່ວຍເຫຼືອດ້ານກົດໝາຍ**



**ນັກສັງຄົມສົງເຄາະ**



**ເຈົ້າໜ້າທີ່ບໍລິຫານຂັ້ນທ້ອງຖິ່ນ**



**ພະນັກງານດ້ານການແພດ ແລະ ສຸຂະພາບ**



**ເຈົ້າໜ້າທີ່ກົງສູນ ແລະ ສະຖານທູດ**



**ອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ NGOs**



**ນາຍແປພາສາ ແລະ ຜູ້ແປພາສາ**

ໄພອັນຕະລາຍຂ້າງລຸ່ມນີ້ ໄດ້ຖືກລະບຸໄວ້ວ່າເປັນເລື່ອງປົກກະຕິ ໃນລະຫວ່າງຂະບວນການກຳນົດຕົວຜູ້ຖືກເຄາະຮ້າຍພາຍໃນອາຊຽນ. ໃນຖານະທີ່ເປັນຜູ້ຕອບໂຕ້ທຳອິດ ຫຼື ຜູ້ສະໜັບສະໜູນ, ມັນມີຄວາມສຳຄັນຫຼາຍ ທີ່ທ່ານຈະຕ້ອງຮັບຮູ້ເຖິງໄພອັນຕະລາຍເຫຼົ່ານີ້ ທີ່ອາດຈະເກີດຂຶ້ນ ແລະ ພິຈາລະນາ ຄູ່ມືການບໍ່ເຮັດໄພອັນຕະລາຍ ທີ່ໄດ້ສະໜອງໃຫ້ ເພື່ອເປັນແນວທາງໃນການປ້ອງກັນ ຫຼື ຫຼຸດຜ່ອນໄພອັນຕະລາຍດັ່ງກ່າວ.

# 1. ຜູ້ຖືກເຄາະຮ້າຍບໍ່ໄດ້ຖືກກຳນົດຕົວ ໃນຖານະຜູ້ຖືກເຄາະຮ້າຍ

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຫຼາຍຄົນ ຫຼີກລ້ຽງການຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍ ດ້ວຍຫຼາຍເຫດຜົນດັ່ງນີ້: ເຂົາເຈົ້າອາດຈະລະອາຍຕໍ່ກັບສິ່ງທີ່ເກີດຂຶ້ນກັບຕົນເອງ; ເຂົາເຈົ້າຢ້ານທີ່ຈະຖືກລົງໂທດ; ເຂົາເຈົ້າບໍ່ຮູ້ກ່ຽວກັບສິດຂອງຕົນເອງ ແລະ ການຊ່ວຍເຫຼືອທີ່ຈະໄດ້ຮັບ; ເຂົາເຈົ້າພຽງແຕ່ຕ້ອງການດຳເນີນຊີວິດຕໍ່ໄປ.

ນອກຈາກນັ້ນ ຜູ້ຖືກເຄາະຮ້າຍຍັງບໍ່ຮູ້ວ່າຕົນຖືກຄ້າມະນຸດ. ເຂົາເຈົ້າອາດຈະບໍ່ຮັບຮູ້ເຖິງແນວຄວາມຄິດຂອງການຄ້າມະນຸດ ແລະ ບໍ່ເຫັນຕົວເອງວ່າເປັນຜູ້ຖືກເຄາະຮ້າຍ. ເຊິ່ງເປັນເລື່ອງປົກກະຕິ ໂດຍສະເພາະ ເດັກນ້ອຍທີ່ມີຈາກຄອບຄົວທຸກຍາກ ແລະ ດ້ອຍໂອກາດ ຜູ້ທີ່ໄດ້ຮັບການເບິ່ງແຍງຈາກຜູ້ກະທຳຜິດ (ຜູ້ທີ່ອາດຈະເປັນພໍ່ແມ່ ຫຼື ຍາດພີ່ນ້ອງຂອງເຂົາເຈົ້າ) ເພື່ອໃຫ້ເບິ່ງວ່າເປັນການລ່ວງລະເມີດ ແລະ ການຂູດຮີດ ວ່າເປັນເລື່ອງປົກກະຕິ ແລະ ເປັນສ່ວນໜຶ່ງຂອງໜ້າທີ່ຕໍ່ກັບຄອບຄົວຂອງເຂົາເຈົ້າ. ແມ່ຍິງ ທີ່ຖືກຫຼອກລວງໃຫ້ແຕ່ງງານ ມີຄວາມເຊື່ອວ່າເຂົາເຈົ້າໄດ້ຮັບຄວາມຍິນຍອມ. ດັ່ງນັ້ນ ຈຶ່ງບໍ່ຖືວ່າຕົນເອງເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ຜູ້ໃຫ້ບໍລິການທາງເພດໃນອາຊຽນ ບໍ່ຄ່ອຍຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.[27] ເຖິງວ່າຈະມີຫຼັກຖານ ສະແດງໃຫ້ເຫັນວ່າ ເຂົາເຈົ້າຫຼາຍຄົນຖືກຢູ່ພາຍໃຕ້ການບັງຄັບໃຊ້ແຮງງານ ຫຼື ໃນຮູບແບບຂອງການຜູກມັດດ້ວຍໜີ້ສິນ, ມີຜູ້ເຄື່ອນຍ້າຍແຮງງານຈຳນວນໜ້ອຍໃນອາຊຽນ ເຊັ່ນ: ຜູ້ທີ່ເຮັດວຽກໃນສະຖານທີ່ກໍ່ສ້າງ, ເຮືອປະມົງ ແລະ ຂະແໜງພາຍໃນ ໄດ້ຖືກຮັບຮູ້ວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ການບໍ່ຖືກກຳນົດຕົວໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະສົ່ງຜົນຕໍ່ເຂົາເຈົ້າ ໃນການຖືກລ່ວງລະເມີດ ແລະ ຂູດຮີດຢ່າງຕໍ່ເນື່ອງ. ຜູ້ຖືກເຄາະຮ້າຍອາດຈະປະເຊີນກັບຄວາມສ່ຽງຕ່າງໆ ດັ່ງນີ້: ການຖືກກັກຂັງ, ການຖືກເນລະເທດກັບ, ການຖືກດຳເນີນຄະດີອາຍາ, ຖືກລ່ວງລະເມີດສິດ, ບໍ່ສາມາດເຂົ້າເຖິງການບໍລິການ ແລະ ການຊ່ວຍເຫຼືອອັນຈຳເປັນ, ຖືກຄ້າມະນຸດຊ້ຳຄືນອີກ ແລະ ຖືກແກ້ແຄ້ນຈາກຜູ້ຄ້າມະນຸດ.[28] ເຂົາເຈົ້າຍັງສູນເສຍໂອກາດໃນການເຂົ້າເຖິງການຊ່ວຍເຫຼືອດ້ານຮ່າງກາຍ ແລະ ຈິດໃຈ ອັນຮີບດ່ວນ ແລະ ທັນທີ.

ຕາມທັດສະນະດ້ານຍຸຕິທຳທາງອາຍາ, ຄວາມຫຼົ້ມເຫຼວ ໃນການກຳນົດຕົວຜູ້ຖືກເຄາະຮ້າຍ ໄດ້ຫຼຸດທອນຄວາມສາມາດໃນການບັງຄັບໃຊ້ກົດໝາຍ ເພື່ອຈັດການກັບການຄ້າມະນຸດ.



ຮູບພາບໂດຍ ນະຣິພອນ ບຸນຍະບັນ

27 ແມັກອາດຳ, ມາຣິກາ (2021). *ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນລັດສະມາຊິກອາຊຽນ: ສັງລວມໂດຍຫຍໍ້.* ບາງກອກ: ແຜນງານ ASEAN-ACT.

28 ການຕ້ານການເປັນຂ້າທາດສາກົນ (2002). *ການຄ້າມະນຸດ, ສິດທິມະນຸດ: ນິຍາມໃໝ່ໃນການປົກປ້ອງຜູ້ຖືກເຄາະຮ້າຍ.* ລອນດອນ: ການຕ້ານການເປັນຂ້າທາດສາກົນ.

## ຜູ້ຖືກເຄາະຮ້າຍໃນອຸດົມຄະຕິ (ແນວຄິດ) ‘ideal victim’ ແມ່ນຫຍັງ?

ເລື່ອງລາວຂອງການຄ້າມະນຸດໂດຍສ່ວນໃຫຍ່ໃນສື່ມວນຊົນ ມີລັກສະນະວ່າຜູ້ຖືກເຄາະຮ້າຍເປັນຜູ້ຍິງ, ວ່າຈະເປັນຜູ້ຍິງທີ່ຖືກຄ້າມະນຸດໃນການຂູດຮີດທາງເພດ ຫຼື ຜູ້ຍິງທີ່ຖືກເປັນ ‘ທາດໃນຄົວເຮືອນ’. ພາຍໃນເລື່ອງເລົ່າຂອງການຄ້າມະນຸດນີ້, ຜູ້ຖືກເຄາະຮ້າຍໃນແນວຄວາມຄິດນີ້ ມັກຈະຖືກພັນລະນາວ່າ ‘ອ່ອນແອ’ ແລະ ‘ບໍ່ຖືກຕຳນິ’.[29]

ເຂົາເຈົ້າຖືກເບິ່ງວ່າອ່ອນແອ ເນື່ອງຈາກເພດ, ອາຍຸ ຫຼື ຊົນເຜົ່າຂອງເຂົາເຈົ້າ. ເພື່ອໃຫ້ເຫັນພາບນີ້, ຜູ້ຖືກເຄາະຮ້າຍທີ່ເປັນເພດຍິງ ແມ່ນຖືກສັນນິຖານວ່າບໍ່ມີອຳນາດ ແລະ ສ່ຽງຕໍ່ການຖືກຫຼອກໃຊ້ໂດຍບຸກຄົນອື່ນ. ອີກດ້ານໜຶ່ງ, ຜູ້ຊາຍແມ່ນບໍ່ຄ່ອຍຖືກເບິ່ງວ່າເປັນຜູ້ຖືກເຄາະຮ້າຍ ເນື່ອງຈາກຖືກສັນນິຖານວ່າ ເປັນຜູ້ຄວບຄຸມຄວາມສຳພັນ ແລະ ແຮງງານຂອງເຂົາເຈົ້າ.

ຜູ້ຖືກເຄາະຮ້າຍໃນອຸດົມຄະຕິ ແມ່ນ ‘ບໍ່ຖືກຕຳນິ’ ຫຼື ‘ສົມຄວນທີ່ຈະໄດ້ຮັບຄວາມສົງສານ’ ເນື່ອງຈາກເຂົາເຈົ້າຖືກບັງຄັບໃຫ້ເຮັດສິ່ງທີ່ຕ້ອງໄດ້ເຮັດ ຍ້ອນຄວາມທຸກຍາກ ແລະ ຄວາມສິ້ນຫວັງ. ເຂົາເຈົ້າອາດຈະຖືກລັກພາຕົວ ຫຼື ຖືກລັກພາຕົວໜີ (ເປັນຕົວແທນໃຫ້ແກ່ທັດສະນະຄະຕິກ່ຽວກັບຜູ້ຖືກເຄາະຮ້າຍໂດຍສ່ວນໃຫຍ່) ຫຼື ຖືກຫຼອກໃຫ້ຕົກຢູ່ພາຍໃຕ້ການຖືກຂູດຮີດ.[30]

ການເລົ່າເລື່ອງທີ່ເນັ້ນໃສ່ ‘ຜູ້ຖືກເຄາະຮ້າຍໃນອຸດົມຄະຕິ’ ສົ່ງເສີມການສັນນິຖານທີ່ຜິດວ່າ ຜູ້ຖືກເຄາະຮ້າຍທຸກຄົນຕ້ອງບໍ່ມີການຕອບໂຕ້ ແລະ ບໍ່ມີຕົວແທນ. ມັນຍັງໝາຍເຖິງວ່າຜູ້ຖືກຄ້າມະນຸດ ທີ່ບໍ່ເຄີຍຖືກລ່ວງລະເມີດທາງເພດ ຫຼື ຖືກຄວາມຮຸນແຮງດ້ານຮ່າງກາຍໃນຮູບແບບອື່ນໆ ບໍ່ມີຕົວຊີ້ວັດກ່ຽວກັບ ‘ສິດ’ ທີ່ຈະເປັນຜູ້ຖືກເຄາະຮ້າຍ. ບຸກຄົນທີ່ບໍ່ກົງແນວຄວາມຄິດກັບຜູ້ຖືກເຄາະຮ້າຍໃນອຸດົມຄະຕິນັ້ນ, ຕົວຢ່າງ ຜູ້ຊາຍ ແລະ ເດັກຊາຍ, ແຮງງານເຄື່ອນຍ້າຍທີ່ຜິດກົດໝາຍ ແລະ ອື່ນໆ ອາດຈະຖືກປະຕິເສດໃຫ້ການສະໜັບສະໜູນ, ຊ່ວຍເຫຼືອ ແລະ ຄວາມຍຸຕິທຳ.



29 ກອບແນວຄວາມຄິດຂອງ ທັດສະນະຄະຕິກ່ຽວກັບຜູ້ຖືກເຄາະຮ້າຍ ແມ່ນໄດ້ມີການປຶກສາກັນໃນ ບົດຮຽນ ການຮຽນຮູ້ຂັ້ນພື້ນຖານທາງອອນລາຍຂອງ ACWC ວ່າດ້ວຍການຄຳນຶງເຖິງບົດບາດຍິງ-ຊາຍ ແລະ ວິທີການຄຳນຶງເຖິງຜູ້ຖືກເຄາະຮ້າຍ ສຳລັບຂອງຜູ້ຕອບໂຕ້ດ່ານໜ້າຕໍ່ກັບປະຕິສຳພັນກັບຜູ້ຖືກເຄາະຮ້າຍ (ຈະມີຂຶ້ນໃນ 2022)

30 ໂອ’ໄບຣອັນ, ເອີຣິນ O’Brien, Erin (2018). *ສິ່ງທ້າທາຍໃນການເລົ່າເລື່ອງການຄ້າມະນຸດ: ຜູ້ຖືກເຄາະຮ້າຍ, ຄົນຮ້າຍ ແລະ ວິລະບູລຸດ.* (ບົດທີ 4: ທັດນະສະຄະຕິກ່ຽວກັບຜູ້ຖືກເຄາະຮ້າຍ ແລະ ເບິ່ງບໍ່ເຫັນ). ກຸ່ມ Taylor & Francis

# ຄຳແນະນຳ ການບໍ່ເຮັດໄພອັນຕະລາຍ

ການເບິ່ງສັນຍານຂອງການຄ້າມະນຸດ ລວມມີ[31]:

- ບໍ່ມີອຳນາດໃນການຄວບຄຸມເງິນ, ໂທລະສັບ ຫຼື ເອກະສານລະບຸຕົວຕົນ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືເດີນທາງ;
- ສະແດງພຶດຕິກຳ ທີ່ມີຄວາມຢ້ານກົວ, ວິຕົກກັງວົນ ຫຼື ສະແດງຄວາມຈຳນົນ
- ບໍ່ມີຄວາມຮູ້ກ່ຽວກັບທີ່ຢູ່ປັດຈຸບັນ ຫຼື ທີ່ຢູ່ໄລຍະຜ່ານມາ
- ເບິ່ງຄືມີຄວາມສັບສົນ, ຂາດການນອນຫຼັບ ຫຼື ຂາດສານອາຫານ ແລະ ສະແດງອາການຂອງການລ່ວງລະເມີດດ້ານວາຈາ ແລະ/ຫຼື ຮ່າງກາຍ
- ມີອາການບາດເຈັບໃນໄລຍະການປິ່ນປົວທີ່ແຕກຕ່າງກັນ, ແລະ/ຫຼື ສະແດງໃຫ້ເຫັນເຖິງວ່າມີການຂາດການຮັກສາທາງດ້ານການແພດ
- ເສື້ອຜ້າ/ການນຸ່ງຖື ບໍ່ມີຄວາມເໝາະສົມກັບສະພາບອາກາດ
- ບໍ່ສາມາດເວົ້າໄດ້ຢ່າງອິດສະລະ ແລະ ມີການຖືກຕິດຕາມ
- ຫຼີກລ້ຽງທີ່ຈະສົບສາຍຕາ ແລະ ມີຄວາມຢ້ານກົວຕໍ່ອຳນາດ; ແລະ
- ມີກະເປົາເດີນທາງໜ່ອຍນ້ອຍ ຫຼື ບໍ່ມີເລີຍ

ນຳໃຊ້ຊຸດຕົວຊີ້ວັດ ທີ່ລັດຖະບານ ຫຼື ໜ່ວຍງານທີ່ໄດ້ຮັບຮອງ ເພື່ອຊ່ວຍໃຫ້ກຳນົດວ່າບຸກຄົນໃດໜຶ່ງ ເປັນຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ. ຖ້າຫາກມີຂໍ້ສົງໄສ, ປຶກສາກັບຫົວໜ້າ ຫຼື ຜູ້ທີ່ມີຄວາມຮູ້ ແລະ ປະສົບການ ກ່ຽວກັບຄະດີດັ່ງກ່າວ.

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະລັງເລທີ່ຈະບອກຄວາມຈິງກ່ຽວກັບສິ່ງທີ່ເກີດຂຶ້ນກັບເຂົາເຈົ້າ ໃນເວລາທີ່ພົບກັນຄັ້ງທຳອິດ. ເລື່ອງຂອງເຂົາເຈົ້າອາດຈະບໍ່ສອດຄ່ອງກັນ ຫຼື ບໍ່ສົມເຫດສົມຜົນ ອາດຈະຍ້ອນຄວາມຢ້ານກົວ ແລະ/ຫຼື ມີຄວາມ ບອບຊ້ຳທາງດ້ານຈິດໃຈ. ເດັກ, ຄົນພິການ ແລະ ບຸກຄົນທີ່ມີຄວາມຕ້ອງການສະເພາະ ອາດຈະມີປະສົບການທີ່ຍາກກວ່າ ໃນການແບ່ງປັນປະສົບການຂອງເຂົາເຈົ້າ.

ຕ້ອງອົດທົນ ແລະ ໃຊ້ເວລາ ເພື່ອປະເມີນວ່າບຸກຄົນດັ່ງກ່າວ ເປັນຜູ້ຖືກເຄາະຮ້າຍ ຫຼື ບໍ່. ຖ້າຫາກທ່ານສົງໄສວ່າ ເຂົາເຈົ້າອາດຈະຖືກຄ້າມະນຸດ, ໃຫ້ປະຕິບັດຕໍ່ເຂົາເຈົ້າໃນຖານະເປັນຜູ້ຖືກເຄາະຮ້າຍ ແລະ ສະໜອງການເບິ່ງແຍງ ແລະ ການສະໜັບສະໜູນທີ່ຈຳເປັນ.

ເມື່ອອາຍຸຂອງບຸກຄົນດັ່ງກ່າວ ບໍ່ແນ່ນອນ, ເຂົາເຈົ້າຄວນຖືກສົມມຸດຕິຖານວ່າເປັນເດັກໄວ້ກ່ອນ ຈົນກວ່າມີການກຳນົດເປັນຢ່າງອື່ນ.

31 A21. ການເຂົ້າເຖິງກຣາບຟິກ, ວິດີໂອ ແລະ ແຜ່ນພາບ ເພື່ອການສຶກສາ ແລະ ແບ່ງປັນຄຳສັບກ່ຽວກັບການຕ້ານການຄ້າມະນຸດ. https://www.a21.org/content/media/grmytc (ເຂົ້າເບິ່ງຂໍ້ມູນ ໃນວັນທີ 1 ທັນວາ 2021)

ແຕ່ງຕັ້ງຜູ້ປົກປ້ອງຕາມກົດໝາຍ ສໍາລັບຜູ້ຖືກຄ້າມະນຸດທີ່ເປັນເດັກ ເພື່ອໃຫ້ຄໍາແນະນໍາ ແລະ ປົກປ້ອງສິດທິ ແລະ ຜົນປະໂຫຍດຂອງເຂົາເຈົ້າ. ສິ່ງດັ່ງກ່າວນີ້ຈະເຮັດທຸກຄັ້ງ ໃນກໍລະນີ ທີ່ພໍ່ແມ່ຂອງເຂົາເຈົ້າບໍ່ສາມາດເຮັດໄດ້ ໃນໄລຍະຊົ່ວຄາວ ຫຼື ຖາວອນ, ບໍ່ເຕັມໃຈທີ່ຈະເຮັດ ຫຼື ບໍ່ເໝາະສົມທີ່ຈະນໍາໃຊ້ສິດໃນຖານະພໍ່ແມ່.[32] ຜູ້ປົກປ້ອງທີ່ໄດ້ຮັບການແຕ່ງຕັ້ງ ຄວນຈະປຶກສາ ແລະ ແຈ້ງບອກທຸກການກະທໍາທັງໝົດທີ່ກ່ຽວຂ້ອງ ຕໍ່ເດັກ.

ຖ້າຜູ້ຖືກເຄາະຮ້າຍເປັນບຸກຄົນ ຫຼື ເດັກພິການ, ຄວນຈະປຶກສາຫາລືກັບອົງການຈັດຕັ້ງທີ່ເຮັດວຽກກ່ຽວກັບບຸກຄົນທີ່ມີຄວາມພິການ ເພື່ອຮັບປະກັນການເຂົ້າເຖິງ, ເຂົ້າຮ່ວມ ແລະ ຜົນປະໂຫຍດຂອງບຸກຄົນ ຫຼື ເດັກທີ່ພິການ.

ອະທິບາຍຂັ້ນຕອນການກໍານົດຕົວຢ່າງເຊັດເຈນ ແລະ ໃນພາສາທີ່ເຂົ້າໃຈໄດ້ ໂດຍນໍາໃຊ້ນາຍແປພາສາ, ຖ້າຈໍາເປັນ ຕໍ່ກັບບຸກຄົນທີ່ທ່ານສໍາພາດ. ຮັບປະກັນວ່າບຸກຄົນດັ່ງກ່າວ ມີຄວາມເຂົ້າໃຈຢ່າງເຕັມສ່ວນ ວ່າມີຫຍັງກ່ຽວຂ້ອງແດ່ ໃນຂັ້ນຕອນ, ສິດ ແລະ ຜົນປະໂຫຍດຂອງເຂົາເຈົ້າ ແລະ ຄວາມສ່ຽງທີ່ອາດຈະເກີດຂຶ້ນ, ຮັບປະກັນການປົກປ້ອງຄວາມລັບ ແລະ ຄວາມເປັນສ່ວນຕົວຂອງເຂົາເຈົ້າ.

ຢ່າບັງຄັບບຸກຄົນ ເພື່ອໃຫ້ການກໍານົດຕົວ ຖ້າເຂົາເຈົ້າຍັງບໍ່ພ້ອມ. ຄວນຈື່ຈໍາວ່າ ຄວາມສ່ຽງ ຕ້ອງເບິ່ງຈາກມຸມມອງຂອງເຂົາເຈົ້າ.

ກຽມພ້ອມວ່າ ບຸກຄົນນັ້ນອາດຈະຍ່າງອອກໄປ ຖ້າພວກເຂົາບໍ່ຕ້ອງການທີ່ຈະຖືກກໍານົດຕົວ ຫຼື ໄດ້ຮັບການປົກປ້ອງ ແລະ ການຊ່ວຍເຫຼືອ. ຮັບປະກັນວ່າບຸກຄົນນັ້ນ ສາມາດໄດ້ຮັບການຊ່ວຍເຫຼືອໄດ້ຕະຫຼອດເວລາ.

ເກັບຮັກສາການບັນທຶກທີ່ເປັນທາງການ ໃນການກໍານົດສະຖານະຜູ້ຖືກເຄາະຮ້າຍ ເພື່ອອໍານວຍຄວາມສະດວກໃນການສົ່ງຕໍ່ ແລະ ຮັບຮູ້ການການຕັດສິນໃຈການກໍານົດຕົວຮ່ວມກັນ ຈາກປະເທດອື່ນໆ.

---

32 ອົງການ UNICEF (2006). *ຄູ່ມືການປົກປ້ອງຜູ້ຖືກເຄາະຮ້າຍທີ່ເປັນເດັກ.* ບັນທຶກທາງວິຊາການຂອງອົງການ. ນິວຢອກ: ອົງການ UNICEF.

## ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຖືກຂູດຮີດສໍາລັບ:



ແຮງງານ - ກະສິກຳ, ກໍ່ສ້າງ, ປະມົງ ແລະ ການປຸງແຕ່ງອາຫານທະເລ, ປ່າໄມ້, ບໍ່ແຮ່, ວຽກ
ໃນຮ້ານອາຫານ, ການທຳຄວາມສະອາດ ແລະ ອື່ນໆ



ທາງດ້ານເພດ - ການເປັນ
ໂສເພນີ, ພາບລາມົກອານາຈານ



ຂ້າທາດໃນຄົວເຮືອນ



ການຕັດອະໄວຍະອະຂອງ
ຮ່າງກາຍ



ການບັງຄັບໃຫ້ເປັນຂໍທານ



ການບັງຄັບໃຫ້ແຕ່ງງານ
ແລະ ຖືພາ



ການຂູດຮີດທາງເພດເດັກ ທາງ
ອອນລາຍ (OSEC)



ການລັກລອບ/ຄ້າຂາຍ
ຢາເສບຕິດ



ການບັງຄັບໃຫ້ມີສ່ວນຮ່ວມ
ໃນກຸ່ມແກ້ງອາຊະຍາກຳ



ການບັງຄັບໃຫ້ເຂົ້າຮ່ວມ
ທາງທະຫານ/ກຳລັງ
ປະກອບອາວຸດ

### ການປະຕິບັດທີ່ເປັນຕົວແບບທີ່ດີ:[33]

ໃນປະເທດໄທ ກົມສືບສວນ-ສອບສວນຄະດີພິເສດ (DSI) ເຮັດວຽກຢ່າງໃກ້ຊິດກັບຄູ່ຮ່ວມງານກັບອົງການ NGO ໃນການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍສະເພາະ ຜູ້ທີ່ອາດຈະບໍ່ມີສັນຍານຢ່າງຊັດເຈນ ໃນການຖືກລ່ວງລະເມີດທາງດ້ານຮ່າງກາຍ. ຕົວຢ່າງ ອົງການ NGO ທີ່ເຮັດວຽກກັບຜູ້ຖືກຄ້າມະນຸດ ໃນເຮືອປະມົງ ໄດ້ພັດທະນາຄວາມເຂົ້າໃຈໃນການບີບບັງຄັບ ດ້ວຍວິທີການທີ່ບໍ່ທຳຮ້າຍຮ່າງກາຍ ແລະ ສາມາດກຳນົດສິ່ງດັ່ງກ່າວນີ້ ຜ່ານການເກັບກຳຂໍ້ມູນ ແລະ ການສຳພາດຜູ້ອອກແຮງງານທີ່ເປັນກຸ່ມສ່ຽງ. ພວກເຂົາເບິ່ງສັນຍານການລ່ວງລະເມີດຈາກທາງຮ່າງກາຍ. ຂັ້ນຕອນການກຳນົດຕົວຜູ້ຖືກເຄາະຮ້າຍຂອງເຂົາເຈົ້າ ໄດ້ເນັ້ນໃສ່ການສະໜັບສະໜູນການຟື້ນຟູຜູ້ຖືກເຄາະຮ້າຍ ແລະ ສ້າງຄວາມໝັ້ນໃຈ ແລະ ໄວ້ວາງໃຈ. DSI ຮັບຮູ້ເຖິງການມີຊັບພະຍາກອນທີ່ຈຳກັດ ໃນການຈັດການກັບກຸ່ມຄົນຜູ້ຖືກເຄາະຮ້າຍສະເພາະ ເຊັ່ນ: ບຸກຄົນທີ່ຕ້ອງການ ການໃຫ້ຄຳປຶກສາແບບສະເພາະ, ຜູ້ຖືກເຄາະຮ້າຍທີ່ມາຈາກວັດທະນະທຳ ແລະ ສາສະໜາທີ່ແຕກຕ່າງກັນ, ສະນັ້ນ ເຂົາເຈົ້າ ກຳນົດຕົວ ແລະ ຮ່ວມມືກັບຄູ່ຮ່ວມງານກັບອົງການ NGO ເພື່ອໃຫ້ການສະໜັບສະໜູນກຸ່ມຄົນດັ່ງກ່າວຢ່າງເໝາະສົມ.

### ສິ່ງທ້າທາຍ:[34]

ໃນ ສປປ ລາວ, ພະນັກງານໄອຍະການ ແລະ ຜູ້ພິພາກສາ ພົບກັບສິ່ງທ້າທາຍຕໍ່ກັບຄຳນິຍາມ ການຄ້າມະນຸດທີ່ຊັດເຈນໃນກົດໝາຍ. ການຂາດຄຳນິຍາມທີ່ຊັດເຈນໃນກົດໝາຍ ນຳໄປສູ່ຄວາມສັບສົນຕໍ່ກ່ຽວກັບການຮັບເອົາເດັກໄປເປັນລູກລ້ຽງ, ແຮງງານເດັກ, ແຮງງານເຄື່ອນຍ້າຍ ເພື່ອການເຮັດວຽກ ຫຼື ແຕ່ງງານ, ການຂາຍອະໄວຍະວະຂອງຮ່າງກາຍ ແລະ ອື່ນໆ ແລະ ສິ່ງເຫຼົ່ານີ້ເປັນການຄ້າມະນຸດ ຫຼື ບໍ່. ຄວາມພະຍາຍາມໃນການຕ້ານການຄ້າມະນຸດ ຍັງເນັ້ນໄປສູ່ແມ່ຍິງ ແລະ ເດັກຍິງ ໂດຍບໍ່ມີຄະດີ ຫຼື ມີຄະດີຈຳນວນໜ້ອຍ ທີ່ມີຜູ້ຖືກເຄາະຮ້າຍເປັນຜູ້ຊາຍ. ສິ່ງພົນເຮັດໃຫ້ ມີການສະໜັບສະໜູນດ້ານກົດໝາຍ ຫຼື ການເຂົ້າເຖິງຄວາມຍຸຕິທຳໜ້ອຍ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນຜູ້ຊາຍ.

33 ກອງປະຊຸມປຶກສາຫາລືລະດັບຊາດ ທີ່ປະເທດໄທ, ວັນທີ 28 ຕຸລາ 2021.

34 ກອງປະຊຸມປຶກສາຫາລືລະດັບຊາດ ທີ່ປະເທດລາວ, ວັນທີ 17 ທັນວາ 2021.

# 2. ການຖືເປັນຄະດີອາຍາ, ຈັບຕົວ, ກັກຂັງ ແລະ ຖືກເນລະເທດ

ໃນລະຫວ່າງຂະບວນການກຳນົດຕົວຜູ້ຖືກເຄາະຮ້າຍ, ຜູ້ຖືກເຄາະຮ້າຍອາດຈະຢ້ານກົວທີ່ຈະຖືກລົງໂທດ ແລະ ຖືເປັນຄະດີອາຍາ ສຳລັບການມີສ່ວນຮ່ວມໃນກິດຈະກຳທີ່ຜິດກົດໝາຍ ທີ່ເປັນຜົນສະທ້ອນໂດຍກົງມາຈາກການຖືກຂູດຮີດ, ຕົວຢ່າງ: ການເຂົ້າປະເທດຢ່າງຜິດກົດໝາຍ, ການນຳໃຊ້ເອກະສານປອມ/ປອມແປງເອກະສານ, ການຄ້າຢາເສບຕິດ, ການເປັນໂສເພນີ ແລະ ອື່ນໆ.

ແຮງງານເຄື່ອນຍ້າຍ ຜູ້ທີ່ເຂົ້າມາ ແລະ ອາໄສຢູ່ໃນປະເທດຢ່າງຜິດກົດໝາຍ ມັກຈະຖືກຈັບຕົວ, ກັກຂັງ ແລະ ຖືກເນລະເທດ ໃນຄວາມຜິດສະຖານການເຂົ້າ-ອອກເມືອງຜິດກົດໝາຍ ແລະ ອາຊະຍາກຳທີ່ເຂົາເຈົ້າໄດ້ເຮັດໃນເວລາທີ່ຖືກຄ້າມະນຸດ. ແຮງງານເຄື່ອນຍ້າຍທີ່ຜິດປົກກະຕິ ມັກຈະຖືກປະຕິບັດໃນຖານະຜູ້ຖືກເຄາະຮ້າຍຈາກການລັກລອບເຂົ້າ-ອອກເມືອງ ແລະ ບໍ່ຖືກກຳນົດຕົວໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ມັນເປັນເລື່ອງປົກກະຕິ ທີ່ຫຼາຍຄົນມັກຈະຖືກກັກຂັງໄວ້ທີ່ສູນກັກຂັງຄົນເຂົ້າ-ອອກເມືອງ, ຄ້າຍຄຸມຂັງ ແລະ ສະຖານທີ່ພັກເຊົາແບບປິດອື່ນໆ.

ແຮງງານເຄື່ອນຍ້າຍ ແລະ ຜູ້ບໍລິການທາງເພດ ມັກຈະຖືກເບິ່ງວ່າເປັນຜູ້ຖືກເຄາະຮ້າຍ/ຜູ້ເຂົ້າຮ່ວມຢ່າງເຕັມໃຈ, ສະນັ້ນ ຈິ່ງບໍ່ຖືກວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ໃນບາງປະເທດ ກໍລະນີທີ່ການເປັນໂສເພນີຜິດກົດໝາຍ, ຜູ້ບໍລິການທາງເພດ ທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກໍອາດຈະຖືກໂທດອາຍາ.

ໃນບາງກໍລະນີ, ຜູ້ກະທຳຜິດທີ່ເປັນເດັກທີ່ຖືກເຄາະຮ້າຍ ອາດຈະຖືກຈັດປະເພດເປັນ 'ເດັກທີ່ເຮັດຜິດກົດໝາຍ" ຫຼາຍກວ່າຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ເຊິ່ງມັນຂັດກັບຜົນປະໂຫຍດສູງສຸດຂອງເດັກ.[35]

ໃນກໍລະນີທີ່ຜູ້ຖືກເຄາະຮ້າຍ ຖືກປະຕິບັດໃນຖານະຜູ້ກະທຳຜິດ, ເຂົາເຈົ້າຈະຖືກຂັດຂວາງໃນການຂໍການຊ່ວຍເຫຼືອ ຫຼື ການສື່ສານກັບເຈົ້າໜ້າທີ່ຕຳຫຼວດ.



ຮູບພາບໂດຍ ອັນຕັນ ພອດເຊ ຈາກອັນສູເປສ

35 ແມັກອາດຳ, ມາຣິກາ (2021). *ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນລັດສະມາຊິກອາຊຽນ: ສັງລວມຫຍໍ້.* ບາງກອກ: ແຜນງານ ASEAN-ACT.

***ມາດຕາ 14(7) ຂອງສົນທິສັນ ACTIP ຮຽກຮ້ອງໃຫ້ລັດສະມາຊິກ ບໍ່ໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຄວາມຮັບຜິດຊອບທາງບໍລິຫານ ແລະ ທາງອາຍາ ສຳລັບການກະທຳຜິດກົດໝາຍ ທີ່ເຂົາເຈົ້າໄດ້ເຮັດ ເຊິ່ງການກະທຳດັ່ງກ່າວ ກ່ຽວຂ້ອງໂດຍກົງກັບການຄ້າມະນຸດ.***

***ພາກ 1, C2 ຄູ່ມືຂອງອາຊຽນສຳລັບຜູ້ປະຕິບັດຕົວຈິງ ໃນການຕອບໂຕ້ທາງອາຍາ ຕໍ່ກັບການຄ້າມະນຸດ (2007) ໄດ້ກຳນົດວ່າ:*** *ໃນຂອບເຂດທີ່ເປັນໄປໄດ້, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ຄວນຈະຖືກຈັບຕົວ ຫຼື ດຳເນີນຄະດີ ທີ່ກ່ຽວຂ້ອງກັບການກະທຳຜິດທາງອາຍາ ທີ່ເຂົາເຈົ້າໄດ້ກະທຳ ທີ່ເປັນຜົນສະທ້ອນໂດຍກົງຕໍ່ກັບສະຖານະ ໃນຖານະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.*

***ຄູ່ມື ແລະ ຫຼັກການຂອງ ວ່າດ້ວຍສິດທິມະນຸດ ແລະ ການຄ້າມະນຸດ ຄຳແນະນຳທີ 2(6) ໄດ້ຮຽກຮ້ອງໃຫ້ລັດຮັບປະກັນວ່າຜູ້ຖືກຄ້າມະນຸດ, ຈະບໍ່ຖືກກັກຕົວ ຫຼື ກັກຂັງໃນສະຖານທີ່ກັກຂັງຂອງການເຂົ້າ-ອອກເມືອງ ໃນທຸກກໍລະນີ.***

***ບຸກຄົນ ຈະບໍ່ຖືກພິຈາລະນາວ່າ ໃຫ້ຄວາມຍິນຍອມໃນການຖືກຂູດຮີດ ໃນກໍລະນີ ທີ່ຄວາມຍິນຍອມນັ້ນ ໄດ້ມາດ້ວຍວິທີການທີ່ບໍ່ເໝາະສົມ ເຊັ່ນ: ຜ່ານການສໍ້ໂກງ, ບັງຄັບ, ຕົວະຍົວະຫຼອກລວງ ຫຼື ການສວຍໃຊ້ອຳນາດ. ໃນກໍລະນີທີ່ເປັນເດັກ, ໂດຍສະເພາະຢູ່ໃນສະຖານະທີ່ມີຄວາມສ່ຽງ ເຊິ່ງບໍ່ສາມາດເປັນໄປໄດ້ທີ່ເຂົາເຈົ້າຈະໃຫ້ຄວາມຍິນຍອມແຕ່ທຳອິດ.[36]***

36 ດັດປັບມາຈາກ ອານຸສັນຍາປາເລໂມ ມາດຕາ 3.

# ຄຳແນະນຳ ການບໍ່ເຮັດໄພອັນຕະລາຍ

ຄວາມຍິນຍອມບໍ່ກ່ຽວຂ້ອງທາງດ້ານກົດໝາຍ ໃນຄະດີຄ້າມະນຸດ. ຄວນຈື່ຈຳໄວ້ວ່າ "ຄວາມຍິນຍອມ" ຫຼື "ການຕົກລົງເຫັນດີ" ຂອງຜູ້ຖືກເຄາະຮ້າຍ ວ່າຈະຕັ້ງໃຈໃຫ້ຖືກຂູດຮີດ ຫຼື ກະທຳຜິດທາງອາຍາ, ບໍ່ຄວນຈະຖືກນຳໃຊ້ເປັນເຫດຜົນໃນການລົງໂທດເຂົາເຈົ້າ.

ຫ້າມບໍ່ໃຫ້ລົງໂທດທາງອາຍາ ຫຼື ໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຄວາມຮັບຜິດຊອບ ຕໍ່ກັບສະຖານະຄວາມຜິດທີ່ເຂົາເຈົ້າໄດ້ຖືກບັງຄັບໃຫ້ກະທຳ ໃນເວລາທີ່ຖືກຄ້າມະນຸດ ເຊັ່ນ ການເຂົ້າ, ອາໄສຢູ່ ຫຼື ເຮັດວຽກໂດຍຜິດກົດໝາຍ.

ຊ່ວຍຜູ້ຖືກເຄາະຮ້າຍ ທີ່ເຂົ້າມາໃນປະເທດໂດຍບໍ່ຖືກຕ້ອງຕາມກົດໝາຍ ໃຫ້ໄດ້ຮັບສະຖານະທາງດ້ານກົດໝາຍ ແລະ ເອກະສານ ເພື່ອໃຫ້ອາໄສຢູ່ໃນປະເທດ. ສິ່ງດັ່ງກ່າວນີ້ ມີຄວາມສຳຄັນໃນການຟື້ນຟູຄວາມຮູ້ສຶກປອດໄພ ແລະ ສິດເສລີພາບຂອງຜູ້ຖືກເຄາະຮ້າຍ.

ຄວນຈື່ຈຳໄວ້ວ່າ ຜູ້ຖືກຈັບຕົວ ມີສິດທິມະນຸດ. ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ມີພັນທະໃນການແຈ້ງໃຫ້ເຂົາເຈົ້າຮັບຊາບຕໍ່ກັບເຫດຜົນໃນການຈັບຕົວ ແລະ ຂໍ້ຫາໃດໜຶ່ງທີ່ໄດ້ຖືກວາງໄວ້ ແລະ ນຳເອົາຄະດີດັ່ງກ່າວ ໄປຍື່ນຕໍ່ຜູ້ພິພາກສາ ຫຼື ເຈົ້າໜ້າທີ່ອື່ນໂດຍທັນທີ.[37] ຜູ້ທີ່ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຄວນເຂົ້າເຖິງຂະບວນການກຳນົດຕົວຜູ້ຖືກເຄາະຮ້າຍໂດຍທັນທີ.

ຄົນຕ່າງປະເທດທີ່ຖືກຈັບຕົວ ຫຼື ກັກຂັງ ຈະຕ້ອງໄດ້ຖືກແຈ້ງໃຫ້ຊາບກ່ຽວກັບສິດຂອງເຂົາເຈົ້າ ໃນການແຈ້ງໃຫ້ສະຖານທູດຮັບຊາບ ເພື່ອໃຫ້ໄດ້ຮັບຄຳປຶກສາ ແລະ ສະໜັບສະໜູນຈາກກົງສູນ.[38] ສິ່ງດັ່ງກ່າວນີ້ ບໍ່ສາມາດນຳໃຊ້ໄດ້ກັບບຸກຄົນທີ່ອົບພະຍົບຈາກການດຳເນີນຄະດີ ຈາກປະເທດຕົນເອງ.

ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ບໍ່ຄວນຈະຕັດສິນໃຈວ່າຈະດຳເນີນຄະດີ ຕໍ່ກັບບຸກຄົນທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ບໍ່, ຈົນວ່າຈະມີການປະເມີນການຄ້າມະນຸດຢ່າງເປັນທາງການ ໂດຍເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.[39]

ຫຼີກລ້ຽງໃນການນຳເອົາຜູ້ຖືກເຄາະຮ້າຍທີ່ເປັນເດັກ ໄປຢູ່ໃນຄຸກ, ສະຖານທີ່ກັກຕົວຂອງເຈົ້າໜ້າທີ່ຕຳຫຼວດ, ສູນກັກຕົວຂອງໜ່ວຍງານເຂົ້າ-ອອກເມືອງ ແລະ ສະຖານທີ່ຍຸຕິທຳທາງອາຍາອື່ນໆ. ຖ້າຫາກບໍ່ມີທາງເລືອກອື່ນໃນການເບິ່ງແຍງ, ໃຫ້ຮັບປະກັນວ່າ ສະຖານທີ່ດັ່ງກ່າວ ຢູ່ໃນໄລຍະສັ້ນທີ່ສຸດເທົ່າທີ່ເປັນໄປໄດ້ ແລະ ຕ້ອງຖືກກວດສອບເປັນປະຈຳໂດຍໜ່ວຍງານອິດສະລະ.[40]

---

37 ມາດຕາ 9(2) *ສົນທິສັນຍາສາກົນວ່າດ້ວຍສິດທິພົນລະເມືອງ ແລະ ການເມືອງ*

38 ແມັກອາດຳ, ມາຣິກາ (2021). *ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນລັດສະມາຊິກອາຊຽນ: ສັງລວມຫຍໍ້.* ບາງກອກ: ແຜນງານ ASEAN-ACT.

39 ແມັກອາດຳ, ມາຣິກາ (2021). *ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນລັດສະມາຊິກອາຊຽນ: ສັງລວມຫຍໍ້.* ບາງກອກ: ແຜນງານ ASEAN-ACT.

40 ຊຸດເຄື່ອງມື ການຈັດຕັ້ງປະຕິບັດຮູບແບບຂອງຜູ້ປະຕິບັດຕົວຈິງໃນ ASEAN (2019).

### ການຄ້າມະນຸດ ສົມທຽບກັບ ການລັກລອບເຂົ້າ-ອອກເມືອງ [41]

| ການຄ້າມະນຸດ | ການລັກລອບເຂົ້າ-ອອກເມືອງ |
|---|---|
| ອາຊະຍາກຳຕໍ່ກັບບຸກຄົນ (ລະເມີດສິດທິມະນຸດ) | ອາຊະຍາກຳຕໍ່ລັດ (ລະເມີດຊາຍແດນຂອງລັດ) |
| ການຂ້າມຊາຍແດນ ໂດຍຖືກກົດໝາຍ, ຜິດກົດໝາຍ ຫຼື ບໍ່ມີການຂ້າມຊາຍແດນ | ການຂ້າມຊາຍແດນໂດຍຜິດກົດໝາຍ |
| ກ່ຽວຂ້ອງກັບການຂູດຮີດຜູ້ຖືກເຄາະຮ້າຍຢ່າງຕໍ່ເນື່ອງ | ສິ້ນສຸດ ໃນເວລາທີ່ແຮງງານຮອດປາຍທາງ |
| ບໍ່ເຄີຍໃຫ້ຄວາມຍິນຍອມ ຫຼື ຖ້າມີການໃຫ້ຄວາມຍິນຍອມແຕ່ທຳອິດນັ້ນ ຖືວ່າບໍ່ມີຄວາມໝາຍ ເນື່ອງຈາກ ການຖືກຫຼອກລວງ ຫຼື ບັງຄັບ ໃນການຄ້າມະນຸດ | ສະໝັກໃຈ, ກ່ຽວຂ້ອງກັບການຍິນຍອມ |

### ສິ່ງທ້າທາຍ:

ແຮງງານຟິລິບປິນໃນຕ່າງປະເທດໄດ້ຖືກຄ້າມະນຸດ (OFW) ມັກຈະຖືກລົງໂທດກ່ອນຜູ້ຄ້າມະນຸດ - ລວມທັງ ບໍລິສັດຈັດຫາງານ - ທີ່ຈະເຂົ້າສູ່ຄວາມຍຸຕິທຳ. ສິ່ງທ້າທາຍກ່ຽວຂ້ອງກັບເຂດອຳນາດທີ່ຍົກຂຶ້ນມານີ້ ໂດຍສະເພາະ ໃນກໍລະນີທີ່ຜູ້ຖືກເຄາະຮ້າຍທີ່ຖືກຄ້າມະນຸດໃນປະເທດປາຍທາງ (ເຊັ່ນ: ປະເທດຊີເຣຍ, ຊາອຸດີອາຣາເບຍ ຫຼື ສະຫະລັດອາຣັບເອມີເລດ), ເຖິງວ່າເຂົາເຈົ້າອາດຈະຖືກຈັດຫາໂດຍບຸກຄົນຈາກຟີລິບປິນກໍຕາມ. ຄວາມທ້າທາຍໃນການຍຶດໝັ້ນຫຼັກການບໍ່ລົງໂທດ ໃນທົ່ວເຂດອຳນາດສານທີ່ແຕກຕ່າງກັນ ໄດ້ຍົກຂຶ້ນໃຫ້ເຫັນໃນບໍລິບົດຂອງຜູ້ຖືກເຄາະຮ້າຍຄົນຟີລິບປິນ ທີ່ຖືກຄ້າມະນຸດໃນອຸດສາຫະກຳການປະມົງ ທີ່ຖືກດຳເນີນຄະດີໃນນອກປະເທດຟີລິບປິນ ສົ່ງຜົນໃຫ້ເກີດສິ່ງທ້າທາຍໃຫ້ແກ່ຜູ້ບັງຄັບໃຊ້ກົດໝາຍຂັ້ນທ້ອງຖິ່ນ ແລະ ພະນັກງານໄອຍະການ. [42]

### ການປະຕິບັດທີ່ເປັນຕົວແບບທີ່ດີ:

ການປະຕິບັດທີ່ເປັນຕົວແບບທີ່ດີ ແມ່ນໄດ້ຮັບການບັນທຶກໄວ້ໃນປະເທດສິງກະໂປ ລວມທັງ ກໍລະນີທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນອຸດສາຫະກຳທາງດ້ານເພດ ຜູ້ທີ່ຖືກກຳນົດຕົວຢ່າງເປັນທາງການໃນຖານະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ບໍ່ຖືກຕັ້ງຂໍ້ກ່າວຫາ ສຳລັບການເຮັດວຽກນອກຂອບເຂດຂອງເງື່ອນໄຂດ້ານວີຊາຂອງລາວ. ແທນທີ່ຈະຖືກຕັ້ງຂໍ້ກ່າວຫາ, ລາວຈະໄດ້ຮັບການປົກປ້ອງ ແລະ ໄດ້ຮັບໂອກາດໃຫ້ເຮັດວຽກຢູ່ນອກສູນພັກເຊົາ ທີ່ລາວອາໄສຢູ່. ເຖິງຢ່າງໃດກໍຕາມ, ຄວາມສ່ຽງໃນການລົງໂທດຜູ້ຖືກເຄາະຮ້າຍ ສຳລັບຄວາມຜິດທີ່ກ່ຽວຂ້ອງກັບການຄ້າໂສເພນີ ຍັງໄດ້ຮັບການບັນທຶກໄວ້. ມີການລາຍງານວ່າ ມີເຫດການທີ່ແມ່ຍິງຈາກຟີລິບປິນ, ໄທ ແລະ ອິນໂດເນເຊຍ ໄດ້ຖືກລົງໂທດທາງອາຍາ ພາຍຫຼັງທີ່ຂໍຄວາມຊ່ວຍເຫຼືອຈາກເຈົ້າໜ້າທີ່ຕຳຫຼວດ. [43]

41 ນຳເອົາມາຈາກ https://stophk.org/en/resource-library/human-trafficking-vs-human-smuggling

42 ແມັກອາດຳ, M (2022). ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນລັດສະມາຊິກອາຊຽນ: ສັງລວມຫຍໍ້. ບາງກອກ: ແຜນງານ ASEAN-ACT. https://www.aseanact.org/wp-content/uploads/2022/04/Non-Punishment_print_smallsize.pdf

43 ແມັກອາດຳ, M (2022). ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນລັດສະມາຊິກອາຊຽນ: ສັງລວມຫຍໍ້. ບາງກອກ: ແຜນງານ ASEAN-ACT. https://www.aseanact.org/wp-content/uploads/2022/04/Non-Punishment_print_smallsize.pdf

# 3. ການເປັນຜູ້ຖືກເຄາະຮ້າຍຊ້ຳຄືນ ໃນລະຫວ່າງການສຳພາດ

ໃນລະຫວ່າງການສຳພາດ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຖືກຖາມຄຳຖາມ ຫຼື ຖືກໃຫ້ເລົ່າລາຍລະອຽດກ່ຽວກັບປະສົບການ ການຖືກຄ້າມະນຸດຂອງເຂົາເຈົ້າ. ຜູ້ຖືກເຄາະຮ້າຍອາດຈະຖືກຖາມ ຄຳຖາມເກົ່າຊ້ຳແລ້ວຊ້ຳອີກ ໂດຍຫຼາຍບຸກຄົນທີ່ແຕກຕ່າງກັນ ໃນແຕ່ລະບົດບາດທີ່ແຕກຕ່າງກັນໃນຊ່ວງເວລາໃດໜຶ່ງ. ການສຳພາດ ອາດຈະເຮັດຂຶ້ນໃນສະຖານທີ່ ທີ່ຮູ້ສຶກບໍ່ປອດໄພ ແລະ ເປີດກວ້າງເກີນໄປສຳລັບຜູ້ຖືກເຄາະຮ້າຍ. ຜູ້ຖືກເຄາະຮ້າຍທີ່ເປັນຜູ້ຍິງ ທີ່ຖືກລ່ວງລະເມີດທາງເພດ ອາດຈະຮູ້ສຶກບໍ່ສະບາຍໃຈ ແລະ ບໍ່ປອດໄພ ທີ່ຖືກຖາມຄຳຖາມໂດຍເຈົ້າໜ້າທີ່ເພດຊາຍ ຫຼື ຢູ່ຕໍ່ໜ້າເຈົ້າໜ້າທີ່ເພດຊາຍ.

ບາງປະເທດໃນອາຊຽນ, ການຕຳນິກ່າວໂທດຜູ້ຖືກເຄາະຮ້າຍ ຍັງເປັນບັນຫາໃນກຸ່ມເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ. ຜູ້ຖືກເຄາະຮ້າຍ ໄດ້ຖືກກ່າວຫາວ່າ 'ດື້ດ້ານ, ໂລບມາກ, ໂງ່, ໝິ່ນປະໝາດ ແລະ ສ້າງຄວາມບໍ່ໝັ້ນຄົງທາງດ້ານສັງຄົມ ແລະ ຄວາມເປັນລະບຽບຮຽບຮ້ອຍ'.[44] ແມ່ຍິງທີ່ຖືກຄ້າມະນຸດຊ້ຳຄືນອີກ ຈະຖືກເບິ່ງດ້ານລົບ ແລະ ອາດຈະຖືກປະຕິເສດການໃຫ້ບໍລິການ ແລະ ການປົກປ້ອງ. ເດັກນ້ອຍ ໂດຍສະເພາະຢ່າງຍິ່ງ ມັກຈະຖືກຕຳນິໂດຍເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ຄອບຄົວ ຕໍ່ກັບເຫດການທີ່ເກີດຂຶ້ນກັບເຂົາເຈົ້າ.[45] ເຂົາເຈົ້າມີຄວາມທໍ້ຖອຍຈາກຄຳເວົ້າດັ່ງກ່າວ ແລະ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ມີແນວໂນ້ມທີ່ຈະເຊື່ອຄຳເວົ້າຂອງພໍ່ແມ່ເດັກ ຕໍ່ກັບເດັກນ້ອຍ.

ທັດສະນະຄະຕິ ທີ່ຕຳນິຜູ້ຖືກເຄາະຮ້າຍ ແລະ ການຖາມຄຳຖາມໂດຍບໍ່ຄຳນຶງເຖິງຄວາມອ່ອນໄຫວ[46] ໄດ້ເຮັດໃຫ້ມີຄວາມກົດດັນຫຼວງຫຼາຍດ້ານຮ່າງກາຍ, ຈິດໃຈ ແລະ ສັງຄົມ ຕໍ່ກັບບຸກຄົນທີ່ຢູ່ພາຍໃຕ້ຄວາມເຄັ່ງຄຽດຢູ່ແລ້ວ. ຜູ້ຖືກເຄາະຮ້າຍບາງຄົນ ອາດຈະໄດ້ຮັບຜົນກະທົບຈາກຄວາມເຄັ່ງຕຶງພາຍຫຼັງຄວາມບອບຊ້ຳທາງດ້ານຈິດໃຈ (PTSD) ແລະ ສູນເສຍຄວາມຈື່ຈຳ - ເຊິ່ງເປັນສິ່ງທີ່ພົບເຫັນໄດ້ຫຼາຍທີ່ສຸດຈາກການຄ້າມະນຸດ - ໂດຍທີ່ຜູ້ຖືກເຄາະຮ້າຍ ໄດ້ຖືກລ່ວງລະເມີດ, ໃຊ້ຄວາມຮຸນແຮງ, ທໍລະມານ ແລະ ຖືກກະທຳຊ້ຳໄປຊ້ຳມາ ເປັນເວລາຍາວນານ.[47]

ຜູ້ຖືກເຄາະຮ້າຍ ທີ່ຖືກຂົ່ມຂູ່ດ້ວຍນ້ຳສຽງ ຫຼື ລັກສະນະຂອງຄຳຖາມ, ບໍ່ຮູ້ສຶກປອດໄພ ຫຼື ໄດ້ຮັບການປົກປ້ອງ ມີແນວໂນ້ມທີ່ຈະປະຕິເສດການຊ່ວຍເຫຼືອ ແລະ ເຂົ້າຮ່ວມໃນການດຳເນີນຄະດີຍຸຕິທຳທາງອາຍາ.

---

44 ບັນດາຂໍ້ສັງເກດຂອງຜູ້ເຂົ້າຮ່ວມ ຈາກກອງປະຊຸມປຶກສາຫາລືລະດັບຊາດ ວ່າດ້ວຍຄູ່ມືການບໍ່ເຮັດໄພອັນຕະລາຍຂອງອາຊຽນ

45 ບັນດາຂໍ້ສັງເກດຂອງຜູ້ເຂົ້າຮ່ວມ ຈາກກອງປະຊຸມປຶກສາຫາລືລະດັບຊາດ ວ່າດ້ວຍຄູ່ມືການບໍ່ເຮັດໄພອັນຕະລາຍຂອງອາຊຽນ

46 ຕົວຢ່າງຂອງຄຳຖາມທີ່ບໍ່ຄຳນຶງເຖິງຄວາມອ່ອນໄຫວ ຕໍ່ຜູ້ຖືກເຄາະຮ້າຍທີ່ຖືກຂູດຮີດທາງເພດ ລວມມີ: ເຈົ້ານຸ່ງເສື້ອຜ້າຫຍັງ? ເປັນຫຍັງຈິ່ງປ່ອຍໃຫ້ມັນເກີດຂຶ້ນ? ເຈົ້າໄດ້ເວົ້າຄຳວ່າ ບໍ່ ບໍ? ຕົວຢ່າງຂອງຄຳຖາມທີ່ບໍ່ຄຳນຶງເຖິງຄວາມອ່ອນໄຫວ ຕໍ່ຜູ້ຖືກເຄາະຮ້າຍ ທີ່ຖືກຂູດຮີດແຮງງານລວມມີ: ເຈົ້າເຮັດວຽກຜິດກົດໝາຍບໍ່? ເປັນຫຍັງເຈົ້າຈິ່ງບໍ່ໜີໄປຕອນທີ່ມີໂອກາດໜີ? ເປັນຫຍັງເຈົ້າຕ້ອງຢ້ານເຈົ້າໜ້າທີ່ ຖ້າຫາກເຈົ້າບໍ່ໄດ້ເຮັດຫຍັງຜິດ?

47 ອີງການ IOM (2009). *ການເບິ່ງແຍງຜູ້ຄ້າມະນຸດ, ຄຳແນະນຳສຳລັບຜູ້ສະໜອງການບໍລິການດ້ານສຸຂະພາບ.* ເຈນີວາ: IOM.

## ຄຳແນະນຳ ການບໍ່ເຮັດໄພອັນຕະລາຍ

ດຳເນີນການກັ່ນກອງ ຫຼື ສຳພາດ ໃນສະພາບແວດລ້ອມທີ່ປອດໄພ ແລະ ມີຄວາມປອດໄພ. ສິ່ງດັ່ງກ່າວນີ້ ຄວນຢູ່ໃນພື້ນທີ່ປິດລັບ ບ່ອນທີ່ບຸກຄົນ ຫຼື ເດັກ ແລະ/ຫຼື ຜູ້ເບິ່ງແຍງເຂົາເຈົ້າ ຮູ້ສຶກສະບາຍໃຈ ແລະ ມີຄວາມເປັນສ່ວນຕົວ. ຄວນຈື່ໄວ້ວ່າ ຫົວຂໍ້ທີ່ກ່າວເຖິງນັ້ນ ອາດຈະມີຄວາມອ່ອນໄຫວ ແລະ/ຫຼື ກ່ຽວຂ້ອງກັບຄວາມສ່ຽງດ້ານຄວາມປອດໄພ, ສະນັ້ນ ຮັບປະກັນວ່າ ສະຖານທີ່ດັ່ງກ່າວນັ້ນ ເປັນສ່ວນຕົວ ເພື່ອຈຳກັດຈຳນວນຄົນທີ່ຟັງ ຫຼື ຂັດຈັງຫວະ ເພື່ອໃຫ້ສອດຄ່ອງກັບມາດຕະຖານການປົກປ້ອງເດັກ.[48]

ການສຳພາດ ຄວນດຳເນີນໂດຍບຸກຄະລາກອນທີ່ໄດ້ຮັບການຝຶກອົບຮົມສະເພາະ. ໃນກໍລະນີທີ່ເໝາະສົມ, ຈັດໃຫ້ມີຜູ້ສະໜັບສະໜູນທີ່ມີຄຸນວຸດທິ (ເຊັ່ນ: ທະນາຍຄວາມ, ນັກສັງຄົມສົງເຄາະ, ພະນັກງານ NGO ຫຼື ນັກຈິດຕະວິທະຍາ) ໃຫ້ເຂົ້າຮ່ວມນຳ.

ບຸກຄົນທີ່ຖືກສຳພາດ ຄວນສຳພາດໂດຍເພດທີ່ເຂົາເຈົ້າຮູ້ສຶກສະບາຍໃຈນຳ. ຖ້າຫາກຜູ້ສຳພາດ ເຮັດໃຫ້ບຸກຄົນ ຫຼື ເດັກ ຫຼື ຜູ້ເບິ່ງແຍງເຂົາເຈົ້າ ຮູ້ສຶກບໍ່ສະບາຍໃຈ ຄວນພິຈາລະນາປ່ຽນຜູ້ສຳພາດ.

ຄວນຈະແມ່ນບຸກຄົນທີ່ໄດ້ຮັບການຝຶກອົບຮົມການປົກປ້ອງເດັກ ທີ່ຄວນຈະສອບຖາມເດັກ. ຖ້າຫາກອົງກອນທ່ານ ຫາກບໍ່ມີຜູ້ຊ່ຽວຊານ, ພິຈາລະນາການມີສ່ວນຮ່ວມຈາກຜູ້ຊ່ຽວຊານທາງນອກ ຫຼື ອົງກອນທີ່ມີຄວາມຊຳນານດ້ານການປົກປ້ອງເດັກ

ໃນກໍລະນີທີ່ເປັນໄປໄດ້, ອະນຸຍາດໃຫ້ເດັກ ມາພ້ອມກັບຜູ້ປົກປ້ອງຕາມກົດໝາຍ ຫຼື ຜູ້ໃຫຍ່ທີ່ພວກເຂົາໄວ້ໃຈ ໃນໄລຍະຂະບວນການສຳພາດ. ເດັກຄວນຈະມີທາງເລືອກໃນການເວົ້າກັບຜູ້ສຳພາດ ແຍກຈາກຜູ້ເບິ່ງແຍງ ຫຼື ສະມາຊິກຄອບຄົວຂອງເຂົາເຈົ້າ. ໂດຍສະເພາະຢ່າງຍິ່ງ ໃນກໍລະນີທີ່ມີການສົ່ງຕໍ່ເດັກ ທີ່ເນື່ອງມາຈາກ ການສົງໄສວ່າມີການລະເມີດ ຫຼື ການຂູດຮີດໃນຄອບຄົວ.

ຜູ້ສຳພາດຄວນຈະນຸ່ງຊຸດພົນລະເຮືອນແທນທີ່ຈະນຸ່ງຊຸດທາງການ. ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ຄວນຈະປົດອາວຸດຂອງຕົນ. ສິ່ງດັ່ງກ່າວນີ້ ຈະຊ່ວຍໃຫ້ຜູ້ຖືກສຳພາດ ໂດຍສະເພາະເດັກ ຮູ້ສຶກສະດວກສະບາຍຂຶ້ນ.

ໃຊ້ຜູ້ແປພາສາທີ່ໄດ້ຮັບການຝຶກອົບຮົມ ແລະ ມີຄຸນວຸດທິ ທີ່ໄດ້ຮັບການກວດສອບໂດຍເຈົ້າໜ້າທີ່ ທີ່ກ່ຽວຂ້ອງ. ຫ້າມບໍ່ໃຫ້ໃຊ້ບຸກຄົນໃດກໍຕາມ ທີ່ໃກ້ຕົວເຂົາເຈົ້າ ທີ່ມາຈາກຊຸມຊົນ (ລວມທັງໝູ່ເພື່ອນ, ຄອບຄົວ, ເພື່ອນບ້ານ, ຜູ້ນຳຊຸມຊົນ ຫຼື ກ່ຽວຂ້ອງກັບບຸກຄົນທີ່ອາດຈະເປັນຜູ້ຂູດຮີດ) ໃຫ້ເປັນຜູ້ແປພາສາ.[49]

ສ້າງຄວາມໝັ້ນໃຈໃຫ້ກັບບຸກຄົນ ທີ່ເຂົາເຈົ້າຈະບໍ່ຖືກຕຳນິ ແລະ ອະທິບາຍຕໍ່ກັບເຫດການທີ່ເກີດຂຶ້ນຕໍ່ກັບເຂົາເຈົ້ານັ້ນ ບໍ່ແມ່ນຄວາມຜິດຂອງເຂົາເຈົ້າ. ຄວນຄຳນຶງເຖິງຄວາມອ່ອນໄຫວຕໍ່ກັບຄວາມບອບຊ້ຳທາງດ້ານຈິດໃຈທີ່ເຂົາເຈົ້າໄດ້ຮັບ, ຄວາມຢ້ານກົວ ແລະ ຄວາມວິຕົກກັງວົນ. ຈື່ຈຳໄວ້ວ່າ ເຂົາເຈົ້າອາດຈະຮູ້ສຶກວ່າຖືກສັງຄົມປະນາມແລ້ວ, ມີຄວາມບອບຊ້ຳດ້ານຈິດໃຈແລ້ວ, ລະອາຍໃຈ ແລະ ບໍ່ມີອຳນາດ/ຄວາມເຂັ້ມແຂງ ອັນເນື່ອງມາຈາກປະສົບການຂອງເຂົາເຈົ້າ.

48 ການປົກປ້ອງເດັກ ທີ່ເນັ້ນໃສ່ການດຳເນີນການເພື່ອປ້ອງກັນ ເພື່ອຮັບປະກັນວ່າເດັກທຸກຄົນໄດ້ຮັບການປົກປ້ອງຈາກການກະທຳໂດຍເຈດຕະນາ ຫຼື ບໍ່ໄດ້ເຈດຕະນາ ທີ່ຈະນຳໄປສູ່ຄວາມສ່ຽງ ຫຼື ໄພອັນຕະລາຍແທ້ຈິງ. ເປົ້າໝາຍໃນການປົກປ້ອງເດັກ ແມ່ນເພື່ອສ້າງ ແລະ ຮັກສາວັດທະນະທຳທີ່ປອດໄພ ທີ່ເນັ້ນໃສ່ເດັກ ແລະ ຂັບເຄື່ອນໂດຍຊຸມຊົນ ຜ່ານການມີສ່ວນຮ່ວມຢ່າງຍືນຍົງ ແລະ ມີຄວາມໝາຍຕໍ່ເດັກ, ຄອບຄົວຂອງເດັກ, ຊຸມຊົນ ແລະ ຜູ້ຕາງໜ້າທັງໝົດ. ເອົາມາຈາກ https://www.savethechildren.org/us/what-we-do/safeguarding-children

49 ຂະບວນການບາຫຼີ (2015). *ຄຳແນະນຳດ້ານນະໂຍບາຍ ໃນການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ຄູ່ມືແນະນຳສຳລັບຜູ້ສ້າງນະໂຍບາຍ ແລະ ຜູ້ປະຕິບັດຕົວຈິງ.* ບາງກອກ, ຫ້ອງການສະໜັບສະໜູນປະຈຳພາກພື້ນຂອງຂະບວນການບາຫຼີ.

## ການປະຕິບັດທີ່ເປັນຕົວແບບທີ່ດີໃນການສຳພາດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ສັນນິຖານວ່າເປັນຜູ້ຖືກເຄາະຮ້າຍ.

### ກ່ອນການສຳພາດ

- ແນະນຳຕົນເອງ ແລະ ທຸກຄົນໃນຫ້ອງ. ຮັບປະກັນວ່າມີພຽງແຕ່ບຸກຄົນທີ່ກ່ຽວຂ້ອງເທົ່ານັ້ນຢູ່ໃນຫ້ອງກັບຜູ້ຖືກສຳພາດ.
- ນຳໃຊ້ນ້ຳສຽງທີ່ເປັນມິດ, ສະຫງົບ ແລະ ທ່າທາງທີ່ບໍ່ເປັນໄພຄຸກຄາມ
- ອະທິບາຍຈຸດປະສົງຂອງການສຳພາດ ແລະ ວິທີການນຳໃຊ້ຂໍ້ມູນ
- ແຈ້ງບຸກຄົນຕໍ່ກັບສິດຂອງເຂົາເຈົ້າ ແລະ ການບໍລິການ ແລະ ການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ສັງຄົມທີ່ມີຢູ່. ຮັບປະກັນວ່າເຂົາເຈົ້າເຂົ້າໃຈສິ່ງທີ່ໄດ້ອະທິບາຍໄວ້.
- ຮັບປະກັນສິດຄວາມເປັນສ່ວນຕົວ ແລະ ການບໍ່ເປີດເຜີຍຊື່. ບອກເຂົາເຈົ້າວ່າຂໍ້ມູນທັງໝົດຈະຖືກເກັບຮັກສາເປັນຄວາມລັບຢ່າງເຂັ້ມງວດ. [50]
- ສອບຖາມ ຖ້າຫາກບຸກຄົນດັ່ງກ່າວມີຄຳຖາມ ຫຼື ບໍ່. ສອບຖາມວ່າເຂົາເຈົ້າຮູ້ສຶກປອດໄພ ແລະ ສະບາຍໃຈບໍ່. ສອບຖາມວ່າເຂົາເຈົ້າເຈັບປວດ ຫຼື ຕ້ອງການ ການຮັກສາພະຍາບານບໍ່.
- ບອກເຂົາເຈົ້າວ່າ ສາມາດພັກ ຫຼື ຢຸດຕິການສຳພາດໄດ້ຕະຫຼອດເວລາ. ບອກເຂົາເຈົ້າວ່າ ສາມາດຖາມຄຳຖາມໄດ້ຕະຫຼອດເວລາ.
- ແຈ້ງຂໍ ເພື່ອໃຫ້ໄດ້ຮັບຄວາມຍິນຍອມ ເພື່ອດຳເນີນການສຳພາດ. ໃນເວລາຮ້ອງຂໍການຍິນຍອມ ແລະ ການຍອມຮັບ (ສຳລັບໄວໜຸ່ມ ແລະ ເດັກ), ຫ້າມກົດດັນບຸກຄົນ ຫຼື ບອກເປັນໃຈຄວາມວ່າອັນໃດດີທີ່ສຸດສຳລັບເຂົາເຈົ້າ. ນຳສະເໜີຂໍ້ມູນ ແລະ ການຮ້ອງຂໍທີ່ກ່ຽວຂ້ອງກັບການຍິນຍອມ ແລະ ການຍອມຮັບຢ່າງເປັນກາງ. ບອກເຂົາເຈົ້າວ່າ ເຂົາເຈົ້າມີອິດສະລະໃນການເລືອກ ແລະ ອັນໃດກໍຕາມທີ່ເລືອກ ຈະຖືກຍອມຮັບໂດຍປາສະຈາກອັກຄະຕິຕໍ່ເຂົາເຈົ້າ.

### ໃນລະຫວ່າງການສຳພາດ

- ປ່ອຍໃຫ້ເຂົາເຈົ້າບອກເລົ່າເລື່ອງໃນແບບຂອງເຂົາເຈົ້າເອງ, ຕາມຈັງຫວັງຕົນເອງ. ຫ້າມບໍ່ໃຫ້ເລັ່ງລັດການສຳພາດ.
- ຖາມຄຳຖາມກົງໄປກົງມາ ທີ່ເຮັດໃຫ້ເຂົ້າໃຈງ່າຍ. ນຳໃຊ້ປະໂຫຍກສັ້ນໆ.
- ສຳລັບເດັກ, ໃຫ້ປັບແຕ່ງຄຳຖາມໃຫ້ເຂົ້າກັບລັກສະນະຂອງເດັກ ແລະ ພື້ນຖານຄວາມເປັນມາຂອງຄອບຄົວເດັກ. ນຳໃຊ້ພາສາ ທີ່ເປັນມິດກັບເດັກຫຼາຍທີ່ສຸດ. ເປີດໂອກາດໃຫ້ເດັກ ໄດ້ເລົ່າເລື່ອງລາວຂອງເດັກໃນແບບຂອງເຂົາເຈົ້າກ່ອນທີ່ຈະສອບຖາມຄຳຖາມຕໍ່ເຂົາເຈົ້າ. ຄຳຖາມຄວນເລີ່ມຕົ້ນດ້ວຍຄຳຖາມເປີດ - ຄຳຖາມໂດຍກົງ ຫຼື ຄຳຖາມນຳ ຄວນສະຫງວນໄວ້ຕາມຫຼັງຂອງການສຳພາດ ພາຍຫຼັງທີ່ເດັກຮູ້ສຶກສະບາຍໃຈຂຶ້ນແລ້ວ.
- ພິຈາລະນາການສຳພາດເດັກ ໄວໜຸ່ມໃນຊ່ວງເວລາສັ້ນໆ ຫຼາຍຄັ້ງ ເນື່ອງຈາກວ່າເຂົາເຈົ້າມີໄລຍະເວລາສົນໃຈທີ່ສັ້ນ. ເດັກບາງຄົນອາດຈະມັກແຕ້ມຮູບ ຫຼື ເລົ່າເລື່ອງ. ສຳຫຼວດການນຳໃຊ້ເຄື່ອງມືເຊັ່ນ ບັດສີແດງ ທີ່ເດັກສາມາດສຳພັດ ຫຼື ຖືໄດ້ ຖ້າຫາກຕ້ອງການຢຸດການສຳພາດ.

---

50 ກໍລະນີທີ່ກ່ຽວຂ້ອງກັບເດັກ ແລະ ເຍົາວະຊົນ (minors), ຂໍ້ມູນອາດຈະແບ່ງປັນໃຫ້ແກ່ຜູ້ສະໜອງການບໍລິການອື່ນໆ ເພື່ອປົກປ້ອງຜົນປະໂຫຍດ ແລະ ສະຫວັດດີການຂອງເຂົາເຈົ້າ. ປະເມີນສະຖານະການເປັນແຕ່ລະກໍລະນີ.

- ອ້າງອີງເຖິງຊຸດຊີ້ວັດການຄ້າມະນຸດ ທີ່ໜ່ວຍງານ ຫຼື ລັດຖະບານ ໄດ້ຮັບຮອງ, ຖ້າມີ, ເພື່ອເປັນແນວທາງຕໍ່ກັບຄຳຖາມສຳພາດເພີ່ມເຕີມ.

- ປະຕິບັດຕໍ່ກັບເຂົາເຈົ້າດ້ວຍຄວາມເຄົາລົບ. ຫ້າມຂັດຈັງຫວະ ໃນເວລາທີ່ເຂົາເຈົ້າກຳລັງອະທິບາຍ ຫຼື ບອກເລົ່າເລື່ອງລາວ.

- ຫ້າມຖາມຄຳຖາມເກົ່າຊ້ຳໄປຊ້ຳມາອີກ. ສິ່ງນີ້ຈະເປັນການກົດດັນບຸກຄົນ ແລະ ເຮັດໃຫ້ການສຳພາດຮູ້ສຶກວ່າເປັນລັກສະນະການຖືກສອບສວນ, ເຮັດໃຫ້ມີຄວາມເຄັ່ງຕຶງ ແລະ ທຳລາຍຄວາມໄວ້ວາງໃຈ. ພິຈາລະນາວິທີການອື່ນໆເພື່ອໃຫ້ໄດ້ຄຳຕອບທີ່ທ່ານຕ້ອງການ ແລະ ນຳໃຊ້ຄຳຖາມທີ່ແຕກຕ່າງອອກໄປ.

- ໃຫ້ເວລາຕໍ່ກັບຄຳຖາມທີ່ຖາມຊ້ຳ ເພື່ອໃຫ້ມີຄວາມເຂົ້າໃຈ

- ວາງແຜນເພື່ອໃຫ້ມີການພັກຜ່ອນ (ໄປຫ້ອງນ້ຳ, ດື່ມນ້ຳ, ຮັບປະທານອາຫານ ຫຼື ສູດອາກາດ) ໃນເວລາການສຳພາດ

- ເປັນມືອາຊີບຕະຫຼອດໄລຍະການສຳພາດ ແຕ່ໃນເວລາດຽວກັນ ກໍຕ້ອງມີຄວາມເຫັນອົກເຫັນໃຈ ແລະ ປອບໂຍນ

- ສຸ່ມໃສ່ສິດ ແລະ ຄວາມຕ້ອງການຂອງເຂົາເຈົ້າ.

- ບໍ່ໃຫ້ຄຳໝັ້ນສັນຍາໃນການໃຫ້ການຊ່ວຍເຫຼືອ ຫຼື ປົກປ້ອງ ທີ່ເຂົາເຈົ້າຈະໄດ້ຮັບ.

- ເຄົາລົບພື້ນຖານທາງວັດທະນະທຳຂອງບຸກຄົນ, ລວມທັງ ບັນຖັດຖານທາງສັງຄົມ ແລະ ຄວາມເຊື່ອທາງສາສະໜາ. ສິ່ງນີ້ອາດຈະເຮັດໃຫ້ບາງຫົວຂໍ້ເຊັ່ນ: ເລື່ອງເພດ, ສຸຂະພາບຈິດ ບໍ່ສະບາຍໃຈທີ່ຈະມີການໂອ້ລົມ.

- ຢຸດການສຳພາດ ຖ້າຫາກເຂົາເຈົ້າສະແດງເຖິງສັນຍານຂອງອາການວິຕົກກັງວົນ ຫຼື ເຄັ່ງຄຽດ. ອາດຈະມີສະພາບເງື່ອນໄຂດ້ານສຸຂະພາບທີ່ບໍ່ຊັດເຈນໂດຍທັນທີ. ຖ້າຫາກທ່ານມີເຫດຜົນທີ່ເຊື່ອວ່າບຸກຄົນທີ່ຖືກສຳພາດນັ້ນ ມີບັນຫາດ້ານສຸຂະພາບຈິດ, ໃຫ້ຂໍຄວາມຊ່ວຍເຫຼືອຈາກນັກຈິດຕະວິທະຍາ ກ່ອນທີ່ຈະດຳເນີນການເພີ່ມເຕີມ.[51]

- ຈື່ໄວ້ວ່າ ເປັນເປັນໄປບໍ່ໄດ້ທີ່ຈະສັງລວມຂໍ້ມູນຢ່າງພຽງພໍໃນການສຳພາດຄັ້ງທຳອິດ ເພື່ອທີ່ຈະກຳນົດ ແລະ ໃຫ້ການຊ່ວຍເຫຼືອພວກເຂົາຢ່າງເໝາະສົມ. ການສ້າງຄວາມໄວ້ວາງໃຈແມ່ນສຳຄັນກວ່າ.

- ພິຈາລະນາຢຸດຕິການສຳພາດ ຖ້າຫາກເຈົ້າໜ້າທີ່ຜູ້ສຳພາດ ບໍ່ສາມາດສ້າງສາຍສຳພັນ ແລະ ຄວາມໄວ້ວາງໃຈກັບເຂົາເຈົ້າໄດ້, ຫຼື ເຂົາເຈົ້ານັ້ນແມ່ນມີຄວາມສ່ຽງດ້ານສຸຂະພາບ, ຫຼື ບໍ່ສາມາດ ຫຼື ບໍ່ເຕັມໃຈທີ່ຈະໃຫ້ຂໍ້ມູນທີ່ເປັນປະໂຫຍດ.

- ນອກຈາກຄຳໃຫ້ການຂອງຜູ້ຖືກສຳພາດ, ຫຼັກຖານອື່ນໆກໍຄວນຈະເກັບກຳ ເພື່ອກຳນົດຂໍ້ເທັດຈິງ ແລະ ຂໍ້ມູນທັງໝົດເພື່ອກຳນົດວ່າຄະດີນີ້ ເປັນຄະດີຄ້າມະນຸດ ຫຼື ບໍ່.[52]

51 ອົງການ IOM (2007). *ຄູ່ມືຂອງອົງການ IOM ວ່າດ້ວຍການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໂດຍກົງ.* ເຈນີວາ: IOM

52 ບັນທຶກ 11: ຫຼັກການ ແລະ ຂໍ້ສະເໜີແນະນຳຂອງ UNHCHR, ຄຳແນະນຳ 5, ມາດຕາ 3: "ລັດຄວນຈະຊຸກຍູ້ ແລະ ສະໜັບສະໜູນ ການພັດທະນາຂັ້ນຕອນການສືບສວນ-ສອບສວນແບບຕັ້ງໜ້າ ເພື່ອຫຼີກລ້ຽງການເພິ່ງພາຕໍ່ກັບຄຳໃຫ້ການຂອງຜູ້ຖືກເຄາະຮ້າຍ.

**ພາຍຫຼັງການສຳພາດ**

- ບອກເຂົາເຈົ້າວ່າຕໍ່ໄປຈະເກີດຫຍັງຂຶ້ນ ແລະ ທ່ານຈະຊ່ວຍເຂົາເຈົ້າເພີ່ມເຕີມແນວໃດ.
- ໃຫ້ເວລາແກ່ເຂົາເຈົ້າ ເພື່ອຖາມຄໍາຖາມ
- ຮັບປະກັນວ່າເຂົາເຈົ້າມີບ່ອນທີ່ປອດໄພທີ່ຈະໄປ ເຊັ່ນ: ສູນພັກເຊົາ ຫຼື ຜູ້ສະໜອງການບໍລິການສະເພາະ ສໍາລັບການຊ່ວຍເຫຼືອ. ນໍາໃຊ້ທຸກຄວາມພະຍາຍາມທັງໝົດ ເພື່ອຊ່ວຍໃຫ້ເຂົາເຈົ້າໄປເຖິງບ່ອນດັ່ງກ່າວຢ່າງປອດໄພ.
- ຂອບໃຈບຸກຄົນດັ່ງກ່າວ ແລະ ໃຫ້ຂໍ້ມູນຕິດຕໍ່ ກໍລະນີທີ່ເຂົາເຈົ້າຕ້ອງການໂທຫາທ່ານ.
- ເກັບຮັກສາຂໍ້ມູນສ່ວນຕົວຂອງເຂົາເຈົ້າ ໄວ້ໃນສະຖານທີ່ປອດໄພ. ຫ້າມບໍ່ໃຫ້ເປີດເຜີຍຂໍ້ມູນຄວາມລັບ ໂດຍບໍ່ມີການຍິນຍອມຈາກບຸກຄົນດັ່ງກ່າວ.
- ປະເມີນສິ່ງທີ່ເກີດຂຶ້ນ ແລະ ວາງແຜນສໍາລັບບາດກ້າວຕໍ່ໄປກັບເຈົ້າໜ້າທີ່ ຫຼື ຫົວໜ້າຄົນອື່ນ.

**ມັນເປັນສິ່ງທີ່ສໍາຄັນທີ່ຜູ້ຕອບໂຕ້ດ່ານໜ້າ ຈະເຂົ້າໃຈຜົນກະທົບດ້ານຮ່າງກາຍ ແລະ ຈິດໃຈຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຜູ້ຖືກເຄາະຮ້າຍອາດຈະສະແດງອາການໜຶ່ງ ຫຼື ຫຼາຍໆອາການດັ່ງຕໍ່ໄປນີ້:**

- ບໍ່ມີຄວາມສາມາດໃນການອະທິບາຍ ຫຼື ເຂົ້າໃຈຕໍ່ກັບປະສົບການ/ສິ່ງທີ່ເກີດຂຶ້ນກັບເຂົາເຈົ້າເອງ
- ມີຄວາມຫຍຸ້ງຍາກໃນການສະໜອງເລື່ອງລາວທີ່ສອດຄ່ອງກັນ ຫຼື ສະໝໍ່າສະເໝີ
- ຂາດການຮ່ວມມື
- ຂາດຄວາມຈື່ຈໍາບາງສ່ວນ
- ຄວາມຂັດແຍ່ງທີ່ຊັດເຈນຕໍ່ກັບຄໍາໃຫ້ການຂອງເຂົາເຈົ້າ
- ສະຖານະຂອງການປະຕິເສດ ຫຼື ການຫຼຸດຄວາມສ່ຽງ ແນວໂນ້ມຂອງສະຖານະການ
- ການປ່ຽນແປງຂໍ້ມູນແທ້ຂອງເລື່ອງ
- ບໍ່ສາມາດກໍານົດສິ່ງທີ່ເຂົາເຈົ້າຕ້ອງການ/ການຊ່ວຍເຫຼືອ
- ຮູ້ສຶກສິ້ນຫວັງ
- ການປ່ຽນແປງຄວາມຮູ້ສຶກຕາມເວລາ
- ຄວາມຮູ້ສຶກດ້ານຮ່າງກາຍ, ຈິດໃຈ ແລະ ສະຕິປັນຍາ ທີ່ລົ້ນເຫຼືອ



ເດັກທີ່ຖືກຄ້າມະນຸດ ຄວນມີການແຕ່ງຕັ້ງຜູ້ປົກປ້ອງຕາມກົດໝາຍໃຫ້ ເພື່ອໃຫ້ຄຳແນະນຳ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງເຂົາເຈົ້າ ໃນກໍລະນີ ທີ່ພໍ່ແມ່ເຂົາເຈົ້າບໍ່ສາມາດເຮັດໄດ້ ໃນໄລຍະຊົ່ວຄາວ ຫຼື ຖາວອນ, ບໍ່ເຕັມໃຈທີ່ຈະເຮັດ ຫຼື ບໍ່ ເໝາະສົມທີ່ຈະນຳໃຊ້ສິດໃນຖານະພໍ່ແມ່.[53] ຜູ້ປົກປ້ອງຕາມກົດໝາຍ ຄວນຈະປຶກສາ ແລະ ແຈ້ງກ່ຽວກັບການດຳເນີນການທັງໝົດທີ່ກ່ຽວຂ້ອງກັບເດັກ.

ດຳເນີນການປະເມີນຜົນປະໂຫຍດສູງສຸດຂອງເດັກທັນທີ ທີ່ມີການກຳນົດວ່າເດັກມີຄວາມສ່ຽງ. ສິ່ງດັ່ງກ່າວນີ້ຄວນຈະເປັນຂະບວນການທີ່ຕໍ່ເນື່ອງ ເພື່ອຜົນປະໂຫຍດສູງສຸດຂອງເດັກ ໂດຍເອົາເດັກເປັນໃຈກາງຂອງການດຳເນີນການໃດໜຶ່ງ ແລະ ພິຈາລະນາເບື້ອງຕົ້ນ ແລະ ຈຸດປະສົງຂອງມາດຕະການໃດໆ ທີ່ມີຜົນກະທົບຕໍ່ເດັກ.[54]

ໃນລະຫວ່າງການສຳພາດ, ເດັກອາດຈະເປີດເຜີຍຄວາມຮຸນແຮງທາງເພດ ຫຼື ຄວາມຮຸນແຮງບົນພື້ນຖານທາງເພດ, ຫຼື ຜູ້ສຳພາດອາດຈະສົງໄສວ່າເດັກໄດ້ຖືກໃຊ້ຄວາມຮຸນແຮງທາງເພດ. ການເປີດເຜີຍຄວາມຮຸນແຮງທາງເພດ ຕ້ອງດຳເນີນການຢ່າງຈິງຈັງ ແລະ ບໍ່ສາມາດລະເລີຍໄດ້. ມັນເປັນສິ່ງທີ່ສຳຄັນຫຼາຍທີ່ຜູ້ສຳພາດໄດ້ຮັບການຝຶກອົບຮົມຢ່າງເໝາະສົມ ແລະ ຂໍການສະໜັບສະໜູນຈາກຫົວໜ້າ ຫຼື ຜູ້ຊ່ຽວຊານ ເພື່ອຕອບໂຕ້ກັບສະຖານະການທີ່ມີຄວາມອ່ອນໄຫວນີ້. ສິ່ງນີ້ລວມມີ ວິທີການສະໜັບສະໜູນເດັກ ແລະ ຜູ້ສະໜັບສະໜູນເດັກ ໃນໄລຍະຂະບວນການນີ້. ຜູ້ສຳພາດ ຕ້ອງເຂົ້າໃຈທັງເດັກຍິງ ແລະ ເດັກຊາຍ ຜູ້ທີ່ມີປະສົບການຖືກໃຊ້ຄວາມຮຸນແຮງທາງເພດ ແລະ ຄວາມຮຸນແຮງບົນພື້ນຖານທາງເພດ ບໍ່ແມ່ນຜົນສະທ້ອນດ້ານລົບຕໍ່ເດັກ ທີ່ບໍ່ເຄີຍມີຄວາມຜິດທີ່ເຄີຍຖືກລ່ວງລະເມີດທາງເພດ.

### ການປະຕິບັດທີ່ເປັນຕົວແບບທີ່ດີ:[55]

ລັດຖະບານລາວຮັບຮູ້ເຖິງສິ່ງທ້າທາຍໃນການໄດ້ຮັບຂໍ້ມູນທີ່ຖືກຕ້ອງ ແລະ ທັນເວລາຈາກຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນຂະນະດຽວກັນກໍຮັບປະກັນວ່າສິດທິ ແລະ ຄວາມປອດໄພຂອງເຂົາເຈົ້າຕະຫຼອດໄລຍະຂອງຂະບວນການ. ແຈ້ງຜູ້ຖືກເຄາະຮ້າຍກ່ຽວກັບສິດທິຂອງເຂົາເຈົ້າ ແລະ ແຈ້ງການຂໍຍິນຍອມ ແມ່ນເປັນສິ່ງສຳຄັນໃນບາດກ້າວທຳອິດ. ຜູ້ຖືກເຄາະຮ້າຍບາງຄົນບໍ່ເຫັນວ່າຕົນເອງເປັນຜູ້ຖືກເຄາະຮ້າຍ - ບາງຄົນຈະເຊື່ອງຂໍ້ມູນໃນເບື້ອງຕົ້ນ. ໂດຍສະເພາະຢ່າງຍິ່ງ ຜູ້ຖືກເຄາະຮ້າຍທີ່ຖືກຂູດຮີດທາງເພດ ມັກຈະຢ້ານກົວທີ່ຈະເປີດເຜີຍຂໍ້ມູນທັງໝົດໃນເບື້ອງຕົ້ນ. ຖ້າກໍລະນີດັ່ງກ່າວນີ້ເກີດຂຶ້ນ, ຜູ້ຕອບໂຕ້ດ່ານໜ້າ ຈະພັກຜ່ອນ ຫຼື ເລື່ອນການກັ່ນກອງ/ການກຳນົດຕົວ ໄປເປັນມື້ຕໍ່ໄປ ຫຼື ໂອກາດອື່ນໆທີ່ໄວທີ່ສຸດ. ເນັ້ນໃສ່ການສ້າງຄວາມໄວ້ວາງໃຈກັບຜູ້ຖືກເຄາະຮ້າຍ ແລະ ສ້າງສະພາບແວດລ້ອມທີ່ຮູ້ສຶກປອດໄພ ແລະ ສະບາຍໃຈແກ່ເຂົາເຈົ້າ.

53 ອົງການ UNICEF (2006). *ຄູ່ມືການປົກປ້ອງຜູ້ຖືກເຄາະຮ້າຍທີ່ເປັນເດັກ.* ບັນທຶກທາງວິຊາການຂອງອົງການ. ນິວຢອກ: ອົງການ UNICEF.

54 ສຳນັກງານໃຫຍ່ຄະນະກຳມາທິການສິດທິມະນຸດ. *ຫຼັກການ ແລະ ຂໍ້ສະເໜີແນະນຳວ່າດ້ວຍສິດທິມະນຸດ ແລະ ການຄ້າມະນຸດ.* (n.d.)

55 ກອງປະຊຸມປຶກສາຫາລືລະດັບຊາດຂອງ ສປປ ລາວ, ວັນທີ 17 ທັນວາ 2021.

## 4. ບໍ່ມີຄວາມເຂັ້ມແຂງ/ບໍ່ມີອຳນາດ, ຖືກບັງຄັບໃຫ້ກຳນົດຕົວ ແລະ ຊ່ວຍເຫຼືອ

ບໍ່ແມ່ນຜູ້ຖືກເຄາະຮ້າຍທຸກຄົນທີ່ຈະເຫັນຕົວເອງໃນຖານະຜູ້ຖືກເຄາະຮ້າຍ. ຜູ້ຖືກເຄາະຮ້າຍບາງຄົນອາດຈະຍອມຮັບ 'ສະພາບການ' ຂອງເຂົາເຈົ້າ ແລະ ສືບຕໍ່ການເຮັດວຽກ. ບາງຄົນອາດຈະບໍ່ຕ້ອງການ ການກຳນົດຕົວ ແລະ ຫຼີກລ້ຽງການກຳນົດຕົວຢ່າງຈິງຈັງ.

ສຳລັບບາງຄົນ, ຂັ້ນຕອນການກຳນົດຕົວຜູ້ຖືກເຄາະຮ້າຍທີ່ເປັນທາງການ ລວມທັງການຊ່ວຍເຫຼືອທີ່ເຂົາເຈົ້າບໍ່ຕ້ອງການ ຫຼື ໃນຮູບແບບທີ່ເຂົາເຈົ້າບໍ່ຕ້ອງການໄດ້ຮັບ (ຕົວຢ່າງ, ການຮຽກຮ້ອງໃຫ້ຕ້ອງອາໄສຢູ່ໃນສູນພັກເຊົາ ຫຼື ແຍກກັນຢູ່ຈາກຄອບຄົວ). ການກຳນົດຕົວອາດຈະຮຽກຮ້ອງໃຫ້ຜູ້ຖືກເຄາະຮ້າຍ ກັບຄືນປະເທດ ຫຼື ຖິ່ນກຳເນີດ ເຊິ່ງເຂົາເຈົ້າຕ້ອງການທີ່ຈະຫຼີກລ້ຽງ ໂດຍມີຄວາມຫວັງວ່າຈະຊອກວຽກເຮັດໃນປະເທດປາຍທາງ ຫຼື ໃນເມືອງແຫນ. ຜູ້ຖືກເຄາະຮ້າຍບາງຄົນບໍ່ໄວ້ວາງໃຈເຈົ້າໜ້າທີ່ ແລະ ບໍ່ເຊື່ອວ່າການກຳນົດຕົວນັ້ນ ຈະແປຜົນເປັນຜົນປະໂຫຍດຢ່າງປະຈັກຕາແກ່ເຂົາເຈົ້າ.

ແຕ່ວ່າຜູ້ຖືກເຄະຮ້າຍ ອາດຈະຢູ່ໃນສະຖານະການທີ່ເຂົາເຈົ້າບໍ່ຮັບຮູ້ເຖິງສິດຂອງຕົນ ແລະ ບໍ່ສາມາດທີ່ຈະເວົ້າວ່າ 'ບໍ່' ຕໍ່ເຈົ້າໜ້າທີ່ ທີ່ໃຫ້ການຊ່ວຍເຫຼືອ ຫຼື ຜູ້ສຳພາດ. ມັນເປັນສິ່ງທີ່ງ່າຍດາຍຫຼາຍທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຜູ້ທີ່ມີຄວາມບອບຊ້ຳທາງດ້ານຈິດໃຈ ຈະຍອມຮັບເອົາຄວາມດ້ອຍໂອກາດ ແລະ ການເພິ່ງພາດັ່ງກ່າວ.[56] ເຂົາເຈົ້າອາດຈະຮູ້ສຶກວ່າຖືກບັງຄັບໃຫ້ປະຕິບັດຕາມຂັ້ນຕອນ ຫຼື ຍອມຮັບເອົາການຊ່ວຍເຫຼືອ. ເຂົາເຈົ້າອາດຈະຮູ້ສຶກວ່າ ເຂົາເຈົ້າບໍ່ມີຄຳເວົ້າໃດໆໃນການຕັດສິນໃຈ ຫຼື ປະເພດການຊ່ວຍເຫຼືອທີ່ມີໃຫ້.

---

56 ອົງການ IOM (2007). *ຄູ່ມືຂອງອົງການ IOM ວ່າດ້ວຍການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໂດຍກົງ.* ເຈນີວາ. ອົງການ IOM.

**ສິ່ງທ້າທາຍ:**

ໃນອາຊີຕາເວັນອອກສ່ຽງໃຕ້, ແຜນງານການຊ່ວຍເຫຼືອ ມັນຈະເປັນແບບຂັ້ນເທິງຫາຂັ້ນລຸ່ມ ແລະ ຈັດບູລິມະສິດ "ການປົກປ້ອງ" ຜູ້ຖືກເຄາະຮ້າຍຈາກການລ່ວງລະເມີດ ແລະ ຂູດຮີດ. ມີການສັນນິຖານວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງໄດ້ຮັບ "ການກອບກູ້" ຫຼື "ຊ່ວຍຊີວິດ" ຈາກສະຖານະການຂອງເຂົາເຈົ້າ. ການປະຕິບັດ - ເຊັ່ນ ລະບຽບວິໄນ, ຂໍ້ຈຳກັດ ແລະ ການກັກຂັງ - ຖືກດຳເນີນການໂດຍເຈົ້າໜ້າທີ່ ຫຼື ຜູ້ໃຫ້ການບໍລິການ ຜູ້ທີ່ເຊື່ອວ່າເຂົາເຈົ້າກຳລັງດຳເນີນການເພື່ອຜົນປະໂຫຍດຂອງຜູ້ຖືກເຄາະຮ້າຍ. ການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຖືກເຄາະຮ້າຍ ຈິ່ງຖືກລະເລີຍຈາກຄ່າໃຊ້ຈ່າຍໃນການປົກປ້ອງນັ້ນ.[57]

# ຄຳແນະນຳ ການບໍ່ເຮັດໄພອັນຕະລາຍ

ລະວັງນ້ຳສຽງ ແລະ ພາສາກາຍຂອງທ່ານ ແລະ ວິທີການ ທີ່ອາດຈະສະແດງເຖິງການຕັດສິນ, ບໍ່ເຄົາລົບ ແລະ ເລືອກປະຕິບັດຕໍ່ກັບຜູ້ຖືກເຄາະຮ້າຍ

ຊຸກຍູ້ຜູ້ຖືກເຄາະຮ້າຍໃຫ້ຕັດສິນໃຈດ້ວຍຕົນເອງ ແລະ ບໍ່ຕັດສິນເຂົາເຈົ້າ.

ຄຳນຶງເຖິງຄວາມອ່ອນໄຫວຕໍ່ກັບພື້ນຖານທາງເສດຖະກິດ-ສັງຄົມ ແລະ ວັດທະນະທຳຂອງເຂົາເຈົ້າ ແລະ ອາດຈະມີອິດທິພົນຕໍ່ກັບພຶດຕິກຳ ແລະ ວິທີການຕອບໂຕ້ຂອງເຂົາເຈົ້າ.

ເຄົາລົບຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ ຖ້າເຂົາເຈົ້າບໍ່ຕ້ອງການທີ່ຈະກຳນົດຕົວ ຫຼື ຮັບການຊ່ວຍເຫຼືອ. ໃຫ້ເຂົາເຈົ້າໄດ້ຕັດສິນໃຈດ້ວຍຕົວເຂົາເຈົ້າເອງ ເຖິງແມ່ນວ່າທ່ານຈະບໍ່ເຫັນດີກັບເຂົາເຈົ້າກໍ່ຕາມ. ຫ້າມເຮັດໃຫ້ເຂົາເຈົ້າຮູ້ສຶກວ່າຕົນເອງໂງ່ ຫຼື ບໍ່ຮູ້ບຸນຄຸນ.

ສ້າງຄວາມເຊື່ອໝັ້ນວ່າເຂົາເຈົ້າສາມາດປ່ຽນໃຈໄດ້ຕະຫຼອດເວລາ ແລະ ການຊ່ວຍເຫຼືອ ແລະ ສະໜັບສະໜູນນັ້ນ ຈະຍັງມີໃຫ້ເຂົາເຈົ້າຢູ່. ໃຫ້ເປີໂທຕິດຕໍ່ແກ່ເຂົາເຈົ້າ ຖ້າເຂົາເຈົ້າຕັດສິນໃຈທີ່ຈະປະຕິເສດການຊ່ວຍເຫຼືອໃນເວລານັ້ນ.

ອີງຕາມນະໂຍບາຍ ແລະ ກົດໝາຍພາຍໃນ, ໃຫ້ເຂົາເຈົ້າໄດ້ມີເວລາຟື້ນຟູ ແລະ ສະທ້ອນຄືນ ຕໍ່ກັບການຕັດສິນໃຈກ່ຽວກັບທາງເລືອກຂອງເຂົາເຈົ້າ ລວມທັງວ່າເຂົາເຈົ້າຕ້ອງການທີ່ຈະຖືກກຳນົດຕົວ ຫຼື ບໍ່, ຮັບຄວາມຊ່ວຍເຫຼືອ ຫຼື ຮ່ວມມືກັບໜ່ວຍງານຍຸຕິທຳທາງອາຍາ ຫລື ບໍ່. ໃນເວລານີ້, ການສະໜອງການສະໜັບສະໜູນໂດຍບໍ່ມີເງື່ອນໄຂແກ່ເຂົາເຈົ້າລວມມີ: ທີ່ພັກເຊົາ, ການປິ່ນປົວ, ການຊ່ວຍເຫຼືອທາງດ້ານກົດໝາຍ, ການໃຫ້ຄຳປຶກສາ, ການຕິດຕໍ່ສື່ສານກັບຄອບຄົວຂອງເຂົາເຈົ້າ ແລະ ອື່ນໆ.[58]

57 ສະຖາບັນ Issara ແລະ A Lisborg, "ມຸ້ງໜ້າຕໍ່ກັບການຂັບເຄື່ອນຄວາມຕ້ອງການ, ການເພີ່ມຂີດຄວາມສາມາດໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ", ການວິໄຈໂດຍຫຍໍ້, ພຶດສະພາ 2017. ເບິ່ງທີ່ https://docs.wixstatic.com/ugd/5bf36e_f6df2997d6734cd1a35e74167adf182a.pdf.

58 ຂະບວນການບາຫຼີ (2015). *ຄູ່ມືດ້ານນະໂຍບາຍວ່າດ້ວຍການກຳນົດຕົວຜູ້ຖືກເຄາະຮ້າຍ: ການແນະນຳຄູ່ມື ສຳລັບຜູ້ສ້າງນະໂຍບາຍ ແລະ ຜູ້ປະຕິບັດຕົວຈິງ.* ບາງກອກ, ຫ້ອງການ ການສະໜັບສະໜູນລະດັບພາກພື້ນ ຂອງຂະບວນການບາຫຼີ.

# 5. ການຖືກສັງຄົມປະນາມ ແລະ ປະຕິເສດຈາກ ຄອບຄົວ ແລະ ຊຸມຊົນ

ການເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດນໍາໄປສູ່ ການຖືກປະນາມຈາກສັງຄົມ, ຖືກປະຕິເສດ ແລະ ຖືກຕິດ ປ້າຍ ຈາກເຈົ້າໜ້າທີ່, ຄອບຄົວ ແລະ ສະມາຊິກໃນຊຸມຊົນ. ນີ້ແມ່ນຄວາມຈິງໂດຍສະເພາະຜູ້ທີ່ຖືກຂູດຮີດທາງເພດ.[59] ຜູ້ ຖືກເຄາະຮ້າຍຫຼາຍຄົນ ຮູ້ສຶກອັບອາຍ ແລະ ລະອາຍໃຈ ທີ່ ເຂົາເຈົ້າບໍ່ສາມາດຫາລາຍໄດ້ຕາມທີ່ຄາດຫວັງໄວ້ ຫຼື ເພື່ອຈ່າຍ ໜີ້ສິນ. ບາງຄົນ ຮູ້ສຶກເສຍໃຈທີ່ໄດ້ແບ່ງປັນປະສົບການ ແລະ ຖືກກໍານົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.



ຮູບພາບໂດຍ ດຸຍ ຟໍາ ຈາກອັນສູເປສ

59 ການປະສານງານລະຫວ່າງໜ່ວຍງານເພື່ອຕ້ານການຄ້າມະນຸດ (ICAT). *ຮ່າງການສັງລວມຂໍ້ສະເໜີແນະນໍາທົ່ວໄປຂອງ CEDAW ກ່ຽວກັບການຄ້າແມ່ຍິງ ແລະ ເດັກ ໃນບໍລິບົດຂອງແຮງງານເຄື່ອນຍ້າຍໃນທົ່ວໂລກ* (n.d.).

# ຄຳແນະນຳການບໍ່ເຮັດໃພອັນຕະລາຍ

ເຮັດໃຫ້ຜູ້ຖືກເຄາະຮ້າຍໝັ້ນໃຈວ່າ ສິ່ງທີ່ເກີດຂຶ້ນກັບເຂົາເຈົ້າ ບໍ່ແມ່ນຄວາມຜິດຂອງເຂົາເຈົ້າ ແລະ ເຂົາເຈົ້າຈະບໍ່ຖືກຕຳນິ. ຖ້າວ່າເໝາະສົມ, ໃຫ້ອະທິບາຍຕໍ່ຄອບຄົວຂອງເຂົາເຈົ້າວ່າ ຜູ້ຖືກເຄາະຮ້າຍບໍ່ຄວນຈະຖືກຕຳນິໃນສິ່ງທີ່ເກີດຂຶ້ນກັບເຂົາເຈົ້າ. ຊຸກຍູ້ໃຫ້ຄອບຄົວເຂົາເຈົ້າໃຫ້ຄວາມສະໜັບສະໜູນແກ່ຜູ້ຖືກເຄາະຮ້າຍໃນການກັບຄືນ ແລະ ການຟື້ນຟູເຂົາເຈົ້າ.

ອະທິບາຍຂໍ້ຄວນລະວັງ ທີ່ຕ້ອງປະຕິບັດເພື່ອປົກປ້ອງຕົວຕົນ ແລະ ຮັກສາຂໍ້ມູນສ່ວນຕົວ ເພື່ອເປັນຄວາມລັບຢ່າງເຂັ້ມງວດ. ຖາມຜູ້ຖືກເຄາະຮ້າຍວ່າເຂົາເຈົ້າຮູ້ສຶກພຽງພໍແລ້ວບໍ່.

ແນະນຳເຂົາເຈົ້າໄປຫານັກສັງຄົມສົງເຄາະ ຫຼື ຜູ້ທີ່ໃຫ້ຄຳປຶກສາ ຖ້າເຂົາເຈົ້າສະແດງ ຫຼື ເຮັດໃຫ້ເຫັນວ່າເຂົາເຈົ້າຮູ້ສຶກບໍ່ດີຕໍ່ຕົນເອງ, ກ່ຽວກັບສະພາບການ ແລະ ອະນາຄົດຂອງເຂົາເຈົ້າ.

ຖ້າຜູ້ຖືກເຄາະຮ້າຍ ບໍ່ຕ້ອງການທີ່ຈະໂອ້ລົມກັບໃຜຄົນໃດ ຕໍ່ກັບຄວາມຢ້ານກົວ ແລະ ຄວາມກັງວົນຂອງເຂົາເຈົ້າ, ໃຫ້ກຽມບັດສຳລັບການບໍລິການການສົ່ງຕໍ່. ເຂົາເຈົ້າສາມາດເກັບຮັກສາໄວ້ ສຳລັບການອ້າງອີງໃນອະນາຄົດ ເມື່ອເຂົາເຈົ້າຕັດສິນໃຈທີ່ຈະໃຊ້ມັນ. ເທົ່າທີ່ເປັນໄປໄດ້, ຄວນມີຂໍ້ມູນສຳລັບການບໍລິການໃຫ້ໄດ້ຫຼາຍທີ່ສຸດ. ບັດຄວນຈະມີຂໍ້ມູນທີ່ຢູ່ ແລະ ເບີໂທ ໂດຍບໍ່ຈຳເປັນຕ້ອງລະບຸວ່າເອົາໄວ້ເພື່ອຫຍັງ. ກຽມພ້ອມໄວ້ວ່າ ຜູ້ຖືກເຄາະຮ້າຍອາດຈະບໍ່ຕ້ອງການຮັບເອົາບັດ ຫຼື ຂໍ້ມູນດັ່ງກ່າວ.[60]

ກຳນົດຄູ່ຮ່ວມງານ NGO ແລະ ອົງກອນຢ່າງເໝາະສົມ ລວມທັງ ອົງກອນທີ່ເຮັດວຽກກັບຄົນພິການ ທີ່ຄຳນຶງເຖິງຄວາມອ່ອນໄຫວ ແລະ ເຕັມໃຈທີ່ຈະໃຫ້ບໍລິການຕ່າງໆແກ່ຜູ້ຖືກເຄາະຮ້າຍ ຕາມຄວາມຕ້ອງການຂອງເຂົາເຈົ້າ.

---

**ສິ່ງທ້າທາຍ:**

ການແຜ່ລະບາດຂອງພະຍາດໂຄວິດ 19 ໄດ້ເຮັດໃຫ້ການຂະຫຍາຍຕົວຂອງການຄ້າມະນຸດໃນທາງອິນເຕີເນັດເພີ່ມຂຶ້ນ ລວມທັງການເພີ່ມຂຶ້ນຂອງການຈັດຫາການຂູດຮີດທາງອອນລາຍ, ຄວາມຕ້ອງການເຄື່ອງມືການຂູດຮີດທາງເພດຕໍ່ເດັກ ແລະ ການຄ້າມະນຸດທາງເພດເດັກ ໂດຍນຳໃຊ້ເຕັກໂນໂລຊີໃນການອຳນວຍຄວາມສະດວກ.[61] ຜູ້ຖືກເຄາະຮ້າຍ ມັກຈະເປັນເດັກ ໂດຍມີພໍ່ແມ່ ຫຼື ຜູ້ເບິ່ງແຍງທີ່ເປັນຜູ້ກະທຳຜິດ.[62] ການນຳໃຊ້ໂທລະສັບມືຖືຢ່າງກວ້າງຂວາງ ຍັງໝາຍເຖິງວ່າເດັກຕົກເປັນເປົ້າໝາຍ, ການຈັດຫາ ແລະ ຖືກບັງຄັບໃຫ້ມີສ່ວນຮ່ວມໃນກິດຈະກຳທາງເພດຜ່ານທາງແອັບມືຖື. ຜູ້ຖືກເຄາະຮ້າຍທີ່ເປັນເດັກຫຼາຍຄົນ ບໍ່ຮູ້ວ່າຕົນເອງຖືກຂູດຮີດ. ໃນຂະນະດຽວກັນ, ມັນເປັນສິ່ງທີ່ຍາກທີ່ຈະປົກປິດຕົວຕົນຂອງເຂົາເຈົ້າ ເມື່ອເຂົາເຈົ້າໄດ້ເປີດເຜີຍຕົວຕົນທາງສື່ສັງຄົມອອນລາຍ. ລັກສະນະຂອງການຂູດຮີດທາງເພດທາງອອນລາຍຈາກເດັກ (OSEC) ເຮັດໃຫ້ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍມີຄວາມຫຍຸ້ງຍາກຂຶ້ນ ໃນການສືບຫາ ແລະ ຂັດຂວາງ. ການເພີ່ມຂຶ້ນຂອງ OSEC ຍັງຈຳກັດຄວາມສາມາດໃນການບັງຄັບໃຊ້ກົດໝາຍ ໃນການຕອບໂຕ້ ແລະ ສືບສວນ-ສອບສວນທຸກກໍລະນີ ຫຼື ການອ້າງອີງເຖິງ, ໂດຍມີແນວໂນ້ມວ່າຂໍ້ມູນບາງສ່ວນຂອງເຂົາເຈົ້ານັ້ນ ຖືກຝັງໄວ້ພາຍໃຕ້ຂໍ້ມູນຂອງຄົ້ນໃຫ່ຍ (ສືນາມິ).[63]

---

60 Zimmerman, C. & Watts, C. (2003). *ຄຳແນະນຳດ້ານຈັນຍາບັນ ແລະ ຄວາມປອດໄພໃນການສຳພາດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັດເພດຍິງຂອງອົງການອະນາໄມໂລກ,* ໂຮງຮຽນສຸຂະພາບ ແລະ ແພດສາດໃນເຂດຮ້ອນຂອງລອນດອນ ໂດຍການສະໜັບສະໜູນຈາກແຜນງານດາຟິນີຂອງຄະນະກຳມາທິການເອີລົບ ແລະ ອົງການອະນາໄມໂລກ.

61 ຄຳແນະນຳທົ່ວໄປຂອງ CEDAW ເລກທີ. 38 (2020) ກ່ຽວກັບການຄ້າແມ່ຍິງ ແລະ ເດັກໃນບໍລິບົດຂອງການເຄື່ອນຍ້າຍແຮງງານໃນໂລກ (20 ພະຈິກ 2020).

62 ພາລະກິດຄວາມຍຸຕິທຳລະຫວ່າງປະເທດ (2020). ການຂູດຮີດທາງເພດເດັກ ທາງອອນລາຍ ໃນປະເທດຟີລິບປິນ: *ການວິເຄາະ ແລະ ແນະນຳ ສຳລັບລັດຖະບານ, ອຸດສາຫະກຳ ແລະ ອົງການຈັດຕັ້ງທາງສັງຄົມ*

63 ກອງປະຊຸມເພື່ອຮັບຮອງຄວາມຖືກຕ້ອງຂອງແຜນງານ ASEAN-ACT ປະເທດກຳປູເຈຍ, ວັນທີ 30 ກັນຍາ 2020

# 6. ຄວາມກົດດັນ ແລະ ກັງວົນໃນລະຫວ່າງ ຂະບວນການສົ່ງຕໍ່

ການສົ່ງຕໍ່ ເພື່ອການບໍລິການ ແລະ ການຊ່ວຍເຫຼືອ ເກີດຂຶ້ນໃນໂອກາດຕ່າງໆ ນັບແຕ່ເວລາທີ່ຜູ້ຖືກເຄາະຮ້າຍຖືກກຳນົດຕົວ ໄປຈົນເຖິງຈຸດທີ່ເຂົາເຈົ້າໄດ້ຮັບການຟື້ນຟູຢ່າງເຕັມສ່ວນຈາກປະສົບການການຄ້າມະນຸດ ແລະ ກັບຄືນສູ່ສັງຄົມຢ່າງສົມບູນ. ເວລາການລໍຖ້າເພື່ອສົ່ງຕໍ່ ອາດຈະໃຊ້ເວລາດົນ ໂດຍສະເພາະ ຖ້າຫາກລະບົບຂອງລັດຖືກຄອບງຳດ້ວຍຄວາມຕ້ອງການ ແລະ ຊັບພະຍາກອນທີ່ຂາດແຄນ. ມັນອາດຈະເຮັດໃຫ້ຊັກຊ້າໄດ້ ຖ້າຫາກການປະສານງານບໍ່ດີ ລະຫວ່າງໜ່ວຍງານຕ່າງໆ/ບັນດາປະເທດຕ່າງໆ. ຂະບວນການສົ່ງຕໍ່ທີ່ບໍ່ມີຄວາມແນ່ນອນ ສາມາດສ້າງຄວາມກົດດັນ ແລະ ຄວາມກັງວົນໃຫ້ແກ່ຜູ້ຖືກເຄາະຮ້າຍ. ຂາດການຄຳນຶງເຖິງຄວາມອ່ອນໄຫວຕໍ່ກັບຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍໃນໄລຍະຂະບວນການ ອາດກີດກັ້ນຜູ້ຖືກເຄາະຮ້າຍອອກຈາກຄວາມຕ້ອງການໃນການໄດ້ຮັບການຊ່ວຍເຫຼືອ ຫຼື ທີ່ຮ້າຍແຮງໄປກວ່ານັ້ນ, ປ່ອຍປະໃຫ້ເຂົາເຈົ້າຖືກເປີດເຜີຍ ແລະ ມີຄວາມສ່ຽງ.



ຮູບພາບໂດຍ ສະຖາບັນໂລກມະເຮັງແຫ່ງຊາດ ຈາກອັນສູເປສ

# ຄຳແນະນຳການບໍ່ເຮັດໄພອັນຕະລາຍ

ສົ່ງຕໍ່ຜູ້ຖືກເຄາະຮ້າຍທີ່ຖືກກຳນົດຕົວ ໄປຫາຜູ້ໃຫ້ບໍລິການທີ່ຢູ່ໃກ້ຄຽງ ໂດຍທັນທີ

ບຸກຄົນທີ່ສະແດງສັນຍານຄວາມຮຸນແຮງດ້ານຮ່າງກາຍ ຫຼື ການລ່ວງລະເມີດ ຫຼື ການຂູດຮີດທາງເພດ ຕ້ອງຖືກສົ່ງຕໍ່ທັນທີ ໄປຫາສະຖານທີ່ປິ່ນປົວ ໂດຍບໍ່ກ່ຽວກັບສະຖານະພາບຂອງຜູ້ຖືກເຄາະຮ້າຍ.

ເມື່ອເວລາມີການສົ່ງຕໍ່, ຄຳນຶງ ແລະ ລະມັດລະວັງກ່ຽວກັບການຈຳແນກທີ່ເປັນໂຄງສ້າງ ແລະ ເປັນລະບົບ ທີ່ມີອັກຄະຕິຕໍ່ກັບຄົນພິການ, ຜູ້ບໍລິການທາງເພດ, ກຸ່ມຊົນເຜົ່າ ແລະ ກຸ່ມສ່ຽງອື່ນໆ.

ຮັກສາ ແລະ ອັບເດດລາຍຊື່ຜູ້ສະໜອງການບໍລິການ  ແລະ ຂໍ້ມູນຕິດຕໍ່ ເບີໂທລະສັບຂອງເຂົາເຈົ້າ.

ເນັ້ນເຂົ້າເຖິງອົງການ NGO ຂັ້ນທ້ອງຖິ່ນ ແລະ ເຄືອຂ່າຍຊຸມຊົນ (ລວມທັງ ຄວາມເຊື່ອທີ່ເປັນພື້ນຖານ) ເພື່ອຮັບປະກັນການບໍລິການ ແລະ ການສະໜັບສະໜູນທີ່ມີຢູ່ຢ່າງກວ້າງຂວາງແກ່ຜູ້ຖືກເຄາະຮ້າຍ ໂດຍສະເພາະພື້ນທີ່ຫ່າງໄກສອກຫຼີກ.

ກວດສອບເບິ່ງວ່າຜູ້ຖືກເຄາະຮ້າຍ ໄດ້ຮັບການປະເມີນຢ່າງເໝາະສົມ ໂດຍຜູ້ຊ່ຽວຊານ (ແພດ, ນັກຈິດຕະວິທະຍາ ແລະ ນັກສັງຄົມສົງເຄາະ) ເພື່ອການບໍລິການ ແລະ ການຊ່ວຍເຫຼືອທີ່ຈຳເປັນ ທີ່ທ່ານຈະແນະນຳ.

ແຈ້ງຜູ້ຖືກເຄາະຮ້າຍ ຕໍ່ກັບທາງເລືອກດ້ານການບໍລິການ ແລະ ການຊ່ວຍເຫຼືອຕ່າງໆທີ່ມີຢູ່, ລວມທັງ ຂັ້ນຕອນທີ່ຈະໄດ້ຮັບການບໍລິການ ແລະ ການຊ່ວຍເຫຼືອ ແລະ ເວລາລໍຖ້າ. ສະໜອງລາຍລະອຽດກ່ຽວກັບຜົນປະໂຫຍດ ແລະ ຄວາມສ່ຽງຢ່າງກົງໄປກົງມາ. ຈື່ຈຳໄວ້ວ່າ ຄວາມຮູ້ແມ່ນພະລັງ, ຍິ່ງພວກເຮົາສາມາດກະກຽມຜູ້ຖືກເຄາະຮ້າຍ ແລະ ຜູ້ເບິ່ງແຍງເຂົາເຈົ້າ (ໃນກໍລະນີຂອງເດັກ) ສຳລັບການໃຫ້ການບໍລິການ ແລະ/ຫຼື ການຊ່ວຍເຫຼືອ ກໍຍິ່ງເປັນການດີ. ໃຫ້ເຂົາເຈົ້າຄິດເອງວ່າ ການສະໜັບສະໜູນອັນໃດທີ່ເຂົາເຈົ້າຕ້ອງການໄດ້ຮັບ, ຖ້າມີ.

ເສັ້ນທາງການສົ່ງຕໍ່ ຕ້ອງສະເພາະເຈາະຈົງທີ່ສຸດ ແລະ ອັບເດດຕະຫຼອດເວລາ.

ຄວນເຄົາລົບການຮັກສາຄວາມລັບ ແລະ ຄວນໄດ້ຮັບຄວາມຍິນຍອມ ແລະ ການຍອມຮັບຈາກຜູ້ຖືກເຄາະຮ້າຍ ແລະ ຜູ້ເບິ່ງແຍງເຂົາເຈົ້າ (ໃນກໍລະນີຂອງເດັກ) ສຳລັບການສົ່ງຕໍ່. ຍຶດໝັ້ນຕໍ່ກັບຫຼັກການຄວາມປອດໄພ ແລະ ການຮັກສາຄວາມລັບໃນເວລາທີ່ສື່ສານກັບຜູ້ສະໜອງການບໍລິການ. ຕ້ອງເອົາໃຈໃສ່ເປັນພິເສດ, ເມື່ອມີການແບ່ງປັນຂໍ້ມູນ ຂອງຜູ້ຖືກເຄາະຮ້າຍ ແລະ ບຸກຄົນທີ່ສາມ ນອກເໜືອຈາກເຄືອຂ່າຍອົງກອນຂອງທ່ານ, ຕົວຢ່າງ, ສະຖານທູດ, ພະນັກງານສາທາລະນະສຸກ, ໂບດ ແລະ ອື່ນໆ. ຍຶດໝັ້ນຕໍ່ກັບ 'ຈຳເປັນຕ້ອງຮູ້' ຢ່າງເຂັ້ມງວດ ລະຫວ່າງບຸກຄົນທີ່ກ່ຽວຂ້ອງໂດຍກົງຕໍ່ກັບຄະດີ.

ຈັດລຳດັບຄວາມສຳຄັນ ແລະ ການບໍລິການການສົ່ງຕໍ່ ຜູ້ຖືກເຄາະຮ້າຍທີ່ເປັນເດັກ ແລະ ບຸກຄົນທີ່ຕ້ອງການ ການຊ່ວຍເຫຼືອຢ່າງຮີບດ່ວນ/ສຳຄັນ.

ສຳລັບຜູ້ຖືກເຄາະຮ້າຍ ທີ່ອາດຈະມີປະສົບການ ຖືກໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ທາງເພດ, ຮັບປະກັນວ່າມີທາງເລືອກໃນການສົ່ງຕໍ່ພວກເຂົາໄປຫາການບໍລິການທີ່ຮອບດ້ານ. ແລະ ສຳລັບແມ່ຍິງ ແລະ ເດັກ ທີ່ຈະສົ່ງຕໍ່ ໄປຫາຜູ້ໃຫ້ບໍລິການທີ່ມີຄວາມຊ່ຽວຊານກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ (VAW).

ແຈ້ງໃຫ້ຜູ້ຖືກເຄາະຮ້າຍຊາບກ່ຽວກັບຄວາມຄືບໜ້າ ເຖິງວ່າທ່ານຈະບໍ່ມີຄຳຕອບທັງໝົດ. ສິ່ງນີ້ຈະປູກຝັງຄວາມເຊື່ອໝັ້ນຂອງຜູ້ຖືກເຄາະຮ້າຍ ຕໍ່ກັບຂະບວນການການສົ່ງຕໍ່.

ຕິດຕາມການສົ່ງຕໍ່ ທັງຜູ້ສະໜອງການບໍລິການ ແລະ ຜູ້ຖືກເຄາະຮ້າຍ ແລະ ພໍ່ແມ່/ຜູ້ເບິ່ງແຍງເຂົາເຈົ້າ (ໃນກໍລະນີເດັກ) ເພື່ອຮັບປະກັນວ່າ ການບໍລິການ ແລະ/ຫຼື ການຊ່ວຍເຫຼືອທີ່ຈັດໃຫ້ນັ້ນ ມີຄວາມເໝາະສົມ.

**ຮັກສາຂໍ້ມູນສ່ວນບຸກຄົນ ແລະ ຂໍ້ມູນການຄ້າມະນຸດໃຫ້ເປັນຄວາມລັບ ແລະ ມີຄວາມປອດໄພ:**

- ເຈົ້າໜ້າທີ່ຄວນແຈ້ງຜູ້ຖືກເຄາະຮ້າຍກ່ຽວກັບຈຸດປະສົງຂອງການເກັບກຳຂໍ້ມູນ, ການນຳໃຊ້ ແລະ ສິດທິຂອງຜູ້ຖືກເຄາະຮ້າຍ ໃນການເຂົ້າເຖິງຂໍ້ມູນຂອງເຂົາເຈົ້າ
- ຫ້າມເຜີຍແຜ່ຂໍ້ມູນຂອງຜູ້ຖືກເຄາະຮ້າຍ ໂດຍບໍ່ໄດ້ຮັບການຍິນຍອມຈາກເຂົາເຈົ້າ
- ເຈົ້າໜ້າທີ່ຄວນເຜີຍແຜ່ຂໍ້ມູນຂອງຜູ້ຖືກເຄາະຮ້າຍບົນພື້ນຖານ ຈຳເປັນຕ້ອງຮູ້ ເທົ່ານັ້ນ
- ບໍ່ຄວນມີການປຶກສາຫາລືຢ່າງບໍ່ເປັນທາງການກ່ຽວກັບຂໍ້ມູນທີ່ເປັນຄວາມລັບ ພາຍໃນອົງກອນ ແລະ ນອກອົງກອນ
- ບໍ່ຄວນປະເອກະສານ ຫຼື ແຟ້ມຄະດີ ໂດຍບໍ່ມີການເບິ່ງແຍງ-ເອົາໃຈໃສ່ ຫຼື ປະໄວ້ເທິງໂຕະ, ໜ້າໂຕະ ຫຼື ໃນບ່ອນທີ່ບຸກຄົນອື່ນສາມາດເຂົ້າເຖິງໄດ້. ຂໍ້ມູນທັງໝົດຄວນເກັບຮັກສາໄວ້ຢ່າງປອດໄພ ຕົວຢ່າງ, ດ້ວຍການເຂົ້າລະຫັດຂໍ້ມູນ, ຟາຍເອກະສານ/ແຟ້ມເອກະສານ ຖືກລັອກ, ການປ້ອງກັນດ້ວຍລະຫັດຜ່ານ.
- ຂໍ້ມູນບໍ່ຄວນຖືກເປີດເຜີຍໃນທີ່ສາທາລະນະ ບ່ອນທີ່ທ່ານສາມາດໄດ້ຍິນ ຫຼື ຜ່ານທາງໂທລະສັບກັບບຸກຄົນທີ່ບໍ່ຮູ້ຈັກຕົວຕົນ ແລະ ຂໍ້ມູນສ່ວນບຸກຄົນ.
- ໃຫ້ຄວາມຮູ້ແກ່ຜູ້ແປພາສາ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບຄວາມສຳຄັນໃນການຮັກສາຄວາມລັບ ລວມທັງ ຍຶດໝັ້ນຕໍ່ກັບພັນທະທາງດ້ານກົດໝາຍໃນການປົກປ້ອງຂໍ້ມູນ.
- ບໍ່ຄວນເປີດຂໍ້ມູນທີ່ເປັນຄວາມລັບກ່ຽວກັບຜູ້ຖືກເຄາະຮ້າຍ ແລະ ແຟ້ມຄະດີ ຕໍ່ສາທາລະນະ ຜ່ານສື່ສັງຄົມອອນລາຍ, ການອອກອາກາດ ຫຼື ສື່ສິ່ງພິມ ຫຼື ຜ່ານອຸດສາຫະກຳຮູບເງົາ.
- ແນະນຳໃຫ້ຜູ້ຖືກເຄາະຮ້າຍ ມີຄວາມລະມັດລະວັງໃນການແບ່ງປັນຂໍ້ມູນກັບບຸກຄົນອື່ນ ລວມທັງ ເປີດເຜີຍເລື່ອງລາວຂອງເຂົາເຈົ້າ, ຖິ່ນກຳເນີດ ແລະ ຂໍ້ມູນກ່ຽວກັບຄອບຄົວ ແລະ ອື່ນໆ.



# ການຟື້ນຟູ, ສະທ້ອນຄືນ ແລະ ສູນພັກເຊົາ

ຜູ້ຖືກເຄາະຮ້າຍຫຼາຍຄົນຍັງມີຄວາມບອບຊ້ຳທາງດ້ານຈິດໃຈຈາກປະສົບການຂອງເຂົາເຈົ້າ. ເຂົາເຈົ້າອາດຈະມີປະສົບການກັບຄວາມຮູ້ສຶກຕ່າງໆເຊັ່ນ: ຄວາມຢ້ານກົວ, ວິຕົກກັງວົນ, ອັບອາຍ, ສິ້ນຫວັງ, ສັບສົນ ແລະ ຊຶມເສົ້າ. ສ່ວນໃຫຍ່ເຂົາເຈົ້າປະເຊີນກັບການລ່ວງລະເມີດດ້ານຮ່າງກາຍ ແລະ ຈິດໃຈ ເຊິ່ງຕ້ອງໃຊ້ເວລາໃນການຮັກສາ. ບາງຄົນອາດຈະມີອາການທາງດ້ານສຸຂະພາບທີ່ຊໍາເຮື້ອ ແລະ ສຸຂະພາບຈິດ ທີ່ເປັນຜົນມາຈາກການຖືກຂູດຮີດເປັນເວລາດົນນານ.

ໄລຍະເວລາການຟື້ນຟູ ແລະ ສະທ້ອນຄືນ ເຮັດໃຫ້ຜູ້ຖືກເຄາະຮ້າຍມີເວລາໃນການຟື້ນຟູຈາກປະສົບການຂອງເຂົາເຈົ້າ. ເຊິ່ງຊ່ວຍໃຫ້ເຂົາເຈົ້າໄດ້ເລີ່ມຟື້ນຟູຄືນດ້ານຮ່າງກາຍ, ຈິດຕະວິທະຍາ ແລະ ຈິດໃຈ ແລະ ສະຫວັດດີພາບທາງສັງຄົມ. ສູນພັກເຊົາ ຫຼື ທີ່ພັກອາໄສຊົ່ວຄາວ ຈັດໃຫ້ມີສະພາບແວດລ້ອມທີ່ປອດໄພ ແລະ ໝັ້ນໃຈ ແກ່ຜູ້ຖືກຄ້າມະນຸດ ເພື່ອໃຫ້ເຂົ້າເຖິງການບໍລິການທີ່ຈໍາເປັນ ເພື່ອຟື້ນຟູຄືນ ແລະ ຊ່ວຍເຫຼືອໃນຂະບວນການທາງດ້ານກົດໝາຍໃດໜຶ່ງ. ໃນໄລຍະນີ້, ຜູ້ຖືກເຄາະຮ້າຍ ສາມາດປະມວນຜົນຕໍ່ກັບຂໍ້ມູນທັງໝົດ ແລະ ທາງເລືອກທີ່ມີຢູ່ ໄດ້ຢ່າງເໝາະສົມ.



ມາດຕາ 14(10) ຂອງສົນທິສັນຍາ ACTIP ຮຽກຮ້ອງໃຫ້ມີການຈັດຫາທີ່ພັກເຊົາ, ການໃຫ້ຄໍາປຶກສາ ແລະ ຂໍ້ມູນ, ແລະ ການແພດ, ຈິດຕະວິທະຍາ ແລະ ອຸປະກອນການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍຢ່າງເໝາະສົມ. ເຖິງຢ່າງໃດກໍຕາມ, ບໍ່ມີຂໍ້ກໍານົດໃນ ສົນທິສັນຍາ ACTIP ຫຼື ອະນຸສັນຍາ Palermo - ກ່ຽວກັບຊ່ວງເວລາການຟື້ນຟູ ແລະ ສະທ້ອນຄືນ.

ສົນທິສັນຍາ ACTIP ຍັງໄດ້ກ່າວວ່າ ລັດສະມາຊິກ ຄວນພິຈາລະນາຮັບຮອງເອົາມາດຕະການທີ່ອະນຸຍາດໃຫ້ຜູ້ຖືກເຄາະຮ້າຍ ອາໄສຢູ່ພາຍໃນປະເທດ, ບໍ່ວ່າຈະອາໄສຢູ່ແບບຊົ່ວຄາວ ຫຼື ຖາວອນ. ປັດໄຈດ້ານມະນຸດສະທໍາ ແລະ ຄວາມເຫັນອົກເຫັນໃຈ ໄດ້ລະບຸໄວ້ຢ່າງຊັດເຈນວ່າເປັນປັດໄຈທີ່ຄວນໄດ້ຮັບການພິຈາລະນາ.

ນອກນັ້ນ, ປະເທດໃນອາຊຽນສ່ວນໃຫຍ່ ເປັນສະມາຊິກຂອງຂະບວນການບາຫຼີ ເຊິ່ງໄດ້ແນະນໍາໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ມີຊ່ວງເວລາໃນການສະທ້ອນຄືນ ແລະ ໄດ້ຮັບການສະໜັບສະໜູນທີ່ກ່ຽວຂ້ອງ, ໂດຍມີຊ່ວງເວລາສະທ້ອນຄືນແຕ່ 30 ວັນ ຫາ 90 ວັນ.[64]

ໄພອັນຕະລາຍຕໍ່ໄປນີ້ ໄດ້ຖືກກໍານົດວ່າເປັນເລື່ອງປົກກະຕິ ໃນຊ່ວງເວລາຟື້ນຟູ ແລະ ສະທ້ອນຄືນ ແລະ ຂະບວນການສະໜອງສູນພັກເຊົາພາຍໃນອາຊຽນ. ໃນຖານະທີ່ເປັນຜູ້ຕອບໂຕ້ທໍາອິດ ຫຼື ຜູ້ສະໜັບສະໜູນ, ມັນເປັນສິ່ງທີ່ສໍາຄັນສໍາລັບທ່ານ ໃນການຮັບຮູ້ເຖິງໄພອັນຕະລາຍທີ່ອາດຈະເກີດຂຶ້ນນີ້ ແລະ ພິຈາລະນາ ຄໍາແນະນໍາບໍ່ເຮັດໄພອັນຕະລາຍ ເພື່ອເປັນແນວທາງໃນການປ້ອງກັນ ຫຼື ຫຼຸດຜ່ອນໄພອັນຕະລາຍເຫຼົ່ານີ້.

64 ຂະບວນການບາຫຼີ (2015). *ຄໍາແນະນໍາດ້ານນະໂຍບາຍ ໃນການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ຄູ່ມືແນະນໍາສໍາລັບຜູ້ສ້າງນະໂຍບາຍ ແລະ ຜູ້ປະຕິບັດຕົວຈິງ*. ບາງກອກ, ຫ້ອງການສະໜັບສະໜູນປະຈໍາພາກພື້ນຂອງຂະບວນການບາຫຼີ.

# 1. ບໍ່ມີຊ່ວງເວລາສະທ້ອນຄືນ ເພື່ອຕັດສິນໃຈຕໍ່ກັບທາງເລືອກ

ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ມີຄວາມກະຕືລືລົ້ນໃນການສໍາພາດຜູ້ຖືກເຄາະຮ້າຍໄວເທົ່າທີ່ເປັນໄປໄດ້ ແລະ ມີຫຼັກຖານຢ່າງພຽງພໍ ເພື່ອຈັບຕົວ ແລະ/ຫຼື ດໍາເນີນຄະດີຕໍ່ຜູ້ກະທໍາຜິດ. ພວກເຂົາເຊື່ອວ່າ ການເກັບກໍາລາຍລະອຽດທີ່ສໍາຄັນຂອງການຄ້າມະນຸດຂອງຜູ້ຖືກເຄາະຮ້າຍຈະຫຼຸດລົງເມື່ອເວລາຜ່ານໄປ. ໃນລະຫວ່າງນີ້, ຫຼັກຖານອາດຈະຖືກທໍາລາຍ ຫຼື ຜູ້ກະທໍາຜິດອາດຈະມີເວລາໃນການຫຼົບໜີ. ນອກນັ້ນ ຜູ້ຖືກເຄາະຮ້າຍອາດຈະຖືກກົດດັນ ຫຼື ຖືກບັງຄັບຢູ່ເລື້ອຍໆ ເພື່ອໃຫ້ການຮ່ວມມືກັບຕໍາຫຼວດ ຫຼື ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການ ເພື່ອໃຫ້ຂໍ້ມູນໂດຍລະອຽດ ໃນຊ່ວງໄລຍະເວລາອັນສັ້ນ. ເຂົາເຈົ້າອາດຈະບໍ່ມີເວລາໃນການປະມວນຜົນຕໍ່ກັບສິ່ງທີ່ເກີດຂຶ້ນ ລວມທັງ ການຕັດສິນໃຈໂດຍມີຂໍ້ມູນຄົບຖ້ວນ ວ່າເຂົາເຈົ້າຕ້ອງການທີ່ຈະເຂົ້າຮ່ວມການສໍາພາດ ຫຼື ຂັ້ນຕອນ ຫຼື ເພື່ອໄດ້ຮັບການຊ່ວຍເຫຼືອ ຫຼື ບໍ່.



ຮູບພາບໂດຍ ກະລິອ ຈາກໄອສະຕອກໂຟໂຕ

# ຄໍາແນະນໍາການບໍ່ເຮັດໄພອັນຕະລາຍ

ຜູ້ຖືກເຄາະຮ້າຍບາງຄົນອາດຈະບໍ່ຮູ້ວ່າຕົນເອງຖືກຂູດຮີດ. ສິ່ງນີ້ເປັນເລື່ອງປົກກະຕິໃນຜູ້ຖືກເຄາະຮ້າຍທີ່ເປັນເດັກ. ອະທິບາຍວ່າການຄ້າມະນຸດແມ່ນຫຍັງ ໃນຄໍາສັບທີ່ເຂົ້າໃຈງ່າຍແກ່ຜູ້ຖືກເຄາະຮ້າຍ. ຈື່ໄວ້ວ່າຜູ້ຖືກເຄາະຮ້າຍທີ່ຖືກຄວບຄຸມ ຫຼື ເບິ່ງແຍງໂດຍຜູ້ກະທໍາຜິດເປັນເວລາດົນນານນັ້ນ ອາດຈະຍາກທີ່ຈະເຂົ້າໃຈຢ່າງເຕັມສ່ວນຕໍ່ກັບສິ່ງທີ່ເກີດຂຶ້ນ. ເຂົາເຈົ້າອາດຈະມີຄວາມຫຍຸ້ງຍາກໃນການຕັດສິນໃຈ ຫຼື ຮັບຮູ້ໄດ້ວ່າ ເຂົາເຈົ້າສາມາດຕັດສິນໃຈໄດ້ວ່າອັນໃດຈະເກີດຂຶ້ນໃນບາດກ້າວຕໍ່ໄປ.

ໃຫ້ການຊ່ວຍເຫຼືອດ້ານການແພດ, ກົດໝາຍ ແລະ ການຊ່ວຍເຫຼືອດ້ານອື່ນໆ ເຊັ່ນ ດ້ານສັງຄົມ ຫຼື ດ້ານຈິດໃຈ, ຖ້າຈໍາເປັນແກ່ຜູ້ຖືກເຄາະຮ້າຍ ໄວທີ່ສຸດເທົ່າທີ່ຈະໄວໄດ້.

ເວລາໃນການຟື້ນຟູ ແລະ ສະທ້ອນຄືນຂອງຜູ້ຖືກເຄາະຮ້າຍແຕ່ລະຄົນ ແຕກຕ່າງກັນ. ໃຫ້ມີຄວາມຍືດຍຸ່ນ ແລະ ປັບເວລາທີ່ຕ້ອງການ ອີງຕາມສະຖານະການສະເພາະຂອງແຕ່ລະບຸກຄົນ.

### ການປະຕິບັດທີ່ເປັນຕົວແບບທີ່ດີ:[65]

ກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ ຂອງປະເທດໄທກໍານົດວ່າ ເຈົ້າໜ້າທີ່ກ່ຽວຂ້ອງ ອາດຈະກັກຂັງຜູ້ຖືກເຄາະຮ້າຍທີ່ສົມມຸດຕິຖານ ໄວ້ຊົ່ວຄາວເປັນເວລາ 24 ຊົ່ວໂມງ ຫລື ບໍ່ເກີນ 7 ວັນ ໂດຍໄດ້ຮັບການອະນຸຍາດຈາກສານ. ໃນໄລຍະນີ້, ຕ້ອງສໍາເລັດການກໍານົດຜູ້ຖືກເຄາະຮ້າຍ. ໂດຍຮັບຮູ້ວ່າ, ນີ້ບໍ່ແມ່ນເວລາທີ່ພຽງພໍສໍາລັບຜູ້ຖືກເຄາະຮ້າຍໃນການຟື້ນຟູ ແລະ ສໍາລັບເຈົ້າ ໜ້າໃນການດໍາເນີນການກໍານົດຕົວຜູ້ຖືກເຄາະຮ້າຍຢ່າງເໝາະສົມ ແລະ ຖືກຕ້ອງ, ປະເທດໄທໄດ້ຮັບຮອງກົນໄກການສົ່ງຕໍ່ແຫ່ງຊາດໃນວັນທີ 8 ເດືອນເມສາປີ 2022 ອະນຸຍາດໃຫ້ໄລຍະເວລາ 15 ວັນ ໃນການສະທ້ອນຄືນສໍາລັບຜູ້ຖືກເຄາະຮ້າຍທີ່ຖືກສົມມຸດຕິຖານ. ກ່ອນໜ້ານີ້, ໄລຍະສະທ້ອນຄືນໄດ້ຖືກນໍາໃຊ້ໃນສະເພາະແຕ່ລະກໍລະນີ ໂດຍສະເພາະແມ່ນຜູ້ຖືກເຄາະຮ້າຍທີ່ເປັນຄົນໄທ; ຕົວຢ່າງ, ໃນກໍລະນີໜຶ່ງ, ແມ່ຍິງຄົນໄທທີ່ຖືພາກັບມາຈາກຕ່າງປະເທດ ແມ່ນໄດ້ໃຫ້ເວລາໃນການເກີດຂອງລູກ ແລະ ຟື້ນຟູສຸຂະພາບຈົນກວ່າລາວຈະມີຄວາມພ້ອມໃນການເຂົ້າຮ່ວມຂະບວນການທາງກົດໝາຍ.

### ການປະຕິບັດທີ່ເປັນຕົວແບບທີ່ດີ:[66]

ປະເທດຟີລິບປິນ ມີໄລຍະເວລາໃນການພິຈາລະນາ/ສອບສວນຄະດີທັງໝົດ 36 ຊົ່ວໂມງ, ເຊິ່ງເປັນການສືບສວນ-ສອບສວນ ແລະ ສະຫຼຸບຢ່າງບໍ່ເປັນທາງການ ໂດຍພະນັກງານໄອຍະການໃນຄະດີອາຍາ. ເຈົ້າໜ້າທີ່ຮັບຮູ້ວ່າຊ່ວງເວລາອັນສັ້ນນີ້ ສ້າງພາລະອັນໜັກໃຫ້ແກ່ຜູ້ຖືກເຄາະຮ້າຍ ຊຶ່ງອາດຈະບໍ່ພ້ອມທີ່ຈະເປີດເຜີຍຂໍ້ມູນ. ລັດຖະບານ ໄດ້ຫຼຸດຜ່ອນສິ່ງດັ່ງກ່າວນີ້ ດ້ວຍການອະນຸຍາດໃຫ້ມີການບັນທຶກການສໍາພາດໃນເວລາສືບສວນ-ສອບສວນ. ສິ່ງດັ່ງກ່າວນີ້ເປັນສ່ວນໜຶ່ງຂອງວິທີການທີ່ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ.

65 ກອງປະຊຸມປຶກສາຫາລືລະດັບຊາດ ຂອງປະເທດໄທ, ວັນທີ 18 ຕຸລາ 2021

66 ກອງປະຊຸມປຶກສາຫາລືລະດັບຊາດ ຂອງປະເທດຟີລິບປິນ, ວັນທີ 19 ຕຸລາ 2021

# 2. ຂາດການເຂົ້າເຖິງສູນພັກເຊົາ ຫຼື ທີ່ພັກອາໄສຊົ່ວຄາວ

ຫຼາຍປະເທດໃນອາຊຽນ ສະຖານທີ່ພັກເຊົາ ຍັງສືບຕໍ່ເປັນບູລິມະສິດໃຫ້ແກ່ຜູ້ຖືກເຄາະຮ້າຍເພດຍິງ ແລະ ເດັກຍິງ. ການເຂົ້າເຖິງສູນພັກເຊົາ ແລະ ທີ່ພັກເຊົາທີ່ເໝາະສົມ ເປັນສິ່ງທ້າທາຍອັນສຳຄັນໃຫ້ແກ່ຜູ້ຖືກເຄາະຮ້າຍເພດຊາຍ ແລະ ເດັກຊາຍ, ເດັກທີ່ມີຂໍ້ຂັດແຍ່ງທາງກົດໝາຍ, ຜູ້ທີ່ຕ້ອງການພິເສດ ເຊັ່ນ ຄົນພິການ ແລະ ຄົນຕ່າງປະເທດ.

ກໍລະນີທີ່ບໍ່ມີສູນພັກເຊົາ, ເຈົ້າໜ້າທີ່ບາງບ່ອນ ໄດ້ເອົາຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄວ້ໃນສະຖານທີ່ກັກຂັງ. ສິ່ງດັ່ງກ່າວນີ້ສິ່ງຜົນເຮັດໃຫ້ມີໄພອັນຕະລາຍເກີດຂຶ້ນໄດ້, ຫຼຸດເສລີພາບໃນການເຄື່ອນຍ້າຍ ແລະ ສືບຕໍ່ສູນເສຍການຄວບຄຸມ ແລະ ໜ່ວຍງານ ທີ່ຜູ້ຖືກເຄາະຮ້າຍໄດ້ປະສົບພົບພໍ້ໃນການຖືກຄ້າມະນຸດ.

## ຄຳແນະນຳການບໍ່ເຮັດໄພອັນຕະລາຍ

ສົ່ງຕໍ່ບຸກຄົນທີ່ຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍ ໄປສູນພັກເຊົາ ຫຼື ສະຖານທີ່ພັກເຊົາຊົ່ວຄາວທີ່ປອດໄພ ແລະ ມີຄວາມ ໝັ້ນໃຈໂດຍທັນທີ. ເຂົາເຈົ້າຄວນຈະຖືກສົ່ງຕໍ່ ໄປຍັງໜ່ວຍງານທີ່ຮັບຜິດຊອບໂດຍໄວ ເພື່ອໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນສະເພາະດ້ານ.

ສູນພັກເຊົາ ຫຼື ທີ່ພັກເຊົາທີ່ແນະນຳ ຄວນມີຄວາມເໝາະສົມ ສຳລັບຜູ້ຖືກເຄາະຮ້າຍ ໂດຍຄຳນຶງເຖິງປະຫວັດຄວາມເປັນມາ, ປະສົບການ ແລະ ວັດທະນະທຳຂອງເຂົາເຈົ້າ. ພິຈາລະນາປະເດັນທີ່ແຕກຕ່າງກັນເຊັ່ນ ອາຍຸ, ເພດ, ສັນຊາດ, ຊົນເຜົ່າ, ສາສະໜາ ແລະ ລົດສະນິຍົມທາງເພດ ແລະ ອື່ນໆ.

ແມ່ຍິງຖືພາ ແລະ ພະຍາບານ ແລະ ແມ່ທີ່ມາພ້ອມກັບເດັກໜຸ່ມ ຄວນຈະຢູ່ໃນສະຖານທີ່ພັກທີ່ແຍກຕ່າງຫາກ ແລະ ມີຄວາມເໝາະສົມ.

ປະສານງານກັບອົງການ NGO ຫຼື ກຸ່ມຄົນຕາມຄວາມເຊື່ອ ແລະ ສັດທາ ເພື່ອກະກຽມສະຖານທີ່ພັກເຊົາທີ່ເໝາະສົມສຳລັບຜູ້ຊາຍ ແລະ ເດັກຊາຍ, ຄົນພິການ, ຜູ້ທີ່ມີຄວາມຕ້ອງການພິເສດ ແລະ ຄົນຕ່າງປະເທດ. ຖ້າຫາກລັດບໍ່ມີສູນພັກເຊົາ ຫຼື ສະຖານທີ່ພັກເຊົາ.

ໃນກໍລະນີທີ່ເປັນໄປໄດ້, ຈັດໃຫ້ຜູ້ຖືກເຄາະຮ້າຍມີທາງເລືອກ ເພື່ອໄດ້ຮັບການເບິ່ງແຍງ ນອກລະບົບສູນພັກເຊົາທີ່ເປັນທາງການ. ສິ່ງນີ້ອາດຈະເປັນທີ່ພັກເຊົາທີ່ປອດໄພ ແລະ ເໝາະສົມ ລວມມີ ການເຊົ່າເຮືອນ ຫຼື ອາພາດເມັ້ນ ຫຼື ເຮືອນພັກເຊົາທີ່ອີງໃສ່ຊຸມຊົນເປັນພື້ນຖານ.[67]

ຖ້າຜູ້ຖືກເຄາະຮ້າຍ ຢູ່ໃນສະຖານທີ່ກັກຂັງ, ຮັບປະກັນວ່າ ຢູ່ໃນຊ່ວງເວລາສັ້ນທີ່ສຸດເທົ່າທີ່ເປັນໄປໄດ້ ແລະ ໃນລະຫວ່າງນີ້ ຈັດຫາທາງເລືອກທີ່ພັກອາໄສ..

---

67 ແມັກອາດຳ, M (2020). ເສລີພາບໃນການເຄື່ອນຍ້າຍສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ນະໂຍບາຍ, ກົດໝາຍ ແລະ ພາກປະຕິບັດຕົວຈິງໃນພາກພື້ນອາຊຽນ. ການບັນທຶກຂໍ້ມູນ ໄດ້ຮັບການສະໜັບສະໜູນໂດຍລັດຖະບານອົດສະຕຣາລີ. ບາງກອກ: ແຜນງານ ASEAN-ACT

ມາດຕາ 1(20) ຂອງສົນທິສັນຍາ ACTIP ກຳນົດໃຫ້ລັດຖະບານອາຊຽນ ນຳໃຊ້ມາດຕະການໃນສົນທິສັນຍາ ວ່າດ້ວຍພື້ນຖານການບໍ່ຈຳແນກ. **ຄູ່ມື ແລະ ຂັ້ນຕອນລະດັບພາກພື້ນອາຊຽນ** ໄດ້ແນະນຳລັດຖະບານຂອງອາຊຽນ ຈັດຫາ "ການປົກປ້ອງ ແລະ ການສະໜັບສະໜູນຈາກໄພອັນຕະລາຍເພີ່ມເຕີມ ໃຫ້ແກ່ຜູ້ຖືກເຄາະຮ້າຍ ໂດຍບໍ່ມີການຈຳແນກ ບົນພື້ນຖານເຊື້ອຊາດ, ເພດ, ຊາດກຳເນີດ ຫຼື ຂໍ້ຫ້າມອື່ນໆ  ແລະ ໂດຍຄຳນຶງເຖິງຄວາມຕ້ອງການພິເສດ ທີ່ພິຈາລະນາຈາກອາຍຸ, ເພດ, ຊົນເຜົ່າ ແລະ ຄວາມພິການ". **ຄູ່ມືອາຊຽນທີ່ຄຳນຶງເຖິງບົດບາດຍິງ-ຊາຍ** ໄດ້ກຳນົດວ່າ *ບໍ່ຄວນມີການຈຳແນກ ໃນການສົ່ງຕໍ່ຜູ້ຖືກເຄາະຮ້າຍ ເພື່ອການຊ່ວຍເຫຼືອ ຫຼື ການບໍລິການ.*[68]

**ຄູ່ມືອາຊຽນທີ່ຄຳນຶງເຖິງບົດບາດຍິງ-ຊາຍ** ຮັບຮູ້ເຖິງຄວາມກັງວົນ ແລະ ຄວາມຕ້ອງການສະເພາະຂອງແມ່ຍິງ ແລະ ເດັກຍິງ, ເຊິ່ງກຳນົດໄວ້ວ່າ "*ພາກສ່ວນທີ່ກ່ຽວຂ້ອງຄວນກຳນົດເພດຂອງຜູ້ຖືກເຄາະຮ້າຍ ເພື່ອໃຫ້ໄດ້ຮັບການສະໜັບສະໜູນ ແລະ ການບໍລິການຢ່າງເໝາະສົມ ເຊັ່ນ: ການເບິ່ງແຍງດ້ານສຸຂະພາບ, ການສຳພາດ ແລະ ທີ່ພັກເຊົາທີ່ປອດໄພ ແລະ ອື່ນໆ.*"[69] ທີ່ກວ້າງກວ່ານັ້ນ ມັນເປັນການສົ່ງເສີມພັດທະນາຄູ່ມືຮ່ວມກັນ ແລະ ມາດຕະການທີ່ຄຳນຶງເຖິງບົດບາດຍິງ-ຊາຍ ໃນການຈັດການກັບຜູ້ຖືກເຄາະຮ້າຍທີ່ເປັນເພດຍິງໃນອາຊີຕາເວັນອອກສຽງໃຕ້. ຄວາມຕ້ອງການໃນການປົກປ້ອງ ແລະ ການຟື້ນຟູຂອງຜູ້ຖືກເຄາະຮ້າຍຜູ້ຊາຍ ແລະ ເດັກຊາຍໃນພາກພື້ນ ສ່ວນໃຫຍ່ບໍ່ໄດ້ຮັບການແກ້ໄຂ ແລະ ການບໍລິການສຳລັບກຸ່ມນີ້ຍັງຈຳກັດ. ຄວາມຕ້ອງການ ວິທີການທີ່ຄຳນຶງເຖິງບົດບາດຍິງ-ຊາຍ ເພື່ອພິຈາລະນາຮູບແບບປະສົບການຂອງການຂູດຮີດ ແລະ ລ່ວງລະເມີດທີ່ແຕກຕ່າງກັນຂອງຜູ້ຖືກເຄາະຮ້າຍຜູ້ຍິງ ແລະ ຜູ້ຊາຍ ແລະ ການຕອບໂຕ້ຕໍ່ກັບຄວາມຕ້ອງການສະເພາະຂອງແຕ່ລະກຸ່ມ.

68 ເບິ່ງວັກທີ 3.4.5.

69 ເບິ່ງວັກທີ 2.7.2.

# 3. ສູນພັກເຊົາ ແລະ ການຊ່ວຍເຫຼືອອື່ນໆ ແມ່ນຂຶ້ນກັບການຮ່ວມມືໃນການດຳເນີນຄະດີທາງອາຍາ

ໃນຫຼາຍກໍລະນີ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງຕົກລົງທີ່ຈະມີສ່ວນຮ່ວມໃນການດຳເນີນຄະດີ ກ່ອນທີ່ຈະຖືກຮັບຮູ້ຢ່າງເປັນທາງການວ່າເປັນ 'ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ' ແລະ ໄດ້ຖືກຈັດຫາທີ່ພັກເຊົາ ແລະ ສະໜອງການຊ່ວຍເຫຼືອຮູບແບບອື່ນໆ. ຜູ້ທີ່ປະຕິເສດທີ່ຈະຮ່ວມມືກັບເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ອາດຈະຖືກປະຕິເສດທີ່ຈະໃຫ້ບ່ອນພັກທີ່ປອດໄພຈາກຜູ້ທີ່ຄ້າມະນຸດ. ຄົນຕ່າງປະເທດທີ່ເປັນຜູ້ຖືກເຄາະຮ້າຍມີຄວາມສ່ຽງພິເສດ ເນື່ອງຈາກເຂົາເຈົ້າມີແນວໂນ້ມທີ່ຈະຖືກເນລະເທດ, ຈຳຄຸກ ຫຼື ສົ່ງກັບຄືນບ່ອນທີ່ຖືກຂູດຮີດ.

## ຄຳແນະນຳການບໍ່ເຮັດໄພອັນຕະລາຍ

ບໍ່ເຊື່ອມໂຍງການອາໄສຢູ່ທີ່ສູນພັກເຊົາ ຍ້ອນຜູ້ຖືກເຄາະຮ້າຍມີຈຸດປະສົງເຂົ້າຮ່ວມຂະບວນການຍຸຕິທຳທາງອາຍາ. ຜູ້ຖືກເຄາະຮ້າຍຄວນໄດ້ຮັບການເຂົ້າເຖິງການບໍລິການ ແລະ ສູນພັກເຊົາ ເຖິງວ່າເຂົາເຈົ້າປະຕິເສດທີ່ຈະເຂົ້າຮ່ວມໃນຂະບວນການຍຸຕິທຳທາງອາຍາ.

ຊອກຫາແນວທາງເພື່ອໃຫ້ໄດ້ຫຼັກຖານ ແລະ ຄຳໃຫ້ການຈາກຜູ້ຖືກເຄາະຮ້າຍ ໂດຍບໍ່ຈຳເປັນຕ້ອງກັກຂັງເຂົາເຈົ້າໄວ້ໃນສູນພັກເຊົາເປັນເວລາດົນນານ. ສິ່ງດັ່ງກ່າວນີ້ ອາດກ່ຽວຂ້ອງກັບການນຳໃຊ້ ຄຳໃຫ້ການກ່ອນການພິຈາລະນາຄະດີ, ການບັນທຶກວິດີຄຳໃຫ້ການ ຫຼື ການໃຫ້ການຜ່ານລິ້ງວິດີໂອ.

ແຈ້ງຜູ້ຖືກເຄາະຮ້າຍຊາບກ່ຽວກັບຄວາມຄືບໜ້າຂອງຄະດີ ທີ່ເຂົາເຈົ້າມີສ່ວນກ່ຽວຂ້ອງນຳ. ແຈ້ງໃຫ້ເຂົາເຈົ້າຊາບວ່າ ເຂົາເຈົ້າມີສິດທີ່ຈະຂໍຂໍ້ມູນໄດ້ຕະຫຼອດເວລາ.

ບຸກຄະລາກອນທັງໝົດທີ່ເຮັດວຽກໃນສູນພັກເຊົາ ຕ້ອງໄດ້ຮັບການຝຶກອົບຮົມການເຮັດວຽກຮ່ວມກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ສິ່ງນີ້ບໍ່ພຽງແຕ່ໃຊ້ກັບຜູ້ຈັດການສູນພັກເຊົາ, ນັກສັງຄົມສົງເຄາະ ແຕ່ຍັງລວມເຖິງຜູ້ຮັກສາຄວາມປອດໄພ, ແມ່ຄົວ/ພໍ່ຄົວ ແລະ ຜູ້ອະນາໄມ. ເຂົາເຈົ້າຄວນໄດ້ຮັບຂໍ້ມູນກ່ຽວກັບວິທີການປະຕິບັດກັບຜູ້ຖືກເຄາະຮ້າຍ ໂດຍຄຳນຶງເຖິງຄວາມສ່ຽງທີ່ກ່ຽວຂ້ອງກັບການເຮັດວຽກໃນສູນພັກເຊົາ.

### ສິ່ງທ້າທາຍ:[70]

ໃນອິນໂດເນເຊຍ, ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໄດ້ສະແດງຄວາມກັງວົນກ່ຽວກັບການທີ່ອະນຸຍາດໃຫ້ຜູ້ຖືກເຄາະຮ້າຍອາໄສຢູ່ໃນຊຸມຊົນເຂົາເຈົ້າແທນທີ່ຈະຢູ່ໃນສູນພັກເຊົານັ້ນ ເນື່ອງຈາກວ່າຜູ້ຖືກເຄາະຮ້າຍອາດຈະຖືກໂນ້ມນ້າວໃຫ້ຖອນຄຳຮ້ອງຟ້ອງ ຫຼື ປະເຊີນໜ້າກັບການຖືກຂົ່ມຂູ່ຈາກຜູ້ກະທຳຜິດ ຫຼື ຖືກຕຳນິຈາກພໍ່ແມ່ ແລະ ຜູ້ນຳຊຸມຊົນຕໍ່ກັບສິ່ງທີ່ເກີດຂຶ້ນ. ຜູ້ກະທຳຜິດກ່ຽວກັບການຄ້າມະນຸດ ພະຍາຍາມທີ່ຈະພົບກັບຜູ້ຖືກເຄາະຮ້າຍ ເພື່ອໂນ້ມນ້າວຕໍ່ກັບສິ່ງທີ່ເຂົາເຈົ້າເວົ້າກັບຕຳຫຼວດ. ຜູ້ຖືກເຄາະຮ້າຍບາງຄົນຍັງຕິດຕໍ່ກັບຜູ້ກະທຳຜິດ ຫຼື ບຸກຄົນທີ່ເປັນສ່ວນໜຶ່ງຂອງສະມາຄົມ ຜ່ານໂທລະສັບມືຖື, ເຖິງວ່າເຂົາເຈົ້າຈະຢູ່ໃນສູນພັກເຊົາກໍຕາມ. ຜູ້ຖືກເຄາະຮ້າຍອາດຈະເປີດເຜີຍທີ່ຕັ້ງ ສູນພັກເຊົາ ເຊິ່ງຈະສ້າງຄວາມສ່ຽງຕໍ່ກັບຄວາມປອດໄພ ບໍ່ສະເພາະແຕ່ກັບຜູ້ຖືກເຄາະຮ້າຍ ແຕ່ຍັງລວມມີພະນັກງານຂອງສູນພັກເຊົາ ແລະ ຜູ້ອາໄສອື່ນໆ. ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຍັງໄດ້ລາຍງານກ່ຽວກັບເຫດການທີ່ຜູ້ກະທຳຜິດມາທີ່ສູນພັກເຊົາ ຫຼື ທີ່ພັກອາໄສ ເພື່ອສ້າງຄວາມເດືອດຮ້ອນໃຫ້ແກ່ຜູ້ຖືກເຄາະຮ້າຍ ລວມທັງຂົ່ມຂູ່ພະນັກງານຮັກສາຄວາມປອດໄພ, ທຳຮ້າຍຮ່ າງ ແລະ ອື່ນໆ.

### ສິ່ງທ້າທາຍ:[71]

ໃນຟີລິບປິນ, ຜູ້ຄຸ້ມຄອງຄະດີ ແລະ ນັກສັງຄົມສົງເຄາະ ໄດ້ປະເຊີນກັບສິ່ງທ້າທາຍຫຼາຍອັນໃນການເບິ່ງແຍງຜູ້ຖືກເຄາະຮ້າຍທີ່ເປັນເດັກ ໃນສູນພັກເຊົາ. ຜູ້ກະທຳຜິດສ່ວນໃຫຍ່ແມ່ນມີຄວາມກ່ຽວຂ້ອງກັບເດັກ ຫຼື ໃນບາງກໍລະນີ ສະມາຊິກຄອບຄົວມີສ່ວນພົວພັນກັບອາຊະຍາກຳ. ທັງນີ້ຂຶ້ນກັບສະພາບການ ແລະ ຄວາມຕ້ອງການຂອງເດັກແຕ່ລະຄົນ, ການສື່ສານກັບຄອບຄົວຂອງເຂົາເຈົ້າ ລວມທັງ ການຢ້ຽມຢາມທີ່ສູນພັກເຊົາ ອາດຈະໄດ້ຮັບການອະນຸຍາດພາຍໃຕ້ການເບິ່ງແຍງ. ຜູ້ຄຸ້ມຄອງຄະດີ ແລະ ນັກສັງຄົມສົງເຄາະ ຕ້ອງພິຈາລະນາຈຸດດີ ແລະ ຈຸດອ່ອນຂອງແຕ່ລະການກະທຳ ເຊິ່ງມັນບໍ່ແມ່ນເລື່ອງທີ່ງ່າຍ ແລະ ການຕັດສິນໃຈເພື່ອຜົນປະໂຫຍດສູງສຸດຂອງເດັກ. ການຈຳກັດການເດີນທາງ ແລະ ການເຄື່ອນໄຫວຍ້ອນ COVID-19 ນັ້ນ ຍັງເປັນການປ້ອງກັນຜູ້ຖືກເຄາະຮ້າຍທີ່ເປັນເດັກ ໃນການອອກຈາກສູນພັກເຊົາ ແລະ ການໄປໂຮງຮຽນ. ການປ່ຽນແປງມາຮຽນທາງອອນລາຍໝາຍຄວາມວ່າພະນັກງານສູນພັກເຊົາ ຈະຕ້ອງເພີ່ມພັນທະເບິ່ງແຍງໃນການຮຽນຂອງເດັກ, ບາງຄົນກໍ່ມີຄວາມຫຍຸ້ງຍາກໃນການຮຽນ. ນອກນັ້ນ, ການດຳເນີນຄະດີທາງກົດໝາຍ ທີ່ກ່ຽວຂ້ອງກັບເດັກ ຍັງມີຄວາມຊັກຊ້າໃນໄລຍະການແຜ່ລະບາດຄັ້ງໃຫຍ່ນີ້. ອົງການ NGO ທີ່ເຮັດວຽກກັບເດັກ ໄດ້ລາຍງານວ່າ ມີພຽງແຕ່ເກົ້າໃນ 64 ຄະດີເທົ່ານັ້ນ ທີ່ເຂົາເຈົ້າສາມາດຍື່ນຕໍ່ສານ ເຊິ່ງກຳລັງດຳເນີນການຢູ່.

70 ກອງປະຊຸມລະດັບຊາດ ທີ່ປະເທດອິນໂດເນເຊຍ, ວັນທີ 21 ຕຸລາ 2021

71 ກອງປະຊຸມລະດັບຊາດ ທີ່ປະເທດຟີລິບປິນ, ວັນທີ 19 ຕຸລາ 2021

# 4. ສູນພັກເຊົາ ທີ່ຈຳກັດເສລີພາບໃນການເຄື່ອນຍ້າຍ ແລະ ການສື່ສານຂອງຜູ້ຖືກເຄາະຮ້າຍ

ຜູ້ຖືກເຄາະຮ້າຍອາດຈະຢູ່ໃນສູນພັກເຊົາແບບປິດ ທີ່ຂັດກັບຄວາມເຕັມໃຈຂອງເຂົາເຈົ້າ ເພື່ອຈຸດປະສົງຂອງການປົກປ້ອງຄວາມປອດໄພຂອງເຂົາເຈົ້າ. ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ແລະ ຜູ້ສະໜອງການບໍລິການຍັງໃຫ້ເຫດຜົນໃນການກັກຂັງໃນສູນພັກເຊົາ ວ່າເປັນສິ່ງທີ່ດີທີ່ສຸດ ຫຼື ເປັນວິທີການດຽວທີ່ຈະບັນລຸຄວາມຕ້ອງການການຊ່ວຍເຫຼືອອັນຮີບດ່ວນຂອງຜູ້ຖືກເຄາະຮ້າຍ. ໃນບາງປະເທດ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັນແຮງງານເຄື່ອນຍ້າຍ ແມ່ນໃຫ້ອາໄສຢູ່ສູນພັກເຊົາຂອງລັດຖະບານ ຫຼື ສູນພັກເຊົາທີ່ໄດ້ຮັບອະນຸຍາດ ເພື່ອຈຳກັດການເຄື່ອນຍ້າຍຂອງເຂົາເຈົ້າ. ຜູ້ຖືກເຄາະຮ້າຍຍັງຖືກກັກຂັງໃນສະຖານທີ່ພັກເຊົາແບບປິດເພື່ອໃຫ້ເຂົາເຈົ້າສາມາດເຂົ້າຮ່ວມໃນການສືບສວນ-ສອບສວນ ແລະ ການດຳເນີນຄະດີ.[72] ບາງຄົນອາດຈະຢູ່ໃນສູນຕະຫຼອດໄລຍະຂອງການດຳເນີນຄະດີອາຍາ. ສິ່ງດັ່ງກ່າວນີ້ ເຮັດໃຫ້ເຂົາເຈົ້າຢູ່ຫ່າງໄກຈາກການຫາລາຍໄດ້ ແລະ ຢູ່ກັບຄອບຄົວ.

ການຖືກບັງຄັບໃຫ້ອາໄສຢູ່ໃນບໍລິເວນສູນພັກເຊົາ ທີ່ຈຳກັດການເຄື່ອນຍ້າຍ ອາດເປັນສິ່ງທີ່ໜ້າເປັນຫ່ວງ ແລະ ສາມາດຈຳລອງດ້ານປະຫວັດ ແລະ ປະສົບການຂອງຜູ້ຖືກຄ້າມະນຸດ. ຜູ້ທີ່ອາໄສຢູ່ໃນສູນພັກເຊົາ ອາດຈະຖືກປ້ອງກັນຈາກການຕິດຕໍ່ກັບຄອບຄົວຂອງເຂົາເຈົ້າ. ສິ່ງນີ້ສາມາດສ້າງຄວາມເສົ້າໃຈອັນໃຫຍ່ຫຼວງໃຫ້ແກ່ຜູ້ຖືກເຄາະຮ້າຍໄວໜຸ່ມ ແລະ ຜູ້ໃຫຍ່ ທີ່ເປັນຫ່ວງບຸກຄົນທີ່ຂຶ້ນຢູ່ກັບເຂົາເຈົ້າເຊັ່ນ: ລູກ. ໃນບາງກໍລະນີ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຈຳເປັນຕ້ອງອາໄສຢູ່ໃນສູນພັກເຊົາເປັນເວລາຫຼາຍປີ ແລະ ບໍ່ສາມາດກັບຄືນບ້ານໄດ້.

72 ແມັກອາດຳ, M (2021). *ການສືບຕໍ່ຈ່າຍຄ່າເສລີພາບ: ການກັກຂັງຜູ້ຖືກເຄາະຮ້າຍຢ່າງຕໍ່ເນື່ອງ ຫຼັງຈາກທີ່ເຂົາເຈົ້າໄດ້ປະສົບກັບການຄ້າມະນຸດ.* ບາງກອກ: ແຜນງານ ASEAN-ACT.

# ຄຳແນະນຳການບໍ່ເຮັດໃພອັນຕະລາຍ

ຂໍຄວາມຍິນຍອມຢ່າງເປັນລາຍອັກອັກສອນຈາກຜູ້ຖືກເຄາະຮ້າຍ ເມື່ອເຂົ້າໄປສູນພັກເຊົາ; ສະໜອງຂໍ້ມູນຢ່າງເຕັມສ່ວນໃນພາສາ ແລະ ຮູບແບບທີ່ຜູ້ຖືກເຄາະຮ້າຍເຂົ້າໃຈ ກ່ຽວກັບວ່າເປັນຫຍັງເຂົາເຈົ້າຈຶ່ງຕ້ອງຢູ່ບ່ອນນັ້ນ; ຄາດວ່າເຂົາເຈົ້າຕ້ອງອາໄສຢູ່ໃນສູນພັກເຊົາດົນປານໃດ; ເງື່ອນໄຂທີ່ເຂົາເຈົ້າຈະໄດ້ອາໄສຢູ່; ການບໍລິການທີ່ມີຢູ່; ແລະ ສິດທິຂອງຜູ້ຖືກເຄາະຮ້າຍ. ມັນຍັງບໍ່ພຽງພໍທີ່ຈະໄດ້ຮັບພຽງແຕ່ລາຍເຊັນຂອງຜູ້ຖືກເຄາະຮ້າຍ, ຜູ້ຖືກເຄາະຮ້າຍຕ້ອງເຂົ້າໃຈຢ່າງເຕັມສ່ວນວ່າ ການອາໄສຢູ່ໃນສູນພັກເຊົານັ້ນ ມັນໝາຍເຖິງຫຍັງ.

ບອກຜູ້ຖືກເຄາະຮ້າຍວ່າ ເຂົາເຈົ້າອາດຈະຖອນການຍິນຍອມໄດ້ຕະຫຼອດເວລາ. ມີການກວດສອບຕະຫຼອດເວລາວ່າເຂົາເຈົ້າຕ້ອງການທີ່ຈະສືບຕໍ່ຢູ່ໃນສູນພັກເຊົາ ຫຼື ບໍ່.

ໃຊ້ເວລາໃນການອະທິບາຍລະບຽບຂອງສະຖານທີ່ພັກເຊົາ ຫຼື ສູນ ແລະ ໃຫ້ຜູ້ຖືກເຄາະຮ້າຍ ສາມາດຖາມຄຳຖາມ. ຈື່ໄວ້ວ່າຜູ້ຖືກເຄາະຮ້າຍມາຈາກວັດທະນະທຳ ແລະ ປະຫວັດຄວາມເປັນມາທີ່ແຕກຕ່າງກັນ ແລະ ລະບຽບການນີ້ອາດຈະເປັນສິ່ງໃໝ່ສຳລັບເຂົາເຈົ້າ. ອະທິບາຍເຫດຜົນຂອງລະບຽບການເຫຼົ່ານີ້ ແລະ ເປີດກວ້າງຂໍ້ຄິດເຫັນຈາກຜູ້ຖືກເຄາະຮ້າຍ ຜູ້ທີ່ອາດຈະຮູ້ສຶກວ່າລະບຽບການເຫຼົ່ານີ້ ລະເມີດສິດທິ ຄວາມເປັນສ່ວນຕົວ ແລະ ເສລີພາບຂອງເຂົາເຈົ້າ ຕະຫຼອດເຖິງຄວາມເຊື່ອ ແລະ ສາສະໜາ.

ໃຫ້ທາງເລືອກແກ່ຜູ້ຖືກເຄາະຮ້າຍອາໄສຢູ່ໃນສູນພັກເຊົາທີ່ອີງໃສ່ຊຸມຊົນເປັນພື້ນຖານ ຫຼື ສູນພັກເຊົາແບບເປີດ ຖ້າຫາກວ່າມີທາງເລືອກດັ່ງກ່າວ ທີ່ເຫັນວ່າມີຄວາມປອດໄພ ແລະ ເຊື່ອຖືໄດ້/ໄດ້ຮັບການກວດສອບໂດຍໜ່ວຍງານຂອງລັດທີ່ກ່ຽວຂ້ອງ.

ຮັບປະກັນວ່າສະພາບແວດລ້ອມມີຄວາມປອດໄພ ແລະ ມີຄວາມຜາສຸກສຳລັບຜູ້ຢູ່ອາໄສ. ສະໜອງຄວາມເປັນສ່ວນຕົວ, ບ່ອນນອນ, ບ່ອນເກັບສິ່ງຂອງ ແລະ ພື້ນທີ່ໃນພັກຜ່ອນຢ່າງພຽງພໍ ສຳລັບຈຳນວນຜູ້ພັກອາສາໄສທີ່ໄດ້ຮັບການບໍລິການ. ບໍ່ຄວນຈະກຳຈັດເສລີພາບໃນການເຄື່ອນຍ້າຍຫຼາຍເກີນໄປ ແລະ ໃຫ້ຜູ້ພັກອາໄສສາມາດຕິດຕໍ່ກັບໂລກພາຍນອກ ແລະ ສັງຄົມໄດ້ຢ່າງປອດໄພ.

ຮັບປະກັນວ່າຜູ້ຢູ່ອາໄສ ມີວິທີການລາຍງານຕໍ່ຜູ້ຈັດການສູນພັກເຊົາ ຫຼື ບຸກຄົນໃດໜຶ່ງ ທີ່ເຂົາເຈົ້າໄວ້ວາງໃຈ ຕໍ່ກັບບັນຫາກ່ຽວກັບຄວາມປອດໄພ ແລະ ສະຫວັດດີພາບຂອງເຂົາເຈົ້າ.

ຫຼີກລ້ຽງການຍຶດຊັບສິນຂອງບຸກຄົນ ລວມທັງໂທລະສັບມືຖືຂອງຜູ້ຖືກເຄາະຮ້າຍ. ບອກໃຫ້ຜູ້ຖືກເຄາະຮ້າຍປິດໂທລະສັບມືຖື ເພື່ອບໍ່ໃຫ້ຜູ້ກະທຳຜິດຕິດຕໍ່ກັບເຂົາເຈົ້າ ຫຼື ຊອກຮູ້ຕຳແໜ່ງທີ່ຕັ້ງຂອງສູນພັກເຊົາ/ສະຖານທີ່ພັກເຊົາ. ແຈ້ງຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງຜູ້ຖືກເຄາະຮ້າຍຊາບກ່ຽວກັບຄວາມສ່ຽງ ແລະ ອັນຕະລາຍ ຖ້າໃຫ້ຜູ້ກະທຳຜິດຮູ້ທີ່ຕັ້ງຂອງສູນພັກເຊົາ. ຖ້າເປັນໄປໄດ້, ເອົາຊິມໂທລະສັບໃໝ່ໃຫ້ແກ່ຜູ້ຖືກເຄາະຮ້າຍ ເພື່ອຕິດຕັ້ງໃນໂທລະສັບມືຖື. ອະນຸຍາດໃຫ້ຜູ້ຖືກເຄາະຮ້າຍຕິດຕໍ່ກັບຄອບຄົວ ຫຼື ບຸກຄົນທີ່ເຂົາເຈົ້າໄວ້ວາງໃຈເປັນປະຈຳ ພາຍໃຕ້ການເບິ່ງແຍງ ຖ້າຈຳເປັນ.

**ຄູ່ມືອາຊຽນທີ່ຄຳນຶງເຖິງບົດບາດຍິງ-ຊາຍ** ໄດ້ກຳນົດໄວ້ວ່າ *ຜູ້ຖືກເຄາະຮ້າຍແຕ່ລະຄົນ ສາມາດມີທາງເລືອກໄດ້ຕາມຂໍ້ເທັດຈິງທັງໝົດທີ່ມີຢູ່, ຢ່າງອິດສະລະ ແລະ ໂດຍສະໝັກໃຈ.* ຜູ້ຖືກເຄາະຮ້າຍຕ້ອງຍິນຍອມຢ່າງເຕັມສ່ວນຕໍ່ກັບຄວາມຊ່ວຍເຫຼືອໃດໆທີ່ມີໃຫ້ເຂົາເຈົ້າ - ນັບແຕ່ການຕິດຕໍ່ຄັ້ງທຳອິດ ໄປຈົນການກັບຄືນສູ່ສັງຄົມ. ຜູ້ໃຫ້ບໍລິການ ມີໜ້າທີ່ອະທິບາຍ ການກະທຳ, ນະໂຍບາຍ ແລະ ຂັ້ນຕອນແຕ່ລະອັນທີ່ກ່ຽວຂ້ອງ ໃນຮູບແບບທີ່ຜູ້ຖືກເຄາະຮ້າຍເຂົ້າໃຈ ເພື່ອໃຫ້ການຍິນຍອມ. ຕະຫຼອດໄລຍະຂັ້ນຕອນ ຂະບວນການຊ່ວຍເຫຼືອ, ມັນເປັນສິ່ງຈຳເປັນທີ່ຜູ້ຖືກເຄາະຮ້າຍ ຈະໃຫ້ການຍິນຍອມທາງປາກເປົ່າ ຫຼື ລາຍລັກອັກສອນ. ຖ້າຜູ້ສະໜອງການບໍລິການບໍ່ສາມາດສື່ສານກັບຜູ້ຖືກເຄາະຮ້າຍ ໃນພາສາທີ່ຜູ້ຖືກເຄາະຮ້າຍເຂົ້າໃຈໄດ້, ຕ້ອງໄດ້ເຮັດທຸກໆຄວາມພະຍາຍາມທັງໝົດທີ່ເປັນໄປໄດ້ ເພື່ອຂໍການຊ່ວຍເຫຼືອຈາກຜູ້ແປພາສາ (ຜູ້ທີ່ໄດ້ຮັບການຝຶກອົບຮົມ ການເຮັດວຽກຮ່ວມກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ) ບໍ່ວ່າຈະເປັນການສື່ສານທາງປາກເປົ່າ ຫຼື ເປັນລາຍລັກອັກສອນ.

## ການປະຕິບັດທີ່ເປັນຕົວແບບທີ່ດີ:[73]

ໃນຟີລິບປິນ, ສູນພັກເຊົາບາງແຫ່ງສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນເດັກ ໄດ້ຖືກອອກແບບ ແລະ ສ້າງໃຫ້ຮູ້ສຶກຄືກັບເປັນ “ບ້ານ” ຕົວຢ່າງ ຮົ້ວ ບໍ່ໄດ້ສ້າງສູງເກີນໄປ ເພື່ອໃຫ້ເດັກສາມາດເຫັນສະພາບແວດລ້ອມພາຍນອກໄດ້; ບໍ່ມີປ້າຍທາງບອກຕຶກທີ່ບົ່ງບອກວ່ານີ້ແມ່ນສູນພັກເຊົາ; ສູນພັກເຊົາ ບໍ່ໄດ້ມີຄວາມຮູ້ສຶກວ່າເປັນຄ້າຍຄຸມຂັງແບບປິດ; ສູນພັກເຊົາມີພະນັກງານທີ່ເປັນນັກສັງຄົມສົງເຄາະ, ນັກຈິດຕະວິທະຍາ ແລະ ‘ພໍ່ບ້ານ/ແມ່ບ້ານ”. ເດັກສາມາດໄປໂຮງຮຽນຢູ່ນອກສູນພັກເຊົາ. ເດັກທີ່ມີສ່ວນຮ່ວມກັບຂະບວນການຂອງສານ ຈະໄດ້ຮັບການແຈ້ງກ່ຽວກັບສະຖານທີ່ພັກເຊົາຂອງເດັກ ແລະ ການເຊື່ອມໂຍງກັບຂະບວນການທາງກົດໝາຍ. ຄວາມຄິດເຫັນຂອງເຂົາເຈົ້າກ່ຽວກັບສະຖານທີ່ພັກເຊົາຈະໄດ້ຮັບການພິຈາລະນາ. ຈະໃຫ້ເວລາແກ່ເດັກໜຶ່ງອາທິດ ເພື່ອທົດລອງຢູ່ໃນສູນ ກ່ອນທີ່ຈະຕັດສິນໃຈວ່າເຂົາເຈົ້າຈະຢູ່ໃນສູກພັກເຊົາ ຫຼື ບໍ່.

## ການປະຕິບັດທີ່ເປັນຕົວແບບທີ່ດີ:[74]

ລັດຖະບານສິງກະໂປ ໄດ້ສະໜັບສະໜູນອົງການ NGO ສອງສາມແຫ່ງ ເພື່ອຈັດຫາສູນພັກເຊົາ ແລະ ການເບິ່ງແຍງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ເຈົ້າໜ້າທີ່ສິງກະໂປອະນຸຍາດໃຫ້ຜູ້ຖືກເຄາະຮ້າຍສ່ວນໃຫຍ່ມີອິດສະລະພາບໃນການເຄື່ອນຍ້າຍນອກສູນພັກເຊົາ ຍົກເວັ້ນຜູ້ທີ່ຖືກຄຸກຄາມທາງດ້ານຮ່າງກາຍ. ຜູ້ຖືກເຄາະຮ້າຍສາມາດອອກຈາກສູນພັກເຊົາ ເພື່ອໄປຝຶກອົບຮົມ/ເຮັດວຽກ ພາຍໃຕ້ໂຄງການວຽກຊົ່ວຄາວໄດ້ເປັນເວລາຫົກເດືອນ. ສິ່ງດັ່ງກ່າວນີ້ສາມາດຂະຫຍາຍເວລາໄດ້ສຳລັບຜູ້ຖືກເຄາະຮ້າຍທີ່ກ່ຽວຂ້ອງກັບການດຳເນີນຄະດີທາງກົດໝາຍ ທີ່ກຳລັງດຳເນີນການຢູ່. ການເຄື່ອນຍ້າຍ ໄດ້ຮັບການພິຈາລະນາເປັນແຕ່ລະຄະດີ. ເຈົ້າໜ້າທີ່ເຫັນດີເຫັນພ້ອມວ່າ ການກັກຂັງໃນສະຖານທີ່ພັກເຊົາ ເຮັດໃຫ້ສຸຂະພາບຈິດໃຈຂອງຜູ້ພັກອາໄສ ນັ້ນບໍ່ດີ. ການຈ້າງງານຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ໄດ້ຢູ່ໃນກົດໝາຍຂອງສິງກະໂປ ແຕ່ໃຫ້ເປັນດຸນພິນິດຂອງເຈົ້າໜ້າທີ່ສືບສວນ-ສອບສວນ.

73 ກອງປະຊຸມປຶກສາຫາລືລະດັບຊາດ ທີ່ປະເທດຟີລິບປິນ, ວັນທີ 19 ຕຸລາ 2021.

74 ການສຳພາດຜູ້ໃຫ້ຂໍ້ມູນຫຼັກຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຂອງສິງປະໂປ , ວັນທີ 28 ພະຈິກ 2021.

### ການປະຕິບັດທີ່ເປັນຕົວແບບທີ່ດີ:[75]

ປະເທດໄທ ມີຮູບແບບສູນພັກເຊົາ 'ສູນພັກເຊົາແຫ່ງຄວາມສຸກ- Happy Shelter' ທີ່ອີງໃສ່ຜູ້ຖືກເຄາະຮ້າຍເປັນພື້ນຖານໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຊັ່ນ: ອະນຸຍາດໃຫ້ຜູ້ພັກອາໄສ ມີສິດນໍາໃຊ້ໂທລະສັບໄດ້ຢ່າງອິດສະລະ, ຊຸກຍູ້ໃຫ້ຜູ້ພັກອາໄສ ມີສ່ວນຮ່ວມໃນການສ້າງກິດຈະກໍາທີ່ມີລາຍຮັບ ເພື່ອສະໜັບສະໜູນ ຄອບຄົວຂອງເຂົາເຈົ້າ ແລະ ຫຼຸດຜ່ອນຄວາມເປັນຫ່ວງ ແລະ ຄວາມບອບຊໍ້າທາງດ້ານຈິດໃຈຂອງຜູ້ຖືກເຄາະຮ້າຍ. ລັດຖະບານໄດ້ຮ່ວມມືກັບອົງການຈັດຕັ້ງທາງສັງຄົມຂັ້ນທ້ອງຖິ່ນ ເພື່ອຈັດຝຶກອົບຮົມວິຊາຊີບ ທີ່ຄໍານຶງເຖິງຄວາມຕ້ອງການສະເພາະບຸກຄົນຂອງຜູ້ຖືກເຄາະຮ້າຍ ແລະ ແຮງບັນດານໃຈໃນການຈ້າງງານ. ສິ່ງນີ້ມີຈຸດປະສົງເພື່ອປ້ອງກັນການເປັນຜູ້ຖືກເຄາະຮ້າຍຊໍ້າຄືນອີກ ແລະ ສ້າງແຮງບັນດານໃຈໃຫ້ເຂົາເຈົ້າໃນການເລີ່ມຕົ້ນຊີວິດໃໝ່ ແລະ ມີຄວາມໝັ້ນຄົງ. ກະຊວງພາຍໃນ ແລະ ກະຊວງແຮງງານ ໄດ້ອອກການອະນຸຍາດພິເສດສໍາລັບຄົນຕ່າງປະເທດທີ່ເປັນຜູ້ຖືກເຄາະຮ້າຍ-ພະຍານ ທີ່ກ່ຽວຂ້ອງກັບການດໍາເນີນຄະດີທາງກົດໝາຍ ໃຫ້ອາໄສຢູ່ພາຍໃນປະເທດ ແລະ ຈ້າງງານນອກສູນພັກເຊົາໄດ້. ນອກນັ້ນ, ຜູ້ພັກອາໄສໃນສູນພັກເຊົາ ໄດ້ລາຍງານວ່າມີຄວາມສຸກຫຼາຍຂຶ້ນ ພາຍຫຼັງທີ່ນໍາໃຊ້ລາຍແອັບພິເຄຣເຊັນ (Line Application) ເພື່ອສົນທະນາທາງວິດີໂອກັບຄອບຄົວຂອງເຂົາເຈົ້າ. ສິ່ງນີ້ຖືກນໍາສະເໜີ ເພື່ອໃຊ້ຫຼຸດຜ່ອນການຈໍາກັດການເຄື່ອນຍ້າຍ ເນື່ອງມາຈາກການແຜ່ລະບາດຂອງເຊື້ອພະຍາດ COVID-19.

### ສິ່ງທ້າທາຍ:[76]

ກົດໝາຍໄທ ບໍ່ໄດ້ບັງຄັບໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາໄສຢູ່ໃນສູນພັກເຊົາ ແຕ່ລັດຖະບານພິຈາລະນາວ່າ ບາງກຸ່ມຄົນຕ້ອງໄດ້ຮັບການປົກປ້ອງຈາກລັດ ໂດຍສະເພາະບຸກຄົນທີ່ຖືກຄ້າມະນຸດໂດຍອາຊະຍາກໍາທີ່ມີການຈັດຕັ້ງ. ຜູ້ຖືກເຄາະຮ້າຍເຫຼົ່ານີ້ປົກກະຕິຈະຢູ່ໃນສູນພັກເຊົາຈົນກວ່າເຈົ້າໜ້າທີ່ຈະປະເມີນວ່າມີຄວາມປອດໄພ ເພື່ອທີ່ເຂົາເຈົ້າຈະກັບຄືນບ້ານ. ເຖິງຢ່າງໃດກໍຕາມ, ຜູ້ຖືກເຄາະຮ້າຍບາງຄົນ ບໍ່ຕ້ອງການທີ່ຈະຢູ່ໃນສູນພັກເຊົາ ຫຼື ຢູ່ພາຍໃຕ້ການປົກປ້ອງ ເນື່ອງຈາກເຂົາເຈົ້າ ເຂົ້າໃຈ 'ຜິດ' ຄິດວ່າສູນພັກເຊົາເປັນສູນກັກຂັງ ຫຼື 'ເປັນສະຖານທີ່ອັນຕະລາຍ'. ອີງຕາມການລາຍງານຂອງຜູ້ປະຕິບັດຕົວຈິງ ໃນກອງປະຊຸມປຶກສາຫາລືລະດັບຊາດທີ່ປະເທດໄທ, ເຂົາເຈົ້າມັກຈະພະຍາຍາມຫຼົບໜີ.

75 ກອງປະຊຸມປຶກສາຫາລືລະດັບຊາດ ທີ່ປະເທດໄທ, ວັນທີ 28 ພະຈິກ 2021.

76 ກອງປະຊຸມປຶກສາຫາລືລະດັບຊາດ ທີ່ປະເທດໄທ, ວັນທີ 28 ພະຈິກ 2021.

# 5. ຂາດການບໍລິການ ແລະ ການສະໜັບສະໜູນ ສະເພາະດ້ານ ແລະ ສະເພາະບຸກຄົນ

ສູນພັກເຊົາຫຼາຍແຫ່ງ ບໍ່ສາມາດສະໜອງການດູແລໄດ້ຢ່າງຮອບດ້ານ ແລະ ຕໍ່ເນື່ອງ ຕາມແຜນການບໍລິການສະເພາະບຸກຄົນ. ໃນກໍລະນີທີ່ມີການບໍລິການສະເພາະດ້ານ, ເຊິ່ງມັກຈະສຸມໃສ່ແມ່ຍິງ ແລະ ເດັກຍິງ ໃນຂະນະທີ່ຄວາມຕ້ອງການຂອງກຸ່ມອື່ນເຊັ່ນ: ຜູ້ຊາຍ ແລະ ເດັກຊາຍ, ຄົນພິການ ແລະ ກຸ່ມອື່ນໆ ຖືກລະເລີຍ. ການຈັດການກັບຄວາມຕ້ອງການດ້ານສຸຂະພາບ ແລະ ຈິດຕະສັງຄົມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເປັນສິ່ງທ້າທາຍອັນໃຫຍ່ຫຼວງ ເນື່ອງຈາກພະນັກງານສູນພັກເຊົາ ບໍ່ໄດ້ຮັບການຝຶກອົບຮົມຢ່າງພຽງພໍ ໃນຮັບຮູ້ເຖິງຄວາມບອບຊໍ້າທາງດ້ານຈິດໃຈ. ການຂາດການຊ່ວຍເຫຼືອ ແລະ ເບິ່ງແຍງເປັນລາຍບຸກຄົນໄດ້ມີການປັບແຕ່ງອີງຕາມຄວາມຕ້ອງການ ແລະ ສະພາບການສະເພາະຂອງເຂົາເຈົ້າ ທີ່ອາດຈະສົ່ງຜົນກະທົບຕໍ່ກັບການຟື້ນຟູຜູ້ຖືກເຄາະຮ້າຍໃນໄລຍະຍາວ. ນອກຈາກນີ້ ຍັງອາດຈະຂັດຂວາງເຂົາເຈົ້າ ຈາກການຕ້ອງການອາໄສຢູ່ໃນສູກພັກເຊົາ ແລະ ໄດ້ຮັບຊ່ວຍເຫຼືອ.

**ຄູ່ມືຂອງອົງການ IOM ວ່າດ້ວຍການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໂດຍກົງ ໄດ້ແນະນໍາໃຫ້ສູນພັກເຊົາ ຈັດຫາການປົກປ້ອງ ແລະ ການຊ່ວຍຫຼືອທີ່ມີຄຸນນະພາບ ໂດຍອີງໃສ່ແຜນການບໍລິການ ການດູແລສະເພາະບຸກຄົນ.**



ຮູບພາບໂດຍ ຣາວີນາ ຣັດເຊວ

# ຄຳແນະນຳ ການບໍ່ເຮັດໃພອັນຕະລາຍ

ເບິ່ງຜູ້ຖືກເຄາະຮ້າຍເປັນລາຍບຸກຄົນ ແລະ ຄຳນຶງເຖິງຄວາມຕ້ອງການສະເພາະຂອງເຂົາເຈົ້າ. ເຮັດວຽກກັບເຂົາເຈົ້າ ເພື່ອອອກແບບກິດຈະກຳດ້ານຈິດຕະສັງຄົມ, ເສດຖະກິດ ແລະ ສັງຄົມ/ວິຊາຊີບ ເປັນລາຍບຸກຄົນ ລວມທັງການຮຽນ ແລະ ການເຮັດວຽກນອກສູນພັກເຊົາ ໂດຍສະເພາະສູນພັກເຊົາໄລຍະຍາວ. ຢ່າຢ້ານກົວທີ່ຈະນຳໃຊ້ເຄືອຂ່າຍເພື່ອສົ່ງຕໍ່ຜູ້ຖືກເຄາະຮ້າຍ ໃຫ້ມີຫຼາຍທາງເລືອກສຳລັບການບໍລິການ.

ກວດກາຄວາມຕ້ອງການດ້ານການແພດ ແລະ ຈິດຕະສັງຄົມຂອງຜູ້ຖືກເຄາະຮ້າຍຢ່າງເປັນປະຈຳ ແລະ ຮັກສາໄວ້ເປັນຄວາມລັບ. ຮັບປະກັນວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ເຂົ້າເຖິງການບໍລິການ, ຖ້າຕ້ອງການ, ເພື່ອໃຫ້ຄຳປຶກສາ ຫຼື ໃຫ້ການສະໜັບສະໜູນດ້ານຈິດໃຈ. ສິ່ງນີ້ ອາດຈະສະເໜີໂດຍຜູ້ປະຕິບັດຕົວຈິງ ທີ່ໃຫ້ບໍລິການ “ພາຍໃນ” ອົງກອນ ຫຼື ສະຖາບັນ ຫຼື ຜ່ານພາກລັດ ແລະ ພາກເອກະຊົນ.

ຄວນໃຫ້ການຊ່ວຍເຫຼືອ ແລະ ໃຫ້ຄຳປຶກສາດ້ານຈິດຕະສັງຄົມ ໂດຍຜູ້ຊ່ຽວຊານທີ່ໄດ້ຮັບການຝຶກອົບຮົມ ທີ່ມີທັກສະສະເພາະ ແລະ ຄຳນຶງເຖິງການເຮັດວຽກຮ່ວມກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມທັງ ການເບິ່ງແຍງຜູ້ທີ່ມີຄວາມບອບຊ້ຳທາງດ້ານຈິດໃຈໃນພາກປະຕິບັດຕົວຈິງ.

ເດັກ ອີງຕາມອາຍຸ ແລະ ບາດກ້າວພັດທະນາການ ແລະ ປະສົບການການຖືກຄ້າມະນຸດ ຈຳເປັນຕ້ອງມີມາດຕະການພິເສດ ແລະ ມາດຕະການເພີ່ມເຕີມ. ໃຫ້ຜູ້ຖືກເຄາະຮ້າຍທີ່ເປັນເດັກ ມີສ່ວນຮ່ວມໃນການພັດທະນາແຜນການຄຸ້ມຄອງຄະດີສະເພາະບຸກຄົນຂອງເຂົາເຈົ້າ. ສົ່ງຕໍ່ເຂົາເຈົ້າໄປຍັງຜູ້ສະໜອງການບໍລິການ ທີ່ໄດ້ຮັບການຝຶກອົບຮົມກ່ຽວກັບການເຮັດວຽກກັບຜູ້ຖືກເຄາະຮ້າຍທີ່ເປັນເດັກ.

ຮັບປະກັນວ່າ ມີການນຳໃຊ້ນະໂຍບາຍການປົກປ້ອງເດັກທີ່ໄດ້ຮັບການຮັບຮອງຢ່າງເຂັ້ມງວດ ໂດຍສູນພັກເຊົາ ແລະ ສະຖານທີ່ພັກເຊົາອື່ນໆ. ພະນັກງານຄວນໄດ້ຮັບການຝຶກອົບຮົມນະໂຍບາຍການປົກປ້ອງເດັກ ເພື່ອປ້ອງກັນການລ່ວງລະເມີດ/ການປະຕິບັດທີ່ບໍ່ຖືກຕ້ອງ ໂດຍພະນັກງານ.

ສົ່ງເສີມການສ້າງເຄືອຂ່າຍການສະໜັບສະໜູນ ເພື່ອນຕໍ່ເພື່ອນ ພາຍໃນສູນພັກເຊົາ ຫຼື ແບ່ງປັນປະສົບການ ໂດຍອະດີດຜູ້ລອດຊີວິດ ເພື່ອຊ່ວຍໃນຂະບວນການຟື້ນຟູຂອງຜູ້ຖືກເຄາະຮ້າຍ. ລະວັງຢ່າບັງຄັບໃຫ້ບຸກຄົນໃດໜຶ່ງແບ່ງປັນປະສົບການ ຫຼື ຂໍ້ມູນສ່ວນຕົວຂອງເຂົາເຈົ້າ ຖ້າຫາກເຂົາເຈົ້າບໍ່ພ້ອມ ຫຼື ບໍ່ຕ້ອງການທີ່ຈະແບ່ງປັນ. ສ້າງກົດລະບຽບພື້ນຖານກ່ຽວກັບການຮັກສາຄວາມລັບ ແລະ ການເຄົາລົບພາຍໃນກຸ່ມ.

### ການປະຕິບັດທີ່ເປັນຕົວແບບທີ່ດີ:[77]

MSDHS ໄທ ຮັບຮູ້ເຖິງຄວາມສຳຄັນໃນການເບິ່ງແຍງຜູ້ຖືກເຄາະຮ້າຍ ທີ່ກຳນົດຕົວຕົນວ່າເປັນ ຍິງຮັກຍິງ, ຊາຍຮັກຊາຍ, ຜູ້ທີ່ຮັກທັງຍິງ ແລະ ຊາຍ, ບຸກຄົນຂ້າມເພດ, ຄົນທີ່ບໍ່ມີຄວາມຊັດເຈນໃນຄວາມເປັນເພດ ແລະ ຄົນທີ່ມີສອງເພດ (LGBTQI+). ຄວາມຄືບໜ້າແມ່ນກຳລັງດຳເນີນການຢູ່ ເພື່ອສ້າງສູນພັກເຊົາສະເພາະໃນປະເທດໄທ ເພື່ອປົກປ້ອງ ແລະ ສະໜັບສະໜູນຜູ້ຖືກເຄາະຮ້າຍທີ່ເປັນ LGBTQI+.[78] ນອກນັ້ນ ໄດ້ມີຄວາມພະຍາຍາມໃນການສ້າງພື້ນທີ່ສ່ວນຕົວ ໃນສູນພັກເຊົາທຸກໆສູນ ເພື່ອຕອບສະໜອງຄວາມຕ້ອງການຂອງກຸ່ມນີ້.

### ການປະຕິບັດທີ່ເປັນຕົວແບບທີ່ດີ:[79]

ອົງການ NGO ຂອງສິງກະໂປທີ່ຊື່ວ່າ H.O.M.E. (ອົງການມະນຸດສະທຳ ເພື່ອເສດຖະກິດຂອງແຮງງານເຄື່ອນຍ້າຍ) ໄດ້ສ້າງສູນພັກເຊົາສຳລັບແຮງງານເຄື່ອນຍ້າຍພາຍໃນ ຜູ້ທີ່ຖືກຂູດຮີດ ແລະ ລ່ວງລະເມີດ. ເນື່ອງຈາກການຖືກສັງຄົມປະນາມທີ່ກ່ຽວຂ້ອງກັບບັນຫາດ້ານສຸຂະພາບຈິດ, ຜູ້ພັກອາໄສຫຼາຍຄົນໃນສູນພັກເຊົາ ບໍ່ເຕັມໃຈທີ່ຈະໄດ້ຮັບການໃຫ້ຄຳປຶກສາ. ເພື່ອຂ້າມຜ່ານສິ່ງນີ້, H.O.M.E. ໄດ້ຕັດສິນໃຈທີ່ຈະໃຫ້ຄຳປຶກສາແກ່ຜູ້ພັກອາໄສທຸກຄົນ ເຮັດໃຫ້ເຂົາເຈົ້າເຫັນເຖິງຜົນປະໂຫຍດໃນການໄດ້ຮັບການເບິ່ງແຍງດ້ານສຸຂະພາບຈິດ.

### ການປະຕິບັດທີ່ເປັນຕົວແບບທີ່ດີ :

ອົງການສ້າງຄວາມຫວັງ ຂອງຟີລິບປິນ - She WORKS ເປັນອົງການຈັດຕັ້ງທີ່ມີພື້ນຖານຄວາມເຊື່ອ ໃນການຈັດການ ແລະ ຈັດຫາການຝຶກອົບຮົມທັກສະການເປັນຜູ້ນຳ, ການຝຶກອາຊີບ ແລະ ທັກສະການຝຶກອົບຮົມ ໃຫ້ແກ່ແມ່ຍິງທີ່ເປັນຜູ້ລອດຊີວິດຈາກການຄ້າມະນຸດທາງເພດ. ອົງການດັ່ງກ່າວດຳເນີນການໂດຍຜູ້ລອດຊີວິດຈາກການຄ້າມະນຸດ. ໂດຍເລີ່ມຕົ້ນເປັນກຸ່ມທີ່ໃຫ້ການສະໜັບສະໜູນໃນປີ 2015 ສຳລັບຜູ້ຍິງ “ໃນການກັບຄືນສູ່ສັງຄົມ” ທີ່ຮູ້ສຶກໂດດດ່ຽວ ແລະ ບໍ່ມີຄວາມເຂັ້ມແຂງໃນຊຸມຊົນຂັ້ນທ້ອງຖິ່ນຂອງເຂົາເຈົ້າເອງ ເນື່ອງຈາກສັງຄົມປະນາມທີ່ກ່ຽວຂ້ອງກັບການຖືກຄ້າມະນຸດ ເພື່ອຈຸດປະສົງການຂູດຮີດທາງເພດ. ສ່ວນໃຫຍ່ແມ່ຍິງເຫຼົ່ານີ້ ເປັນແມ່ລ້ຽງດ່ຽວ ທີ່ມີປະສົບການດ້ານຄວາມບອບຊ້ຳທາງດ້ານຈິດໃຈຢ່າງໜັກໜ່ວງ. ເສັ້ນທາງການຟື້ນຟູ ແລະ ຄວາມເປັນເອກະລາດດ້ານເສດຖະກິດຂອງເຂົາເຈົ້ານັ້ນບໍ່ງ່າຍເລີຍ ແລະ She WORKS ມີບົດບາດສຳຄັນໃນການສະໜັບສະໜູນເຂົາເຈົ້າ. [80]

---

77 ກອງປະຊຸມປຶກສາຫາລືລະດັບຊາດ ທີ່ປະເທດໄທ, ວັນທີ 28 ຕຸລາ 2021.

78 ເຖິງວັນທີ 1 ມິຖຸນາ 2022.

79 ການສຳພາດຜູ້ໃຫ້ຂໍ້ມູນຫຼັກ ຈາກອົງການ HOME ສິງກະໂປ, ວັນທີ 1 ທັນວາ 2021.

80 ການສຳພາດຜູ້ໃຫ້ຂໍ້ມູນຫຼັກ ຈາກອົງການ She WORKS

# ການກັບຄືນ ແລະ ການກັບຄືນສູ່ສັງຄົມ

ການສົ່ງຜູ້ຖືກເຄາະຮ້າຍກັບຄືນຖິ່ນກຳເນີດ ຄວນມີຄວາມປອດໄພ ແລະ ເຄົາລົບກຽດສັກສີ ໂດຍຄຳນຶງເຖິງຄວາມເປັນສ່ວນຕົວ ແລະ ບໍ່ເປີດເຜີຍຊື່ຂອງເຂົາເຈົ້າ. ການກັບຄືນຂອງຜູ້ຖືກເຄາະຮ້າຍໃດໜຶ່ງ ຄວນເຮັດດ້ວຍຄວາມສະໝັກໃຈ. ຜູ້ຖືກເຄາະຮ້າຍທີ່ຕ້ອງການກັບຄືນບ້ານ ຄວນໄດ້ຮັບການຊ່ວຍເຫຼືອຢ່າງປອດໄພ ໂດຍບໍ່ມີການຊັກຊ້າເກີນໄປ ຫຼື ບໍ່ສົມເຫດສົມຜົນ.[81] ສຳລັບຜູ້ທີ່ບໍ່ສາມາດກັບຄືນບ້ານໄດ້ ໂດຍສະເພາະຫາກຈະມີອັນຕະລາຍຕໍ່ກັບຄວາມປອດໄພ ແລະ ສະຫວັດດີພາບຂອງເຂົາເຈົ້າ, ຄວນມີການຊອກຫາທາງເລືອກອື່ນ.

ໂຄງການ ການສະໜັບສະໜູນການຟື້ນຟູ ແລະ ການກັບຄືນສູ່ສັງຄົມທີ່ມີການວາງແຜນເປັນຢ່າງດີ ມີບົດບາດສຳຄັນໃນການຟື້ນຟູກຽດສັກສີ ແລະ ສະຫວັດດີພາບຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ມັນຊ່ວຍໃຫ້ເຂົາເຈົ້າດຳເນີນຊີວິດຕໍ່ໄປ ລວມທັງ ການກັບຄືນຫາຄອບຄົວ ແລະ ຊຸມຊົນຂັ້ນທ້ອງຖິ່ນ. ແຜນການຟື້ນຟູ ແລະ ກັບຄືນສູ່ສັງຄົມທີ່ຮອບຄອບດີ ເປັນອົງປະກອບທີ່ຈຳເປັນຕໍ່ກັບຄວາມປອດໄພໃນການກັບຄືນ ເນື່ອງຈາກວ່າສ່ວນໃຫຍ່ ຈຸດກັບຄືນ ແລະ ການກັບຄືນສູ່ສັງຄົມຊຸມຊົນຂອງເຂົາເຈົ້ານັ້ນ ຜູ້ຖືກເຄາະຮ້າຍສ່ວນໃຫຍ່ມີຄວາມສ່ຽງທີ່ຈະໄດ້ຮັບໄພອັນຕະລາຍເພີ່ມເຕີມ.[82]

---

81 ອາຊຽນ (2019). *ຊຸດເຄື່ອງມືຮູບແບບການຈັດຕັ້ງປະຕິບັດຂອງຜູ້ປະຕິບັດຕົວຈິງ ສຳລັບຄູ່ມື ແລະ ຂັ້ນຕອນ ໃນການແກ້ໄຂຄວາມຕ້ອງການອັນຈຳເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດລະດັບພາກພື້ນຂອງ ACWC.* ຈາກາຕາ: ກອງເລຂາອາຊຽນ

82 ອາຊຽນ (2019). *ຊຸດເຄື່ອງມືຮູບແບບການຈັດຕັ້ງປະຕິບັດຂອງຜູ້ປະຕິບັດຕົວຈິງ ສຳລັບຄູ່ມື ແລະ ຂັ້ນຕອນ ໃນການແກ້ໄຂຄວາມຕ້ອງການອັນຈຳເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດລະດັບພາກພື້ນຂອງ ACWC.* ຈາກາຕາ: ກອງເລຂາອາຊຽນ



ມາດຕາ 8 ຂອງ ***ອານຸສັນຍາປາເລີໂມ*** ການສົ່ງຜູ້ຖືກເຄາະຮ້າຍກັບຄືນປະເທດຕ້ອງດຳເນີນການໂດຍຄຳນຶງເຖິງຄວາມປອດໄພຂອງພວກເຂົາ ບໍ່ວ່າເຂົາເຈົ້າຈະຮ່ວມມືໃນການດຳເນີນຄະດີທາງອາຍາ ຫຼື ບໍ່ ກໍຕາມ.

ມາດຕາ 15 ຂອງ ***ສົນທິສັນຍາ*** ACTIP ກຳນົດໄວ້ວ່າ ການສົ່ງຜູ້ຖືກເຄາະຮ້າຍກັບຄືນ ຕ້ອງດຳເນີນການໂດຍ "ຄຳນຶງເຖິງຄວາມປອດໄພຂອງບຸກຄົນ".

**ຄູ່ມືອາຊຽນ ໃນການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ ຮຽກຮ້ອງໃຫ້ມີການສ້າງໂຄງການທີ່ຮອບດ້ານພາຍໃນປະເທດຕົ້ນທາງ ເພື່ອຮັບປະກັນການບໍລິການ ການຟື້ນຟູ ແລະ ການກັບຄືນສັງຄົມຢ່າງພຽງພໍແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ໂຄງການຄວນສະໜອງການບໍລິການແບບຄົບຊຸດ ເພື່ອຊ່ວຍສົ່ງເສີມຄວາມຕ້ອງການດ້ານຈິດໃຈ, ຮ່າງກາຍ, ເສດຖະກິດ ແລະ ສັງຄົມຂອງຜູ້ຖືກເຄາະຮ້າຍ ລວມທັງການສ້າງຄວາມຮັບຮູ້ກ່ຽວກັບການປ້ອງກັນຈາກການຖືກສັງຄົມປະນາມ ແລະ ການຈຳແນກຕໍ່ກັບຜູ້ຖືກເຄາະຮ້າຍທີ່ກັບຄືນບ້ານ.[83]**

ໄພອັນຕະລາຍຂ້າງລຸ່ມນີ້ ໄດ້ຮັບການກຳນົດວ່າເປັນເລື່ອງປົກກະຕິ ໃນໄລຍະຂະບວນການ ການກັບຄືນ ແລະ ການກັບຄືນສູ່ສັງຄົມໃນອາຊຽນ. ໃນຖານະ ຜູ້ຕອບໂຕ້ຜູ້ທຳອິດ ຫຼື ຜູ້ສະໜັບສະໜູນ ມັນເປັນສິ່ງສຳຄັນທີ່ທ່ານຕ້ອງຮັບຮູ້ໄພອັນຕະລາຍທີ່ອາດຈະເກີດຂຶ້ນ ແລະ ພິຈາລະນາ ຄຳແນະນຳການບໍ່ເຮັດໄພອັນຕະລາຍ ເພື່ອເປັນແນວທາງໃນການປ້ອງກັນ ຫຼື ຫຼຸດຜ່ອນໄພອັນຕະລາຍ.

83 ເບິ່ງມາດຕາ 3.7.1.

# 1. ການບັງຄັບໃຫ້ກັບຄືນຖິ່ນກຳເນີດ

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະວິຕົກກັງວົນກ່ຽວກັບການກັບຄືນບ້ານຂອງເຂົາເຈົ້າ. ເຊິ່ງມີຄວາມກັງວົນກ່ຽວກັບປະຕິກິລິຍາຂອງຊຸມຊົນ ແລະ ຄອບຄົວ ແລະ ຖືກສັງຄົມປະນາມ ທີ່ເຂົາເຈົ້າອາດຈະຕ້ອງປະເຊີນໜ້າ. ບຸກຄົນອາດຈະຮູ້ສຶກອັບອາຍ ເນື່ອງຈາກປະເພດການຂູດຮີດທີ່ເຂົາເຈົ້າໄດ້ມີປະສົບການ ຫຼື ຍ້ອນວ່າເຂົາເຈົ້າກັບບ້ານໂດຍບໍ່ມີເງິນຕາມທີ່ຄາດຫວັງ. ເຂົາເຈົ້າອາດຈະຖືກໃຊ້ຄວາມຮຸນແຮງ ແລະ ການຂົ່ມຂູ່ຈາກຜູ້ຄ້າມະນຸດ ໂດຍສະເພາະ ຖ້າຫາກເຂົາເຈົ້າໃຫ້ຄວາມຮ່ວມມືກັບໜ່ວຍງານຍຸຕິທຳທາງອາຍາ ຫຼື ເປັນໜີ້ ໂດຍທີ່ບໍ່ສາມາດຈ່າຍຄືນໄດ້.[84]

ການກັບຄືນສູ່ຄອບຄົວກາຍເປັນສິ່ງທີ່ຊັບຊ້ອນຫຼາຍຂຶ້ນ ເມື່ອຄອບຄົວຂອງຜູ້ຖືກເຄາະຮ້າຍມີສ່ວນຮ່ວມໃນການຄ້າມະນຸດ; ຫຼື ໃນກໍລະນີທີ່ມີປະຫວັດການໃຊ້ຄວາມຮຸນແຮງ ແລະ ການລ່ວງລະເມີດໃນຄອບຄົວ. ໃນກໍລະນີດັ່ງກ່າວນີ້, ການກັບຄອບຄົວ ບໍ່ຫນ້າຈະສິ່ງຜົນດ້ານບວກໃນຂະບວນການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍ.

ການສົ່ງຜູ້ຖືກເຄາະຮ້າຍກັບຄືນຖິ່ນກຳເນີດຂອງເຂົາເຈົ້າ ນຳມາສູ່ຄວາມສ່ຽງ ທີ່ເຮັດໃຫ້ເຂົາເຈົ້າກັບຄືນສູ່ສະພາບການຄ້າມະນຸດ ຫຼືຢູ່ໃນສະຖານະການທີ່ມີຄວາມຈຳກັດການສະໜັບສະໜູນ.[85] ສິ່ງເຫຼົ່ານີ້ ສົ່ງຜົນຕໍ່ກັບສຸຂະພາບດ້ານຮ່າງກາຍ ແລະ ຈິດໃຈ ແລະ ເພີ່ມໂອກາດໃນການຖືກຄ້າມະນຸດອີກຄັ້ງ.


ຮູບພາບໂດຍ ທິສ ເດເກແດມ ຈາກອັນສູເປສ

84 ອາຊຽນ (2016). *ການທົບທວນນະໂຍບາຍ, ກົດໝາຍ ແລະ ການປະຕິບັດຕົວຈິງໃນອາຊຽນ ທີ່ກ່ຽວຂ້ອງກັບການກຳນົດຕົວ, ການຄຸ້ມຄອງ ແລະ ການປະຕິບັດຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ.* ຈາກາຕາ: ກອງເລຂາອາຊຽນ

85 ອົງການ UNODC (2009). *ຄູ່ມືການຕ້ານການຄ້າມະນຸດ ສຳລັບຜູ້ປະຕິບັດຕົວຈິງໃນຍຸຕິທຳທາງອາຍາ: ການປະເມີນຄວາມສ່ຽງໃນການສືບສວນ-ສອບສວນ ການຄ້າມະນຸດ.* ນິວຢອກ: ອົງການ UNODC.

# ຄໍາແນະນໍາການບໍ່ເຮັດໄພອັນຕະລາຍ

ບໍ່ຄວນບັງຄັບຜູ້ຖືກເຄາະຮ້າຍກັບຄືນຖິ່ນກໍາເນີດຂອງເຂົາເຈົ້າ.[86] ການກັບຄືນຂອງຜູ້ຖືກເຄາະຮ້າຍ ຕ້ອງດໍາເນີນຂຶ້ນດ້ວຍຄວາມສະໝັກໃຈ ແລະ ອີງຕາມການແຈ້ງຂໍ້ມູນຜູ້ຖືກເຄາະຮ້າຍ ແລະ ໄດ້ຮັບຍິນຍອມຈາກຜູ້ຖືກເຄາະຮ້າຍ ຢ່າງເປັນລາຍລັກອັກສອນ ໃນກໍລະນີທີ່ເປັນໄປໄດ້.[87]

ດໍາເນີນການປະເມີນຄອບຄົວ ແລະ ຊຸມຊົນຢ່າງຮອບດ້ານ ເພື່ອຕັດສິນໃຈວ່າ ທາງເລືອກນີ້ເໝາະສົມແກ່ຜູ້ຖືເຄາະຮ້າຍ ຫຼື ບໍ່. ປຶກສາຫາລືທາງເລືອກອື່ນຮ່ວມກັບຜູ້ຖືກເຄາະຮ້າຍ ຖ້າຫາກມີເຫດຜົນ ເຮັດໃຫ້ສົງໄສວ່າເຂົາເຈົ້າຈະມີໄພອັນຕະລາຍພາຍຫຼັງກັບຄືນຮອດບ້ານ.

ອະນຸຍາດໃຫ້ພັກອາໄສຢູ່ຊົ່ວຄາວ ດ້ວຍເຫດຜົນທາງດ້ານສັງຄົມ ຫຼື ມະນຸດສະທໍາ, ຖ້າຫາກທ່ານບໍ່ສາມາດຮັບປະກັນໄດ້ເຖິງຄວາມປອດໄພໃນການສົ່ງກັບຄືນ ໂດຍບໍ່ໄດ້ຄໍານຶງເຖິງຄວາມເຕັມໃຈຂອງຜູ້ຖືກເຄາະຮ້າຍ ທີ່ຈະເຮັດໜ້າທີ່ເປັນພະຍານໃນການດໍາເນີນຄະດີທາງອາຍາ. ສິ່ງນີ້ສໍາຄັນໃນການຮັບປະກັນຄວາມປອດໄພ, ການປະຕິບັດດ້ວຍຄວາມເຫັນອົກເຫັນໃຈ ແລະ ການຟື້ນຟູຜູ້ຖືກເຄາະຮ້າຍ.[88]

ໃນກໍລະນີທີ່ການສົ່ງກັບຄືນເປັນພຽງທາງເລືອກດຽວ, ເນັ້ນໃສ່ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃນເວລາທີ່ເຂົາເຈົ້າມີກ່ອນກັບຄືນ ແລະ ປະສານງານກັບປະເທດບ້ານເກີດ ຫຼື ຊຸມຊົນ ເພື່ອໃຫ້ການເບິ່ງແຍງຢ່າງຕໍ່ເນື່ອງໃຫ້ຫຼາຍທີ່ສຸດ.

ການກັບຄືນສູ່ຄອບຄົວເປັນສິ່ງທໍາອິດ ແລະ ເປັນທາງເລືອກທໍາອິດໃນການເບິ່ງແຍງເດັກ. ສິ່ງດັ່ງກ່າວນີ້ຄວນດໍາເນີນໃນທຸກສະຖານະການທີ່ເຫັນວ່າມີຄວາມປອດໄພ ແລະ ສົມບູນສໍາລັບເດັກ. ໃນກໍລະນີທີ່ເປັນໄປບໍ່ໄດ້, ຄວນມີທາງເລືອກອື່ນ ລວມທັງ ການເບິ່ງແຍງແບບຄອບຄົວໃຫ່ຍ/ການເບິ່ງແຍງທີ່ອາໄສຍາດພີ່ນ້ອງ, ການອຸປະຖໍາ, ການເບິ່ງແຍງເປັນກຸ່ມນ້ອຍໆ ແລະ ອື່ນໆ. ປຶກສາກັບໜ່ວຍງານຂັ້ນທ້ອງຖິ່ນທີ່ກ່ຽວຂ້ອງ ຕົວຢ່າງ ໜ່ວຍງານດ້ານສັງຄົມ ຫຼື ສະຫະພັນແມ່ຍິງ ເພື່ອພັດທະນາແຜນການເບິ່ງແຍງແບບທາງເລືອກທີ່ເໝາະສົມ. ສູນພັກເຊົາ ແລະ ສະຖາບັນ ຄວນພິຈາລະນາ ເປັນທາງເລືອກສຸດທ້າຍສໍາລັບກໍລະນີການຄ້າເດັກ ແລະ ໃນກໍລະນີທີ່ຈໍາເປັນ ຄວນມີການແກ້ໄຂບັນຫາຊົ່ວຄາວ. ເນື່ອງຈາກວ່າເດັກ ແລະ ໄວໜຸ່ມເປັນກຸ່ມທີ່ມີຄວາມຫຼາກຫຼາຍ (ແຕກຕ່າງກັນດ້ານອາຍຸ, ຄວາມເປັນຜູ້ໃຫຍ່ ແລະ ລະດັບພັດທະນາການ, ປະສົບການໃນການຄ້າມະນຸດ, ສະພາບຄອບຄົວ ແລະ ສະຖານະການສ່ວນຕົວ ແລະ ຄວາມຕ້ອງການ ການຊ່ວຍເຫຼືອ) ຄວນມີທາງເລືອກທີ່ພັກອາໄສທີ່ຫຼາກຫຼາຍ.

86 ການທົບທວນ ລະດັບພາກພື້ນຂອງ ACWC ຄໍາແນະນໍາຂໍ້ 7.2

87 ສົນທິສັນຍາຂອງ UN ວ່າດ້ວຍການຄ້າມະນຸດ, ມາດຕາ 8.

88 ຫ້ອງການ OSCE ເພື່ອສະຖາບັນປະຊາທິປະໄຕ ແລະ ສິດທິມະນຸດ (ODIHR) (2004). *ກົນໄກການສົ່ງຕໍ່ລະດັບຊາດ. ຄວາມພະຍາຍາມຮ່ວມກັນໃນການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ຄູ່ມືການປະຕິບັດຕົວຈິງ.* Warsaw: OSCE.

### ການປະຕິບັດທີ່ເປັນຕົວແບບທີ່ດີ:[89]

ກ່ອນການສົ່ງຜູ້ຖືກເຄາະຮ້າຍກັບຄືນ, ເຈົ້າໜ້າທີ່ອິນໂດເນເຊຍ ໄດ້ໂອ້ລົມຢ່າງກວ້າງຂວາງ (ທາງໂທລະສັບ ແລະ ວິດີໂອ) ກັບຄອບຄົວ ເພື່ອຮັບປະກັນວ່າພວກເຂົາພ້ອມທີ່ຈະຮັບເອົາຜູ້ຖືກເຄາະຮ້າຍ. ພວກເຂົາຍັງປະເມີນອີກ ຖ້າວ່າສະພາບແວດລ້ອມໃນບ້ານເອື້ອຍອໍານວຍ/ສະໜັບສະໜູນ/ດີຕໍ່ສຸຂະພາບ ຫຼື ບໍ່ ເພື່ອຄວາມປອດໄພ ແລະ ການຟື້ນຟູຂອງຜູ້ຖືກເຄາະຮ້າຍ. ຄວາມຄິດເຫັນຂອງຜູ້ຖືກເຄາະຮ້າຍເປັນສິ່ງສໍາຄັນ. ຜູ້ຖືກເຄາະຮ້າຍຈະຖືກຖາມຄໍາຖາມ ເຊັ່ນ: ເຂົາເຈົ້າຕ້ອງການກັບບ້ານຫຼື ບໍ່? ເຂົາເຈົ້າຮູ້ສຶກປອດໄພ ແລະ ສະບາຍໃຈກັບຄອບຄົວຂອງເຂົາເຈົ້າບໍ່? ເຂົາເຈົ້າໃຫ້ນິຍາມຄໍາວ່າ 'ປອດໄພ' ແນວໃດ? ການຮັບຮູ້ເຖິງຄວາມປອດໄພຂອງຜູ້ຖືກເຄາະຮ້າຍ ແລະ ແຈ້ງການຍິນຍອມຂອງຜູ້ຖືກເຄາະຮ້າຍໃນການກັບຄືນບ້ານເປັນສິ່ງທີ່ສໍາຄັນ. ຖ້າສິ່ງນີ້ເປັນໄປໄດ້ບໍ່, ເຈົ້າໜ້າທີ່ຈະຊອກຫາທາງເລືອກອື່ນ.

ໃນກໍລະນີທີ່ຜູ້ຖືກເຄາະຮ້າຍເປັນເດັກ, ຈະມີການຈັດທາງເລືອກໃນການເບິ່ງແຍງ ຫຼື ລ້ຽງດູ ຖ້າຫາກຄອບຄົວໄດ້ຮັບການປະເມີນວ່າ ບໍ່ສາມາດສະໜອງສະພາບແວດລ້ອມທີ່ປອດໄພ ແລະ ບໍ່ສົມບູນສໍາລັບເດັກ.

ກ່ອນ ແລະ ຫຼັງການສົ່ງຜູ້ຖືກເຄາະຮ້າຍກັບຄືນຖິ່ນກໍາເນີດຂອງເຂົາເຈົ້າ, ເຈົ້າໜ້າທີ່ຈະແຈ້ງບອກ ລັດຖະບານຂັ້ນທ້ອງຖິ່ນ ແລະ ໜ່ວຍງານດ້ານສັງຄົມຂັ້ນທ້ອງຖິ່ນ ກ່ຽວກັບຜູ້ຖືກເຄາະຮ້າຍ ແລະ ເຮັດວຽກຮ່ວມກັບເຂົາເຈົ້າໃນການຕິດຕາມສະພາບຂອງຜູ້ຖືກເຄາະຮ້າຍ, ລວມທັງ ຮັບປະກັນວ່າເຂົາເຈົ້າມີຄວາມປອດໄພ ແລະ ບໍ່ໄດ້ປະເຊີນໜ້າກັບການຖືກຈໍາແນກ. ຖ້າຫາກຜູ້ກະທໍາຜິດເປັນສະມາຊິກຄອບຄົວ, ຍາດໃກ້ຊິດ ຫຼື ຄົນໃນຊຸມຊົນ ໜ່ວຍງານບັງຄັບໃຊ້ກົດໝາຍຂັ້ນທ້ອງຖິ່ນ ຈະມີການດໍາເນີນການທັນທີ ເພື່ອຮັບປະກັນຄວາມປອດໄພຂອງຜູ້ຖືກເຄາະຮ້າຍ. ເຈົ້າໜ້າທີ່ຮັບຮູ້ຄວາມສໍາຄັນຂອງຄອບຄົວ ທີ່ຈະຕ້ອງເຂົ້າໃຈວ່າການຄ້າມະນຸດເປັນການກະທໍາທີ່ຜິດກົດໝາຍອາຍາ.

89 ກອງປະຊຸມລະດັບຊາດ ທີ່ປະເທດອິນໂດເນເຊຍ, ວັນທີ 21 ຕຸລາ 2021

# 2. ການກັບຄືນທີ່ບໍ່ປອດໄພ ແລະ ບໍ່ມີກຽດສັກສີ

ພາຍໃນອາຊຽນ, ກົນໄກ ແລະ ຂັ້ນຕອນທີ່ມີຢູ່ ເນັ້ນໃສ່ການສົ່ງກັບຄືນເປັນຫຼັກ ໂດຍປ່ອຍໃຫ້ຜູ້ຖືກເຄາະຮ້າຍຫຼາຍຄົນບໍ່ໄດ້ຮັບການປົກປ້ອງ ເມື່ອເຂົາເຈົ້າອອກຈາກປະເທດປາຍທາງ ຫຼື ໃນເວລາທີ່ເຂົາເຈົ້າກັບຄືນຊຸມຊົນບ້ານເກີດຂອງຕົນ. ບາງຄົນຖືກສົ່ງກັບບ້ານ (ຫຼື ສົ່ງທີ່ຊາຍແດນ) ໂດຍບໍ່ມີຄົນເບິ່ງແຍງ ແລະ ບໍ່ມີຂໍ້ມູນໃດໆກ່ຽວກັບບຸກຄົນທີ່ເຂົາເຈົ້າສາມາດຕິດຕໍ່ຂໍການຊ່ວຍເຫຼືອໄດ້. ຄົນອື່ນໆ ກໍ່ໄດ້ຮັບການເບິ່ງແຍງ ຮອດແຕ່ຊາຍແດນເທົ່ານັ້ນ ແລະ ໄດ້ຂໍ້ມູນພື້ນຖານບ່ອນທີ່ຈະໄປ ແລະ ໃຜທີ່ສາມາດໃຫ້ການຊ່ວຍເຫຼືອ. ອາດຈະມີການສື່ສານ ແລະ ການປະສານງານທີ່ບໍ່ດີລະຫວ່າງໜ່ວຍງານສົ່ງ/ປະເທດສົ່ງ ແລະ ໜ່ວຍງານທີ່ຮັບ/ປະເທດທີ່ຮັບ ກ່ຽວກັບປະເພດການປົກປ້ອງ ແລະ ການສະໜັບສະໜູນທີ່ມີຢູ່ແກ່ຜູ້ຖືກເຄາະຮ້າຍ ທີ່ກັບຄືນ ຊຸມຊົນບ້ານເກີດ.

## ຄຳແນະນຳການບໍ່ເຮັດໄພອັນຕະລາຍ

ກ່ອນການສົ່ງກັບ, ຄົນຕ່າງປະເທດທີ່ເປັນຜູ້ຖືກເຄາະຮ້າຍ ຕ້ອງໄດ້ຮັບເອກະສານທົດແທນ (ນຳສົ່ງ) ເພື່ອໃຫ້ສາມາດເດີນທາງໄປ ແລະ ກັບຈາກປະເທດຕົ້ນທາງໄດ້. ລະວັງຢ່າກຳນົດວ່າບຸກຄົນນັ້ນເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນເອກະສານນັ້ນ. ນອກນັ້ນ, ບໍ່ຄວນສົ່ງຕໍ່ຂໍ້ມູນທີ່ກ່ຽວຂ້ອງຂອງຜູ້ຖືກເຄາະຮ້າຍ ໄປຫາເຈົ້າໜ້າທີ່ໃນປະເທດຕົ້ນທາງ ຍົກເວັ້ນ ໃນກໍລະນີທີ່ຜູ້ຖືກເຄາະຮ້າຍ ໄດ້ຮັບການອະນຸຍາດຢ່າງຊັດເຈນໃນການດຳເນີນການດັ່ງກ່າວ ເພື່ອຜົນປະໂຫຍດໃນການດຳເນີນຄະດີອາຍາຕໍ່ໄປ.[90]

ຄວນຄຳນຶງ ຂັ້ນຕອນການເດີນທາງ ເພື່ອສົ່ງຜູ້ຖືກເຄາະຮ້າຍກັບຄືນ ອາດຈະສ້າງພາບຈຳລອງປະສົບການຄ້າມະນຸດຂອງຜູ້ຖືກເຄາະຮ້າຍ. ເຮັດໃຫ້ມີຄວາມເຄັ່ງຄຽດນ້ອຍລົງ ແລະ ຮັບປະກັນວ່າຜູ້ຖືກເຄາະຮ້າຍໄດ້ຮັບການແຈ້ງຂໍ້ມູນແຕ່ລະຂັ້ນຕອນຢ່າງເຕັມສ່ວນ ແລະ ເຮັດໃຫ້ພວກເຂົາໝັ້ນໃຈຕະຫຼອດຂະບວນການ.

ຖ້າເປັນໄປໄດ້ ຄວນມີນັກສັງຄົມສົງເຄາະ ຫຼື ຜູ້ສະໜັບສະໜູນໄປນຳຜູ້ຖືກເຄາະຮ້າຍ ໃນໄລຍະການກັບຄືນ ເພື່ອຊ່ວຍໃຫ້ມີການສະໜັບສະໜູນ ແລະ ມີຄວາມປອດໄພ.

ຄົນຕ່າງປະເທດທີ່ເປັນຜູ້ຖືກເຄາະຮ້າຍ, ຕິດຕໍ່ສະຖານທູດ ເພື່ອກະກຽມໃຫ້ມີບຸກຄົນມາຮັບເອົາຜູ້ຖືກເຄາະຮ້າຍ ໃນເວລາທີ່ຮອດປະເທດບ້ານເກີດ.

ຄຳນຶງເຖິງຄວາມອ່ອນໄຫວ ບໍ່ວ່າຜູ້ຖືກເຄາະຮ້າຍຕ້ອງການທີ່ຈະເຫັນຜູ້ຕິດຕາມໄປຈົນຮອດປະຕູບ້ານຂອງເຂົາເຈົ້າ ຫຼື ບໍ່. ເຂົາເຈົ້າອາດຈະຢ້ານກົວທີ່ຈະຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນຊຸມຊົນຂອງຕົນ.

ຜູ້ຖືກເຄາະຮ້າຍທີ່ຕ້ອງການກັບຄືນປະເທດດ້ວຍຕົນເອງ, ຕ້ອງໄດ້ຮັບເງິນຊ່ວຍເຫຼືອ ເພື່ອຈ່າຍຄ່າເດີນທາງ ແລະ ຄ່າອາຫານ.

ໃຫ້ເບີໂທຕິດຕໍ່ແກ່ຜູ້ຖືກເຄາະຮ້າຍ ຖ້າເຂົາເຈົ້າຕ້ອງການ ການຊ່ວຍເຫຼືອໃດນຶ່ງ ໃນເວລາເດີນທາງກັບຄືນ.

90 ບັນທຶກສະບັບເລກທີ 36, *ການຄ້າມະນຸດ, ສິດທິມະນຸດ*, ໜ້າທີ່ 41.

# 3. ການສະໜັບສະໜູນ ແລະ ການບໍລິການການກັບຄືນສູ່ສັງຄົມ ມີຂໍ້ ຈໍາກັດ ແລະ/ຫຼື ບໍ່ສອດຄ່ອງກັບຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ

ການຊ່ວຍເຫຼືອໃນການຟື້ນຟູ, ທັກສະການຝຶກອົບຮົມ ແລະ ການສຶກສາ ເປັນສ່ວນໜຶ່ງໃນການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍ ແລະ ເປັນສິ່ງທີ່ຈໍາເປັນເພື່ອໃນການທໍາລາຍວົງຈອນການຖືກຄ້າມະນຸດຊໍ້າຄືນອີກ. ເຖິງຢ່າງໃດກໍຕາມ, ການບໍລິການການກັບຄືນສູ່ສັງຄົມ ອາດຈະຍັງບໍ່ມີພ້ອມ ຫຼື ບໍ່ເໝາະສົມກັບຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ ແລະ ສະພາບຄອບຄົວຂອງເຂົາເຈົ້າ.

ຜູ້ຖືກເຄາະຮ້າຍທີ່ເປັນຜູ້ຊາຍ ຍັງບໍ່ໄດ້ຮັບການບໍລິການທີ່ພຽງພໍໃນຫຼາຍໆປະເທດ ທີ່ມີສະຖານທີ່ພັກເຊົາ ແລະ ໂຄງການສໍາລັບແມ່ຍິງ ແລະ ເດັກຍິງ. ເຊັ່ນດຽວກັບຄົນພິການ, ຜູ້ຖືກເຄາະຮ້າຍຈາກການຄ້າແຮງງານ, ຜູ້ທີ່ມີອາການທາງຈິດຢ່າງຮ້າຍແຮງ, ບຸກຄົນທີ່ຕິດສານເສບຕິດ ແລະ ຄົນຕ່າງປະເທດ. ຜູ້ຖືກເຄາະຮ້າຍທີ່ເປັນເດັກ ມີຄວາມຕ້ອງການທີ່ສະຫຼັບຊັບຊ້ອນ ຫຼື ມີຄວາມຕ້ອງການ ການບໍລິການສະເພາະ ອາດຈະບໍ່ໄດ້ຮັບແຜນການບໍລິການ ແລະ ຊ່ວຍເຫຼືອໃນການກັບຄືນສູ່ສັງຄົມຕາມຄວາມຕ້ອງການ.

ຜູ້ຖືກເຄາະຮ້າຍຫຼາຍຄົນ ໄດ້ຮັບການອອກແບບໂຄງການຊ່ວຍເຫຼືອລ່ວງໜ້າ "ການຊ່ວຍເຫຼືອທີ່ເໝາະສົມກັບທຸກຄົນ" ທີ່ອາດຈະບໍ່ເໝາະສົມກັບສະຖານະການສະເພາະຂອງເຂົາເຈົ້າ. ສິ່ງຜົນໃຫ້ຜູ້ຖືກເຄາະຮ້າຍປະຕິເສດການຊ່ວຍເຫຼືອ ຫຼື ອອກຈາກໂຄງການ ການຊ່ວຍເຫຼືອໃນລະຫວ່າງທາງ. ນອກຈາກນີ້ ໂຄງການອາດຈະບໍ່ໄດ້ພິຈາລະນາເຖິງພັນທະຂອງຜູ້ຖືກເຄາະຮ້າຍທີ່ຕ້ອງຫາເງິນ ເພື່ອສະໜັບສະໜູນຄອບຄົວຂອງເຂົາເຈົ້າ.

ຜູ້ຖືກເຄາະຮ້າຍທີ່ໄດ້ຮັບການຝຶກອົບຮົມດ້ານວິຊາຊີບ ແລະ ພັດທະນາທັກສະ ອາດຈະພົບກັບທາງເລືອກທີ່ຈໍາກັດ, ເຮັດໄດ້ບາງສ່ວນ ຫຼື ບໍ່ສອດຄ່ອງກັບແຮງບັນດານໃຈຂອງເຂົາເຈົ້າ. ຕົວຢ່າງ, ຜູ້ຖືກເຄາະຮ້າຍອາດຈະໄດ້ຮັບການຝຶກອົບຮົມທັກສະສະເພາະ ທີ່ບໍ່ສາມາດນໍາໃຊ້ໄດ້ໃນບ່ອນທີ່ເຂົາເຈົ້າອາໄສຢູ່. ຫຼາຍໂຄງການໄດ້ນໍາສະເໜີຮູບແບບໂຄງການທີ່ເປັນມາດຕະຖານ ທີ່ບໍ່ໄດ້ຄໍານຶງເຖິງຄວາມຕ້ອງການສະເພາະບຸກຄົນ ແລະ ຄວາມຕ້ອງການດ້ານຜົນປະໂຫຍດ.



## ການກັບຄືນສູ່ສັງຄົມທີ່ປະສົບຜົນສຳເລັດເປັນແນວໃດ?



**ດຳລົງຊີວິດຢູ່ໃນສະພາບ ແວດລ້ອມທີ່ປອດໄພ ແລະ ໝັ້ນຄົງ**



**ເຂົ້າເຖິງມາດຕະຖານການດຳລົງ ຊີວິດທີ່ເໝາະສົມ**



**ສະຫວັດດີພາບດ້ານ ຮ່າງກາຍ**



**ສະຫວັດດີພາບດ້ານຈິດໃຈ**



**ໂອກາດໃນການພັດທະນາຕົນເອງ, ເສດຖະກິດ ແລະ ສັງຄົມ**



**ເຂົ້າເຖິງການ ສະໜັບສະໜູນດ້ານອາລົມ ແລະ ສັງຄົມ**

(ເອົາມາຈາກ Surtees, R and Laura S. Johnson (2021) ການຟື້ນຟູ ແລະ ກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຄູ່ມືສຳລັບຜູ້ປະຕິບັດຕົວຈິງ. ຫ້ອງການສະໜັບສະໜູນລະດັບພາກພື້ນຂອງຂະບວນການບາຫຼີ (RSO) ແລະ ວໍຊິງຕັນ ດີຊີ. ສະຖາບັນ NEXUS



# ຄຳແນະນຳການບໍ່ເຮັດໄພອັນຕະລາຍ

ຜູ້ຄຸ້ມຄອງຄະດີ ແລະ ນັກສັງຄົມສົງເຄາະ ຄວນຈະໃຫ້ບູລິມະສິດໃນການສ້າງຄວາມໄວ້ໃຈກັບຜູ້ຖືກເຄາະຮ້າຍໃນການພົບປະກັນຄັ້ງທຳອິດ ແລະ ຕະຫຼອດຂະບວນການຊ່ວຍເຫຼືອ. ຄວາມໄວ້ວາງໃຈຂອງຜູ້ຖືກເຄາະຮ້າຍຕໍ່ກັບຜູ້ສະໜອງການບໍລິການ ເປັນປັດໄຈທີ່ສຳຄັນໃນການກຳນົດການກັບຄືນສູ່ສັງຄົມຂອງເຂົາເຈົ້າໄດ້ຢ່າງຍືນຍົງ.[91] ມັນເປັນສິ່ງທີ່ສຳຄັນທີ່ຄວນຈື່ໄວ້ວ່າ ຜູ້ຖືກເຄາະຮ້າຍອາດຈະບໍ່ມີລະບົບການສະໜັບສະໜູນທາງສັງຄົມ. ປະສົບການຖືກຄ້າມະນຸດຂອງເຂົາເຈົ້າ ຈະມີຜົນກະທົບຕໍ່ກັບຄວາມສາມາດໃນການສ້າງສາຍສຳພັນທີ່ດີໃນອະນາຄົດ. ສະນັ້ນ, ຄວາມສຳພັນສ່ວນບຸກຄົນຂອງຜູ້ຖືກເຄາະຮ້າຍ ກັບຜູ້ສະໜອງການບໍລິການແກ່ເຂົາເຈົ້າ ໂດຍສະເພາະຢ່າງຍິ່ງ ຖ້າຫາກມີການສ້າງຄວາມໄວ້ວາງໃຈເຊິ່ງກັນ ແລະ ກັນ ຈະຊ່ວຍໃຫ້ການສະໜັບສະໜູນການຟື້ນຟູດ້ານອາລົມ ແລະ ຈິດໃຈ ໄດ້ດີຍິ່ງຂຶ້ນ.

ມອບໝາຍໃຫ້ຜູ້ຄຸ້ມຄອງຄະດີ ຫຼື ນັກສັງຄົມສົງເຄາະເຮັດວຽກກັບຜູ້ຖືກເຄາະຮ້າຍແຕ່ລະຄົນ. ດຳເນີນການປະເມີນຄວາມຕ້ອງການໂດຍລະອຽດ ໂດຍການປຶກສາກັບຜູ້ຖືກເຄາະຮ້າຍ ແລະ ກະກຽມແຜນການກັບຄືນສູ່ສັງຄົມ ທີ່ຕອບສະໜອງຕາມຄວາມຕ້ອງການທີ່ສຳຄັນສ່ວນບຸກຄົນຂອງເຂົາເຈົ້າ. ຈັດຫາຊັບພະຍາກອນ, ຂໍ້ມູນ ແລະ ຄຳແນະນຳເພື່ອຊ່ວຍໃຫ້ເຂົາເຈົ້າສາມາດຄຸ້ມຄອງການຟື້ນຟູ ແລະ ການກັບຄືນສູ່ສັງຄົມຂອງເຂົາເຈົ້າ.

ດຳເນີນການຄຸ້ມຄອງຄະດີຢ່າງຕໍ່ເນື່ອງ ແລະ ປະເມີນຄວາມຄືບໜ້າໃນການປະເມີນການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍ ເພື່ອຮັບປະກັນວ່າການບໍລິການເໝາະສົມ ແລະ ຕອບສະໜອງກັບຄວາມຕ້ອງການທີ່ຊັດເຈນຂອງຜູ້ຖືກເຄາະຮ້າຍໂດຍສອດຄ່ອງກັບມາດຕະຖານການເບິ່ງແຍງຂັ້ນຕ່ຳ ແລະ ສອດຄ່ອງກັບອາຍຸຂອງເຂົາເຈົ້າ (ຜູ້ໃຫຍ່ ຫຼື ເດັກນ້ອຍ).[92]

ການບໍລິການ ເພື່ອສະໜັບສະໜູນການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍທີ່ເປັນເດັກ ຕ້ອງປັບແຕ່ງໃຫ້ເຂົ້າກັບຄວາມຕ້ອງການສະເພາະສ່ວນບຸກຄົນຂອງເຂົາເຈົ້າ ແລະ ອອກແບບໃນການຈັດຕັ້ງປະຕິບັດໃນລັກສະນະທີ່ເປັນມິດກັບເດັກ.[93] ຫຼັກການກ່ຽວກັບສິດທິເດັກ ແລະ ອານຸສັນຍາສະເພາະຂອງເດັກ ຄວນສະໜັບສະໜູນວຽກນີ້.

ເອົາຜູ້ຖືກເຄາະຮ້າຍມີສ່ວນຮ່ວມໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນການກັບຄືນສູ່ສັງຄົມຂອງເຂົາເຈົ້າ. ສະໜອງຂໍ້ມູນກ່ຽວກັບສິດທິ, ທາງເລືອກ ແລະ ໂອກາດໃຫ້ແກ່ເຂົາເຈົ້າ ລວມທັງ ການການຕັດສິນໃຈທັງໝົດກ່ຽວກັບການບໍລິການທີ່ເຂົາເຈົ້າຕ້ອງການ (ແລະ ບໍ່ຕ້ອງການ) ທີ່ຈະໄດ້ຮັບ.[94]

ສະເໜີການບໍລິການ ແລະ ການຊ່ວຍເຫຼືອໃນການກັບຄືນສູ່ສັງຄົມບົນພື້ນຖານຄວາມສະໝັກໃຈຢ່າງເຂັ້ມງວດ. ອະທິບາຍໃຫ້ຜູ້ຖືກເຄາະຮ້າຍຕໍ່ກັບຜົນສະທ້ອນທີ່ເປັນໄປໄດ້ ແລະ ມີຄວາມສຳຄັນສຳລັບການບໍລິການທັງໝົດທີ່ຈັດໃຫ້. ຜູ້ຖືກເຄາະຮ້າຍຄວນມີພາບທີ່ຊັດເຈນກ່ຽວກັບທາງເລືອກ ແລະ ສິ່ງທີ່ເປັນໄປໄດ້ ທີ່ມີຢູ່. ການບໍລິການ ຄວນຈັດຫາໃຫ້ສະເພາະ ຜູ້ຖືກເຄາະຮ້າຍທີ່ໃຫ້ຄວາມຍິນຍອມ ໂດຍຄຳນຶງເຖິງຄວາມເປັນສ່ວນຕົວ ແລະ ການຮັກສາຄວາມລັບໂດຍເຂັ້ມງວດທີ່ສຸດ.

ໃນກໍລະນີທີ່ເປັນໄປໄດ້, ເຮັດວຽກຮ່ວມກັບຜູ້ສະໜອງການບໍລິການອື່ນໆ ເພື່ອຮັບປະກັນວ່າມີການບໍລິການທີ່ຫຼາກຫຼາຍ, ແລະ ກຸ່ມທີ່ບໍ່ໄດ້ຮັບການບໍລິການ ຈະບໍ່ພາດທີ່ຈະໄດ້ຮັບການສະໜັບສະໜູນການກັບຄືນສູ່ສັງຄົມ.

ໃຫ້ບູລິມະສິດໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ເພື່ອຊອກຫາໂອກາດໃນການຈ້າງງານຢ່າງເຕັມເວລາ, ຕາມກົດໝາຍ ແລະ ມີຄວາມໝັ້ນຄົງ. ມີວຽກເຮັດທີ່ປອດໄພ, ມີຄວາມໝັ້ນຄົງ ແລະ ໄດ້ຮັບຄ່າຕອບແທນທີ່ເປັນທຳ ເປັນສິ່ງທຳອິດທີ່ເຂົາເຈົ້າຕ້ອງການໃນການສ້າງຊີວິດໃໝ່ ແລະ ດຳເນີນຊີວິດຕໍ່ໄປ ຈາກປະສົບການການຄ້າມະນຸດຂອງເຂົາເຈົ້າ. ເຊິ່ງຊ່ວຍໃຫ້ເຂົາເຈົ້າໄດ້ຮັບກຽດສັກສີ ແລະ ອິດສະລະພາບຄືນ ແລະ ເປີດໂອກາດໃຫ້ໄດ້ຮັບຄວາມຊ່ວຍເຫຼືອອື່ນໆ ເຊັ່ນ: ການແພດ ແລະ ການເບິ່ງແຍງສຸຂະພາບ.[95]

91 Meshkovska, B., Bos, A.E., & Siegel, M.R. (2021). ການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນໄລຍະຍາວ ເພື່ອຈຸດປະສົງຂອງການຂູດຮີດທາງເພດ. *ການທົບທວນການສຶກສາຜູ້ຖືກເຄາະຮ້າຍດ້ານວິທະຍາສາດ, 27,* 245 - 271

92 Surtees, R ແລະ Laura S. Johnson (2021) *ການຟື້ນຟູ ແລະ ກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.* ຄູ່ມືສຳລັບຜູ້ປະຕິບັດຕົວຈິງ. ຫ້ອງການສະໜັບສະໜູນລະດັບພາກພື້ນຂອງຂະບວນການບາຫຼີ (RSO) ແລະ ວໍຊິງຕັນ ດີຊີ. ສະຖາບັນ NEXUS

93 Surtees, R. (2017). *ການສະໜັບສະໜູນ ການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍ: ຄູ່ມືສຳລັບພາກພື້ນລຸ່ມແມ່ນ້ຳຂອງ.* ບາງກອກ: ສະຖາບັນ NEXUS, ອົງການ UN-ACT ແລະ ອົງການສຸພານິມິດ

94 Surtees, R. (2017). *ການສະໜັບສະໜູນ ການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍ: ຄູ່ມືສຳລັບພາກພື້ນລຸ່ມແມ່ນ້ຳຂອງ.* ບາງກອກ: ສະຖາບັນ NEXUS, ອົງການ UN-ACT ແລະ ອົງການສຸພານິມິດ

95 ສະຖາບັນ Issara ແລະ A Lisborg, "ມຸ້ງໜ້າຕໍ່ກັບການຂັບເຄື່ອນຄວາມຕ້ອງການ, ການເພີ່ມຂີດຄວາມສາມາດໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ", ການວິໄຈໂດຍຫຍໍ້, ພຶດສະພາ 2017. ເບິ່ງທີ່

### ການປະຕິບັດທີ່ເປັນຕົວແບບທີ່ດີ:[96]

ກົມແຮງງານ, ຄົນພິການ ແລະ ກິດຈະກຳສັງຄົມຂອງຫວຽດນາມ (DOLISA) ໄດ້ຄຸ້ມຄອງສູນປົກປ້ອງທາງສັງຄົມໃນລະດັບທ້ອງຖິ່ນ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສາມາດຢູ່ໃນສູນໄດ້ເປັນເວລາສູງສຸດສາມເດືອນ ໂດຍມີຄ່າອາຫານ ແລະ ການຊ່ວຍເຫຼືອດ້ານການແພດ. ຜູ້ຖືກເຄາະຮ້າຍທັງພາຍໃນ ແລະ ຄົນຕ່າງປະເທດມີສິດໄດ້ຮັບການບໍລິການ: (i) ຄວາມຕ້ອງການທີ່ຈຳເປັນ ແລະ ຄ່າໃຊ້ຈ່າຍໃນການເດີນທາງ; (ii) ການສະໜັບສະໜູນທາງການແພດ; (iii) ການໃຫ້ຄຳປຶກສາ ແລະ ສະໜັບສະໜູນທາງດ້ານຈິດໃຈ ແລະ (iv) ການຊ່ວຍເຫຼືອທາງດ້ານກົດໝາຍ. ຜູ້ພັກອາໄສ ມີສິດໄດ້ຮັບການຍົກເວັ້ນຄ່າຮຽນ ແລະ ສະໜັບສະໜູນດ້ານການເງິນໃນການຝຶກວິຊາຊີບໄລຍະສັ້ນ. ສຳລັບບຸກຄົນໃດທີ່ບໍ່ຕ້ອງການຢູ່ໃນສູນຕໍ່ ພວກເຂົາຈະໄດ້ຮັບເງິນສຳລັບຄ່າອາຫານ ແລະ ຄ່າເດີນທາງກັບບ້ານ (ຕໍ່າສຸດ 70,000 ດົງ ຫຼື 3 ໂດລາສະຫະລັດ/ມື້). ສູນຍັງສະເໜີເງິນຊ່ວຍເຫຼືອສຳລັບຄວາມຍາກລຳບາກເບື້ອງຕົ້ນ (1,000,000 ດົງ ຫຼື 44 ໂດລາສະຫະລັດ ຕໍ່ຄົນ) ສຳລັບຜູ້ຖືກເຄາະຮ້າຍທີ່ມາຈາກຄອບຄົວທຸກຍາກ ເມື່ອເຂົາເຈົ້າເດີນທາງກັບບ້ານ.

ຫວຽດນາມ ມີໂຄງການຕິດຕາມ 24 ເດືອນ ເພື່ອປະເມີນຄວາມປອດໄພຢ່າງຕໍ່ເນື່ອງ ແລະ ສະຫວັດດີພາບຂອງຜູ້ຖືກເຄາະຮ້າຍພາຍຫຼັງກັບບ້ານ. ເຈົ້າໜ້າທີ່ຂັ້ນທ້ອງຖິ່ນ ຈະຕິດຕໍ່ຫາຜູ້ຖືກເຄາະຮ້າຍຢ່າງຕັ້ງໜ້າ ແລະ ກວດເບິ່ງທີ່ພັກອາໄສຂອງຜູ້ຖືກເຄາະຮ້າຍ ເພື່ອປະເມີນປະເພດຄວາມຕ້ອງການ ການສະໜັບສະໜູນ. ລັດຖະບານ ມີເຮືອນສັນຕິພາບ (Peace House) ທີ່ເປັນນະໂຍບາຍເປີດກວ້າງຮັບເອົາຜູ້ຖືກເຄາະຮ້າຍທີ່ກັບຄືນ ທີ່ມີຄວາມຫຍຸ້ງຍາກໃນການກັບຄືນສູ່ສັງຄົມໃນຊຸມຊົນຂອງເຂົາເຈົ້າ. ເຮືອນສັນຕິພາບ ໄດ້ຮັບເອົາຜູ້ຖືກເຄາະຮ້າຍບາງຄົນກັບຄືນເຂົ້າໃນສູນ/ທີ່ພັກອາໄສຂອງພວກເຂົາ ເປັນຄັ້ງທີສາມ ແລະ ສະໜັບສະໜູນເຂົາເຈົ້າຈົນວ່າເຂົາເຈົ້າຈະສາມາດກັບຄືນສູ່ສັງຄົມ ໃນຊຸມຊົນຂອງເຂົາເຈົ້າໄດ້ຢ່າງສຳເລັດ.

### ການປະຕິບັດທີ່ເປັນຕົວແບບທີ່ດີ:[97]

ລັດຖະບານກຳປູເຈຍ ໄດ້ເຮັດວຽກຢ່າງໃກ້ຊິດກັບຄູ່ຮ່ວມງານ NGO ໃນການສະໜັບສະໜູນການຟື້ນຟູຄືນ ແລະ ຄວາມເປັນເອກະລາດດ້ານເສດຖະກິດຂອງຜູ້ຖືກເຄາະຮ້າຍ. ສຳລັບຜູ້ຖືກເຄາະຮ້າຍທີ່ຕ້ອງການເຊົ່າໜ້າຮ້ານ ຫຼື ຊື້ທີ່ດິນເພື່ອເຮັດທຸລະກິດຂອງຕົນເອງ, ເຈົ້າໜ້າທີ່ຈະຊ່ວຍລະບຸອົງການ NGO ທີ່ມີງົບປະມານສະໜັບສະໜູນແຮງບັນດານໃຈຂອງເຂົາເຈົ້າ. ໂດຍສ່ວນໃຫຍ່ແລ້ວຈະໄດ້ຮັບການສະໜັບສະໜູນດ້ານການເງິນໃນຫົກເດືອນທຳອິດຂອງການດຳເນີນທຸລະກິດ. ຖ້າຫາກທຸລະກິດດຳເນີນໄປໄດ້ດີ ແລະ ສາມາດດຳເນີນໄດ້ຢ່າງເປັນເອກະລາດ, ຄູ່ຮ່ວມງານ NGO ກໍຈະຢຸດການສະໜັບສະໜູນແກ່ເຂົາເຈົ້າ.

96 ກອງປະຊຸມປຶກສາຫາລືລະດັບຊາດ ທີ່ປະເທດຫວຽດນາມ, ວັນທີ 8 ພະຈິກ 2021.

97 ກອງປະຊຸມປຶກສາຫາລືລະດັບຊາດ ທີ່ປະເທດກຳປູເຈຍ, ວັນທີ 3 ພະຈິກ 2021.

### ການປະຕິບັດທີ່ເປັນຕົວແບບທີ່ດີ:[98]

ໂຄງການຟື້ນຟູ ແລະ ການກັບຄືນສູ່ສັງຄົມສໍາລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (RRPTP) ໃນຟີລິບປິນ ເປັນໂຄງການ ແລະ ການບໍລິການທີ່ເຕັມຮູບແບບ ໂດຍມີເປົ້າໝາຍໃນການຟື້ນຟູ ແລະ ການກັບຄືນສູ່ສັງຄົມສໍາລັບຜູ້ຖືກເຄາະຮ້າຍ-ຜູ້ລອດຊີວິດຢ່າງເຕັມທີ່. ໂຄງການ ໄດ້ມີການເສີມຂະຫຍາຍໂດຍອີງໃສ່ຄວາມຕ້ອງການແທ້ຈິງຂອງຜູ້ຖືກເຄາະຮ້າຍ-ຜູ້ລອດຊີວິດຈາກການຄ້າມະນຸດ. ມັນໄດ້ຖືກຈັດຕັ້ງປະຕິບັດໃນຊຸມຊົນທີ່ມີການຄ້າມະນຸດສູງ. ເຊິ່ງມີສາມອົງປະກອບຄື: ການຟື້ນຟູ, ການກັບຄືນສູ່ສັງຄົມ ແລະ ການເພິ່ງພາຕົນເອງ. ຜູ້ສະໜອງການບໍລິການ ໄດ້ຮັບຮອງເອົາການຄຸ້ມຄອງຄະດີທີ່ຕອບສະໜອງຕໍ່ບົດບາດຍິງ-ຊາຍ ແລະ ວິທີການເບິ່ງແຍງທີ່ຮັບຮູ້ເຖິງຄວາມບອບຊໍ້າດ້ານຈິດໃຈຕໍ່ກັບຜູ້ໄດ້ຮັບຜົນປະໂຫຍດ.

### ການປະຕິບັດທີ່ເປັນຕົວແບບທີ່ດີ:[99]

ທາງການຟີລິບປິນ ໄດ້ຈັດກອງປະຊຸມກ່ຽວກັບຄະດີທີ່ກ່ຽວຂ້ອງກັບຜູ້ຖືກເຄາະຮ້າຍທີ່ເປັນເດັກ ແລະ ຄອບຄົວຂອງເຂົາເຈົ້າ, ແລະ ການສະໜັບສະໜູນພາຍຫຼັງການເບິ່ງແຍງ ໂດຍນັກສັງຄົມສົງເຄາະ ເພື່ອປຶກສາຫາລືຂະບວນການ ການກັບຄືນສູ່ສັງຄົມ. ລາຍງານການປະເມີນຄວາມສາມາດຂອງຜູ້ປົກຄອງ ທີ່ເຮັດຂຶ້ນໂດຍຜູ້ຄຸ້ມຄອງຄະດີ ເພື່ອຊ່ວຍໃຫ້ຜູ້ລອດຊີວິດກັບຄືນສູ່ສັງຄົມໄປຫາຍາດພີ່ນ້ອງທີ່ບໍ່ໄດ້ກະທໍາຜິດ. ສິ່ງດັ່ງກ່າວນີ້ ໄດ້ເຮັດຜ່ານການຢ້ຽມຢາມ ແລະ ສໍາພາດໂດຍຜູ້ຄຸ້ມຄອງຄະດີ. ກອງປະຊຸມກ່ຽວກັບຜູ້ລອດຊີວິດຈາກການຄ້າມະນຸດ ແມ່ນໄດ້ຈັດຂຶ້ນບ່ອນທີ່ຜູ້ຖືກເຄາະຮ້າຍ/ຜູ້ລອດຊີວິດ ສາມາດໃຫ້ຄໍາຄິດເຫັນກ່ຽວກັບສະຖານະການຂອງເຂົາເຈົ້າ, ຄຸນນະພາບຂອງການບໍລິການ ແລະ ສິ່ງທີ່ຕ້ອງປັບປຸງ. ຜູ້ສະໜອງການບໍລິການ ຮັບຮູ້ເຖິງຄຸນຄ່າຂອງຜູ້ລອດຊີວິດຈາກການຄ້າມະນຸດ ທີ່ໄດ້ກາຍມາເປັນກະບອກສຽງແຫ່ງຄວາມຫວັງສໍາລັບຜູ້ຖືກເຄາະຮ້າຍທີ່ໄດ້ຮັບການກອບກູ້ໃໝ່ ລວມທັງ ມີຜູ້ລອດຊີວິດເຂົ້າຮ່ວມໃນການຊ່ວຍເຫຼືອກອບກູ້ໃນບາງສ່ວນ. ເຄືອຂ່າຍຜູ້ລອດຊີວິດຂັ້ນທ້ອງຖິ່ນ ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ເກີດຂຶ້ນໃນເມືອງດາວາວ (Davao) (ມິນດານາວ - Mindanao) ແລະ ເມືອງແຊມໂບອັງກາ (Zamboanga) (ເພັນນິຊູລາ)

98 ກອງປະຊຸມປຶກສາຫາລືລະດັບຊາດ ທີ່ປະເທດຟີລິບປິນ, ວັນທີ 19 ຕຸລາ 2021.

99 ກອງປະຊຸມປຶກສາຫາລືລະດັບຊາດ ທີ່ປະເທດຟີລິບປິນ, ວັນທີ 19 ຕຸລາ 2021.

# 4. ການບໍລິການ ການສະໜັບສະໜູນ ແລະ ການກັບຄືນສູ່ສັງຄົມ ທີ່ບໍ່ໄດ້ອີງໃສ່ຊຸມຊົນ

ການບໍລິການ ແລະ ການສະໜັບສະໜູນການກັບຄືນສູ່ສັງຄົມ ສ່ວນໃຫຍ່ແມ່ນເຮັດຜ່ານໂຄງການສູນພັກເຊົາ, ສູນຝຶກອົບຮົມວິຊາຊີບ ແລະ ຄຣີນິກສະເພາະດ້ານທີ່ຕັ້ງຢູ່ເຂດຕົວເມືອງ. ການທີ່ບໍ່ມີການບໍລິການເຫຼົ່ານີ້ໃນລະດັບຊຸມຊົນ ໝາຍເຖິງວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຫຼາຍຄົນ ອາດຈະສິ້ນສຸດການຢູ່ທີ່ໃນສູນພັກເຊົາ ແລະ ຊັກຊ້າໃນການກັບຄືນສູ່ 'ຊີວິດປົກກະຕິ' ທີ່ບ້ານຂອງເຂົາເຈົ້າ. ຜູ້ຖືກເຄາະຮ້າຍ ທີ່ບໍ່ຕ້ອງການຢູ່ໃນສູນພັກເຊົາ (ລວມທັງເປັນໄລຍະເວລາດົນ) ຈະສູນເສຍໂອກາດໄດ້ຮັບການສະໜັບສະໜູນໃນການຟື້ນຟູ.

ນອກນັ້ນ ລັດຖະບານມີງົບປະມານທີ່ບໍ່ພຽງພໍໃຫ້ແກ່ນັກສັງຄົມສົງເຄາະ ຫຼື ຜູ້ທີ່ໃຫ້ຄໍາປຶກສາ ຜູ້ທີ່ສາມາດໃຫ້ການສະໜັບສະໜູນຜູ້ຖືກເຄາະຮ້າຍໃນຂັ້ນຊຸມຊົນ. ການຂາດການເບິ່ງແຍງຢ່າງຕໍ່ເນື່ອງໃນສະຖານທີ່ສົ່ງກັບຄືນນັ້ນ ສົ່ງຜົນຕໍ່ກັບຄວາມສາມາດຂອງຜູ້ຖືກເຄາະຮ້າຍ ໃນການຟື້ນຟູຢ່າງເຕັມສ່ວນຈາກປະສົບການການຄ້າມະນຸດຂອງເຂົາເຈົ້າ.

ຜູ້ຖືກເຄາະຮ້າຍສ່ວນໃຫຍ່ ບໍ່ໄດ້ເຂົ້າເຖິງການບໍລິການທີ່ອີງໃສ່ຊຸມຊົນເປັນພື້ນຖານ ເພື່ອໃຫ້ໄດ້ວຽກ ຫຼື ໄດ້ຮັບຄວາມເປັນເອກະລາດດ້ານເສດຖະກິດ, ໄດ້ຮັບການປິ່ນປົວ ຫຼື ເຂົ້າເຖິງການສຶກສາ, ອາດຈະເຮັດໃຫ້ວົງຈອນອັນໂຫດຮ້າຍຂອງການຖືກຂູດຮີດ ຫຼື ຄ້າມະນຸດນັ້ນ ຍາວນານຂຶ້ນ.



ຮູບພາບໂດຍ ຣາວີນາ ຣັດເຊວ

# ຄຳແນະນຳການບໍ່ເຮັດໃພອັນຕະລາຍ

ໃນເວລາທີ່ອອກແບບແຜນການກັບຄືນສູ່ສັງຄົມຮ່ວມກັບຜູ້ຖືກເຄາະຮ້າຍ, ພິຈາລະນາການບໍລິການ ການສະໜັບສະໜູນທີ່ມີຢູ່ໃນຂັ້ນຊຸມຊົນທ້ອງຖິ່ນຂອງເຂົາເຈົ້າ.

ຊີ້ສັດຕໍ່ກັບຜູ້ຖືກເຄາະຮ້າຍ ສຳລັບການບໍລິການ ການສະໜັບສະໜູນທີ່ເຂົາເຈົ້າສາມາດເຂົ້າເຖິງໃນເວລາກັບບ້ານ. ສົ່ງເສີມໃຫ້ເຂົາເຈົ້າຕັດສິນໃຈວ່າອັນໃດທີ່ເຂົາເຈົ້າຕ້ອງການຈະໄດ້ຮັບການບໍລິການ.

ມີສ່ວນຮ່ວມກັບຄອບຄົວຜູ້ຖືກເຄາະຮ້າຍ ໂດຍໄດ້ຮັບການຍິນຍອມຈາກຜູ້ຖືກເຄາະຮ້າຍ ຕໍ່ກັບແຜນການຟື້ນຟູ ແລະ ກັບຄືນສູ່ສັງຄົມ. ການສະໜັບສະໜູນຈາກຄອບຄົວ ມັກຈະມີບົດບາດທີ່ສຳຄັນ ທີ່ເຮັດໃຫ້ການກັບຄືນສູ່ສັງຄົມປະສົບຜົນສຳເລັດ ແລະ ຍືນຍົງ.

ເຮັດໃຫ້ຜູ້ຖືກເຄາະຮ້າຍໝັ້ນໃຈວ່າເຂົາເຈົ້າມີທາງເລືອກໃນການກັບຄືນສູນພັກເຊົາຢູ່ໃນເມືອງ ຫຼື ສູນອື່ນໆ ຖ້າຫາກວ່າມີສຳລັບຜູ້ຖືກເຄາະຮ້າຍ, ຖ້າຫາກເຂົາເຈົ້າຕັດສິນໃຈວ່າ ມັນທາງເລືອກທີ່ດີທີ່ສຸດໃນການກັບຄືນສູ່ສັງຄົມສຳລັບເຂົາເຈົ້າ.

ພັດທະນາການສ້າງເຄືອຂ່າຍຜູ້ສະໜອງການບໍລິການໃນຂັ້ນຊຸມຊົນ ເພື່ອຮັບປະກັນການບໍລິການຢ່າງຮອບດ້ານ ແລະ ການເບິ່ງແຍງຢ່າງຕໍ່ເນື່ອງ. ພວກເຂົາອາດຈະເປັນໜ່ວຍງານພາກລັດຂັ້ນທ້ອງຖິ່ນ, ອົງການທີ່ອີງໃສ່ຊຸມຊົນເປັນພື້ນຖານ, ໂບດ, ສະຫະພັນແມ່ຍິງ ແລະ ອື່ນໆ.

## ສິ່ງທ້າທາຍ:[100]

ການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນຫວຽດນາມ ຢ່າງປະສົບຜົນສຳເລັດນັ້ນ ຍັງເປັນສິ່ງທ້າທາຍ. ຜູ້ຖືກເຄາະຮ້າຍຫຼາຍຄົນມີຄວາມຮູ້ໜັງສືທີ່ຈຳກັດ ແລະ ບໍ່ຜ່ານເງື່ອນໄຂໃນການເຂົ້າຝຶກອົບຮົມວິຊາຊີບ. ບາງຄົນບໍ່ສາມາດເຂົ້າຮ່ວມການຝຶກອົບຮົມທັງໝົດ ເນື່ອງຈາກຂາດແຮງບັນດານໃຈ ແລະ ຄວາມອົດທົນ. ສຳລັບຄົນອື່ນໆ, ໄລຍະເວລາການຝຶກອົບຮົມສັ້ນເກີນໄປ ທີ່ຈະເຮັດໃຫ້ເຂົາເຈົ້າໄດ້ຮັບທັກສະຢ່າງເໝາະສົມ. ນອກນັ້ນ, ຜູ້ຖືກເຄາະຮ້າຍຫຼາຍຄົນ ຍັງສືບຕໍ່ພົບກັບສິ່ງຫຍຸ້ງຍາກໃນການຊອກຫາວຽກທີ່ໝັ້ນຄົງ ແລະ ມີລາຍຮັບແນ່ນອນ. ສິ່ງດັ່ງກ່າວນີ້ ຍິ່ງເຮັດໃຫ້ຫຍຸ້ງຍາກຂຶ້ນກວ່າເກົ່າ ເມື່ອຜູ້ຖືກເຄາະຮ້າຍອາໄສຢູ່ໃນເຂດຫ່າງໄກ/ຊົນນະບົດ ທີ່ມີໂອກາດໃນການເຮັດວຽກທີ່ຈຳກັດ.

## ສິ່ງທ້າທາຍ:[101]

ສູນກາງສະຫະພັນແມ່ຍິງລາວ ຄຸ້ມຄອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຫຼາຍກວ່າ 100 ກໍລະນີ ແຕ່ມີພຽງຈຳນວນໜຶ່ງເທົ່ານັ້ນທີ່ປະສົບຜົນສຳເລັດໃນການກັບຄືນສູ່ສັງຄົມ. ປັດໄຈທີ່ສົ່ງຜົນເຮັດໃຫ້ການກັບຄືນສູ່ສັງຄົມປະສົບຜົນສຳເລັດ ລວມມີ ຄວາມພ້ອມຂອງຜູ້ຖືກເຄາະຮ້າຍ ແລະ ສະພາບເສດຖະກິດ-ສັງຄົມຂອງເຂົາເຈົ້າ. ການສະໜັບສະໜູນຂອງຄອບຄົວທີ່ເຂັ້ມແຂງ ແລະ ການສະໜັບສະໜູນແບບເພື່ອນຕໍ່ເພື່ອນທີ່ມີຢູ່ນັ້ນ (ເຊັ່ນ: ການແບ່ງປັນປະສົບການ ໂດຍອະດີດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ) ທີ່ໄດ້ຮັບການກ່າວເຖິງນັ້ນ ແມ່ນມີຄວາມສຳຄັນ.

100 ກອງປະຊຸມປຶກສາຫາລືລະດັບຊາດ ທີ່ປະເທດຫວຽດນາມ, ວັນທີ 8 ພະຈິກ 2021.

101 ກອງປະຊຸມປຶກສາຫາລືລະດັບຊາດ ທີ່ ສປປ ລາວ, ວັນທີ 17 ທັນວາ 2021.

# 5. ໂຄງການ ການກັບຄືນສູ່ສັງຄົມ ທີ່ເປັນການສົ່ງເສີມແນວຄິດດັ້ງເດີມກ່ຽວກັບບົດບາດຍິງ-ຊາຍ ແລະ ບັນທັດຖານທາງສັງຄົມທີ່ເປັນອັນຕະລາຍ

ບາງໂຄງການ ໃນການບໍລິການການກັບຄືນສູ່ສັງຄົມ ສະແດງໃຫ້ເຫັນເຖິງສົມມຸດຕິຖານ ແລະ ອັກຄະຕິກ່ຽວກັບບົດບາດຍິງ-ຊາຍ ໂດຍການຊ່ວຍເຫຼືອຜູ້ຍິງ ມັກຈະເປັນພື້ນຖານ ແລະ ເນັ້ນໃສ່ຄວາມຕ້ອງການ ການຊ່ວຍເຫຼືອທາງດ້ານຈິດໃຈ ແລະ ອາລົມຂອງຜູ້ຖືກເຄາະຮ້າຍ ລວມທັງທັກສະຊີວິດ, ໃນຂະນະທີ່ການຊ່ວຍເຫຼືອຜູ້ຊາຍ ເນັ້ນໃສ່ການເຕີມເຕັມບົດບາດຂອງເຂົາເຈົ້າໃນຖານະຜູ້ຫາລ້ຽງຄອບຄົວ. ໃນກໍລະນີອື່ນ, ຜູ້ຖືກເຄາະຮ້າຍເພດຊາຍ ມັກຈະຖືກເບິ່ງວ່າມີຄວາມຕ້ອງການຫຼາຍກວ່າຜູ້ຖືກເຄາະຮ້າຍເພດຍິງ ເຊິ່ງນໍາໄປສູ່ການບໍລິການບາງຢ່າງ ເຊັ່ນ: ການໃຫ້ຄໍາປຶກສາ ເຊິ່ງມັກຈະບໍ່ມີໃຫ້ແກ່ຜູ້ຊາຍ.[102]

ນອກນັ້ນແລ້ວ, ແມ່ຍິງມີແນວໂນ້ມທີ່ຈະໄດ້ຮັບການຝຶກອົບຮົມວິຊາຊີບກ່ຽວກັບ ການຈັດແຕ່ງຊົງຜົມ, ການຕັດຫຍິບ, ຖັກແສ່ວ, ການຕັດເສື້ອຜ້າ ຫຼື ຕັດຫຍິບ, ການແຕ່ງກິນ ຫຼື ເຮັດເຂົ້າໜົມ ຫຼື ການລ້ຽງສັດ ແລະ ຜູ້ຊາຍມັກຈະໄດ້ຮັບການຝຶກອົບຮົມກ່ຽວກັບການຕັດຜົມ, ການລ້ຽງສັດ, ການສ້ອມແປງລົດຈັກ, ການສ້ອມແປງວິທະຍຸ, ສ້ອມແປງເຄື່ອງໃຊ້ໄຟຟ້າ ຫຼື ສ້ອມແປງແອ.[103] ການຝຶກອົບຮົມດັ່ງກ່າວສະແດງໃຫ້ເຫັນເຖິງແນວຄິດດັ້ງເດີມກ່ຽວກັບບົດບາດຍິງ-ຊາຍ ແລະ ແນວຄິດເກົ່າດັ້ງເດີມ ຕໍ່ກັບຄວາມຄິດເຫັນກ່ຽວກັບທັກສະຂອງຜູ້ຍິງ ແລະ ຜູ້ຊາຍ. ຮ້າຍແຮງໄປກວ່ານັ້ນ, ມັນເຮັດໃຫ້ມີຄວາມສ່ຽງກ່ຽວກັບການແບ່ງແຍກອາຊີບຕາມເພດ ສົ່ງຜົນເຮັດໃຫ້ມີຜົນກະທົບຕໍ່ກັບແມ່ຍິງທີ່ມີຄ່າແຮງຕໍ່າ, ຕໍ່າກວ່າມູນຄ່າ, ຖືກຂູດຮີດ ແລະ ມີຄວາມສ່ຽງໃນອາຊີບ.[104]

## ຄໍາແນະນໍາການບໍ່ເຮັດໃຫ້ອັນຕະລາຍ

ປຶກສາກັບຜູ້ຖືກເຄາະຮ້າຍກ່ຽວກັບທັກສະທີ່ເຂົາເຈົ້າມີ ແລະ ສິ່ງທີ່ເຂົາເຈົ້າສົນໃຈທີ່ຈະໄດ້ຮັບ. ສົ່ງເສີມຜູ້ຖືກເຄາະຮ້າຍ ໂດຍສະເພາະແມ່ຍິງ ແລະ ເດັກ ໃຫ້ເພີ່ມທັກສະ ເພື່ອຫຼີກລ້ຽງການຕົກຢູ່ໃນວຽກທີ່ໄດ້ຮັບຄ່າແຮງຕໍ່າ, ຄ່າແຮງຕໍ່າເກີນໄປ ແລະ ຖືກຂູດຮີດ.

ຄໍານຶງເຖິງປະຫວັດທາງວັດທະນະທໍາຂອງຜູ້ຖືກເຄາະຮ້າຍ ເຊິ່ງຈະສົ່ງຜົນຕໍ່ກັບການຕັດສິນໃຈຂອງເຂົາເຈົ້າຕໍ່ກັບປະເພດຂອງການຊ່ວຍເຫຼືອ ແລະ ການຝຶກອົບຮົມວິຊາຊີບທີ່ເຂົາເຈົ້າຕ້ອງການຈະໄດ້ຮັບ. ຊຸກຍູ້ໃຫ້ເຂົາເຈົ້າຄິດນອກເໜືອຈາກແນວຄິດດັ້ງເດີມກ່ຽວກັບບົດບາດຍິງ-ຊາຍວ່າ ຜູ້ຍິງຄວນເຮັດຫຍັງ ຫຼື ຜູ້ຊາຍຄວນເຮັດຫຍັງ ແລະ ຫ້າມກົດດັນເຂົາເຈົ້າ ຖ້າຫາກເຂົາເຈົ້າບໍ່ສະບາຍໃຈ.

ສະເໜີການຝຶກອົບຮົມກ່ຽວກັບທັກສະຊີວິດທີ່ເປັນປະໂຫຍດແກ່ຜູ້ຖືກເຄາະຮ້າຍທັງໝົດ ທັງຜູ້ຍິງ ແລະ ຜູ້ຊາຍ ເຊັ່ນ: ຄວາມຮູ້ຂັ້ນພື້ນຖານ, ຄວາມຮູ້ດ້ານການເງິນ, ປະຖົມພະຍາບານ, ຄວາມປອດໄພ ແລະ ສຸຂະພາບ, ການວາງແຜນຄອບຄົວ, ການຈັດການຄວາມເຄັ່ງຄຽດ, ຄວາມຮູ້ພື້ນຖານກ່ຽວກັບໄອທີ ແລະ ອື່ນໆ.

ເນັ້ນໃສ່ການໃຫ້ການຊ່ວຍເຫຼືອ ແລະ ການຝຶກອົບຮົມ ທີ່ສະໜັບສະໜູນການສ້າງຄວາມພູມໃຈໃນຕົນເອງ ແລະ ສ້າງຄວາມໝັ້ນໃຈ ໃຫ້ແກ່ຜູ້ຖືກເຄາະຮ້າຍທັງຜູ້ຍິງ ແລະ ຜູ້ຊາຍ. ສ້າງສະພາບແວດລ້ອມທີ່ດີ ແລະ ມີການສະໜັບສະໜູນ ໂດຍທີ່ຜູ້ຖືກເຄາະຮ້າຍ ມີອິດສະລະໃນການເລືອກການຊ່ວຍເຫຼືອທີ່ເຂົາເຈົ້າຕ້ອງການ ແລະ ມີໂອກາດໃນການສ້າງຊີວິດໃໝ່ ຫຼັງຈາກປະສົບການທີ່ມີຄວາມບອບຊໍ້າທາງດ້ານຈິດໃຈ.

102 Surtees, R ແລະ Laura S. Johnson (2021) *ການຟື້ນຟູ ແລະ ກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.* ຄູ່ມືສໍາລັບຜູ້ປະຕິບັດຕົວຈິງ. ຫ້ອງການສະໜັບສະໜູນລະດັບພາກພື້ນຂອງຂະບວນການບາຫຼີ (RSO) ແລະ ວໍຊິງຕັນ ດີຊີ. ສະຖາບັນ NEXUS

103 ອົງການສະຫະປະຊາຊາດເພື່ອສົ່ງເສີມຄວາມສະເໝີພາບຍິງ-ຊາຍ - UN Women (2020). *ການເຄື່ອນໄຫວທາງດ້ານເພດຂອງການຄ້າມະນຸດໃນທົ່ວກໍາປູເຈຍ, ມຽນມາ ແລະ ໄທ.* ບາງກອກ: ອົງການ UN Women.

104 ອົງການສະຫະປະຊາຊາດເພື່ອສົ່ງເສີມຄວາມສະເໝີພາບຍິງ-ຊາຍ - UN Women (2020). *ການເຄື່ອນໄຫວທາງດ້ານເພດຂອງການຄ້າມະນຸດໃນທົ່ວກໍາປູເຈຍ, ມຽນມາ ແລະ ໄທ.* ບາງກອກ: ອົງການ UN Women.

# ດ້ານການແພດ ແລະ ສຸຂະພາບຈິດ

ສິດດ້ານສຸຂະພາບ ເປັນສິດທິມະນຸດຂັ້ນພື້ນຖານ. ສໍາລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ການເຂົ້າເຖິງການດູແລດ້ານການແພດ ແລະ ດ້ານສຸຂະພາບຈິດເປັນສິ່ງທີ່ສໍາຄັນ. ໂດຍສ່ວນໃຫຍ່ແລ້ວເຂົາເຈົ້າມີບັນຫາດ້ານສຸຂະພາບເລັກນ້ອຍ ຫຼື ຮຸນແຮງ. ສຸຂະພາບດ້ານຮ່າງກາຍ ແລະ ຈິດໃຈຂອງເຂົາເຈົ້າອາດໄດ້ຮັບຄວາມເສຍຫາຍ ຈາກເງື່ອນໄຂຂອງການຖືກຂູດຮີດ ແລະ ທໍາຮ້າຍຮ່າງກາຍໂດຍກົງ ທີ່ເປັນມາດຕະການໃນການຄວບຄຸມ.[105] ບາງຄົນອາດຈະມີອາການເຈັບປ່ວຍ ຫຼື ມີຄວາມພິການດ້ານຮ່າງກາຍໃນໄລຍະທີ່ຖືກຄ້າມະນຸດ. ແມ່ຍິງ ແລະ ເດັກນ້ອຍ ທີ່ຖືກຂູດຮີດທາງເພດ ອາດຈະມີພະຍາດຕິດຕໍ່ທາງເພດສໍາພັນ ແລະ/ຫຼື ຖືພາໄດ້.

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສ່ວນໃຫຍ່ມີຄວາມສ່ຽງດ້ານສຸຂະພາບ ທັງກ່ອນ, ລະຫວ່າງ ແລະພາຍຫຼັງການຖືກຂູດຮີດ ເຊັ່ນ ໃນເວລາທີ່ເຂົາເຈົ້າຖືກກັກຂັງໃນສູນກັກຂັງ ຫຼື ຄຸກ ຫຼື ໃນເວລາທີ່ເຂົາເຈົ້າຢູ່ຕາມທ້ອງຖະໜົນ ເຊິ່ງມັກຈະຖືກປະຖິ້ມຈາກການຊ່ວຍເຫຼືອ. ຄວາມສາມາດຂອງຜູ້ຖືກເຄະຮ້າຍໃນການຟື້ນຟູ ຂຶ້ນກັບການປິ່ນປົວຢ່າງເໝາະສົມ ແລະ ທັນເວລາ. ການຈັດການກັບຄວາມຕ້ອງການດ້ານການແພດທີ່ມີຄວາມຫຼາກຫຼາຍ ແລະ ອ່ອນໄຫວຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດນັ້ນ ເປັນສິ່ງທີ່ທ້າທາຍ.

ໃນບາງກໍລະນີ, ຜູ້ປະຕິບັດຕົວຈິງດ້ານການປິ່ນປົວ ມັກຈະເປັນຜູ້ທໍາອິດໃນການຕິດຕໍ່. ຄົນເຈັບອາດຈະເປີດເຜີຍປະສົບການຄ້າມະນຸດ ຫຼື ຜູ້ໃຫ້ບໍລິການອາດຈະພົບເຫັນສັນຍານ ທີ່ບົ່ງບອກວ່າບຸກຄົນນັ້ນຖືກຄ້າມະນຸດ. ໃນເລື່ອງດັ່ງກ່າວນີ້, ການຮັກສາສຸຂະພາບເປັນຮູບແບບກາງໃນການປ້ອງກັນ ແລະ ສະໜັບສະໜູນເຄືອຂ່າຍ ມາດຕະການໃນການຕ້ານການຄ້າມະນຸດ.

105 ອົງການ IOM (2009). *ການເບິ່ງແຍງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຄໍາແນະນໍາສໍາລັບຜູ້ສະໜອງການເບິ່ງແຍງດ້ານສຸຂະພາບ.* ເຈນີວາ: ອົງການIOM.



**ສະຫຼຸບບັນຫາດ້ານສຸຂະພາບດ້ານຮ່າງກາຍ ແລະ ຈິດໃຈ ທີ່ເປັນຜົນສະທ້ອນມາຈາກການຖືກຄ້າມະນຸດ[106]**

**ດ້ານຮ່າງກາຍ**

- ການບາດເຈັບດ້ານຮ່າງກາຍ/ຂຽວຊ້ຳ ແລະ ແຂນຂາຫັກ
- ພະຍາດຕິດຕໍ່ ລວມທັງ ພະຍາດຕິດຕໍ່ທາງເພດສໍາພັນ (HIV/AIDS ແລະ ພະຍາດຕິດຕໍ່ທາງເພດສໍາພັນອື່ນໆ).
- ຂາດສານອາຫານ
- ຂາດເຄື່ອງນຸ່ງຮົ່ມທີ່ພຽງພໍ
- ຂາດທີ່ພັກເຊົາ ຫຼື ສູນພັກເຊົາທີ່ເໝາະສົມ

**ດ້ານຈິດໃຈ**

- ນັບຖືຕົນເອງຕໍ່າ
- ຊຶມເສົ້າ
- ມີຄວາມບອບຊ້ຳດ້ານຈິດໃຈ
- ມີຄວາມຢ້ານກົວ, ຄວາມບໍ່ປອດໄພ ແລະ ວິຕົກກັງວົນ
- ບໍ່ໄວ້ວາງໃຈຕົນເອງ ແລະ ຜູ້ອື່ນ
- ມີການໃຊ້ສານເສບຕິດ ແລະ ສິ່ງເສບຕິດ

ອັນຕະລາຍຕໍ່ໄປນີ້ ໄດ້ຮັບການລະບຸວ່າເປັນເລື່ອງປົກກະຕິໃນເວລາທີ່ໃຫ້ການປິ່ນປົວ ແລະ ເບິ່ງແຍງດ້ານຈິດໃຈແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນອາຊຽນ. ໃນຖານະທີ່ເປັນຜູ້ຕອບໂຕ້ຜູ້ທໍາຜິດ ຫຼື ຜູ້ໃຫ້ການສະໜັບສະໜູນ, ມັນເປັນສິ່ງທີ່ສໍາຄັນທີ່ທ່ານຕ້ອງຄໍານຶງເຖິງໄພອັນຕະລາຍທີ່ອາດຈະເກີດຂຶ້ນ ແລະ ພິຈາລະນາຄໍາແນະນໍາການບໍ່ເຮັດໄພອັນຕະລາຍ ເພື່ອເປັນແນວທາງໃນການປ້ອງກັນ ຫຼື ຫຼຸດຜ່ອນໄພອັນຕະລາຍເຫຼົ່ານີ້.

106 ດັດແປງມາຈາກ ອົງການ IOM (2009). *ການເບິ່ງແຍງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຄໍາແນະນໍາສໍາລັບຜູ້ສະໜອງການເບິ່ງແຍງດ້ານສຸຂະພາບ.* ເຈນີວາ: ອົງການIOM.

# 1. ຂາດການເຂົ້າເຖິງການປິ່ນປົວ ແລະ ການເບິ່ງແຍງດ້ານຈິດໃຈໂດຍທັນທີ

ການຂາດການເຂົ້າເຖິງການບໍລິການດ້ານການແພດໂດຍບໍ່ເສຍຄ່າ ຫຼື ໃນລາຄາທີ່ສາມາດເຂົ້າເຖິງໄດ້ນັ້ນ ເປັນອຸປະສັກທີ່ສໍາຄັນຂອງຜູ້ຖືກເຄາະຮ້າຍໃນການເຂົ້າເຖິງການເບິ່ງແຍງດ້ານສຸຂະພາບທີ່ຈໍາເປັນ. ຜູ້ຖືກເຄາະຮ້າຍທີ່ໄດ້ຮັບການກໍານົດຕົວ ອາດຈະບໍ່ໄດ້ຖືກສົ່ງຕໍ່ໄປຍັງໂຮງໝໍ ຫຼື ຄຣີນິກ ເນື່ອງຈາກຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ ແລະ ຂາດງົບປະມານທີ່ຈັດສັນ ໃຫ້ແກ່ການເບິ່ງແຍງສຸຂະພາບ ພາຍໃນໜ່ວຍງານທີ່ກ່ຽວຂ້ອງ. ຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດມີຄວາມສ່ຽງເປັນພິເສດ ເນື່ອງຈາກລະບົບປະກັນສຸຂະພາບພາຍໃນປະເທດ ບໍ່ໄດ້ຄຸ້ມຄອງບຸກຄົນຕ່າງປະເທດ. ເຊິ່ງຕ້ອງໃຊ້ເອກະສານ ແລະ ເວລາດົນ ເພື່ອທີ່ຈະໃຫ້ຜູ້ຖືກເຄາະຮ້າຍ ສາມາດເຂົ້າເຖິງການປິ່ນປົວ ແລະ ການເບິ່ງແຍງສຸຂະພາບ. ດັ່ງນັ້ນ ໂອກາດທີ່ເຂົາເຈົ້າຈະຖືກເມີນເສີຍ ມີສູງ.

ການຖືກສັງຄົມປະນາມກ່ຽວກັບພະຍາດຕິດຕໍ່ທາງເພດສໍາພັນ ເຊັ່ນ HIV/AIDs, ການຫຼູລູກ ແລະ ການໃຊ້ສິ່ງເສບຕິດເຮັດໃຫ້ຜູ້ຖືກເຄາະຮ້າຍບາງຄົນບໍ່ໄດ້ຮັບການປິ່ນປົວທີ່ສໍາຄັນ. ທ່ານໝໍ ຫຼື ພະຍາບານ ອາດຈະບໍ່ເຕັມໃຈທີ່ຈະປິ່ນປົວກໍລະນີເຫຼົ່ານີ້. ນອກນັ້ນ ຍັງມີແນວໂນ້ມທີ່ຈະຕໍານິຜູ້ຖືກເຄາະຮ້າຍຈາກການຖືກຂູດຮີດທາງເພດ ສໍາລັບການເຈັບປ່ວຍ ແລະ ການຖືພາຂອງເຂົາເຈົ້າ.



ຮູບພາບໂດຍ ບໍລິສັດ ທັນຍະກິດ ຈາກອັນສູເປສ

# ຄຳແນະນຳການບໍ່ເຮັດໃພອັນຕະລາຍ

ປະເມີນວ່າຜູ້ຖືກເຄາະຮ້າຍຕ້ອງການ ການປິ່ນປົວໂດຍດ່ວນ ຫຼື ບໍ່ ແລະ ສົ່ງຕໍ່ເຂົາເຈົ້າໄປຫາທ່ານໝໍ ຫຼື ແພດ ໄວເທົ່າທີ່ຈະໄວໄດ້.

ໃນກໍລະນີທີ່ເປັນໄປໄດ້, ສົ່ງຕໍ່ຜູ້ຖືກເຄາະຮ້າຍໄປຫາຜູ້ປະຕິບັດຕົວຈິງດ້ານການແພດທີ່ໄດ້ຮັບການຝຶກອົບຮົມ ທີ່ມີປະສົບການໃນການປິ່ນປົວກໍລະນີຄ້າມະນຸດ. ສ້າງລາຍຊື່ຜູ້ປະກອບວິຊາຊີບດ້ານການແພດ ເພື່ອສະດວກໃນການອ້າງອີງເຖິງ ໃນອະນາຄົດ.

ປະສານງານກັບໜ່ວຍງານອື່ນ ຫຼື ຄູ່ຮ່ວມງານ NGO ເພື່ອຮັບປະກັນວ່າ ການເບິ່ງແຍງດ້ານສຸຂະພາບນັ້ນ ບໍ່ໄດ້ຖືກປະຕິເສດຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເນື່ອງຈາກຂາດງົບປະມານ ຫຼື ບຸກຄະລາກອນ.

ຫຼີກລ້ຽງການຖາມຄຳຖາມ ຫຼື ມີຄຳເຫັນຕໍ່ກັບເງື່ອນໄຂດ້ານສຸຂະພາບຂອງຜູ້ຖືກເຄາະຮ້າຍ ທີ່ອາດຈະເປັນການຊີ້ໃຫ້ເຫັນເຖິງການບໍ່ເຫັນດີນຳ ຫຼື ມີການຕຳນິ.

ສະເໜີການກວດກ່ຽວກັບການຖືພາ ລວມທັງພະຍາດ HIV ແລະ ການຕິດຕໍ່ທາງເພດສຳພັນອື່ນໆ ເມື່ອຫ້ອງທົດລອງສາມາດເຮັດໄດ້. ຈັດໃຫ້ມີການຄຸມກຳເນີດແບບສຸກເສີນ ໃນກໍລະນີທີ່ເປັນໄປໄດ້ ແກ່ແມ່ຍິງທຸກຄົນ ໃນໄວສຸຂະພາບຈະເລີນພັນ.

ສະເໜີການໃຫ້ຄຳປຶກສາ ກ່ອນການກວດ ແລະ ແຜນການຕິດຕາມສະເພາະ ເພື່ອແຈ້ງຜົນ ແລະ ໃຫ້ຄຳປຶກສາແກ່ຜູ້ຖືກເຄາະຮ້າຍຕໍ່ກັບຜົນລັບ. ສິ່ງນີ້ ຄວນລວມມີແຜນການປິ່ນປົວ ແລະ ການສົ່ງຕໍ່ທີ່ເໝາະສົມ ຖ້າຫາກຜົນກວດຫາກເປັນບວກ.

### ການປະຕິບັດທີ່ເປັນຕົວແບບທີ່ດີ:[107]

ກະຊວງສາທາລະນະສຸກຂອງກຳປູເຈຍ ໄດ້ອອກນະໂຍບາຍກ່ຽວກັບສຸຂະພາບຂອງແຮງງານເຄື່ອນຍ້າຍ ໂດຍກຳນົດໃຫ້ໂຮງໝໍສົ່ງຕໍ່ທຸກແຫ່ງໃນເຂດຊາຍແດນ (ເຊັ່ນແຂວງ ບັດທຳບາງ (Battambang), ບັນທາຍ ມິນໄຈ (Banteay Meanchey) ແລະ ເກາະກົງ (Koh Kong)) ໃຫ້ການປິ່ນປົວໂດຍບໍ່ເສຍຄ່າໃຊ້ຈ່າຍໃຫ້ແກ່ແຮງງານເຄື່ອນຍ້າຍທຸກຄົນ ລວມທັງ ແຮງງານທີ່ບໍ່ແມ່ນຄົນກຳປູເຈຍ. ໃນແຂວງ ເກາະກົງ (Koh Kong) ມີເຫດການທີ່ແຮງງານເຄື່ອນຍ້າຍທີ່ເຮັດວຽກໃນເຂດຊາຍແດນໄທ ທີ່ເຈັບປ່ວຍໃນອັດຕາທີ່ສູງ. ແຮງງານເຫຼົ່ານີ້ໄດ້ຖືກສົ່ງໄປທີ່ໂຮງໝໍທີ່ມີການສົ່ງຕໍ່ໃນແຂວງ ເກາະກົງ ບ່ອນທີ່ເຂົາເຈົ້າໄດ້ຮັບການປິ່ນປົວໂດຍບໍ່ເສຍຄ່າບໍລິການ. ໂຮງໝໍຍັງສັກຢາວັກຊີນປ້ອງກັນ COVID-19 ໃຫ້ແກ່ຜູ້ຖືກເຄາະຮ້າຍທຸກຄົນທີ່ເຮັດວຽກໃນປະເທດໄທ ໂດຍບໍ່ເສຍຄ່າບໍລິການ.

107 ກອງປະຊຸມປຶກສາຫາລືລະດັບຊາດ ທີ່ປະເທດກຳປູເຈຍ, ວັນທີ 3 ພະຈິກ 2021

# 2. ການບໍລິການດ້ານສຸຂະພາບທີ່ຈຳກັດ ຫຼື ໄລຍະສັ້ນ

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຫຼາຍຄົນ ມີຄວາມຕ້ອງການໃນການເບິ່ງແຍງສຸຂະພາບຫຼາຍດ້ານ ທີ່ອາດຈະບໍ່ເຫັນຊັດເຈນໄດ້ໂດຍທັນທີ. ການສຳພັດກັບການຖືກໃຊ້ຄວາມຮຸນແຮງດ້ານຮ່າງກາຍ ແລະ ທາງເພດ, ການຖືກບີບບັງຄັບ ແລະ ຄວບຄຸມ, ການຖືກລ່ວງລະເມີດດ້ານຈິດໃຈ ແລະ ການເຮັດວຽກພາຍໃຕ້ເງື່ອນໄຂທີ່ບໍ່ປອດໄພ ນຳໄປສູ່ບັນຫາດ້ານຮ່າງກາຍ ແລະ ຈິດໃຈ. ຫຼາຍຄົນໄດ້ຮັບຜົນກະທົບຈາກຄວາມເຄັ່ງຄຽດ ພາຍຫຼັງຄວາມບອບຊໍ້າດ້ານຈິດໃຈ ເປັນເວລາຫຼາຍເດືອນ ຫຼາຍປີ.

ໃນພາກປະຕິບັດຕົວຈິງ, ການເບິ່ງແຍງສະເພາະດ້ານ ທີ່ຕ້ອງການແບບທັນທີ, ສະຫຼັບຊັບຊ້ອນ ຫຼື ໄລຍະຍາວຂອງຜູ້ຖືກເຄາະຮ້າຍນັ້ນ ມັກຈະມີຈຳກັດ. ຕົວຢ່າງ ຜູ້ຖືກເຄາະຮ້າຍບາງຄົນມີຄວາມບອບຊໍ້າດ້ານຈິດໃຈທີ່ຊັບຊ້ອນ ແລະ ຕ້ອງການການສະໜັບສະໜູນດ້ານຈິດໃຈຢ່າງຕໍ່ເນື່ອງ ຫຼື ບັນຫາດ້ານສຸຂະພາບທີ່ຊໍາເຮື້ອ ທີ່ຈຳເປັນຕ້ອງໄດ້ມີການປິ່ນປົວແບບຕໍ່ເນື່ອງ ຫຼື ການປິ່ນປົວແບບສະເພາະດ້ານ ເຊິ່ງມັນບໍ່ມີໃນຊຸມຊົນບ້ານເກີດຂອງເຂົາເຈົ້າ.[108]

## ຄຳແນະນຳການບໍ່ເຮັດໄພອັນຕະລາຍ

ສອບຖາມຜູ້ຖືກເຄາະຮ້າຍ ຖ້າຫາກເຂົາເຈົ້າມີຄວາມກັງວົນກ່ຽວກັບບັນຫາສຸຂະພາບ. ຜູ້ຖືກເຄາະຮ້າຍອາດຈະບໍ່ຄຳນຶງເຖິງ ຫຼື ບໍ່ພ້ອມທີ່ຈະແບ່ງປັນບັນຫາດ້ານສຸຂະພາບທັງໝົດແກ່ທ່ານ. ສັງເກດເບິ່ງສັນຍານຂອງອາການເຈັບເປັນອື່ນໆ ທີ່ບໍ່ໄດ້ກ່າວເຖິງ.

ຖ້າມີ, ປຶກສາກັບຜູ້ຊ່ຽວຊານດ້ານສຸຂະພາບຈິດທີ່ມີຄຸນວຸດທິ ຮ່ວມກັບນັກສັງຄົມສົງເຄາະມືອາຊີບ ເພື່ອອຳນວຍຄວາມສະດວກໃນການເບິ່ງແຍງທີ່ດີທີ່ສຸດ ດ້ວຍການໃຫ້ຢາທີ່ເໝາະສົມ.

ໃນການພັດທະນາການປິ່ນປົວ, ພິຈາລະນາ ແລະ ເຮັດວຽກຮ່ວມກັນໜ່ວຍງານຕ່າງໆ ແລະ NGO ເພື່ອແກ້ໄຂຕໍ່ກັບຄວາມຕ້ອງການດ້ານຕ່າງໆຂອງຜູ້ຖືກເຄາະຮ້າຍ ລວມທັງ ອາຫານ, ທີ່ພັກເຊົາ, ການສະໜັບສະໜູນດ້ານກົດໝາຍ, ສຸຂະພາບ, ການສຶກສາ ແລະ ພັດທະນາທັກສະດ້ານອາຊີບ. ສິ່ງເຫຼົ່ານີ້ ແມ່ນສິ່ງທີ່ສຳຄັນທັງໝົດໃນການສະໜັບສະໜູນການຟື້ນຟູຄືນໃຫ້ແກ່ຜູ້ຖືກເຄາະຮ້າຍ.

ບາງຄັ້ງ ມັນບໍ່ສາມາດເປັນໄປໄດ້ທີ່ຈະສົ່ງຜູ້ຖືກເຄາະຮ້າຍໄປຫາຜູ້ຊ່ຽວຊານດ້ານສຸຂະພາບຈິດ ຫຼື ການປິ່ນປົວສະເພາະດ້ານ ເນື່ອງຈາກວ່າ ຜູ້ຊ່ຽວຊານ ຫຼື ການປິ່ນປົວທີ່ມີໃຫ້ນັ້ນ ຫຼື ເນື່ອງຈາກຜູ້ຖືກເຄາະຮ້າຍປະຕິເສດທີ່ຈະຖືກສົ່ງໄປຫາ ຫຼື ຖືກເນລະເທດ ຫຼື ຖືກສົ່ງກັບບ້ານທັນທີ. ໃນກໍລະນີນີ້, ໃຫ້ພົບປະກັບຜູ້ຖືກເຄາະຮ້າຍໃຫ້ຫຼາຍທີ່ສຸດ ເພື່ອໃຫ້ມີຜົນກະທົບດ້ານບວກຕໍ່ກັບສຸຂະພາບຂອງເຂົາເຈົ້າ.

ປຶກສາວິທີການໃນການສ້າງກິດຈະວັດປະຈຳວັນທີ່ເຄີຍຖືກປະຕິເສດຄືນໃໝ່ ເຊັ່ນ ເວລາຮັບປະທານອາຫານ ແລະ ເວລານອນ. ຊຸກຍູ້ໃຫ້ນຳໃຊ້ວິທີການຮັບມືໃນທາງບວກ (ຕົວຢ່າງ ວິທີການຜ່ອນຄາຍທີ່ເໝາະສົມກັບວັດທະນະທຳ). ແນະນຳໃຫ້ຜູ້ຖືກເຄາະຮ້າຍວ່າ ຖ້າຫາກຍັງມີອາການຢູ່, ເຂົາເຈົ້າຈະຖືກສົ່ງຕໍ່ ເພື່ອຂໍຄວາມຊ່ວຍເຫຼືອເພີ່ມເຕີມ.

ໃຫ້ຄຳແນະນຳ ສະໜັບສະໜູນ ໂດຍບໍ່ມີການຕັດສິນກ່ຽວກັບການດື່ມແອວກໍຮໍ ຫຼື ໃຊ້ສານເສບຕິດ. ຊ່ວຍຜູ້ຖືກເຄາະຮ້າຍກຳນົດເປົ້າໝາຍໃນການຢຸດບໍລິໂພກ ແລະ ຊຸກຍູ້ເຂົາເຈົ້າໃຫ້ສະແດງແຮງຈູງໃຈ ໃນການຫຼຸດຜ່ອນການບໍລິໂພກນັ້ນ.

ນຳໃຊ້ວິທີການແກ້ໄຂບັນຫາ. ສ້າງຄວາມສາມາດໃຫ້ແກ່ຜູ້ຖືກເຄາະຮ້າຍ ຫຼາຍກວ່າທີ່ຈະບອກເຂົາເຈົ້າວ່າທາງເລືອກອັນໃດທີ່ເຂົາເຈົ້າຄວນຈະເຮັດ. ລະດົມສະໝອງກ່ຽວກັບບັນຫາຮ່ວມກັບເຂົາເຈົ້າ ເພື່ອຊ່ວຍໃຫ້ເຂົາເຈົ້າກຳນົດທາງເລືອກຂອງຕົນເອງໃນການປະເຊີນໜ້າກັບບັນຫາ ຫຼື ພັດທະນາແນວທາງການແກ້ໄຂບັນຫາ.

108 Surtees, R ແລະ Laura S. Johnson (2021) *ການຟື້ນຟູ ແລະ ກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຄູ່ມືສຳລັບຜູ້ປະຕິບັດຕົວຈິງ.* ຫ້ອງການສະໜັບສະໜູນລະດັບພາກພື້ນຂອງຂະບວນການບາຫຼີ (RSO) ແລະ ວໍຊິງຕັນ ດີຊີ. ສະຖາບັນ NEXUS.

## ສິ່ງທ້າທາຍ:

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຫຼາຍຄົນ ຈຳເປັນຕ້ອງໄດ້ຮັບການກວດຮ່າງກາຍຢ່າງລະອຽດ ແລະ ການປິ່ນປົວສຸຂະພາບໄລຍະຍາວ ຈາກຜູ້ປະກອບວິຊາຊີບດ້ານສຸຂະພາບທີ່ມີຄຸນວຸດທິທີ່ເໝາະສົມ. ບຸກຄົນທີ່ມີອາການບາດເຈັບພາຍໃນເປັນເວລາດົນຕ້ອງໄດ້ຮັບການສ່ອງກະແສໄຟຟ້າ (X-Ray), ການກວດທົດລອງດ້ານຈຸລິນຊີ, ພິດວິທະຍາ ເພື່ອກຳນົດຂອບເຂດຂອງອາການບາດເຈັບ. ຂັ້ນຕອນ ແລະ ການກວດສອບເຫຼົ່ານີ້ ອາດຈະມີລາຄາແພງ ແລະ ໃຊ້ເວລາ ແລະ ລັດມີຊັບພະຍາກອນທີ່ຈຳກັດໃຫ້ແກ່ເຂົາເຈົ້າ. ສິ່ງດັ່ງກ່າວນີ້ເປັນທັດສະນະບາງສ່ວນຈາກຜູ້ເຂົ້າຮ່ວມໃນກອງປະຊຸມປຶກສາຫາລືລະດັບຊາດໃນປະເທດຕ່າງໆ ທີ່ໄດ້ຈັດໃນເດືອນ ຕຸລາ ຫາ ເດືອນ ທັນວາ 2021. ເຊັ່ນດຽວກັບການປິ່ນປົວພະຍາດຊຳເຮື້ອ ແລະ ພະຍາດຕິດຕໍ່ທາງເພດສຳພັນເຊັ່ນ: HIV/AIDS ເຊິ່ງມີຜົນຕະຫຼອດຊີວິດ ແລະ ມີຄ່າໃຊ້ຈ່າຍສູງ ທີ່ສົ່ງຜົນກະທົບຕໍ່ກັບຄວາມສາມາດຂອງຜູ້ຖືກເຄາະຮ້າຍ ທີ່ຈະໄດ້ຮັບການປິ່ນປົວ.

ບຸກຄົນທີ່ອາໄສຢູ່ເຂດຫ່າງໄກສອກຫຼີກ ຫຼື ພື້ນທີ່ຫ່າງໄກ ອາດຈະເປັນໄປບໍ່ໄດ້ທີ່ຈະເຂົ້າເຖິງການເບິ່ງແຍງດ້ານສຸຂະພາບທີ່ມີຄຸນນະພາບ ແລະ/ຫຼື ເຂົ້າເຖິງຢາບາງປະເພດ ເນື່ອງຈາກຂາດຄວາມພ້ອມ. ການສະໜັບສະໜູນຈາກຄອບຄົວ ໃນການປິ່ນປົວຜູ້ຖືກເຄາະຮ້າຍເປັນສິ່ງທີ່ສຳຄັນ ແຕ່ມັນກໍບໍ່ມີສະເໝີໄປ. ຜູ້ຖືກເຄາະຮ້າຍທີ່ເປັນຄົນພິການ ຫຼື ມີຄວາມຕ້ອງການທີ່ຊັບຊ້ອນ ຍັງພົບກັບບັນຫາຫຍຸ້ງຍາກພິເສດອີກ ໃນການໄດ້ຮັບການເບິ່ງແຍງສຸຂະພາບທີ່ເໝາະສົມ ແລະ ຍືນຍົງ. ຂາດບຸກຄະລາກອນດ້ານການແພດທີ່ໄດ້ຮັບການຝຶກອົບຮົມ, ງົບປະມານຂອງລັດທີ່ມີເລັກນ້ອຍ ແລະ ການສະໜັບສະໜູນຈາກຄອບຄົວທີ່ຈຳກັດ ໝາຍຄວາມວ່າຜູ້ຖືກເຄາະຮ້າຍຫຼາຍຄົນ ບໍ່ໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫຼືອໃນການຟື້ນຟູສຸຂະພາບດ້ານຮ່າງກາຍ ແລະ ຈິດໃຈ.

# 3. ຂາດການເບິ່ງແຍງ ທີ່ຮັບຮູ້ເຖິງຄວາມບອບຊໍ້າດ້ານຈິດໃຈ

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະເປັນຜູ້ຖືກເຄາະຮ້າຍຊໍ້າຄືນອີກໃນຂະບວນການຂໍການເບິ່ງແຍງດູແລດ້ານສຸຂະພາບ. ສິ່ງນີ້ສາມາດເກີດຂຶ້ນໄດ້ ຖ້າຜູ້ຖືກເຄາະຮ້າຍຮູ້ສຶກຖືກຄຸກຄາມ ຫຼື ຮູ້ສຶກບໍ່ປອດໄພໃນເວລາການປຶກສາ ຫຼື ກວດກາ; ຮູ້ສຶກອາຍ ຫຼື ຂາຍໜ້າ ຈາກການສອບຖາມ ຫຼື ວິທີປະຕິບັດໃນການກວດຮ່າງກາຍຂອງເຂົາເຈົ້າ; ສິ້ນຫວັງ ຫຼື ບໍ່ສາມາດຄວບຄຸມໄດ້ ໃນຕະຫຼອດປະສົບການນັ້ນ.

ປະສົບການດ້ານລົບນີ້ ອາດຈະເປັນການປ້ອງກັນຜູ້ຖືກເຄາະຮ້າຍຈາກການເປີດເຜີຍການຖືກຂູດຮີດຂອງເຂົາເຈົ້າ. ໃນບາງກໍລະນີ ອາດຈະເປັນສາເຫດທີ່ເຮັດໃຫ້ເຂົາເຈົ້າຫຼີກລ້ຽງທີ່ຈະຊອກຫາການເບິ່ງແຍງສຸຂະພາບໃນອະນາຄົດ. ການນໍາໃຊ້ວິທີການເບິ່ງແຍງທີ່ຮັບຮູ້ເຖິງຄວາມບອບຊໍ້າດ້ານຈິດໃຈ ຕໍ່ກັບປະຕິສໍາພັນຂອງຜູ້ຖືກເຄາະຮ້າຍທັງໝົດ, ໃຫ້ຜູ້ຊ່ຽວຊານດ້ານສຸຂະພາບ ຈັດຫາສະພາບແວດລ້ອມທີ່ປອດໄພຂຶ້ນກວ່າແກ່ຜູ້ຖືກເຄາະຮ້າຍ ແລະ ປິ່ນປົວເຂົາເຈົ້າໄດ້.



ຮູບພາບໂດຍ ມູຟິດ ມັຈນັນ ຈາກອັນສູເປສ

# ຄໍາແນະນໍາການບໍ່ເຮັດໃພອັນຕະລາຍ

ຮັບປະກັນວ່າການໃຫ້ຄໍາປຶກສາ ແລະ ກວດຮ່າງກາຍ ເຮັດຢູ່ໃນສະຖານທີ່ແບບປິດ ແລະ ເປັນສ່ວນຕົວ. .

ອະນຸຍາດໃຫ້ນັກສັງຄົມສົງເຄາະ ຫຼື ຜູ້ໃຫຍ່ທີ່ໄວ້ວາງໃຈໄດ້ ຢູ່ໃນຫ້ອງກວດ ຖ້າຫາກຜູ້ຖືກເຄາະຮ້າຍຮ້ອງຂໍ. ກ່ອນການເຂົ້າພົບ, ນັກສັງຄົມສົງເຄາະສາມາດກະກຽມຜູ້ຖືກເຄາະຮ້າຍ ດ້ວຍຄວາມຮູ້ ແລະ ຂໍ້ມູນທີ່ຈໍາເປັນ ສະນັ້ນ ເຂົາເຈົ້າຈະຮູ້ສຶກໝັ້ນໃຈ ທີ່ຈະໂອ້ລົມກັບພະນັກງານທາງດ້ານແພດ ໃນການເບິ່ງແຍງດູແລເຂົາເຈົ້າເອງ.

ເນັ້ນໃສ່ "ເກີດຫຍັງຂຶ້ນກັບເຈົ້າ?" ຫຼາຍວ່າທີ່ຈະເວົ້າວ່າ "ເຈົ້າເປັນຫຍັງ?" [109]

ສື່ສານຢ່າງຊ້າໆ ແລະ ຊັດເຈນກ່ຽວກັບສິ່ງທີ່ຈະເກີດຂຶ້ນ, ສິ່ງທີ່ຄາດຫວັງ ແລະ ຮັບປະກັນວ່າຜູ້ຖືກເຄາະຮ້າຍເຂົ້າໃຈ ສິ່ງທີ່ກໍາລັງຈະເກີດຂຶ້ນ. ນໍາໃຊ້ຜູ້ແປພາສາ ຖ້າຈໍາເປັນ.

ການກວດດ້ານຮ່າງກາຍ ແລະ ຈິດໃຈ ແລະ ການປະເມີນ ຄວນຈະເຮັດຂຶ້ນເມື່ອໄດ້ຮັບຄວາມຍິນຍອມຈາກຜູ້ຖືກເຄາະຮ້າຍ. ຜູ້ຖືກເຄາະຮ້າຍຄວນໄດ້ຮັບການແຈ້ງບອກກ່ຽວກັບບາດກ້າວ ແລະ ຂັ້ນຕອນທີ່ກ່ຽວຂ້ອງ ແລະ ເປັນຫຍັງມັນຈຶ່ງຈໍາເປັນ. ການມິດງຽບຂອງຜູ້ຖືກເຄາະຮ້າຍ ບໍ່ຄວນຖືກຕີຄວາມວ່າເປັນການຍິນຍອມ. ການກວດກາ ແລະ ການປະເມີນ ຄວນຈະເຮັດຂຶ້ນໂດຍບຸກຄົນທີ່ເປັນເພດ ທີ່ຜູ້ຖືກເຄາະຮ້າຍຮູ້ສຶກສະບາຍໃຈນໍາ.

ເວົ້າກັບເຂົາເຈົ້າໃນລັກສະນະທີ່ອ່ອນໂຍນ ແລະ ບໍ່ຕັດສິນ. ເຮັດໃຫ້ເຂົາເຈົ້າໝັ້ນໃຈວ່າ ບໍ່ມີໃຜສົມຄວນໄດ້ຮັບບາດເຈັບ ແລະ ທຸກຄົນມີສິດທີ່ຈະໄດ້ຮັບການປິ່ນປົວ/ປະຕິບັດ ດ້ວຍຄວາມເຄົາລົບ.

ກວດເບິ່ງວ່າຜູ້ຖືກເຄາະຮ້າຍຮູ້ສຶກສະບາຍໃຈ ແລະ ຮູ້ສຶກປອດໄພຕະຫຼອດຂັ້ນຕອນ, ການກວດກາ ຫຼື ການປິ່ນປົວ ຫຼື ບໍ່. ບອກເຂົາເຈົ້າວ່າການບໍລິການເປັນໄປໂດຍສະໝັກໃຈ ແລະ ເຂົາເຈົ້າມີສິດທີ່ຈະປະຕິເສດໄດ້ຕະຫຼອດເວລາ.

ສະເໜີການໃຫ້ຂໍ້ມູນ ແລະ ການສະໜັບສະໜູນ ຕະຫຼອດໄລຍະທີ່ປະເຊີນໜ້າໃນສະຖານທີ່ການປິ່ວປົວ. ຊຸກຍູ້ເຂົາເຈົ້າໃຫ້ຖາມຄໍາຖາມ ແລະ ມີສ່ວນຮ່ວມໃນຂັ້ນຕອນການຕັດສິນໃຈ.

ຮັບຮອງຕໍ່ເຂົາເຈົ້າວ່າ ທຸກຂໍ້ມູນທີ່ເກັບກໍານັ້ນ ຈະຖືກເກັບຮັກສາເປັນຄວາມລັບ. ອະທິບາຍຕໍ່ເຂົາເຈົ້າວ່າ ການບັນທຶກຂໍ້ມູນນັ້ນຈະຖືກເກັບຮັກສາໄວ້ຢ່າງປອດໄພ. ບອກເຂົາເຈົ້າວ່າ ຂໍ້ມູນຈະບໍ່ຖືກແບ່ງປັນໃຫ້ກັບບຸກຄົນອື່ນໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ຖືກເຄາະຮ້າຍ ຫຼື ຄໍາສັ່ງສານ.

ໃນການປະເຊີນໜ້າກັນຄັ້ງທໍາອິດ, ເນັ້ນໃສ່ການສ້າງຄວາມໄວ້ວາງໃຈກັບຜູ້ຖືກເຄາະຮ້າຍ. ໃຫ້ເຂົາເຈົ້າໄດ້ແບ່ງປັນວ່າ ເຂົາເຈົ້າຮູ້ສຶກແນວໃດ ແລະ ຕ້ອງການຖືກປິ່ນປົວ/ປະຕິບັດແນວໃດ. ຄໍານຶງເຖິງຄວາມບໍ່ສະບາຍໃຈຂອງເຂົາເຈົ້າ ບໍ່ວ່າຈະເປັນການສະແດງດ້ວຍວາຈາ ຫຼື ຮ່າງກາຍ. ສິ່ງນີ້ອາດຈະອໍານວຍຄວາມສະດວກໃຫ້ເຂົາເຈົ້າໄດ້ໂອ້ລົມກ່ຽວກັບປະສົບການ ການຖືກຄ້າມະນຸດ ແລະ ຖືກລ່ວງລະເມີດຂອງເຂົາເຈົ້າ.

109 ໂຄງການ Polaris (2018). *ເສັ້ນທາງລາດ, ສີ່ແຍກ ແລະ ທາງອອກ: ແຜນງານສໍາລັບລະບົບ ແລະ ອຸດສາຫະກໍາເພື່ອປ້ອງກັນ ແລະ ຂັດຂວາງການຄ້າມະນຸດ.*

## 4. ຂາດການເບິ່ງແຍງທີ່ເໝາະສົມທາງວັດທະນະທຳ ແລະ ເປັນລາຍບຸກຄົນ

ພື້ນຖານຄວາມເປັນມາຂອງຜູ້ຖືກເຄາະຮ້າຍ, ວັດທະນະທຳ ແລະ ເສດຖະກິດ-ສັງຄົມ, ລະດັບການສຶກສາ ແລະ ເຫດການທີ່ເກີດຂຶ້ນກັບພວກເຂົາ ໃນເວລາທີ່ຢູ່ໃນສະຖານະການຄ້າມະນຸດ ຈະມີຜົນຕໍ່ກັບປະສົບການ ໃນການເຈັບປ່ວຍ, ສຸຂະພາບ ແລະ ຄວາມຄາດຫວັງດ້ານການເບິ່ງແຍງສຸຂະພາບ. ບົດບາດຍິງ-ຊາຍ, ປະເພນີ ແລະ ຄວາມເຊື່ອດ້ານຈິດວິນຍານ ທັງໝົດນີ້ລ້ວນແຕ່ສິ່ງຜົນຕໍ່ກັບປະສົບການຄວາມເຈັບເປັນ ແລະ ຕອບສະໜອງຕໍ່ກັບການເບິ່ງແຍງ.

ຕົວຢ່າງ, ຜູ້ຍິງທີ່ມາຈາກສະຖານະການບ່ອນທີ່ການລ່ວງລະເມີດເປັນ 'ເລື່ອງປົກກະຕິ', ເຂົາເຈົ້າອາດຈະມີທ່າອ່ຽງທີ່ຈະຫຼຸດຜ່ອນປະສົບການດ້ານຄວາມຮຸນແຮງຂອງເຂົາເຈົ້າລົງ. ເມື່ອມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍຕໍ່ກັບປະຫວັດຄວາມເປັນມາ ແລະ ລະດັບຄວາມຮູ້ຂອງຜູ້ຖືກເຄາະຮ້າຍ ແລະ ຜູ້ປະກອບອາຊີບດ້ານການແພດ ມັນເປັນສິ່ງທີ່ຍາກທີ່ຜູ້ຖືກເຄາະຮ້າຍຈະເຊື່ອມໂຍງຄວາມກັງວົນຂອງຕົນ ແລະ ສຳລັບຜູ້ຖືກເຄາະຮ້າຍໃນການປະເມີນອາການ ແລະ ຄວາມຕ້ອງການຂອງເຂົາເຈົ້າ.

## ຄຳແນະນຳການບໍ່ເຮັດໄພອັນຕະລາຍ

ນຳໃຊ້ຜູ້ແປພາສາທີ່ໄດ້ຮັບການຝຶກອົບຮົມ ແລະ ກວດສອບແລ້ວ ເພື່ອຮັບປະກັນວ່າຜູ້ຖືກເຄາະຮ້າຍສາມາດສື່ສານຄວາມຕ້ອງການ ແລະ ເຂົ້າໃຈຕໍ່ກັບຄວາມຕ້ອງການດັ່ງກ່າວ. ຖ້າເປັນໄປໄດ້ ນຳໃຊ້ຜູ້ແປພາສາຄົນເກົ່າ ຖ້າຫາກຕ້ອງພົບປະກັນຫຼາຍຄັ້ງ. ແຈ້ງຜູ້ແປພາສາ ຫຼື ໜ່ວຍງານຂອງເຂົາເຈົ້າຕໍ່ກັບເລື່ອງດັ່ງກ່າວ (ຕົວຢ່າງ ການສົນທະນາທາງການແພດ ທີ່ເປັນຄວາມລັບ ທີ່ອາດຈະກ່ຽວຂ້ອງກັບຄວາມຮຸນແຮງ, ການຂົ່ມຂືນ ແລະ ອື່ນໆ). ຮັບປະກັນວ່າຜູ້ແປພາສາຮູ້ສຶກສະບາຍໃຈກັບເລື່ອງດັ່ງກ່າວ. ເຕືອນຜູ້ແປພາສາ ບໍ່ໃຫ້ຂໍ້ມູນລາຍລະອຽດການຕິດຕໍ່ສ່ວນບຸກຄົນ ແລະ ເປີດເຜີຍຂໍ້ມູນຂອງຜູ້ຖືກເຄາະຮ້າຍກັບບຸກຄົນອື່ນ.

ປະເມີນລະດັບການຮູ້ໜັງສືຂອງຜູ້ຖືກເຄາະຮ້າຍ ເພື່ອຮັບປະກັນວ່າ ຂໍ້ມູນທີ່ຖ່າຍທອດໃຫ້ນັ້ນຢູ່ໃນຮູບແບບທີ່ເຂົ້າໃຈໄດ້. ພິຈາລະນາການນຳໃຊ້ເຄື່ອງມືການໄດ້ເຫັນ ແລະ ໄດ້ຍິນ ເພື່ອໃຫ້ເຂົາເຈົ້າເຂົ້າໃຈໄດ້.

ພິຈາລະນາຄວາມຕ້ອງການຂອງຄົນພິການ.

ຢ່າຕັ້ງຂໍ້ສົມມຸດຕິຖານຢ່າງໄວ ຫຼື ເປັນລົບກ່ຽວກັບປະຕິກິລິຍາ ຫຼື ການປະພຶດຂອງບຸກຄົນ. ພິຈາລະນາ ເຫດຜົນໄປໄດ້ໄປທາງວັດທະນະທຳ, ສັງຄົມ ຫຼື ເຫດຜົນສ່ວນບຸກຄົນ ຕໍ່ກັບປະຕິກິລິຍາດັ່ງກ່າວ.

ກຳນົດປັດໄຈກົດດັນທາງສັງຄົມໃນປັດຈຸບັນ ລວມທັງຂໍ້ຈຳກັດດ້ານທີ່ຢູ່ອາໄສ, ກົດໝາຍ ແລະ ການເງິນ ແລະ ການສົ່ງຕໍ່ການບໍລິການທາງສັງຄົມທີ່ເໝາະສົມ ແລະ ທັນເວລາ.

ສຳຫຼວດຄວາມເຂົ້າໃຈຂອງຜູ້ຖືກເຄາະຮ້າຍກ່ຽວກັບອາການເຈັບປ່ວຍຂອງຕົນເອງ. ສິ່ງນີ້ຄວນເປັນແນວທາງຕໍ່ກັບແຜນການປິ່ນປົວ ແລະ ເຮັດໃຫ້ຜູ້ປະກອບວິຊາຊີບ ຄຳນຶງເຖິງວິທີ ທີ່ເຂົາເຈົ້າຈະມີປະຕິກິລິຍາຕໍ່ກັບຜູ້ຖືກເຄາະຮ້າຍ.

ຮັບປະກັນວ່າຜູ້ຖືກເຄາະຮ້າຍ ຕ້ອງການຜູ້ສະໜອງການບໍລິການເພດດຽວກັນນັ້ນ ໄດ້ຮັບການເຄົາລົບ ໃນກໍລະນີທີ່ເປັນໄປໄດ້ ລວມທັງ ທາງເລືອກຂອງເຂົາເຈົ້າກ່ຽວກັບຜູ້ໃດທີ່ເຂົາເຈົ້າອະນຸຍາດໃຫ້ກວດເຂົາເຈົ້າເອງ.

ຮັບຮູ້ເຖິງຄວາມສຳຄັນຕໍ່ກັບຄວາມເຊື່ອທາງສາສະໜາ ໃນການຟື້ນຟູຂອງຜູ້ຖືກເຄາະຮ້າຍ ລວມທັງ ຄວາມເຂົ້າໃຈຕໍ່ກັບປະສົບການ ການຄ້າມະນຸດຂອງເຂົາເຈົ້າໃນບໍລິບົດຂອງສາສະໜາ ແລະ ຄວາມເຊື່ອທາງວັດທະນະທຳ.

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີສິດທີ່ຈະເລືອກທາງເລືອກ ແລະ ຕັດສິນໃຈດ້ວຍຕົນເອງ ແລະ ເຂົາເຈົ້າຄວນຈະຖືກຊຸກຍູ້ໃຫ້ເຂົ້າຮ່ວມໃນການຕັດສິນໃຈຫຼາຍທີ່ສຸດ. **ຄູ່ມືຂອງອາຊຽນທີ່ຄໍານຶງເຖິງບົດບາດຍິງ-ຊາຍ** ແນະນໍາໃຫ້ຜູ້ຖືກເຄາະຮ້າຍ *"ໄດ້ຮັບການສ້າງຄວາມເຂັ້ມແຂງ ເພື່ອໃຫ້ເຂົາເຈົ້າສາມາດມີສ່ວນຮ່ວມໃນທຸກດ້ານ ໃນການວາງແຜນ ແລະ ຈັດຕັ້ງປະຕິບັດທີ່ກ່ຽວຂ້ອງກັບການຊ່ວຍເຫຼືອທີ່ເຂົາເຈົ້າໄດ້ຮັບ."*[110] ດ້ວຍການເຮັດວຽກຮ່ວມກັບຜູ້ຖືກເຄາະຮ້າຍ, ຜູ້ສະໜອງການບໍລິການ ຄວນຕັ້ງເປົ້າໝາຍທີ່ຈະຟື້ນຟູຄວາມເປັນອິດສະລະຂອງຜູ້ຖືກເຄາະຮ້າຍ ແລະ ໃຫ້ເຂົາເຈົ້າສາມາດຕັດສິນໃຈ ແລະ ດໍາເນີນການທີ່ມີຜົນກະທົບຕໍ່ເຂົາເຈົ້າ. ການຮ່ວມມືດັ່ງກ່າວ ຈະຊ່ວຍໃຫ້ເຂົາເຈົ້າໄດ້ສິດເສລີພາບໃນການຕັດສິນໃຈທີ່ມີຜົນກະທົບຕໍ່ກັບຊີວິດຂອງເຂົາເຈົ້າ ແລະ ເພີ່ມຄວາມໝັ້ນໃຈໃນການກໍານົດການປະຕິບັດໃນການບາດຕໍ່ໄປ.

### ການປະຕິບັດທີ່ເປັນຕົວແບບທີ່ດີ:[111]

ໃນເວລາກວດຮ່າງກາຍຂອງຜູ້ຖືກເຄາະຮ້າຍທີ່ເປັນເດັກ, ທ່ານໝໍຄົນລາວ ແລະ ພະຍາບານ ມັກຈະກະກຽມໃຫ້ມີນັກສັງຄົມສົງເຄາະ ແລະ ຈິດຕະແພດຢູ່ໃນຫ້ອງດຽວກັນ. ພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກກໍ່ຈະຢູ່ນໍາ ຖ້າເຂົາເຈົ້າສະດວກ. ໃນລະຫວ່າງການກວດຮ່າງກາຍ, ຜູ້ປະຕິບັດຕົວຈິງດ້ານການແພດ ທີ່ໄດ້ຮັບການຝຶກອົບຮົມ ຈະບໍ່ສອບຖາມຄໍາຖາມກົງ ທີ່ອາດຈະສ້າງຄວາມບອບຊໍ້າດ້ານຈິດໃຈໃຫ້ແກ່ເດັກ. ເຂົາເຈົ້າຍັງແຈ້ງຜູ້ປົກຄອງ ແລະ ເດັກກ່ຽວກັບຂັ້ນຕອນ ຫຼື ການກວດທີ່ຈະດໍາເນີນການ. ມີການອ້າງອີງເຖິງກໍລະນີທີ່ເດັກ ທີ່ປະຕິເສດການກວດຮ່າງກາຍ. ທ່ານໝໍໄດ້ໃຫ້ຄໍາປຶກສາວ່າເປັນຫຍັງການກວດຮ່າງກາຍຈິ່ງມີຄວາມສໍາຄັນ ແຕ່ເດັກ ກໍຍັງບໍ່ປ່ຽນໃຈ, ສະນັ້ນ ຜູ້ຖືກເຄາະຮ້າຍຈິ່ງໄດ້ຮັບອະນຸຍາດໃຫ້ກັບບ້ານໄດ້.

110 ເບິ່ງທີ່ວົກ 2.6.2.

111 ກອງປະຊຸມປຶກສາຫາລືລະດັບຊາດທີ່ປະເທດລາວ, ວັນທີ 17 ທັນວາ 2021.

# ຂະບວນການຍຸຕິທຳທາງອາຍາ

ສິດທິ ແລະ ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ ຄວນຈະເປັນຫົວໃຈຫຼັກທັງໝົດໃນຂະບວນການຍຸຕິທຳທາງອາຍາ. ແຕ່ວ່າຜູ້ຖືກເຄາະຮ້າຍມັກຈະປະຕິເສດ ແລະ ຖືວ່າເປັນສ່ວນໜຶ່ງຂອງຫຼັກຖານໃນຂະບວນຍຸຕິທຳທາງອາຍາ ທີ່ເນັ້ນໃສ່ການດຳເນີນຄະດີຕໍ່ກັບຜູ້ກະທຳຜິດ. ຄູ່ມື ແລະ ຂັ້ນຕອນໃນລະດັບພາກພື້ນຂອງອາຊຽນ ໄດ້ຢືນຢັນວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເຂົ້າຮ່ວມໃນການສືບສວນ-ສອບສວນ ຫຼື ດຳເນີນຄະດີຕໍ່ຜູ້ທີ່ຂູດຮີດເຂົາເຈົ້າ ຄວນໄດ້ຮັບການປົກປ້ອງຕາມກົດໝາຍຢ່າງພຽງພໍ, ໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫຼືອໃນໄລຍະການມີສ່ວນຮ່ວມໃນການດຳເນີນຄະດີທາງອາຍາ. ບັນດາປະເທດອາຊຽນ ຕ້ອງຮັບປະກັນວ່າຜູ້ຖືກເຄາະຮ້າຍຮັບຮູ້ເຖິງການປຽວຢາທີ່ມີຢູ່ ແລະ ຕ້ອງມີກົດໝາຍ ແລະ ຂັ້ນຕອນທີ່ຈຳເປັນ ເພື່ອຮັບປະກັນວ່າຈະໄດ້ຮັບຄ່າຊົດເຊີຍ.



ຄຳແນະນຳທີ 5(8) **ຂອງຫຼັກການ ແລະ ຂໍ້ສະເໜີແນະນຳຂອງ ວ່າດ້ວຍສິດທິມະນຸດ ແລະ ການຄ້າມະນຸດ** ຮຽກຮ້ອງໃຫ້ລັດນຳໃຊ້ຄວາມພະຍາຍາມຢ່າງເໝາະສົມໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດລາຍບຸກຄົນ ໃນໄລຍະການສືບສວນ-ສອບສວນ ແລະ ຂະບວນການພິຈາລະນາຄະດີ ແລະ ຂັ້ນຕອນຕໍ່ໆໄປ ເມື່ອຈຳເປັນຕ້ອງຄຳນຶງເຖິງຄວາມປອດໄພຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ແຜນງານການປົກປ້ອງຢ່າງເໝາະສົມ ອາດຈະລວມເອົາອົງປະກອບບາງສ່ວນ ຫຼື ທັງໝົດ ດັ່ງນີ້: ກຳນົດສະຖານທີ່ທີ່ປອດໄພໃນປະເທດປາຍທາງ; ເຂົ້າເຖິງທີ່ປຶກສາທາງດ້ານກົດໝາຍທີ່ເປັນອິດສະລະ; ປົກປ້ອງຕົວຕົນ ໃນໄລຍະການດຳເນີນຄະດີທາງກົດໝາຍ; ກຳນົດທາງເລືອກໃນການສືບຕໍ່ ອາໄສຢູ່, ການຕັ້ງຖິ່ນຖານໃໝ່ ຫຼື ການສົ່ງກັບປະເທດ.

ໃນຖານະທີ່ເປັນຜູ້ຕອບໂຕ້ທຳອິດ ຫຼື ຜູ້ໃຫ້ການສະໜັບສະໜູນ, ມັນເປັນສິ່ງທີ່ສຳຄັນ ທີ່ຕ້ອງຄຳນຶງເຖິງຄວາມສ່ຽງທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະປະເຊີນ ຫຼື ໃຜກໍຕາມທີ່ໃຫ້ການຊ່ວຍເຫຼືອເຂົາເຈົ້າ. ການຄຸກຄາມຈາກຜູ້ຄ້າມະນຸດ ແລະ ອາຊະຍາກຳທີ່ມີການຈັດຕັ້ງ ມີຫຼາຍຮູບແບບທີ່ແຕກຕ່າງກັນ ແລະ ຄວນໄດ້ຮັບການພິຈາລະນາຢ່າງຈິງຈັງ. ທ່ານຄວນພິຈາລະນາຄວາມສ່ຽງ ແລະ ຄວາມຮຸນແຮງເຫຼົ່ານີ້ຈາກມຸມມອງຂອງຜູ້ຖືກເຄາະຮ້າຍ.

ບາງຄຳຖາມທີ່ຄວນພິຈາລະນາ ໃນການປະເມີນຄວາມສ່ຽງທົ່ວໄປ:[112]

- ມີການລາຍງານ ຫຼື ຮັບຮູ້ຄະດີຄ້າມະນຸດໄດ້ຢູ່ໃສ?
- ການຄ້າມະນຸດ ໄດ້ຖືກຄວບຄຸມໂດຍກຸ່ມອົງກອນອາຊະຍາກຳ ຫຼື ເຄືອຂ່າຍອື່ນບໍ່?
- ກຸ່ມເຫຼົ່ານີ້ ໄດ້ມີການວາງແຜນ ຫຼື ປະຕິບັດການແກ້ແຄ້ນຕໍ່ກັບຜູ້ຖືກເຄາະຮ້າຍ ຫຼື ບຸກຄົນທີ່ຊ່ວຍເຂົາເຈົ້າບໍ່?
- ໜ່ວຍງານບັງຄັບໃຊ້ກົດໝາຍຂັ້ນຕ້ອງຖິ່ນ ເຊື່ອຖືໄດ້ບໍ່?
- ມີການຮັບຮູ້ການສໍ້ລາດບັງຫຼວງບໍ່ ແລະ ລະດັບການຮັບຮູ້ແມ່ນເທົ່າໃດ?

ໄພອັນຕະລາຍຕໍ່ໄປນີ້ ໄດ້ຖືກກຳນົດວ່າເປັນເລື່ອງປົກກະຕິ ໃນເວລາທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີສ່ວນຮ່ວມໃນຂະບວນຍຸຕິທຳທາງອາຍາພາຍໃນອາຊຽນ. ໃນຖານະທີ່ເປັນຜູ້ຕອບໂຕ້ທຳອິດ ຫຼື ຜູ້ໃຫ້ການສະໜັບສະໜູນ, ມັນເປັນສິ່ງສຳຄັນທີ່ທ່ານຕ້ອງຄຳນຶງເຖິງໄພອັນຕະລາຍທີ່ອາດຈະເກີດຂຶ້ນ ແລະ ພິຈາລະນາ ຄຳແນະນຳການບໍ່ເຮັດໄພອັນຕະລາຍ ເພື່ອເປັນແນວທາງໃນການປ້ອງກັນ ຫຼື ຫຼຸດຜ່ອນໄພອັນຕະລາຍເຫຼົ່ານີ້.

112 ອີງຕາມຄູ່ມືຂອງອົງການ UNODC ກ່ຽວກັບການຕ້ານການຄ້າມະນຸດ ສຳລັບຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທຳທາງອາຍາ ໂມດູ 5. https://www.unodc.org/documents/human-trafficking/TIP_module5_Ebook.pdf

# 1. ການໃຫ້ຂໍ້ມູນທີ່ຜິດພາດ, ການຂົ່ມຂູ່ ຫຼື ການບັງຄັບ ເພື່ອໃຫ້ການຕໍ່ສູ້ຜູ້ທີ່ຂູດຮີດເຂົາເຈົ້າ

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະຖືກແຈ້ງຂໍ້ມູນທີ່ຜິດພາດ ຫຼື ກົດດັນໃຫ້ເຂົ້າຮ່ວມໃນການດໍາເນີນຄະດີທາງກົດໝາຍຕໍ່ຜູ້ກະທໍາຜິດ. ເຂົາເຈົ້າມັກຈະບໍ່ໄດ້ຮັບຂໍ້ມູນຢ່າງເຕັມສ່ວນກ່ຽວກັບຂະບວນການ ແລະ ຄວາມສ່ຽງທີ່ກ່ຽວຂ້ອງ ເພື່ອໃຫ້ການຍິນຍອມຢ່າງເປັນອິດສະລະ. ເຖິງວ່າຈະມີການໃຫ້ຄວາມຍິນຍອມ, ຜູ້ຖືກເຄາະຮ້າຍອາດຈະບໍ່ເຂົ້າໃຈຕໍ່ກັບຜົນສະທ້ອນຂອງການເປັນຜູ້ຖືກເຄາະຮ້າຍ-ພະຍານ ແລະ ຜົນກະທົບຕໍ່ກັບຊີວິດຂອງເຂົາເຈົ້າຢ່າງເຕັມສ່ວນ.

ຜູ້ຖືກເຄາະຮ້າຍຫຼາຍຄົນ ບໍ່ເຫັນປະໂຫຍດທີ່ເປັນຮູບປະທໍາຈາກການເຂົ້າຮ່ວມໃນຂະບວນການດໍາເນີນຄະດີທາງອາຍາ ແຕ່ອາດຈະຖືກຂົ່ມຂູ່ ຫຼື ບັງຄັບໃຫ້ເຮັດ ໂດຍເຈົ້າໜ້າທີ່ສືບສວນ-ສອບສວນ; ພະນັກງານໄອຍະການ, ທະນາຍຄວາມ ຫຼື ຜູ້ໃຫ້ການບໍລິການອື່ນໆ. ຜູ້ທີ່ກ່ຽວຂ້ອງກັບກິດຈະກໍາທີ່ຜິດກົດໝາຍອາດຈະຖືກລົງໂທດ ຫຼື ຖືກກັກຂັງ ເວັ້ນເສຍແຕ່ ເຂົາເຈົ້າຕັດສິນໃຈທີ່ຈະເປັນຜູ້ຖືກເຄາະຮ້າຍ-ພະຍານ ຕໍ່ຜູ້ຄ້າມະນຸດ. ບາງຄົນອາດຈະໄດ້ຮັບຄໍາສັນຍາທີ່ຈະໄດ້ຮັບການສະໜັບສະໜູນດ້ານການເງິນ, ການປົກປ້ອງ, ຄ່າຊົດເຊີຍ ແລະ ທີ່ພັກເຊົາ ຖ້າເຂົາເຈົ້າໃຫ້ຄວາມຮ່ວມມືໃນການດໍາເນີນຄະດີທາງກົດໝາຍເທົ່ານັ້ນ.

## ຄໍາແນະນໍາການບໍ່ເຮັດໄພອັນຕະລາຍ

ອະທິບາຍຢ່າງລະອຽດກ່ຽວກັບລະບົບຍຸຕິທໍາທາງອາຍາ, ຈຸດຢືນ/ຕໍາແໜ່ງທາງດ້ານກົດໝາຍຂອງຜູ້ຖືກເຄາະຮ້າຍ, ສິດທິຂອງເຂົາເຈົ້າ, ທາງເລືອກ ແລະ ການບໍລິການທີ່ມີຢູ່ ແລະ ປັດໄຈດ້ານເວລາໃນຂະບວນການພິຈາລະນາ. ພິຈາລະນາເຖິງສັນຊາດ, ຊົນເຜົ່າ, ອາຍຸ ແລະ ຄວາມພິການຂອງຜູ້ຖືກເຄາະຮ້າຍ, ຖ້າມີ ແລະ ອື່ນໆ.[113]

ບໍ່ຄວນຈະຜູກມັດການຊ່ວຍເຫຼືອ ແລະ ທີ່ພັກເຊົາ ຕໍ່ກັບການຮ່ວມມືຂອງເຂົາເຈົ້າໃນການດໍາເນີນຄະດີໃດໜຶ່ງທາງກົດໝາຍ. ໃຫ້ອະທິບາຍອາຊະຍາກໍາຂອງການຄ້າມະນຸດ, ການລົງໂທດຜູ້ກະທໍາຜິດ ແລະ ການເຂົ້າເຖິງຄວາມຍຸຕິທໍາ ແລະ ການປິ່ນປົວ ແລະ ການຢຽວຢາໃຫ້ແກ່ຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງເຂົາເຈົ້າ.

ຫຼີກລ້ຽງ ການປະຕິບັດຕໍ່ຜູ້ຖືກເຄາະຮ້າຍ ໃນຖານະທີ່ເປັນແຫຼ່ງຂໍ້ມູນຂອງຫຼັກຖານພຽງຢ່າງດຽວ. ສິ່ງນີ້ເປັນວິທີການໄລຍະສັ້ນ ທີ່ມີແນວໂນ້ມວ່າຈະຫຼົ້ມເຫຼວ. ຜູ້ຖືກເຄາະຮ້າຍ ແລະ ພະຍານ ມີແນວໂນ້ມຈະໃຫ້ຄວາມຮ່ວມມືໃນຂະບວນການສືບສວນ-ສອບສວນ ແລະ ການດໍາເນີນຄະດີ ຖ້າຫາກເຂົາເຈົ້າຮູ້ສຶກປອດໄພ ແລະ ໝັ້ນໃຈ ແລະ ເຂົ້າໃຈຄວາມຕ້ອງການຂອງເຂົາເຈົ້າ ແລະ ຄວາມຕ້ອງການນັ້ນໄດ້ຖືກຕອບສະໜອງຢ່າງເໝາະສົມ.[114]

ແນະນໍາຜູ້ຖືກເຄາະຮ້າຍ ບໍ່ໃຫ້ 'ແກ້ໄຂ' ຄະດີຢ່າງບໍ່ເປັນທາງການ ເພື່ອໃຫ້ເຂົາເຈົ້າກັບໄປໃຊ້ຊີວິດແບບປົກກະຕິ. ການກະກຽມດັ່ງກ່າວ ຍ່ອມມີການປານີປານອມຢ່າງຫຼີກລ້ຽງບໍ່ໄດ້, ບໍ່ແມ່ນຢ່າງນ້ອຍ ເພາະເຂົາເຈົ້າສິ່ງເສີມການສໍ້ລາດບັງຫຼວງ ແລະ ຍຸດຕິການລົງໂທດຜູ້ຂູດຮີດ.[115]

ໃຫ້ເວລາໃນການຟື້ນຟູ ແລະ ສະທ້ອນຄືນ ສໍາລັບຜູ້ຖືກເຄາະຮ້າຍທີ່ໄດ້ຮັບການກໍາຕົວ ເພື່ອຕັດສິນໃຈໃນການຮ່ວມມືຢ່າງມີຂໍ້ມູນ

ແຈ້ງການຂໍຄວາມຍິນຍອມໂດຍສະໝັກໃຈ ໃນການເຂົ້າຮ່ວມໃນຂະບວນການ. ໃຫ້ຜູ້ຖືກເຄາະຮ້າຍສາມາດປະຕິເສດການຊ່ວຍເຫຼືອ ແລະ ການປົກປ້ອງໄດ້ຕະຫຼອດເວລາ ໃນໄລຍະຂະບວນການຍຸຕິທໍາທາງອາຍາ.

---

113 ແຜນປະຕິບັດງານຂອງອາຊຽນເພື່ອຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກ, ພາກ B (g); ຄູ່ມືຂອງອາຊຽນທີ່ຄໍານຶງເຖິງບົດບາດຍິງ-ຊາຍ ວັກ 3.6.4; ການທົບທວນຄູ່ມືລະດັບພາກພື້ນຂອງ ACWC ຄໍາແນະນໍາ 4.4

114 ສໍານັກງານໃຫຍ່ຄະນະກໍາມາທິການສິດທິມະນຸດ. ຫຼັກການ ແລະ ຂໍ້ສະເໜີແນະນໍາວ່າດ້ວຍສິດທິມະນຸດ ແລະ ການຄ້າມະນຸດ. (n.d.)

115 ອາຊຽນ (2019). ຊຸດເຄື່ອງມືຮູບແບບການຈັດຕັ້ງປະຕິບັດຂອງຜູ້ປະຕິບັດຕົວຈິງ ສໍາລັບຄູ່ມື ແລະ ຂັ້ນຕອນ ການຈັດການຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດລະດັບພາກພື້ນຂອງ ACWC. ຈາກາຕາ: ກອງເລຂາອາຊຽນ

## ສິ່ງທ້າທາຍ:

ຜູ້ແປພາສາມີບົດບາດສຳຄັນໃນການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍໂດຍກົງ. ສິ່ງນີ້ເປັນສິ່ງທີ່ຖືກຕ້ອງ ໂດຍສະເພາະຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ ແລະ ບໍ່ສາມາດເວົ້າພາສາຂອງປະເທດນັ້ນໄດ້. ເຖິງຢ່າງໃດກໍຕາມ, ມີຈຳນວນສິ່ງທ້າທາຍໃນການນຳໃຊ້ຜູ້ແປພາສາສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຜູ້ເຂົ້າຮ່ວມທີ່ກອງປະຊຸມປຶກສາຫາລືລະດັບຊາດ ໄດ້ແບ່ງປັນຂໍ້ມູນວ່າຜູ້ແປພາສາບາງຄົນ ໄດ້ນຳໃຊ້ການແປພາສາດ້ວຍການ "ໂນ້ມນ້າວຈິດໃຈ", ການແຊກແຊງຜູ້ຖືກເຄາະຮ້າຍດ້ວຍຄວາມຄິດເຫັນຂອງເຂົາເຈົ້າ ແທນທີ່ຈະໃຫ້ຜູ້ຖືກເຄາະຮ້າຍໄດ້ເຂົ້າໃຈຂໍ້ເທັດຈິງ ແລະ ຕັດສິນໃຈຢ່າງມີເຫດຜົນ. ສິ່ງນີ້ອາດຈະເປັນອຸປະສັກໃນການເຮັດວຽກຂອງຜູ້ຕອບໂຕ້ທຳຜິດ ຫຼື ຜູ້ສະໜັບສະໜູນ. ໃນຕົວຢ່າງອື່ນໆ, ຜູ້ແປພາສາອາດຈະມີຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດໃນຄະດີນັ້ນ ເຊິ່ງອາດຈະສົ່ງຜົນກະທົບໃນການຮັກສາຄວາມລັບຂອງຄະດີ ແລະ ຄວາມປອດໄພຂອງຜູ້ຖືກເຄາະຮ້າຍ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງໃນຄະດີ. ແຕ່ທີ່ໜ້າເສຍດາຍ, ບໍ່ແມ່ນທຸກອົງການໃນປະເທດອາຊຽນ ທີ່ມີບັນຊີດຳຂອງຜູ້ແປພາສາ, ສະນັ້ນ ບັນຫາດັ່ງກ່າວນີ້ຍັງຈະສືບຕໍ່ເກີດຂຶ້ນອີກ.

ມາດຕາ 14(6) ຂອງສົນທິສັນຍາ ACTIP ກຳນົດໃຫ້ລັດຖະບານອາຊຽນ ປົກປ້ອງຄວາມເປັນສ່ວນຕົວ ແລະ ຕົວຕົນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ດ້ວຍການດຳເນີນຄະດີທາງກົດໝາຍ ທີ່ກ່ຽວຂ້ອງກັບການຮັກສາຄວາມລັບກ່ຽວກັບການຄ້າມະນຸດ. ຄູ່ມືຂອງອາຊຽນທີ່ຄຳນຶງເຖິງບົດບາດຍິງ-ຊາຍ ໄດ້ກຳນົດວ່າ "ຜູ້ສະໜອງການບໍລິການ ຄວນຈະເກັບຮັກສາຂໍ້ມູນ ແລະ ເລື່ອງລາວຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໄວ້ເປັນຄວາມລັບ ເວັ້ນແຕ່ ມີການຮຽກຮ້ອງໃຫ້ມີການເປີດເຜີຍ ຫຼື ໄດ້ຮັບອະນຸຍາດໂດຍຂະບວນການຊ່ວຍເຫຼືອ ຫຼື ໄດ້ຮັບອະນຸຍາດໂດຍຜູ້ຖືກເຄາະຮ້າຍ.[116] ຫຼັກການ "ຈຳເປັນຕ້ອງຮູ້" ຄວນປະຕິບັດໃນທຸກກໍລະນີ. ຜູ້ສະໜອງການບໍລິການ ຕ້ອງຮັບປະກັນວ່າຂໍ້ມູນຂອງການຄ້າມະນຸດ ແລະ ຂໍ້ມູນກ່ຽວກັບຜູ້ຖືກເຄາະຮ້າຍ ໄດ້ຖືກແບ່ງປັນສະເພາະພະນັກງານ ຫຼື ຄູ່ຮ່ວມງານທີ່ຕ້ອງການຮັບຊາບເທົ່ານັ້ນ.

116 ເບິ່ງທີ່ວັກ 2.3.1.

# 2. ການສູນເສຍຄວາມເປັນສ່ວນຕົວ ແລະ ບໍ່ລະບຸຊື່

ການເຂົ້າຮ່ວມໃນການດຳເນີນຄະດີທາງກົດໝາຍ ມີຄວາມສ່ຽງທີ່ຈະລະເມີດຄວາມເປັນສ່ວນຕົວ ແລະ ການບໍ່ລະບຸຊື່ຂອງຜູ້ຖືກເຄາະຮ້າຍ. ຂໍ້ມູນຂອງຜູ້ຖືກເຄາະຮ້າຍ ອາດຈະຖືກແຊຣ/ແບ່ງປັນໃນສື່ມວນຊົນ ຫຼື ສະທ້ອນໃຫ້ເຫັນໃນຕາຕະລາງຂອງສານ ແລະ ເຂົາເຈົ້າອາດຈະຖືກໃຫ້ການໃນສານແບບເປີດ. ການສູນເສຍຄວາມເປັນສ່ວນຕົວ ແລະ ການບໍ່ລະບຸຊື່ນັ້ນ ຈະມີຜົນກະທົບຕໍ່ກັບຄວາມປອດໄພດ້ານຮ່າງກາຍ ເນື່ອງຈາກຄວາມສ່ຽງໃນການຖືກຕອບໂຕ້ຈາກຜູ້ຄ້າມະນຸດ. ໃນຂະນະດຽວກັນ, ມັນອາດຈະນຳໄປສູ່ຄວາມອັບອາຍ, ຖືກປະຕິເສດ ແລະ ລົງໂທດໂດຍຄອບຄົວ ຫຼື ຊຸມຊົນ.

## ຄຳແນະນຳການບໍ່ເຮັດໃພອັນຕະລາຍ

ປົກປ້ອງຄວາມເປັນສ່ວນຕົວຂອງຜູ້ຖືກເຄາະຮ້າຍ ແລະ ຮັກສາເປັນຄວາມລັບໃນຕະຫລອດຂະບວນການ, ຕົວຢ່າງ ບໍ່ແບ່ງປັນຂໍ້ມູນຂອງຜູ້ຖືກເຄາະຮ້າຍ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ຖືກເຄາະຮ້າຍ ແລະ ຂໍ້ມູນໃດໜຶ່ງ ທີ່ອາດຈະເປັນການເປີດເຜີຍຕົວຕົນ ຫຼື ທີ່ຢູ່ຂອງຜູ້ຖືກເຄາະຮ້າຍ ເຊິ່ງຕ້ອງໄດ້ປະຕິບັດການຮັກສາຄວາມລັບຢ່າງເຂັ້ມງວດ.[117]

ອະທິບາຍຕໍ່ກັບຜູ້ຖືກເຄາະຮ້າຍວ່າ ການໃຫ້ການຂອງເຂົາເຈົ້າຈະເປັນແນວໃດ ແລະ ໃນຂອບເຂດໃດທີ່ຕົວຕົນຂອງເຂົາເຈົ້າຈະຖືກເປີດເຜີຍ ຕໍ່ກັບຜູ້ກະທຳຜິດ ແລະ ຕໍ່ກັບສາທາລະນະ.

ນຳໃຊ້ມາດຕະການ ການປົກປ້ອງຢູ່ໃນສານ ເຊັ່ນ: ແຍກຫ້ອງລໍຖ້າ, ມີທາງເຂົ້າສ່ວນຕົວ, ມີການບັນທຶກຄຳໃຫ້ການ, ການໃຊ້ນາມແຝງ, ການໄຕ່ສວນແບບປິດ, ການດັດສຽງ/ວີດີໂອ, ການນຳໃຊ້ແວ່ນດ້ານດຽວ, ຜ້າສາກ ຫຼື ຜ້າກັ້ງ ເພື່ອຮັບປະກັນການບໍ່ລະບຸຊື່/ຕົວຕົນຂອງຜູ້ຖືກເຄາະຮ້າຍ.

ພິຈາລະນາການນຳໃຊ້ຄຳຖະແຫຼງຂອງຜູ້ຖືກເຄາະຮ້າຍ ແທນທີ່ ຈະເປັນການປະກົດຕົວໃນຖານະພະຍານໃນຄະດີ ໃນກໍລະນີທີ່ພະຍານອາດຈະເປັນອັນຕະລາຍ ທີ່ເປັນຜົນສະທ້ອນມາຈາກການໃຫ້ການຂອງເຂົາເຈົ້າ. ໃນບາງປະເທດ, ການດຳເນີນນີ້ເປັນສິ່ງຕົ້ນຕໍ ກ່ອນການໄຕ່ສວນຄະດີ.

ລາຍງານບຸກຄະລາກອນດ້ານສື່ມວນຊົນ ຜູ້ທີ່ລະເມີດຄວາມເປັນສ່ວນຕົວ ແລະ ຄວາມລັບຂອງຜູ້ຖືກເຄາະຮ້າຍ ແລະ ພະຍານທີ່ກ່ຽວຂ້ອງ ຕໍ່ເຈົ້າໜ້າທີ່.

117 ຕາມທີ່ກຳນົດໄວ້ໃນ ຄູ່ມືຂອງອາຊຽນສຳລັບຜູ້ປະຕິບັດຕົວຈິງ: "ຜູ້ຖືກເຄາະຮ້າຍ ພະຍານ ແລະ ໃນກໍລະນີທີ່ຈຳເປັນ ຄອບຄົວຂອງເຂົາເຈົ້າຄວນໄດ້ຮັບການປົກປ້ອງການການແກ້ແຄ້ນ. ຄວນມີກົດໝາຍເພື່ອປົກປ້ອງຄວາມເປັນສ່ວນຕົວຂອງຜູ້ຖືກເຄາະຮ້າຍ ພະຍານ ແລະ ການຮັກສາຄວາມລັບຕໍ່ກັບຕົວຕົນຂອງພວກເຂົາ.' ພາກໜຶ່ງ E.1 ແລະ E.2; ສົນທິສັນຍາ ACTIP ມາດຕາ 14(6).

# 3. ຂາດການປົກປ້ອງ - ການແກ້ແຄ້ນຈາກຜູ້ຄ້າມະນຸດ

ຄວາມຢ້ານກົວຂອງຜູ້ຖືກເຄາະຮ້າຍ ທີ່ຈະຖືກແກ້ແຄ້ນຈາກຜູ້ຄ້າມະນຸດ ເປັນສິ່ງກັງວົນໂດຍແທ້ຈິງ ໂດຍສະເພາະບຸກຄົນທີ່ກ່ຽວຂ້ອງກັບຂະບວນການຍຸຕິທຳທາງອາຍາ. ຄວາມສາມາດຂອງຜູ້ຄ້າມະນຸດທີ່ຈະແກ້ແຄ້ນຜູ້ຖືກເຄາະຮ້າຍ ທີ່ໄດ້ຫຼົບໜີ ແລະ/ຫຼື ທີ່ໃຫ້ການຕໍ່ຕ້ານພວກເຂົາ ໄດ້ຮັບການບັນທຶກໄວ້ເປັນຢ່າງດີ.[118] ການໃຫ້ການ ເພື່ອຕໍ່ສູ້ກັບຜູ້ກະທຳຜິດກ່ຽວຂ້ອງກັບຄວາມກົດດັນ ແລະ ອັນຕະລາຍຫຼາຍດ້ານສຳລັບຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງເຂົາເຈົ້າ. ການແກ້ແຄ້ນ ອາດຈະເກີດຂຶ້ນບໍ່ສະເພາະມາຈາກຜູ້ຄ້າມະນຸດ ແຕ່ອາດຈະມາຈາກນາຍຈ້າງ, ໜ່ວຍງານຄ້າມະນຸດ, ພວກແມງດາ (ຜູ້ທີ່ຈັດຫາໂສເພນີ) ແລະ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ.

ຜູ້ຖືກເຄາະຮ້າຍ ທີ່ບໍ່ໄດ້ຮັບການສະໜັບສະໜູນ ແລະ ການປົກປ້ອງຢ່າງເໝາະສົມ ບໍ່ຄ່ອຍຈະລາຍງານອາຊະຍາກຳ ແລະ ປະກອບສ່ວນເຂົ້າໃນການສືບສວນ-ສອບສວນ ດ້ວຍການລະບຸ ແລະ ໃຫ້ການ ຕໍ່ຜູ້ກະທຳຜິດ. ດ້ວຍເຫດນັ້ນ ມັນສິ່ງຜົນເຮັດໃຫ້ລະບົບຍຸຕິທຳທາງອາຍາ ສູນເສຍຫຼັກຖານທີ່ສຳຄັນ ແລະ ບໍ່ສາມາດບັງຄັບໃຊ້ກົດໝາຍຕໍ່ຜູ້ຄ້າມະນຸດໄດ້.



ຮູບພາບໂດຍ ຄຣິດ ເຈ ບຣາດຊໍ ຈາກຊັດເຕີສະຕອກ

118 ອົງການ IOM (2007). *ຄູ່ມືຂອງອົງການ IOM ວ່າດ້ວຍການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໂດຍກົງ.* ເຈນີວາ: IOM

# ຄຳແນະນຳ ການບໍ່ເຮັດໄພອັນຕະລາຍ

ປະເມີນຄວາມສ່ຽງຂອງຜູ້ຖືກເຄາະຮ້າຍ ທີ່ຈະໄດ້ຮັບໄພອັນຕະລາຍຈາກການເຂົ້າຮ່ວມໃນລະບົບຍຸຕິທຳທາງອາຍາ ໂດຍປະສານງານກັບເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ຜູ້ສະໜອງການບໍລິການ ສະໜັບສະໜູນຜູ້ຖືກເຄາະຮ້າຍ ລວມທັງ ຈິດຕະແພດ. ການຕີຄວາມໝາຍ ແລະ ປະເມີນຄວາມສ່ຽງຂອງຜູ້ຖືກເຄາະຮ້າຍເປັນສິ່ງທີ່ສຳຄັນ. ຄວາມສ່ຽງດັ່ງກ່າວອາດຈະລວມມີ ແຕ່ບໍ່ຈຳກັດ ຄວາມບອບຊ້ຳດ້ານຈິດໃຈ, ການແກ້ແຄ້ນຈາກຜູ້ຄ້າມະນຸດ ຫຼື ຄົນທີ່ຮູ້ຈັກເຂົາເຈົ້າ, ການຖືກສັງຄົມປະນາມ ແລະ ຄວາມອັບອາຍຈາກຄອບຄົວ ແລະ ຊຸມຊົນຂອງເຂົາເຈົ້າ.

ຖ້າເປັນໄປໄດ້, ປຶກສາຫາລືກັບຜູ້ຖືກເຄາະຮ້າຍ, ມອບໝາຍໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ຜູ້ຍິງ ແລະ ຜູ້ຊາຍທີ່ໄດ້ຮັບການຝຶກອົບຮົມ ສະໜອງການປົກປ້ອງດ້ານຮ່າງກາຍແກ່ຜູ້ຖືກເຄາະຮ້າຍ ຜູ້ທີ່ຢ້ານກົວຕໍ່ກັບຄວາມປອດໄພ ແລະ ຊີວິດຂອງເຂົາເຈົ້າ ລວມທັງ ສະມາຊິກຄອບຄົວ.[119] ການໃຫ້ບໍລິການ ການປົກປ້ອງ ຄວນຈະປະສານງານກັບໜ່ວຍງານປົກປ້ອງຜູ້ຖືກເຄາະຮ້າຍ ແລະ ພະຍານ/ຜູ້ປະສານງານ ທີ່ມີຢູ່ໃນບາງເຂດອຳນາດສານ.

ທົບທວນຄະດີ ເພື່ອກຳນົດວ່າ ຖ້າມີຄວາມຈຳເປັນໃນການບໍ່ເປີດເຜີຍຊື່ ແລະ ດຳເນີນການກະກຽມຢ່າງເໝາະສົມ (ລວມທັງການພິຈາລະນາຂອງສານ) ທີ່ຈຳເປັນຕ້ອງໄດ້ປົກປ້ອງຕົວຕົນຂອງຜູ້ຖືກເຄາະຮ້າຍ.

ຈັດໃຫ້ມີຕຳຫຼວດຄຸ້ມກັນ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈາກທີ່ພັກອາໄສ ໄປຫາສານ ແລະ ກັບຈາກສານ ໃນເວລາທີ່ພວກເຂົາເຮັດໜ້າທີ່ເປັນພະຍານ.

ຮັບປະກັນຄວາມປອດໄພໃນຫ້ອງປະຊຸມສານ ແລະ ຕຶກອາຄານຂອງສານ ໃນເວລາທີ່ຜູ້ຖືກເຄາະຮ້າຍກຳລັງໃຫ້ການ. ມາດຕະການອາດຈະລວມມີ: ການເຊື່ອມຕໍ່ວິດີໂອ ຫຼື ສຽງຈາກຫ້ອງຕ່າງໆ ພາຍໃນສານ ຫຼື ຈາກຕຶກອື່ນ; ມີຜ້າສາກກັ້ນເພື່ອຮັກສາຜູ້ຖືກເຄາະຮ້າຍ-ພະຍານ ອອກຈາກສາຍຕາຂອງຜູ້ຖືກຫາ ຫຼື ຜູ້ອື່ນໆໃນສານ; ແຍກຫ້ອງ ສຳລັບຜູ້ຖືກເຄາະຮ້າຍ-ພະຍານ ແລະ ຜູ້ຖືກສົງໄສ ແລະ ພະຍານປົກປ້ອງ; ກວດສອບວ່າພະນັກງານຂອງສານຮັບຮູ້ວ່າ ເຂົາເຈົ້າຮູ້ວ່າຄວນຈະເຮັດຫຍັງ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍ-ພະຍານ; ຮັກສາຄວາມປອດໄພ ເສັ້ນທາງເຂົ້າ-ອອກສານ; ກະກຽມທີ່ພັກເຊົາ ທີ່ສາມາດເຂົ້າເຖິງສານໄດ້ຢ່າງປອດໄພ; ສະແດງແຜນຜັງຂອງຫ້ອງປະຊຸມສານ ກ່ອນທີ່ການໄຕ່ສວນ ແລະ ອະທິບາຍຂັ້ນຕອນຂອງສານ; ກວດສອບອາວຸດ ແລະ ກວດສອບຕົວຕົນຂອງທຸກຄົນທັງໝົດທີ່ເຂົ້າຮ່ວມການໄຕ່ສວນ.[120]

ຜູ້ຖືກເຄາະຮ້າຍ ຄວນໄດ້ຮັບການແຈ້ງບອກຄວາມຄືບໜ້າຂອງຄະດີ ທີ່ເຂົາເຈົ້າມີສ່ວນຮ່ວມ ແລະ ສາມາດຂໍຂໍ້ມູນໄດ້ຕະຫຼອດເວລາ.[121] ໂດຍສະເພາະຢ່າງຍິ່ງ ຖ້າຜູ້ຖືກຫາ ຖືກປ່ອຍຕົວຈາກການຄວບຄຸມ.

119 ອາຊຽນ (2019). ຊຸດເຄື່ອງມືຮູບແບບການຈັດຕັ້ງປະຕິບັດຂອງຜູ້ປະຕິບັດຕົວຈິງ ສຳລັບຄູ່ມື ແລະ ຂັ້ນຕອນ ການຈັດການຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດລະດັບພາກພື້ນຂອງ ACWC. ຈາກາຕາ: ກອງເລຂາອາຊຽນ

120 ອີງການ UNODC (2008). *ຊຸດເຄື່ອງມືເພື່ອຕ້ານການຄ້າມະນຸດ.* ນິວຢອກ: UN.

121 APA ພາກ B(g). ສົນທິສັນຍາ UN ວ່າດ້ວຍການຕ້ານການຄ້າມະນຸດ, 6(2)(b).

## ສິ່ງທ້າທາຍ:

ໃນຫຼາຍໆກໍລະນີ, ຜູ້ຖືກເຄາະຮ້າຍຈາກການຂູດຮີດທາງເພດ ໄດ້ຮັບການເບິ່ງແຍງຢ່າງດີຈາກຜູ້ກະທຳຜິດ ເພື່ອໃຫ້ເບິ່ງວ່າສະຖານະການຂອງເຂົາເຈົ້າເປັນສິ່ງທີ່ 'ປົກກະຕິ-ທຳມະດາ'. ພາຍໃນອາຊຽນ, ຜູ້ຄ້າມະນຸດຫຼາຍຄົນ ມີທ່າອ່ຽງທີ່ຈະເປັນສະມາຊິກຄອບຄົວ, ຍາດພີ່ນ້ອງ ຫຼື ບຸກຄົນທີ່ຮູ້ຈັກເຂົາເຈົ້າ. ຄວາມຮັບຮູ້ທີ່ວ່າ ຜູ້ຄ້າມະນຸດນັ້ນກໍ່ມາຈາກຊຸມຊົນດຽວກັນ ແລະ ທຸກຍາກຄືກັບເຂົາເຈົ້າ ເຮັດໃຫ້ຜູ້ຖືກເຄາະຮ້າຍລັງເລທີ່ຈະດຳເນີນຄະດີກັບຜູ້ຄ້າມະນຸດຫຼາຍຂຶ້ນ.

ຜູ້ເຂົ້າຮ່ວມຈາກກອງປະຊຸມປຶກສາຫາລືລະດັບຊາດ ໄດ້ແບ່ງປັນຂໍ້ມູນວ່າ ຜູ້ຖືກເຄາະຮ້າຍມີແຮງຈູງໃຈຫຼັກຈາກການແກ້ແຄ້ນ ມັກຈະຕົກລົງເຫັນດີທີ່ຈະດຳເນີນຄະດີຜູ້ຄ້າມະນຸດໃນຊ່ວງເວລາທີ່ເຄັ່ງຮ້ອນນັ້ນ. ເຂົາເຈົ້າບໍ່ໄດ້ມີຄວາມສົນໃຈແທ້ຈິງ ທີ່ຈະເປັນສ່ວນ ໜຶ່ງໃນຂະບວນການດຳເນີນຄະດີທີ່ຍາວນານ ແລະ ອາດຈະຖອນການຮ່ວມມືໃນໄລຍະເຄິ່ງທາງ.

ເນື່ອງຈາກການດຳເນີນຄະດີທາງກົດໝາຍໃຊ້ເວລາດົນ, ມັນເປັນເລື່ອງປົກກະຕິທີ່ຜູ້ຖືກເຄາະຮ້າຍ ຈະເຈລະຈາຢ່າງບໍ່ເປັນທາງການກັບຜູ້ກະທຳຜິດ ເພື່ອໄດ້ຮັບຄ່າຊົດເຊີຍທັນທີ. ຜູ້ຖືກເຄາະຮ້າຍອາດຈະຖືກໂນ້ມນ້າວຈາກຜູ້ຄ້າມະນຸດ ຫຼື ເຈົ້າໜ້າທີ່ລັດ ທີ່ເຫັນວ່າເປັນທາງອອກທີ່ດີທີ່ສຸດສຳລັບເຂົາເຈົ້າ. ເມື່ອເຫດການນີ້ເກີດຂຶ້ນ, ເຂົາເຈົ້າມັກຈະຢຸດໃຫ້ການຮ່ວມມືໃນການດຳເນີນຄະດີຂອງສານ.

## ການປະຕິບັດທີ່ເປັນຕົວແບບທີ່ດີ:

ໜ່ວຍງານປົກປ້ອງຜູ້ຖືກເຄາະຮ້າຍ ແລະ ພະຍານຂອງອິນໂດເນເຊຍ (LPSK) ມີບົດບາດທີ່ສຳຄັນໃນການສະໜັບສະໜູນລະບົບການເຮັດວຽກທີ່ດີຂອງຕຸລາການ. ເຊິ່ງເຮັດວຽກຄຽງຄູ່ກັບໜ່ວຍງານບັງຄັບໃຊ້ກົດໝາຍຂອງອິນໂດເນເຊຍ, ກົມໄອຍະການ ແລະ ອົງການໄອຍະການສູງສຸດ ແລະ ສານ ໃນການປົກປ້ອງຜູ້ຖືກເຄາະຮ້າຍ-ພະຍານ ແລະ/ຫຼື ຜູ້ຖືກເຄາະຈາກອາຊະຍາກຳ ລວມທັງອາຊະຍາກຳຄ້າມະນຸດ. ສິ່ງດັ່ງກ່າວນີ້ມາໃນຮູບແບບຜູ້ໃຫ້ການປົກປ້ອງ ຫຼື ເຈົ້າໜ້າທີ່ຕຳຫຼວດ ທີ່ປະຈຳການບ່ອນທີ່ຜູ້ຖືກເຄາະຮ້າຍອາໄສຢູ່ ຫຼື ລາດຕະເວນພື້ນທີ່ດັ່ງກ່າວ. LPSK ໃຫ້ການບໍລິການດ້ານການແພດ, ຈິດຕະວິທະຍາ ແລະ ການຊ່ວຍເຫຼືອດ້ານຈິດຕະສັງຄົມ ສຳລັບຜູ້ຖືກເຄາະຮ້າຍ/ພະຍານໃນຂະບວນການຍຸຕິທຳ ແລະ ໃຫ້ສະຖານທີ່ພັກເຊົາທີ່ປອດໄພ ຫຼື ລະດົມກຳລັງ ຖ້າຫາກຈຳເປັນ. ນຳພາຜູ້ຖືກເຄາະຮ້າຍເຂົ້າພົບໜ່ວຍງານຕ່າງໆຂອງລັດທີ່ກ່ຽວຂ້ອງ. ກຳນົດການຄຳນວນຄ່າຊົດເຊີຍທີ່ຜູ້ຖືກເຄາະຮ້າຍມີສິດໄດ້ຮັບ. ການຄຸ້ມຄອງຄະດີຂອງເຂົາເຈົ້າສິ້ນສຸດລົງພາຍຫຼັງທີ່ຜູ້ຖືກເຄາະຮ້າຍໄດ້ຮັບການຊົດເຊີຍ.

## ການປະຕິບັດທີ່ເປັນຕົວແບບທີ່ດີ:

ພາຍໃຕ້ກົດໝາຍວ່າດ້ວຍການປົກປ້ອງພະຍານຂອງໄທ (2003), ຜູ້ຖືກເຄາະຮ້າຍ ທີ່ເປັນພະຍານ ທີ່ເຂົ້າຮ່ວມໃນການດຳເນີນຄະດີທາງກົດໝາຍ ມີສິດໄດ້ຮັບມາດຕະການ ການປົກປ້ອງທີ່ລັດສະໜັບສະໜູນດັ່ງນີ້: ທີ່ພັກອາໄສ, ເງິນຊ່ວຍເຫຼືອ, ການປົກປ້ອງຕົວຕົນ, ການຊ່ວຍເຫຼືອການກັບຄືນສູ່ສັງຄົມ (ຕົວຢ່າງ ການຝຶກອົບຮົມວິຊາຊີບ, ການສຶກສາ ແລະ ການຈ້າງງານ) ແລະ ການຮັກສາຄວາມປອດໄພ.

## ຄວາມສຳພັນຜູ້ຖືກເຄາະຮ້າຍ-ຜູ້ຄ້າມະນຸດ:[122]

ບົດລາຍງານຂອງ OSCE ໄດ້ກຳນົດບັນຫາທີ່ເກີດຂຶ້ນຊ້ຳສີ່ຫົວຂໍ້ ທີ່ເຊື່ອມໂຍງລະຫວ່າງຄວາມສຳພັນຂອງຜູ້ຖືກເຄາະຮ້າຍ-ຜູ້ກະທຳຜິດກ່ຽວພັນດ້ານເພດ: ຄອບຄົວ, ຄວາມຮັກ, ຄວາມຜູກພັນທີ່ບອບຊ້ຳດ້ານຈິດໃຈ ແລະ ຄວາມຢ້ານກົວ.

1) **ຄອບຄົວ.** ມັນເປັນເລື່ອງປົກກະຕິທີ່ສະມາຊິກຄອບຄົວຈະກ່ຽວຂ້ອງກັບການຈັດຫາ ແລະ ຂູດຮີດຜູ້ຖືກເຄາະຮ້າຍ. ຕົວຢ່າງ, ການຈັດຫາ ຫຼື ຂາຍຍິງໜຸ່ມ ແລະ ເດັກຍິງ ໄປສູ່ການຂູດຮີດທາງເພດ ເຊິ່ງບາງຄັ້ງກໍເຮັດໂດຍສະມາຊິກຄອບຄົວເພດຍິງເຊັ່ນ: ປ້າ/ນ້າສາວ ຫຼື ແມ່. ໃນທາງກັບກັນ, ເດັກຊາຍ ມີແນວໂນ້ມທີ່ຈະຖືກຜັກດັນໃຫ້ອອກຈາກບ້ານ ໂດຍສະມາຊິກຄອບຄົວ ເພື່ອຊອກຫາວິທີທາງຢູ່ລອດ ຫຼື ຫາລ້ຽງຄອບຄົວ. ເຊິ່ງສາມາດນຳໄປສູ່ຄວາມສ່ຽງໃນການຕັດສິນໃຈ ສິ່ງຜົນຕໍ່ການຂູດຮີດ.

2) **ຄວາມຮັກ.** ເດັກຍິງ ທີ່ຖືກຂູດຮີດທາງເພດ ມັກຈະເຊື່ອວ່າເຂົາເຈົ້າມີຄວາມສຳພັນແບບຄວາມຮັກກັບຜູ້ຄ້າມະນຸດ, ເຮັດໃຫ້ມີຄວາມຍາກກວ່າເກົ່າ ທີ່ຜູ້ຖືກເຄາະຮ້າຍຈະເຂົ້າໃຈວ່າແທ້ຈິງແລ້ວພວກເຂົາຖືກຄ້າມະນຸດ. ຜູ້ຖືກເຄາະຮ້າຍທີ່ຜູກມັດດ້ານຈິດໃຈກັບຜູ້ຄ້າມະນຸດໂດຍຜ່ານຄວາມສຳພັນອັນໃກ້ຊິດນັ້ນ ອາດຈະມີຄວາມຍາກທີ່ຈະໃຫ້ການໃນສານ ເນື່ອງຈາກຄວາມຜູກພັນດ້ານອາລົມ. ຕົວຢ່າງ, “ແຟນຜູ້ຊາຍທີ່ເປັນແມງດາ” ສາມາດປະສົບຜົນສຳເລັດໃນການຮັກສາຜູ້ຖືກເຄາະຮ້າຍຢູ່ພາຍໃຕ້ການຄວບຄຸມຂອງເຂົາເຈົ້າໃນໄລຍະການຂູດຮີດ ແຕ່ການປົກປ້ອງຜູ້ຄ້າມະນຸດ ຄວນຈະສືບສວນ-ສອບສວນຄະດີໂດຍເຈົ້າໜ້າທີ່ບັງຄັບໃຊ້ກົດ ໝາຍ. “ແມງດາ” ຍັງບອກຜູ້ຖືກເຄາະຮ້າຍທີ່ເປັນເດັກວ່າເຂົາເຈົ້າມີອາຍຸຫຼາຍກວ່າ 18 ປີ ແຕ່ຕົວຈິງແລ້ວບໍ່ແມ່ນ.

3) **ການຜູກມັດດ້ອຍຄວາມບອບຊ້ຳດ້ານຈິດໃຈ.** ການຜູກມັດດ້ອຍຄວາມບອບຊ້ຳດ້ານຈິດໃຈ ເປັນການຕອບໂຕ້ທາງຈິດຕະວິທະຍາ ຕໍ່ການລ່ວງລະເມີດ, ເຮັດໃຫ້ເກີດຄວາມຜູກພັນທີ່ບໍ່ດີລະຫວ່າງຜູ້ກະທຳຜິດ ແລະ ຜູ້ຖືກເຄາະຮ້າຍ. ການຜູກມັດດ້ອຍຄວາມບອບຊ້ຳດ້ານຈິດໃຈເປັນຮູບບແບບໜຶ່ງຂອງ “ອາການ Stockholm” ເຊິ່ງເກີດຂຶ້ນໃນເວລາທີ່ຜູ້ຄ້າມະນຸດ ບໍ່ວ່າຈະເປັນຜູ້ຍິງ ຫຼື ຜູ້ຊາຍ ນຳໃຊ້ເຫດການຄວາມບອບຊ້ຳດ້ານຈິດໃຈແບບຊ້ຳໄປຊ້ຳມາ ແລະ ແລະ ການລ່ວງລະເມີດແບບຊ້ຳເຮື້ອ ໂດຍອີງໃສ່ທັງການໃຫ້ລາງວັນ ແລະ ການລົງໂທດ ເພື່ອສົ່ງເສີມການເພິ່ງພາອຳນາດທາງອາລົມ ແລະ ຍຶດໝັ້ນຜູ້ຖືກເຄາະຮ້າຍຕໍ່ກັບຜູ້ຄ້າມະນຸດ. ຄວາມສຳພັນແບບນີ້ ໄດ້ສ້າງຄວາມສັບສົນ ແລະ ຄວາມຮູ້ສຶກທີ່ບໍ່ຖືກຕ້ອງໃນຄວາມສຳພັນນັ້ນ ສົ່ງຜົນເຮັດໃຫ້ຜູ້ຖືກເຄາະຮ້າຍພັດທະນາຄວາມຈົງຮັກພັກດີ, ຄວາມເຊື່ອໄວ້ ແລະ ໄວ້ວາງໃຈຜູ້ຄ້າມະນຸດ ລວມທັງ ສູນເສຍຄວາມຮູ້ສຶກຕໍ່ຕົນເອງ. ໃນກໍລະນີດັ່ງກ່າວ, ຜູ້ຄ້າມະນຸດອາດຈະນຳໃຊ້ບົດບາດການເປັນຜູ້ປົກປ້ອງ ຫຼື ຜູ້ເບິ່ງແຍງ ເພື່ອຮັກສາການຄວບຄຸມຜູ້ຖືກເຄາະຮ້າຍ ທີ່ເບິ່ງຕົນເອງວ່າເປັນຄູ່ສົມລົດ ຫຼື ຜູ້ປົກຄອງ. ຕົວຢ່າງ, ມັນເປັນເລື່ອງປົກກະຕິໃນອາຊຽນ ສຳລັບເຈົ້າຂອງສ້ອງໂສເພນີ ທີ່ຈະຖືກຮ້ອງວ່າເປັນແມ່ ຫຼື ປ້າ ໂດຍຜູ້ຖືກເຄາະຮ້າຍ ແລະ ໃຊ້ເວລາໃນທ້າຍອາທິດຮ່ວມກັນ. ບົດບາດຂອງແມ່ເລົ້ານີ້ ມັກຈະອຳນວຍຄວາມສະດວກຈາກປັດໄຈສ່ຽງອື່ນໆ ເຊັ່ນ: ຜູ້ຖືກເຄາະຮ້າຍ ບໍ່ສາມາດເວົ້າພາສາທ້ອງຖິ່ນ, ບໍ່ຄຸ້ນເຄີຍກັບວັດທະນະທຳທ້ອງຖິ່ນ ແລະ ບໍ່ຮູ້ສິດຂອງຕົນເອງ.

4) **ຄວາມຢ້ານກົວ.** ຜູ້ຄ້າມະນຸດ ນຳໃຊ້ຄວາມຮຸນແຮງ ແລະ ຄວາມຢ້ານກົວ ໃນການຄວບຄຸມຜູ້ຖືກເຄາະຮ້າຍ. ຮູບແບບການຄວບຄຸມ ທີ່ຊ້ຳເຮື້ອ ແລະ ຍາວນານ ອາດນຳໄປສູ່ຜູ້ຖືກເຄາະຮ້າຍ ທີ່ຮູ້ສຶກວ່າເຂົາເຈົ້າບໍ່ສາມາດໃຫ້ການຕໍ່ກັບການດຳເນີນຄະດີທາງອາຍາໄດ້ ເນື່ອງຈາກກັງວົນຕໍ່ກັບຄວາມປອດໄພຂອງຕົນເອງ. ເພື່ອຂັດຂວາງເຂົາເຈົ້າຈາກການລາຍງານອາຊະຍາກຳ ຫຼື ໃຫ້ການ ທັງຍິງ ແລະ ຊາຍ ທີ່ປະເຊີນໜ້າກັບການຖືກຂົ່ມຂູ່, ຄຸກຄາມ ຕໍ່ກັບສະມາຊິກຄອບຄົວ ແລະ ລູກຂອງເຂົາເຈົ້າ. ມັນເປັນສິ່ງທີ່ສຳຄັນທີ່ຈະເຂົ້າໃຈເຖິງມູມມອງສະເພາະດ້ານເພດຂອງການຄວບຄຸມ ການບີບບັງຄັບຂອງຜູ້ຄ້າມະນຸດຕໍ່ກັບຜູ້ຖືກເຄາະຮ້າຍ ໂດຍສະເພາະໃນເວລາທີ່ບໍ່ມີການລ່ວງລະເມີດທາງດ້ານຮ່າງກາຍ.

122 ຫ້ອງການຂອງຜູ້ລາຍງານພິເສດ OSCE ແລະ ຜູ້ປະສານງານຮ່ວມສຳລັບການຕ້ານການຄ້າມະນຸດ, *ການນຳໃຊ້ວິທີການທີ່ຄຳນຶງເຖິງບົດບາດຍິງ-ຊາຍ ໃນການຕ້ານການຄ້າມະນຸດ.* ວຽນນາ: OSCE

# 4. ການເປັນຜູ້ຖືກເຄາະຮ້າຍຊ້ຳຄືນໃນຂະບວນຍຸຕິທຳທາງອາຍາ

ຜູ້ຖືກເຄາະຮ້າຍ ຍັງມີຄວາມສ່ຽງທີ່ຈະຖືກຄຸກຄາມ ທັງໃນ ແລະ ນອກສານ, ເຖິງວ່າເຂົາເຈົ້າຈະສະໝັກໃຈໃນການເຂົ້າຮ່ວມຢ່າງເຕັມທີ່ ແລະ ມີການກະກຽມ/ປຶກສາກັບໄອຍະການແລ້ວ. ເຂົາເຈົ້າອາດຈະຖືກແຊກແຊງໄດ້ໂດຍງ່າຍ, ຄວາມໜ້າເຊື່ອຖືຂອງເຂົາເຈົ້າສາມາດຖືກທຳລາຍໄດ້ ໂດຍທະນາຍຄວາມຝ່າຍຈຳເລີຍທີ່ເຂັ້ມແຂງ ຫຼື ເຂົາເຈົ້າສາມາດຖືກໂນ້ມນ້າວໃຫ້ຖອນຕົວໂດຍຜູ້ຄ້າມະນຸດໄດ້ ບໍ່ວ່າຈະເປັນການໃຫ້ສິນບົນ ຫຼື ຄຸກຄາມໂດຍກົງຕໍ່ຜູ້ຖືກເຄາະຮ້າຍແລະ/ຫຼືຄອບຄົວຂອງເຂົາເຈົ້າ.[123]

ຜູ້ຖືກເຄາະຮ້າຍອາດຈະຮູ້ສຶກຖືກຕຳນິ ຫຼື ອັບອາຍອັນເປັນຜົນມາຈາກການຖືກສືບສວນ-ສອບສວນ ຫຼື ຕັດສິນ. ຜູ້ທີ່ຖືກບັງຄັບໃຫ້ປະເຊີນໜ້າກັບຜູ້ຄ້າມະນຸດ ອາດຈະມີຄວາມບອບຊ້ຳດ້ານຈິດໃຈຊ້ຳຄືນອີກໃນລະຫວ່າງຂະບວນການ.



ຮູບພາບໂດຍ ຊັບໄທ ຈາກຊັດເຕີສະຕອກ

123 ການຕ້ານການເປັນຂ້າທາດລະຫວ່າງປະເທດ (2002). *ການຄ້າມະນຸດ, ສິດທິມະນຸດ: ນິຍາມໃໝ່ໃນການປົກປ້ອງຜູ້ຖືກເຄາະຮ້າຍ.* ລອນດອນ: ການຕ້ານການເປັນຂ້າທາດລະຫວ່າງປະເທດ

# ຄຳແນະນຳການບໍ່ເຮັດໄພອັນຕະລາຍ

ສະໜອງຂໍ້ມູນທັງໝົດໃຫ້ແກ່ຜູ້ຖືກເຄາະຮ້າຍ/ພະຍານ ຕໍ່ກັບສິ່ງທີ່ຈະເກີດຂຶ້ນໃນຫ້ອງປະຊຸມສານ, ຂະບວນການດຳເນີນຄະດີຈະເປັນແນວໃດ ແລະ ຄຳຖາມໃດທີ່ເຂົາເຈົ້າອາດຈະຖືກຖາມ.

ອະນຸຍາດໃຫ້ທີ່ປຶກສາທີ່ຊ່ຽວຊານ ທີ່ເປັນຜູ້ຖືກເຄາະຮ້າຍໄວ້ວາງໃຈ ພາຜູ້ຖືກເຄາະຮ້າຍໄປສານ ແລະ ນັ່ງກັບຜູ້ຖືກເຄາະຮ້າຍໃນເວລາສອບຖາມ/ໄຕ່ສວນ.

ມອບໝາຍໃຫ້ 'ຜູ້ໃຫ້ການສະໜັບສະໜູນ ຜູ້ຖືກເຄາະຮ້າຍ-ພະຍານ' ຫຼື 'ຜູ້ປະສານງານ ຜູ້ຖືກເຄາະຮ້າຍ-ພະຍານ' ເພື່ອນຳພາ ແລະ ສະໜັບສະໜູນຜູ້ຖືກເຄາະຮ້າຍ ຕະຫຼອດຂະບວນການຂອງສານ. ບຸກຄົນນີ້ ສາມາດໃຫ້ຂໍ້ມູນອັບເດດກ່ຽວກັບສະຖານະຂອງຄະດີ ແລະ ຂໍ້ມູນກ່ຽວກັບການບໍລິການ ການສົ່ງຕໍ່.[124]

ຂໍໃຫ້ຜູ້ພິພາກສາ, ພະນັກງານໄອຍະການ ແລະ ເຈົ້າໜ້າທີ່ຕຳຫຼວດ ຜູ້ທີ່ໄດ້ຮັບການຝຶກອົບຮົມ ໃຫ້ຄຳນຶງເຖິງຄວາມອ່ອນໄຫວຂອງເຂົາເຈົ້າ ຕໍ່ກັບສະຖານະການສະເພາະຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຜູ້ທີ່ຈະພິຈາລະນາຄວາມເປັນໄດ້ໃນການກວດສອບ ແລະ ສອບຖາມ/ໄຕ່ສວນຜູ້ຖືກເຄາະຮ້າຍ.[125]

ຮ້ອງຂໍມາດຕະການສະໜັບສະໜູນຂອງສານ ໂດຍມີເປົ້າໝາຍເພື່ອຫຼຸດຜ່ອນຄວາມກົດດັນ ແລະ ຄວາມບອບຊ້ຳດ້ານຈິດໃຈຂອງຜູ້ຖືກເຄາະຮ້າຍ ເຊັ່ນ: ເຂົ້າໄປຫ້ອງປະຊຸມສານກ່ອນການໄຕ່ສວນ ເພື່ອໃຫ້ຜູ້ຖືກເຄາະຮ້າຍຄຸ້ນເຄີຍກັບສິ່ງທີ່ຢູ່ອ້ອມຮອບ ແລະ ຜູ້ໃດຈະນັ່ງບ່ອນໃດ; ຄຸ້ມກັນການເຂົ້າ ແລະ ອອກຈາກຕຶກອາຄານຂອງສານ, ນຳໃຊ້ທາງເຂົ້າສ່ວນຕົວເພື່ອເຂົ້າຕຶກຂອງສານ, ມີພື້ນທີ່ລໍຖ້າສ່ວນຕົວ ແລະ ໃຫ້ຂໍ້ມູນກ່ຽວກັບການດຳເນີນການໄຕ່ສວນຈາກເບື້ອງຂອງໄອຍະການຕະຫຼອດເຖິງຂະບວນການດຳເນີນຄະດີຂອງສານ.[126]

ໃຫ້ເວລາຢ່າງພຽງພໍແກ່ຜູ້ຖືເຄາະຮ້າຍໃນການໃຫ້ການ ແລະ ຫ້າມບໍ່ໃຫ້ລົບກວນ ຫຼື ຂໍໃຫ້ຜູ້ຖືກເຄາະຮ້າຍເລັ່ງຄວາມຈື່ຈຳຕໍ່ກັບເຫດການທີເກີດຂຶ້ນ.

ຕັດສິນໃຈຮ່ວມກັນກັບຜູ້ຖືກເຄາະຮ້າຍວ່າມີທາງເລືອກອື່ນບໍ່ ເຊັ່ນ ຫຼັກຖານຢືນຢັນ,ແລະ ຜູ້ຊ່ຽວຊານ/ພະຍານອື່ນໆແທນການນຳໃຊ້ຄຳໃຫ້ການ ແລະ ຄຳຖະແຫຼງຂອງພະຍານ ຖ້າຫາກມີອັນອື່ນທີສາມາດກໍໃຫ້ເກີດໄພອັນຕະລາຍແກ່ຜູ້ຖືກເຄາະຮ້າຍໄດ້. ການນຳໃຊ້ຫຼັກຖານຢືນຢັນ ຍັງໝາຍເຖິງວ່າຄະດີ ບໍ່ຈຳເປັນຕ້ອງອີງໃສ່ຄຳໃຫ້ການຂອງພະຍານພຽງຢ່າງດຽວ ແລະສາມາດດຳເນີນການຕໍ່ໄດ້ ຖ້າຫາກຜູ້ຖືກເຄາະຮ້າຍຫາກບໍ່ສາມາດ ຫຼື ບໍ່ເຕັມໃຈທີຈະໃຫ້ການ.

ແຈ້ງຜູ້ຖືກເຄາະຮ້າຍວ່າເຂົາເຈົ້າມີສິດທີ່ຈະສະເໜີ ແລະ ສະແດງຄວາມຄິດເຫັນໃນໄລຍະການດຳເນີນຄະດີທາງກົດໝາຍ.[127]

124 ອາຊຽນ (2019). *ຊຸດເຄື່ອງມືຮູບແບບການຈັດຕັ້ງປະຕິບັດຂອງຜູ້ປະຕິບັດຕົວຈິງ ສຳລັບຄູ່ມື ແລະ ຂັ້ນຕອນ ໃນການແກ້ໄຂຄວາມຕ້ອງການອັນຈຳເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດລະດັບພາກພື້ນຂອງ ACWC.* ຈາກາຕາ: ກອງເລຂາອາຊຽນ

125 ຫ້ອງການ OSCE ເພື່ອສະຖາບັນປະຊາທິປະໄຕ ແລະ ສິດທິມະນຸດ (ODIHR) (2004). *ກົນໄກການສົ່ງຕໍ່ລະດັບຊາດ. ຄວາມພະຍາຍາມຮ່ວມກັນໃນການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ຄູ່ມືການປະຕິບັດຕົວຈິງ.* . Warsaw: OSCE.

126 ຄູ່ມືຂອງອາຊຽນສຳລັບຜູ້ປະຕິບັດຕົວຈິງ, ພາກທີສີ່ F.4. ຄູ່ມືຂອງອາຊຽນທີ່ຄຳນຶງເຖິງບົດບາດຍິງ-ຊາຍ ວັກ 3.6.

127 APA ພາກ B(g). ສົນທິສັນຍາ UN ວ່າດ້ວຍການຕ້ານການຄ້າມະນຸດ, 6(2)(b).

## ສິ່ງທ້າທາຍ:[128]

ຫຼາຍໆປະເທດໃນອາຊຽນ, ຜູ້ຖືກເຄາະຮ້າຍ-ພະຍານ ສືບຕໍ່ມີບົດບາດສໍາຄັນໃນການດໍາເນີນຄະດີທາງກົດໝາຍຢ່າງຕໍ່ເນື່ອງ ເມື່ອຄະດີໄດ້ເລີ່ມຂຶ້ນ. ຖ້າຜູ້ຖືກເຄາະຮ້າຍຖອນການຮ່ວມມື ຫຼື ບໍ່ສາມາດຕິດຕໍ່ໄດ້, ຂະບວນການທາງກົດ ໝາຍ ມັກຈະບໍ່ມີການສືບຕໍ່. ຜູ້ພິພາກສາຫຼາຍທ່ານ ຍັງໃຫ້ຄວາມສໍາຄັນຕໍ່ກັບການປະກົດຕົວຂອງຜູ້ຖືກເຄາະຮ້າຍ-ພະຍານໃນການພິຈາລະນາຂອງສານ. ໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ບາງອັນ, ຄໍາໃຫ້ການຂອງພະຍານ-ຜູ້ຖືກເຄາະຮ້າຍ ພຽງຢ່າງດຽວສາມາດໃຊ້ເປັນຫຼັກຖານໄດ້. ຄໍາໃຫ້ການຍິ່ງມີຄວາມສໍາຄັນ ໂດຍສະເພາະໃນຄະດີທີ່ການເກັບກໍາຫຼັກຖານຍັງບໍ່ພຽງພໍຂອງເຈົ້າໜ້າທີ່ຕໍາຫຼວດ.

ຕົວຢ່າງ, ສານອິນໂດເນເຊຍ ການປະກົດຕົວຂອງຜູ້ຖືກເຄາະຮ້າຍ-ພະຍານ ເປັນຂໍ້ບັງຄັບທີ່ຕ້ອງປະກົດຕົວໃນສານ ເພື່ອເປີດເຜີຍເຫດການຂອງອາຊະຍາກໍາ ໂດຍສະເພາະຄະດີຄ້າມະນຸດ. ໃນລະຫວ່າງການເປີດເຜີຍການບັງຄັບໃຊ້ແຮງງານ ແລະ ເປັນຂ້າທາດຂອງຊາວເຮືອປະມົງຫຼາຍຮ້ອຍຄົນໃນເກາະເບນຈີນາ (Benjina) ທີ່ຢູ່ຫ່າງໄກຂອງອິນໂດເນເຊຍ ໃນປີ 2015, ຄະດີທາງກົດໝາຍທັງໝົດເກືອບປິດລົງ ເນື່ອງຈາກຜູ້ຖືກເຄາະຮ້າຍ-ພະຍານທັງໝົດຈາກປະເທດມຽນມາ ໄດ້ກັບຄືນບ້ານເກີດຂອງຕົນ.[129] The LPSK ອິນໂດເນເຊຍ ໄດ້ຕິດຕໍ່ໜ່ວຍງານຕ້ານການຄ້າມະນຸດຂອງມຽນມາ ໂດຍການຊ່ວຍເຫຼືອຈາກແຜນງານອົດສະຕຣາລີ-ອາຊີ ເພື່ອຕ້ານການຄ້າມະນຸດ (AAPTIP) ແລະ ສາມາດສົ່ງຜູ້ຖືກເຄາະຮ້າຍຈໍານວນ 13 ຄົນ (ຈາກຈໍານວນຜູ້ຖືກເຄາະຮ້າຍ 500 ຄົນຈາກມຽນມາ) ກັບຄືນມາປະເທດອິນໂດເນເຊຍເພື່ອໃຫ້ການ. ໃນທີ່ສຸດ, ກັບຕັນເຮືອປະມົງທີ່ເປັນຄົນໄທ 5 ຄົນ ແລະ ຄົນອິນໂດເນເຊຍ 3 ຄົນ ໄດ້ຖືກຕັດສິນຈໍາຄຸກສາມປີ ໃນສະຖານການຄ້າມະນຸດ ທີ່ກ່ຽວຂ້ອງກັບການເປັນຂ້າທາດໃນອຸດສາຫະກໍາອາຫານທະເລ. ກັບຕັນຄົນໄທ ຍັງຖືກສັ່ງໃຫ້ຈ່າຍຄ່າຊົດເຊີຍແກ່ລູກເຮືອທັງໝົດຈໍານວນ $67,800.[130] ຜົນໄດ້ຮັບນີ້ຈະເກີດຂຶ້ນບໍ່ໄດ້ ຖ້າຫາກບໍ່ມີການປະກົດຕົວຂອງຜູ້ຖືກເຄາະຮ້າຍ-ພະຍານ ທັງ 13 ຄົນ.

ໃນຂະນະທີ່ ການໃຫ້ການຜ່ານທາງວິດີໂອ ໄດ້ກາຍມາເປັນສິ່ງທີ່ເປັນປະຈໍາຫຼາຍຂຶ້ນ ແລະ ນໍາໃຊ້ຫຼາຍຂຶ້ນໃນຊ່ວງການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ແຕ່ກໍຍັງບໍ່ທັນໄດ້ຈັດຕັ້ງປະຕິບັດຢ່າງເຕັມສ່ວນໃນຫຼາຍໆປະເທດໃນອາຊຽນ. ລະບຽບການກ່ຽວກັບການອະນຸຍາດນໍາໃຊ້ການບັນທຶກວິດີໂອ ຍັງຕ້ອງໄດ້ຮັບການຊີ້ແຈງ. ຂັ້ນຕອນການກໍານົດການຮວບຮວມຫຼັກຖານທາງດິຈິຕ້ອນ ລວມທັງ ການປະກົດຕົວຂອງທະນາຍຄວາມ ທີ່ເປັນພະຍານໃນການບັນທຶກວິດີໂອ ແລະ ເງື່ອນໄຂອື່ນໆຍັງຕ້ອງໄດ້ຮັບການຮັບຮອງຄວາມຖືກຕ້ອງຂອງຫຼັກຖານທາງດິຈິຕ້ອນ ຊຶ່ງຈໍາເປັນຕ້ອງໄດ້ກໍານົດໄວ້ໃນກົດໝາຍ. ໃນອິນໂດເນເຊຍ, ປັດຈຸບັນການໃຫ້ການທາງວິດີໂອ ຍັງຈໍາກັດ ແລະ ມີໃຫ້ສະເພາະຜູ້ຖືກເຄາະຮ້າຍ-ພະຍານ ເຊັ່ນເດັກນ້ອຍ ຫຼື ບຸກຄົນທີ່ມີຄວາມບອບຊໍ້າທາງດ້ານຈິດໃຈ.

128 ກອງປະຊຸມລະດັບຊາດທີ່ປະເທດອິນໂດເນເຊຍ, ວັນທີ 21 ຕຸລາ 2021.

129 ໜັງສືພິມຈາກາຕ້າ (Jakarta), "ຕໍາຫຼວດອິນໂດເນເຊຍຈັບກຸມ 7 ຄົນໃນຄະດີຂ້າທາດໃນຂະແໜງການອາຫານທະເລ". ລົງວັນທີ 13 ພຶດສະພາ 2015. ເບິ່ງທີ່: https://www.thejakartapost.com/news/2015/05/13/indonesian-police-arrest-7-seafood-slavery-case.html

130 ຂ່າວທີ່ກ່ຽວຂ້ອງໃນອໍາບອນ (Ambon). "5 ຄົນຖືກຈັບເຂົ້າຄຸກໃນຄະດີຂ້າທາດໃນຂະແໜງການອາຫານທະເລ". ລົງວັນທີ 11 ມີນາ 2016. ເບິ່ງທີ່: https://www.theguardian.com/world/2016/mar/11/seafood-slave-drivers-given

### ການພິຈາລະນາ ສຳລັບເດັກທີ່ເປັນພະຍານ ໃນຂະບວນການຍຸຕິທຳທາງອາຍາ[131]

- ອະນຸຍາດ ການບັນທຶກວິດີໂອຄຳຖະແຫຼງຂອງຜູ້ຖືກເຄາະຮ້າຍທີ່ເປັນເດັກ ເພື່ອເປັນຫຼັກຖານ
- ໃຊ້ກ້ອງວົງຈອນປິດ
- ທາງເລືອກອື່ນໃນການກະກຽມການຍື່ນຫຼັກຖານ ເຊັ່ນ: ຜ້າສາກ/ຜ້າກັ້ງ
- ອະນຸຍາດໃຫ້ຜູ້ສະໜັບສະໜູນ ຫຼື ທະນາຄວາມໃຫ້ເຂົ້າຮ່ວມນຳ ໃນເວລາທີ່ເດັກໃຫ້ຫຼັກຖານ
- ນຳໃຊ້ຄົນກາງ ເພື່ອຊ່ວຍເດັກທີ່ເປັນພະຍານ ໃນການໃຫ້ຫຼັກຖານ
- ຫ້າມຈຳເລີຍບໍ່ໃຫ້ສອບຖາມຜູ້ຖືກເຄາະຮ້າຍທີ່ເປັນເດັກໂດຍກົງ
- ຄັດຄ້ານການສອບຖາມຄ້ານ ທີ່ມີລັກສະນະຮຸກຮານ ຫຼື ບໍ່ເໝາະສົມ ໂດຍທະນາຍຄວາມຝ່າຍຈຳເລີຍ
- ການປະຊຸມສານແບບປິດຕໍ່ສາທາລະນະ
- ບໍ່ອະນຸຍາດສື່ມວນຊົນເຂົ້າຮ່ວມ
- ຫຼຸດຜ່ອນພິທີການຂອງຫ້ອງປະຊຸມສານ ດ້ວຍມາດຕະການຕ່າງໆເຊັ່ນ: ບໍ່ໃຫ້ໃສ່ເສື້ອຄຸມຂອງທະນາຍຄວາມ

131 ອີງການ UNODC (2008). *ຊຸດເຄື່ອງມືເພື່ອຕ້ານການຄ້າມະນຸດ.* ນິວຢອກ: UN.

# 5. ການດຳເນີນຄະດີ ແລະ ການຕັດສິນ ທີ່ອີງຕາມອັກຄະຕິ ແລະ ແນວຄິດແບບດັ້ງເດີມ

ແນວຄິດດັ້ງເດີມດ້ານບົດບາດຍິງ-ຊາຍ ແລະ ຮູບແບບອື່ນຂອງການຈຳແນກ ສາມາດສົ່ງຜົນກະທົບຕໍ່ກັບການຕັດສິນໃຈຂອງເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ຝ່າຍຕຸລາການ. ສິ່ງນີ້ອາດນຳໄປສູ່ການປະຕິບັດທີ່ບໍ່ເໝາະສົມຕໍ່ຜູ້ຖືກເຄາະຮ້າຍເຊັ່ນ: ການສອບຖາມທີ່ບໍ່ເໝາະສົມ, ການຍົກເລີກການຮ້ອງຂໍຂອງຜູ້ຖືກເຄາະຮ້າຍ ແລະ ປະຕິເສດສະຖານະຂອງຜູ້ຖືກເຄາະຮ້າຍ. ຜູ້ພິພາກສາ ຫຼື ໄອຍະການທີ່ມີຄວາມເຊື່ອ 'ທັດສະນະຄະຕິກ່ຽວກັບຜູ້ຖືກເຄາະຮ້າຍ' ອາດຈະພົບກັບສິ່ງຫຍຸ້ງຍາກທີ່ຈະເຫັນຜູ້ຊາຍໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ແຕ່ເຂົາເຈົ້າອາດຈະມີບັນຫາການຖືກບັງຄັບໃຊ້ແຮງງານເຊັ່ນ: ບັນຫາການຈ້າງງານ. ດັ່ງນັ້ນ, ຈຶ່ງຫຼຸດລະດັບການກະທຳຜິດທາງອາຍາລົງ. ນອກນັ້ນ ຍັງມີຄວາມເຂົ້າໃຈຜິດທີ່ວ່າຜູ້ຊາຍສາມາດປ້ອງກັນຕົນເອງຈາກການຖືກຂູດຮີດໄດ້.

ການປະພຶດທີ່ບໍ່ຖືກຕ້ອງຕໍ່ກັບຜູ້ຖືກເຄາະຮ້າຍເພດຍິງ ມັກຈະເຊື່ອມໂຍງໂດຍກົງຕໍ່ກັບຮູບແບບຂອງການຄ້າມະນຸດທີ່ເຂົາເຈົ້າຖືກຂູດຮີດ - ການຂູດຮີດທາງເພດ ລວມທັງ ພຶດຕິກຳທີ່ກ່າວໂທດຜູ້ຖືກເຄາະຮ້າຍ. ຕົວຢ່າງ ທະນາຍຄວາມຝ່າຍຈຳເລີຍ ອາດຈະພະຍາຍາມທີ່ຈະຍົກເລີກການຮ້ອງຂໍຂອງຜູ້ຖືກເຄາະຮ້າຍ ທີ່ຖືກຄ້າທາງເພດ ດ້ວຍການໃຫ້ລາຍລະອຽດກ່ຽວກັບເສື້ອຜ້າທີ່ຊື້ມາໂດຍເງິນຂອງຜູ້ຄ້າມະນຸດ ແລະ ນຸ່ງເສື້ອຜ້າດັ່ງກ່າວໃນເວລາບໍລິການທາງເພດ. ທະນາຍຄວາມຝ່າຍຈຳເລີຍ ອາດຈະສະແດງຮູບພາບຂອງຜູ້ຖືກເຄາະຮ້າຍຈາກສື່ສັງຄົມອອນລາຍເຊັ່ນ: ເຟສບຸກ ແລະ ອິນສະຕາແກຣມ (Instagram) ໂດຍໃຊ້ພາບເຫຼົ່ານີ້ ເພື່ອໂຈມຕີສິນລະທຳຂອງຜູ້ຖືກເຄາະຮ້າຍ ເພື່ອທີ່ຈະຍາຍາມພິສູດວ່າລາວບໍ່ແມ່ນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ບາງກຸ່ມຄົນເຊັ່ນ: ຄົນທຸກຍາກ ແລະ ຂາດເຂີນ, ບຸກຄົນທີ່ມີຄວາມພິການດ້ານສະຕິປັນຍາ, ຊົນເຜົ່າ ອາດຈະຖືກສັນນິຖານວ່າເປັນພະຍານທີ່ບໍ່ມີຄວາມໜ້າເຊື່ອຖື ຫຼື ບໍ່ມີຄວາມສາມາດ. ຖ້າຫາກບໍ່ມີການສະໜັບສະໜູນ ແລະ ການປັບປ່ຽນທີ່ຈຳເປັນ, ຄຳໃຫ້ການຂອງເຂົາເຈົ້າ ຈະຖືກຍົກເລີກໄດ້ໂດຍງ່າຍດາຍ ໂດຍຜູ້ພິພາກສາ ແລະ ພະນັກງານໄອຍະການ.

ຜູ້ຖືກເຄາະຮ້າຍ ທີ່ໄດ້ຮັບຄວາມບອບຊ້ຳດ້ານຈິດໃຈຢ່າງໜັກອາດຈະມີຄວາມຫຍຸ້ງຍາກທີ່ຈະໃຫ້ການຢ່າງຊັດເຈນ ແລະສອດຄ່ອງກັນ. ເຂົາເຈົ້າອາດຈະປ່ຽນເລື່ອງລາວຫຼາຍຄັ້ງໃນເວລາທີ່ໄຕ່ສວນ. ດ້ວຍເຫດນັ້ນ ຈຶ່ງຕັ້ງຂໍ້ສົງໄສໃນຕົນເອງ ແລະ ຫຼັກຖານທີ່ໄດ້ມີການກ່າວຫາ.

# ຄຳແນະນຳການບໍ່ເຮັດໄພອັນຕະລາຍ

ຄຳນຶງເຖິງອັກຄະຕິ ບໍ່ວ່າຈະຊັດເຈນ ຫຼື ບໍ່ຊັດເຈນ, ມີສະຕິ ຫຼື ບໍ່ມີສະຕິ, ໃນຕົວທ່ານເອງ ແລະ ບຸກຄົນອ້ອມຕົວທ່ານ. ປະຕິບັດຕາມຂັ້ນຕອນເພື່ອແກ້ບັນຫາກັບອັກຄະຕິເຫຼົ່ານີ້.

ເນັ້ນໃສ່ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ ໂດຍອີງໃສ່ປະເພດຂອງການຂູດຮີດ ແລະ ຄວາມບອບຊ້ຳດ້ານຈິດໃຈທີ່ເຂົາເຈົ້າຕ້ອງໄດ້ອົດທົນ. ຮ່ວມມືລະຫວ່າງໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ອົງການທີ່ເຮັດວຽກກ່ຽວກັບຜູ້ລອດຊີວິດທີ່ໄດ້ຮັບການເນັ້ນໃຫ້ເຫັນວ່າມີການປະຕິບັດທີ່ເປັນຕົວແບບທີ່ດີ ໃນການພິຈາລະນາມຸມມອງຂອງຜູ້ຖືກເຄາະຮ້າຍ.[132]

ຜູ້ພິພາກສາ ແລະ ທະນາຍຄວາມປົກປ້ອງຝ່າຍຈຳເລີຍ ຕ້ອງປະຕິບັດຕາມກົດຈັນຍາບັນ ແລະ ການປະຕິບັດດ້ານອາຊີບຂອງຕົນ. ສິ່ງນີ້ລວມມີ ການບໍ່ໃຊ້ພາສາ ຫຼື ນ້ຳສຽງທີ່ຮຸນແຮງ ຫຼື ແຂງກະດ້າງ. ນອກນັ້ນ, ຫ້າມຜັກດັນໃຫ້ຜູ້ຖືກເຄາະຮ້າຍເລົ່າເລື່ອງລາວຂອງເຂົາເຈົ້າ.

ຝຶກຜູ້ປະກອບວິຊາຊີບດ້ານຍຸຕິທຳທາງອາຍາ ໃນກົດໝາຍສິດທິມະນຸດສາກົນ ແລະ ອັກຄະຕິດ້ານບົດບາດຍິງ-ຊາຍ ແລະ ແນວຄິດດັ້ງເດີມ. ເນັ້ນໃຫ້ເຫັນເຖິງອັນຕະລາຍທີ່ອາດຈະເກີດຂຶ້ນຈາກແນວຄິດດັ້ງເດີມຂອງຝ່າຍຕຸລາການ ຜ່ານການປົດຄົ້ນຄວ້າທີ່ອີງໃສ່ຫຼັກຖານ. ວິເຄາະການໃຊ້ເຫດຜົນຂອງຝ່າຍຕຸລາການ ສຳລັບຫຼັກຖານກ່ຽວກັບແນວຄິດດັ້ງເດີມ ແລະ ເນັ້ນໃຫ້ເຫັນເຖິງ ຕົວຢ່າງການປະຕິບັດທີ່ເປັນຕົວແບບທີ່ດີຂອງຜູ້ປະຕິບັດດ້ານຍຸຕິທຳ ທີ່ທ້າທາຍ ແລະ ເອົາຊະນະແນວຄິດອັກຄະຕິດັ້ງເດີມກ່ຽວກັບເພດພາວະໄດ້.

---

**ການປະຕິບັດທີ່ເປັນຕົວແບບທີ່ດີ:**

ປະເທດໄທໄດ້ສ້າງກອງທຶນຕ້ານການຄ້າມະນຸດ ເພື່ອນຳໃຊ້ສຳລັບຫຼາຍຈຸດປະສົງ: ການຊົດເຊີຍ ຫຼື ປຽວຢາໃຫ້ແກ່ຜູ້ຖືກເຄາະຮ້າຍ; ການຊ່ວຍເຫຼືອດ້ານການເງິນຢ່າງຈຳກັດສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ; ການສົ່ງກັບຄືນ ແລະ ການກັບຄືນຂອງຜູ້ຖືກເຄາະຮ້າຍ; ການສະໜັບສະໜູນຕໍ່ກັບອົງການ NGO ຢ່າງຈຳກັດ ແລະ ອື່ນໆ.

132 ຫ້ອງການ OSCE ເພື່ອສະຖາບັນປະຊາທິປະໄຕ ແລະ ສິດທິມະນຸດ (ODIHR) (2004). *ກົນໄກການສົ່ງຕໍ່ລະດັບຊາດ. ຄວາມພະຍາຍາມຮ່ວມກັນໃນການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ຄູ່ມືການປະຕິບັດຕົວຈິງ.* Warsaw: OSCE.

# 6. ຄວາມກົດດັນດ້ານເສດຖະກິດ ແລະ ການຊົດເຊີຍ ຫຼື ການປິ່ນປົວ ການຢຽວຢາ

ການມີສ່ວນຮ່ວມໃນຂະບວນການດຳເນີນຄະດີ ອາດຈະກຳນົດຕົ້ນທຶນດ້ານການເງິນທີ່ສຳຄັນສຳລັບຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງເຂົາເຈົ້າ. ການດຳເນີນຄະດີຂອງສານອາດຈະໃຊ້ເວລາຫຼາຍເດືອນ/ປີ ແລະ ໃຊ້ເວລາໃນການຊ່ວຍເຫຼືອ ດ້ານການສືບສວນ-ສອບສວນ, ການດຳເນີນຄະດີ, ການໄຕ່ສວນ ແລະ ການຕັດສິນຂອງສານ ເຮັດໃຫ້ສູນເສຍໂອກາດໃນການເຮັດວຽກ ແລະ ມີລາຍຮັບເພື່ອຄອບຄົວຂອງເຂົາເຈົ້າ. ຜູ້ຖືກເຄາະຮ້າຍ-ພະຍານບາງຄົນ ອາດຕ້ອງຢູ່ໃນສູນພັກເຊົາຕະຫຼອດໄລຍະຂອງການດຳເນີນຄະດີຂອງສານ ຊຶ່ງຂັດຂວາງຄວາມສາມາດຂອງເຂົາເຈົ້າໃນການຫາລາຍໄດ້. ຜູ້ຖືກເຄາະຮ້າຍຫຼາຍຄົນ ທີ່ຫາລ້ຽງຄອບຄົວພຽງຄົນດຽວ, ສະຖານະການໄດ້ສ້າງຄວາມກົດດັນດ້ານເສດຖະກິດ, ອາລົມ ແລະ ຈິດໃຈຂອງຜູ້ຖືກເຄາະຮ້າຍ.

ການດຳເນີນຄະດີຕໍ່ຜູ້ຄ້າມະນຸດທີ່ປະສົບຜົນສຳເລັດ ອາດຈະບໍ່ແມ່ນການນຳໄປສູ່ການໄດ້ຮັບຄ່າຊົດເຊີຍ ຫຼື ຄ່າປິ່ນປົວແປງຈິດໃຈສຳລັບຜູ້ຖືກເຄາະຮ້າຍ ແລະ ຄອບຄົວຂອງເຂົາເຈົ້າສະເໝີໄປ. ໃນຫຼາຍກໍລະນີ, ຄ່າປົວແປງຈິດໃຈ ອາດຈະຖືກປ່ຽນແທນດ້ວຍການຈຳຄຸກຂອງຜູ້ກະທຳຜິດ ເນື່ອງຈາກພວກເຂົາບໍ່ມີຄວາມສາມາດທີ່ຈະຈ່າຍ.

ໃນກໍລະນີທີ່ມີການຈ່າຍຄ່າຊົດເຊີຍ ຫຼື ຄ່າປົວແປງຈິດໃຈ, ມັກຈະມີສິ່ງທ້າທາຍໃນການເຂົ້າເຖິງ ເນື່ອງຈາກລະບົບຂອງລັດ ແລະ ກົດໝາຍ. ສຳລັບຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດຫຼາຍຄົນ ໃນອາຊຽນ, ເປັນເລື່ອງຍາກທີ່ສຸດ ສຳລັບເຂົາເຈົ້າໃນການເຂົ້າເຖິງການຢຽວຢາ ເນື່ອງຈາກສະຖານະທີ່ "ຜິດປົກກະຕິ" ຂອງເຂົາເຈົ້າ ແລະ ມູນຄວາມຈິງທີ່ເຂົາເຈົ້າມັກຈະຖືກສົ່ງກັບປະເທດກ່ອນທີ່ຈະສາມາດຮຽກຮ້ອງຄ່າເສຍຫາຍໄດ້.

ການເຂົ້າເຖິງການຢຽວຢາເປັນອົງປະກອບທີ່ສຳຄັນໃນການຟື້ນຟູ ແລະ ການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍໃນໄລຍະຍາວ ແລະ ຍືນຍົງ. ຄ່າຊົດເຊີຍທີ່ໄດ້ຮັບ ທີ່ຮັບຮູ້ເຖິງການສູນເສຍ ແລະ ໄພອັນຕະລາຍຕໍ່ກັບຜູ້ຖືກເຄາະຮ້າຍນັ້ນສາມາດບັນເທົາຂະບວນການຟື້ນຟູຄືນ ແລະ ຫຼຸດຜ່ອນຄວາມສ່ຽງຂອງຜູ້ຖືກເຄາະຮ້າຍທີ່ຈະຕົກເປັນຜູ້ຖືກເຄາະຮ້າຍຊ້ຳຄືນອີກ.[133]

ມາດຕາ 6, ວັກທີ 6 ຂອງ ***ອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ*** ກຳນົດວ່າ: "ແຕ່ລະລັດພາຄີ ຕ້ອງຮັບປະກັນວ່າລະບົບກົດໝາຍພາຍໃນຂອງຕົນ ມີມາດຕະການທີ່ສະເໜີໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຄວາມເປັນໄປໄດ້ທີ່ຈະໄດ້ຮັບຄ່າຊົດເຊີຍຈາກຄວາມເສຍຫາຍທີ່ໄດ້ຮັບ." ຊຶ່ງໝາຍຄວາມວ່າ ເມື່ອບໍ່ມີຄວາມເປັນໄປໄດ້ທີ່ຈະໄດ້ຮັບຄ່າຊົດເຊີຍພາຍໃຕ້ກົດ ໝາຍພາຍໃນ, ກົດໝາຍອາດຈະຈຳເປັນທີ່ຈະຕ້ອງສ້າງແຜນງານທີ່ເໝາະສົມ.

ມາດຕາ 14 [13 ແລະ 14] ຂອງສົນທິສັນຍາ ACTIP ຜູກມັດໃຫ້ລັດສະມາຊິກໃຫ້ຮັບປະກັນວ່າລະບົບກົດໝາຍພາຍໃນຂອງປະເທດຕົນສະໜອງຄວາມເປັນໄປໄດ້ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຈະໄດ້ຮັບຄ່າຊົດເຊີຍຕໍ່ຄວາມເສຍຫາຍທີ່ໄດ້ຮັບ. ເຊິ່ງຮຽກຮ້ອງໃຫ້ບັນດາລັດຕ່າງໆ ສ້າງກອງທຶນລະດັບຊາດທີ່ໃຊ້ສຳລັບການເບິ່ງແຍງດູແລ ແລະ ໃຫ້ການສະໜັບສະໜູນແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ມາດຕາ 22 ຂອງສົນທິສັນຍາ ACTIP ຮຽກຮ້ອງໃຫ້ລັດນຳໃຊ້ເງິນທີ່ຮິບໄດ້ ຫຼື ຊັບສິນຈາກອາຊະຍາກຳ ເພື່ອສົ່ງຄືນໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ເປັນຄ່າຊົດເຊີຍ ແລະ ການຊ່ວຍເຫຼືອ.

---

133 ຄະນະກຳມາທິການອາຊຽນວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິແມ່ຍິງ ແລະ ເດັກນ້ອຍ. *ຄູ່ມື ແລະ ຂັ້ນຕອນ ໃນການແກ້ໄຂຄວາມຕ້ອງການອັນຈຳເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນພາກພື້ນ.* ເອກະສານຊ້ອນທ້າຍ: ການອ້າງອີງ ແລະ ການປະຕິບັດທີ່ເປັນຕົວແບບທີ່ດີ (n.d.).

ຄູ່ມື ແລະ ຂັ້ນຕອນລະດັບພາກພື້ນຂອງ ACWC ເພື່ອແກ້ໄຂຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຮຽກຮ້ອງໃຫ້ລັດ ຮັບປະກັນວ່າກອບກົດໝາຍພາຍໃນ ອະນຸຍາດໃຫ້ສານອາຍາ ຕັດສິນການຈ່າຍຄ່າເສຍຫາຍທາງອາຍາ (ຈ່າຍໂດຍຜູ້ກະທຳຜິດ) ແລະ/ຫຼື ກຳນົດຄຳສັ່ງ ສຳລັບຄ່າຊົດເຊີຍ ຫຼື ຄ່າເສຍຫາຍ ຈາກບຸກຄົນທີ່ຖືກຕັດສິນວ່າມີຄວາມຜິດໃນສະຖານການຄ້າມະນຸດ. ຂັ້ນຕອນຈຳເປັນຕ້ອງເຮັດໃຫ້ມີປະສິດທິພາບ ພາຍໃຕ້ລະບຽບການທີ່ມີຢູ່ ລວມທັງ ພັນທະຂອງພະນັກງານໄອຍະການ ແລະ/ຫຼື ໜ່ວຍງານອື່ນໆທີ່ກ່ຽວຂ້ອງ ເພື່ອປະຕິບັດການຊົດເຊີຍຈາກຜູ້ກະທຳຜິດທີ່ຖືກສານຕັດສິນ.[134]

ຍົກເວັ້ນ ປະເທດສິງກະໂປ, ທຸກປະເທດໃນອາຊຽນ ມີຂໍ້ກຳນົດໃນກົດໝາຍພາຍໃນຂອງຕົນ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ສາມາດເຂົ້າເຖິງຄ່າຊົດເຊີຍ ແລະ ຄ່າປົວແປງຈິດໃຈ.

**ບຣູໄນ:** ກົດໝາຍວ່າດ້ວຍການຕ້ານການຄ້າະມນຸດ 2019 ມາດຕາ 44 ກຳນົດວ່າ ການສ້າງຕັ້ງກອງທຶນຕ້ານການຄ້າມະນຸດ. ມາດຕາ 46 ກຳນົດວ່າ ກອງທຶນ ອາດຈະນຳໃຊ້ສຳລັບຄ່າຊົດເຊີຍຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ເງິນທຶນສຳລັບການສົ່ງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດກັບຄືນປະເທດ ແລະ ໃຊ້ສຳລັບສິ່ງອື່ນໆ.

**ກຳປູເຈຍ:** ກົດໝາຍວ່າດ້ວຍການປາບປາມການຄ້າມະນຸດ ແລະ ການຂູດຮີດທາງເພດ ປີ 2008 ມາດຕາ 46 ກຳນົດໃຫ້ມີການຈ່າຍຄ່າປົວແປງຈິດໃຈຈາກບຸກຄົນທີ່ຮັ່ງມີ ຜ່ານການກະທຳທີ່ເປັນການຊື້/ການຂາຍ ຫຼື ແລກປ່ຽນມະນຸດ ຫຼື ການຂູດຮີດທາງເພດ.

**ອິນໂດເນເຊຍ:** ກົດໝາຍສະບັບເລກທີ 21 ປີ 2007 ວ່າດ້ວຍການລຶບລ້າງການກະທຳທາງອາຊະຍາກຳຂອງການຄ້າມະນຸດ ມາດຕາ 48 ຜູ້ຖືກເຄາະຮ້າຍມີສິດໄດ້ຮັບຄ່າປົວຈິດໃຈ ທີ່ເປັນຄ່າຊົດເຊີຍຈາກການສູນເສຍຊັບສິນ ຫຼື ລາຍໄດ້; ຄວາມທຸກທໍລະມານ; ຄ່າປິ່ນປົວດ້ານການແພດ ແລະ/ຫຼື ດ້ານຈິດຕະວິທະຍາ; ແລະ/ຫຼື ການສູນເສຍອື່ນໆທີ່ໄດ້ຮັບ ໂດຍຜູ້ຖືກເຄາະຮ້າຍ ທີ່ເກີດຂຶ້ນຈາກການກະທຳທີ່ເປັນອາຊະຍາກຳຂອງການຄ້າມະນຸດ.

**ສປປ ລາວ:** ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ 2016 ມາດຕາ 36 ກຳນົດໃຫ້ຜູ້ຖືກເຄາະຮ້າຍ ຫຼື ຜູ້ເສຍຫາຍທາງແພ່ງຮຽກຮ້ອງຄ່າເສຍຫາຍທາງແພ່ງ ໃນໄລຍະການດຳເນີນຄະດີອາຍາ.

**ມາເລເຊຍ:** ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ແລະ ຕ້ານການລັກລອບເຂົ້າ-ອອກເມືອງຂອງແຮງງານເຄື່ອນຍ້າຍ 2007 ມາດຕາ 66 ກຳນົດໃຫ້ມີການຈ່າຍຄ່າຊົດເຊີຍໂດຍຜູ້ທີ່ຖືກສານຕັດສິນ ໃຫ້ແກ່ຜູ້ຖືກຄ້າມະນຸດ. ມັນຍັງກຳນົດໃຫ້ມີການຈ່າຍຄ່າແຮງງານທີ່ຄ້າງຊຳລະ ຕໍ່ກັບຜູ້ທີ່ຖືກຄ້າມະນຸດ ໃນກໍລະນີ ທີ່ບໍ່ມີການຕັດສິນວ່າມີຄວາມຜິດຕາມກົດໝາຍສະບັບນີ້.

**ມຽນມາ:** ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ 2005 ມາດຕາ 33 ກຳນົດວ່າ ສານອາດຈະສັ່ງໃຫ້ມີການຈ່າຍຄ່າເສຍຫາຍ ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈາກເງິນທີ່ຮິບມາ ຫຼື ຈາກຂະບວນການຂາຍຊັບສິນ ຫຼື ຈາກການປັບໃໝ.

**ຟີລິບປິນ:** ກົດໝາຍວ່າດ້ວຍຄ່າຊົດເຊີຍແກ່ຜູ້ຖືກເຄາະຮ້າຍ R.A. 7309 ຄະນະກຳມະການຮຽກຮ້ອງ ພາຍໃຕ້ DOJ ໃຫ້ການຊົດເຊີຍສຳລັບຜູ້ຖືກເຄາະຮ້າຍ ທີ່ຖືກຈຳຄຸກ ຫຼື ກັກຂັງທີ່ບໍ່ເປັນທຳ ແລະ ຜູ້ຖືກເຄາະຮ້າຍຈາກອາຊະຍາກຳຄວາມຮຸນແຮງ ລວມທັງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

**ປະເທດໄທ:** ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ 2008 (2017) ພາກທີ 33, 34, 35 ແລະ 37 ກຳນົດສິດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ໄດ້ຮັບຄ່າຊົດເຊີຍຈາກຄວາມເສຍຫາຍທີ່ເປັນຜົນສະທ້ອນມາຈາກການຄ້າມະນຸດ.

**ຫວຽດນາມ:** ກົດໝາຍວ່າດ້ວຍການປ້ອງກັນ ແລະ ຕ້ານການຄ້າມະນຸດ 2011 ມາດຕາ 6 ກຳນົດສິດຂອງຜູ້ຖືກເຄາະຮ້າຍທີ່ຈະໄດ້ຮັບຄ່າຊົດເຊີຍຈາກຄວາມເສຍຫາຍ ພາຍໃຕ້ກົດໝາຍ. ມາດຕາ 36 ໄດ້ກ່າວເຖິງຄ່າຊົດເຊີຍ.

134 ເບິ່ງພາກທີ 5.2 ທີ່ກ່ຽວຂ້ອງກັບຂັ້ນຕອນ ແລະ ກົນໄກການຊົດເຊີຍ

# ຄຳແນະນຳການບໍ່ເຮັດໄພອັນຕະລາຍ

ຫ້າມໃຫ້ຄຳສັນຍາ ຫຼື ເວົ້າແບບເກີນຄວາມຈິງຕໍ່ກັບຜົນປະໂຫຍດໃນການເຂົ້າຮ່ວມການດຳເນີນຄະດີ.

ບອກຜູ້ຖືກເຄາະຮ້າຍໃຫ້ຊາບແຕ່ຕົ້ນ ແລະ ຢ່າງຮອບດ້ານກ່ຽວກັບການປຽວຍາ ທີ່ເຂົາເຈົ້າສາມາດເຂົ້າເຖິງ ແລະ ວິທີການທີ່ເຂົາເຈົ້າຈະໄດ້ຮັບການສະໜັບສະໜູນເພື່ອໃຫ້ໄດ້ຮັບ. ຄວນໃຫ້ຂໍ້ມູນທີ່ຈະແຈ້ງກ່ຽວກັບ: ວິທີການໃນການຂໍຄ່າຊົດເຊີຍ/ຄ່າປົວແປງຈິດໃຈ ແລະ ຄ່າເສຍຫາຍ; ຂັ້ນຕອນການຮຽກຮ້ອງ ແລະ ເອກະສານທີ່ຈຳເປັນ; ຄວາມເປັນໄປໄດ້ຂອງການຕັດສິນຄະດີ ແລະ ໄລຍະເວລາຂອງການຄະດີຄວາມໃນສານ ແລະ ອື່ນໆ.[135]

ພິຈາລະນາຍື່ນຄ່າຊົດເຊີຍທັງທາງແພ່ງ ແລະ ທາງອາຍາ ໂດຍການປຶກສາກັບຜູ້ຖືກເຄາະຮ້າຍ. ນັ້ນໝາຍຄວາມວ່າຜູ້ຖືກເຄາະຮ້າຍຄວນໄດ້ຮັບຄ່າຊົດເຊີຍສຳລັບການສູນເສຍດ້ານເສດຖະກິດ/ລາຍຮັບຂອງເຂົາເຈົ້າໃນໄລຍະ ແລະ ຫຼັງຈາກປະສົບການຖືກຄ້າມະນຸດ.

ຜູ້ຖືກເຄາະຮ້າຍທີ່ບໍ່ແມ່ນພົນລະເມືອງຂອງປະເທດດັ່ງກ່າວ ຄວນໄດ້ຮັບສິດໃນການອາໄສຢູ່ຕໍ່ໃນປະເທດ ລວມທັງ ສິດໃນການເຮັດວຽກ ທີ່ເຂົາເຈົ້າຕ້ອງການ ຈົນກວ່າມີການແກ້ໄຂການຮຽກຮ້ອງຄ່າຊົດເຊີຍຂອງເຂົາເຈົ້າ.

ຮຽກຮ້ອງໃຫ້ການດຳເນີນຄະດີອາຍາ ແລະ ການໄຕ່ສວນຄະດີຄ້າມະນຸດ ໃຫ້ມີການເລີ່ມຕົ້ນ ແລະ ສຳເລັດໂດຍບໍ່ມີຄວາມຊັກຊ້າ. ເລັ່ງລັດການດຳເນີນຄະດີ ທີ່ກ່ຽວຂ້ອງກັບເດັກ ແລະ ບຸກຄົນທີ່ມີຄວາມສ່ຽງສູງ.

### ສິ່ງທ້າທາຍ:[136]

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນອິນໂດເນເຊຍ ປະສົບກັບສິ່ງທ້າທາຍຫຼາຍອັນໃນການໄດ້ຮັບຄ່າປົວແປງຈິດໃຈ. ບາງຄັ້ງເຂົາເຈົ້າຈະຖືກຖາມໂດຍຜູ້ພິພາກສາ ເພື່ອໃຫ້ສະໜອງເຫດຜົນໃນການຮຽກຮ້ອງຄ່າຊົດເຊີຍໃນຈຳນວນສະເພາະ (ຕົວຢ່າງ 200 ລ້ານຣູເປຍອິນໂດເນເຊຍ ຫຼື 14,000 ໂດລາສະຫະລັດ) ແລະ ຖ້າຜູ້ພິພາກສາບໍ່ໝັ້ນໃຈ ກໍຈະບໍ່ໄດ້ຮັບຄ່າຊົດເຊີຍ. ຜູ້ເຂົ້າຮ່ວມຈາກກອງປະຊຸມປຶກສາຫາລືລະດັບຊາດ ໄດ້ແບ່ງປັນຂໍ້ມູນກໍລະນີທີ່ຜູ້ພິພາກສາ ຈັດການກັບຄວາມສູນເສຍທີ່ປະຈັກຕາ/ເຫັນໄດ້ ເຊັ່ນ ເງິນເດືອນທີ່ຍັງບໍ່ທັນໄດ້ຈ່າຍໃຫ້ ແລະ ໃບຮັບເງິນທາງການແພດ ແລະ ນອກນັ້ນ ຍັງບໍ່ພິຈາລະນາຄວາມບອບຊໍ້າດ້ານຈິດໃຈ ແລະ ອາລົມ ທີ່ຜູ້ຖືກເຄາະຮ້າຍໄດ້ຮັບ ລວມທັງ ຄວາມເປັນໄປໄດ້ທີ່ຈະສູນເສຍລາຍຮັບ ທີ່ອາດຈະເກີດຂຶ້ນ ໃນຂະບວນການດຳເນີນຄະດີ. ຈຳນວນເງິນທີ່ໄດ້ຮັບອາດຈະບໍ່ສອດຄ່ອງກັບຂອບເຂດການລະເມີດສິດ ແລະ ການສູນເສຍທີ່ຜູ້ຖືກເຄາະຮ້າຍໄດ້ປະສົບມາ.

135 ຄູ່ມືຂອງອາຊຽນສຳລັບຜູ້ປະຕິບັດຕົວຈິງ, ພາກທີສີ່ F.4. ຄູ່ມືຂອງອາຊຽນທີ່ຄຳນຶງເຖິງບົດບາດຍິງ-ຊາຍ ວັກ 3.6.

136 ກອງປະຊຸມປຶກສາຫາລືລະດັບຊາດທີ່ປະເທດອິນໂດເນເຊຍ, ວັນທີ 21 ຕຸລາ 2021.

# 7. ຂາດທີ່ປຶກສາ ແລະ ຜູ້ຕາງໜ້າທາງດ້ານກົດໝາຍ

ການມີທີ່ປຶກສາທາງດ້ານກົດໝາຍ ເປັນສິ່ງທີ່ສຳຄັນທີ່ຈະຊ່ວຍແຈ້ງຜູ້ຖືກເຄາະຮ້າຍກ່ຽວກັບສິດຂອງເຂົາເຈົ້າ ແລະ ບົດບາດໃນການດຳເນີນຄະດີທາງອາຍາ ແລະ ນຳພາເຂົາເຈົ້າໃນຕະຫຼອດໄລຍະຂອງຂະບວນການ. ເຊິ່ງຈະຊ່ວຍຜູ້ຖືກເຄາະຮ້າຍໃນການສະແດງຄວາມຄິດເຫັນ ແລະ ບັງຄັບໃຊ້ສິດຂອງເຂົາເຈົ້າ. ທີ່ປຶກສາທາງດ້ານກົດໝາຍ ຍັງກະກຽມຜູ້ຖືກເຄາະຮ້າຍ ສຳລັບການດຳເນີນຄະດີທາງກົດໝາຍ ແລະ ສາມາດຫຼຸດຜ່ອນຄວາມສ່ຽງຕໍ່ຄວາມບອບຊ້ຳດ້ານຈິດໃຈເພີ່ມເຕີມ ຕໍ່ກັບຜູ້ຖືກເຄາະຮ້າຍ. ມັນເພີ່ມໂອກາດໃນການໃຫ້ການ ແລະ ຄຳໃຫ້ການຂອງພະຍານທີ່ຖືກຕ້ອງ ແລະ ສອດຄ່ອງ ກັນ ແລະ ປະກອບສ່ວນໃຫ້ການດຳເນີນຄະດີຕໍ່ຜູ້ຄ້າມະນຸດປະສົບຜົນສຳເລັດ. ມັນມີຄວາມສຳພັນທີ່ຊັດເຈນ ລະຫວ່າງການເຂົ້າເຖິງຜູ້ຕາງໜ້າທາງດ້ານກົດໝາຍ ແລະ ຜົນໄດ້ຮັບການດຳເນີນຄະດີທີ່ປະສົບຜົນສຳເລັດ.[137]

ການຂາດທີ່ປຶກສາ ຫຼື ຜູ້ຕາງໜ້າທາງດ້ານກົດໝາຍ ອາດເປັນອຸປະສັກແກ່ຜູ້ຖືເຄາະຮ້າຍໃນການເຂົ້າຮ່ວມໃນການດຳເນີນຄະດີທາງກົດໝາຍ. ຜູ້ຖືກເຄາະຮ້າຍອາດຈະບໍ່ມີເວລາໃນການເຂົ້າເຖິງຄຳແນະນຳທາງດ້ານກົດໝາຍ ໃນເວລາທີ່ຕ້ອງການ.

## ຄຳແນະນຳການບໍ່ເຮັດໄພອັນຕະລາຍ

ຖ້າບໍ່ມີທີ່ປຶກສາທາງດ້ານກົດໝາຍ ທີ່ລັດຈ່າຍໃຫ້ນັ້ນ, ກະກຽມການບໍລິການແບບຈິດອາສາດ້ານກົດໝາຍ (pro-bono) ຈາກສະພາທະນາຍຄວາມພາຍໃນ ຫຼື ສະມາຄົມກົດໝາຍ. ທາງເລືອກອື່ນ ແມ່ນເຮັດວຽກຮ່ວມກັບຄູ່ຮ່ວມງານ NGO ເພື່ອຈັດຫາທະນາຍຄວາມ.

ຂໍທີ່ປຶກສາທາງດ້ານກົດໝາຍທີ່ເປັນມືອາຊີບ ທີ່ມີຄວາມຊ່ຽວຊານ ແລະ ທັກສະທີ່ຈຳເປັນ ເພື່ອໃຫ້ຄຳແນະນຳຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ເພື່ອເປັນຕົວແທນເຂົາເຈົ້າຢ່າງມີປະສິດທິພາບ ລະຫວ່າງການດຳເນີນຄະດີທາງດ້ານກົດໝາຍ.

ໃຫ້ຄຳປຶກສາທາງດ້ານກົດໝາຍທີ່ຊັດເຈນ ແລະ ເຂົ້າໃຈງ່າຍ ໂດຍບໍ່ຕ້ອງນຳໃຊ້ຄຳສັບວິຊາການ. ກວດສອບກັບຜູ້ຖືກເຄາະຮ້າຍຢ່າງເປັນປະຈຳ ເພື່ອຮັບປະກັນວ່າເຂົາເຈົ້າເຂົ້າໃຈຂໍ້ມູນທີ່ໄດ້ສະໜອງໃຫ້.

ແຕ່ງຕັ້ງຜູ້ປົກປ້ອງທາງກົດໝາຍ ແກ່ຜູ້ຖືກເຄາະຮ້າຍທີ່ເປັນເດັກ ທີ່ບໍ່ໄດ້ຮັບການເບິ່ງແຍງຈາກຜູ້ປົກຄອງ (ຕົວຢ່າງ ເນື່ອງຈາກການແຍກກັນຢູ່ ຫຼື ການສົມຮູ້ຮ່ວມຄິດຂອງຜູ້ປົກຄອງໃນການຄ້າມະນຸດ) ເພື່ອຮັບປະກັນຜົນປະໂຫຍດສູງສຸດ ແລະ ສະຫວັດດີການຂອງເດັກ ແລະ ເພື່ອເປັນຕົວແທນຂອງເດັກໃນການດຳເນີນຄະດີທາງກົດໝາຍ.

137 ອີງການ UNODC (2008). *ຊຸດເຄື່ອງມືເພື່ອຕ້ານການຄ້າມະນຸດ.* ນິວຢອກ: UN.

# ເອກະສານອ້າງອີງ


ການຕ້ານການເປັນຂ້າທາດລະຫວ່າງປະເທດ (2002). *ການຄ້າມະນຸດ, ສິດທິມະນຸດ: ນິຍາມໃໝ່ໃນການປົກປ້ອງຜູ້ຖືກເຄາະຮ້າຍ.* ລອນດອນ: ການຕ້ານການເປັນຂ້າທາດລະຫວ່າງປະເທດ http://www.antislavery.org/wp-content/uploads/2017/01/hum_traff_hum_rights_redef_vic_protec_final_full.pdf

ອາຊຽນ (2016). *ຄໍາແນະນໍາ ໃນການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ຕໍ່ບົດບາດຍິງ-ຊາຍ.* ຈາກາຕາ: ກອງເລຂາອາຊຽນ. https://asean.org/wp-content/uploads/2012/05/FAASN_gender_8_email_REV.pdf

ຄະນະກໍາມາທິການອາຊຽນວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິແມ່ຍິງ ແລະ ເດັກນ້ອຍ. *ຄູ່ມື ແລະ ຂັ້ນຕອນ ໃນການແກ້ໄຂຄວາມຕ້ອງການອັນຈໍາເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລະດັບພາກພື້ນ.* ເອກະສານຊ້ອນທ້າຍ: ການອ້າງອີງ ແລະ ການປະຕິບັດທີ່ເປັນຕົວແບບທີ່ດີ (n.d.).

ຄະນະກໍາມາທິການອາຊຽນວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິແມ່ຍິງ ແລະ ເດັກນ້ອຍ. (2016). *ການທົບທວນນະໂຍບາຍ, ກົດໝາຍ ແລະ ການປະຕິບັດຕົວຈິງໃນອາຊຽນ ທີ່ກ່ຽວຂ້ອງກັບການກໍານົດຕົວ, ການຄຸ້ມຄອງ ແລະ ການປະຕິບັດຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ.* ຈາກາຕາ: ກອງເລຂາອາຊຽນ t. https://acwc.asean.org/resources/activities-recommendations/regional-review-on-laws-policies-and-practices-within-asean-relating-to-the-identification-management-and-treatment-of-victims-of-trafficking-especially-women-and-children/

ອາຊຽນ (2015). *ວິໄສທັດຂອງປະຊາຄົມອາຊຽນ ປີ 2025.* ຈາກາຕາ: ກອງເລຂາອາຊຽນ. https://asean.org/wp-content/uploads/2021/01/6_AHRD_Booklet.pdf

ອາຊຽນ (2018). *ແຜນແມ່ບົດອາຊຽນ (ASEAN Enabling Masterplan) 2025: ແຜນເປີດນໍາໃຊ້ແຜນແມ່ບົດອາຊຽນ ປີ 2025: ການປົກປັກຮັກສາສິດທິຂອງຄົນພິການ.* ຈາກາຕາ: ກອງເລຂາອາຊຽນ

ອາຊຽນ. *ແຜນປະຕິບັດງານລະດັບພາກພື້ນອາຊຽນ ເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ.* ເບິ່ງທີ່ https://www.asean.org/storage/images/2015/November/27th-summit/ASCC_documents/ASEAN%20Regional%20Plan%20of%20Action%20on%20Elimintation%20of%20Violence%20Against%20WomenAdopted.pdf

ອາຊຽນ (2019). *ຊຸດເຄື່ອງມືຮູບແບບການຈັດຕັ້ງປະຕິບັດຂອງຜູ້ປະຕິບັດຕົວຈິງ ສໍາລັບຄູ່ມື ແລະ ຂັ້ນຕອນ ໃນການແກ້ໄຂຄວາມຕ້ອງການອັນຈໍາເປັນຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດລະດັບພາກພື້ນຂອງ ACWC.* ຈາກາຕາ: ກອງເລຂາອາຊຽນ

ຍຸດທະສາດສິດທິຜູ້ຖືກເຄາະຮ້າຍຂອງແຜນງານ ASEAN-ACT (2021).

ຂະບວນການບາຫຼີ (2015). *ຄູ່ມືດ້ານນະໂຍບາຍວ່າດ້ວຍການກໍານົດຕົວຜູ້ຖືກເຄາະຮ້າຍ: ການແນະນໍາຄູ່ມື ສໍາລັບຜູ້ສ້າງນະໂຍບາຍ ແລະ ຜູ້ປະຕິບັດຕົວຈິງ.* ບາງກອກ, ຫ້ອງການ ການສະໜັບສະໜູນລະດັບພາກພື້ນ ຂອງຂະບວນການບາຫຼີ. https://www.baliprocess.net/UserFiles/baliprocess/File/Policy%20Guide%20on%20Identifying%20VIctims%20of%20Trafficking.pdf

ຂະບວນການບາຫຼີ (2015). *ຄູ່ມືດ້ານນະໂຍບາຍວ່າດ້ວຍການກໍານົດຕົວຜູ້ຖືກເຄາະຮ້າຍ: ການແນະນໍາຄູ່ມື ສໍາລັບຜູ້ສ້າງນະໂຍບາຍ ແລະ ຜູ້ປະຕິບັດຕົວຈິງ.* ບາງກອກ, ຫ້ອງການ ການສະໜັບສະໜູນລະດັບພາກພື້ນ ຂອງຂະບວນການບາຫຼີ.https://www.baliprocess.net/UserFiles/baliprocess/File/Bali%20Process%20Policy%20Guide%20on%20Protecting%20Victims%20of%20Trafficking%20(1).pdf

*ຄູ່ມື ແລະ ຫຼັກການພື້ນຖານວ່າດ້ວຍສິດທິໃນການເຂົ້າເຖິງການປິ່ນປົວ ແລະ ການຊົດເຊີຍໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ຖືກລະເມີດຂອງກົດໝາຍ ວ່າດ້ວຍສິດທິມະນຸດລະຫວ່າງປະເທດທັງໝົດ ແລະ ການລະເມີດກົດໝາຍ ວ່າດ້ວຍມະນຸດສະທໍາລະຫວ່າງປະເທດຢ່າງຮ້າຍແຮງ,* C.H.R. res. 2005/35, U.N. Doc. E/CN.4/2005/ L.10/Add.11 (19 ເມສາ 2005).

ພາລະກິດຄວາມຍຸຕິທໍາລະຫວ່າງປະເທດ (2020). *ການຂູດຮີດທາງເພດເດັກ ທາງອອນລາຍ ໃນປະເທດຟີລິບປິນ: ການວິເຄາະ ແລະ ແນະນໍາ ສໍາລັບລັດຖະບານ, ອຸດສາຫະກໍາ ແລະ ອົງການຈັດຕັ້ງທາງສັງຄົມ.* ເບິ່ງທີ່ https://www.ijm.org/stories/online-sexual-exploitation-of-children-hidden-in-plain-sight

ການປະສານງານລະຫວ່າງໜ່ວຍງານເພື່ອຕ້ານການຄ້າມະນຸດ (ICAT). *ຮ່າງການສົ່ງຂໍ້ສະເໜີແນະນໍາທົ່ວໄປຂອງ CEDAW ກ່ຽວກັບການຄ້າແມ່ຍິງ ແລະ ເດັກ ໃນບໍລິບົດຂອງແຮງງານເຄື່ອນຍ້າຍໃນທົ່ວໂລກ* (n.d.). http://icat.network/sites/default/files/publications/documents/ICAT%20submission%20to%20CEDAW.pdf

ອົງການ IOM (2009). *ການເບິ່ງແຍງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຄໍາແນະນໍາສໍາລັບຜູ້ໃຫ້ບໍລິການດ້ານສຸຂະພາບ.* ເຈນີວາ: ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ https://publications.iom.int/system/files/pdf/ct_handbook.pdf

ອົງການ IOM (2007). *ຄູ່ມືຂອງອົງການ IOM ວ່າດ້ວຍການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໂດຍກົງ.* ເຈນີວາ: ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ https://publications.iom.int/system/files/pdf/iom_handbook_assistance.pdf

ແມັກອາດໍາ, M (2021). *ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ສໍາລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນລັດສະມາຊິກອາຊຽນ: ສັງລວມໂດຍຫຍໍ້.* ບາງກອກ: ແຜນງານ ASEAN-ACT.

ແມັກອາດໍາ, M (2020). *ເສລີພາບໃນການເຄື່ອນຍ້າຍສໍາລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ນະໂຍບາຍ, ກົດໝາຍ ແລະ ພາກປະຕິບັດຕົວຈິງໃນພາກພື້ນອາຊຽນ. ການບັນທຶກຂໍ້ມູນ ໄດ້ຮັບການສະໜັບສະໜູນໂດຍລັດຖະບານອົດສະຕຣາລີ.* ບາງກອກ: ແຜນງານ ASEAN-ACT ເບິ່ງທີ່ https://aseanactpartnershiphub.com/ resources/asean-shelterstudy-mcadam-freedom-ofmovement-for-victims-oftrafficking-final/

ໂອ'ໄບຣອັນ, ເອີຣິນ O'Brien, Erin (2018). *ສິ່ງທ້າທາຍໃນການເລົ່າເລື່ອງການຄ້າມະນຸດ: ຜູ້ຖືກເຄາະຮ້າຍ, ຄົນຮ້າຍ ແລະ ວິລະບູລຸດ.* (ບົດທີ 4: ທັດສະນະຄະຕິກ່ຽວກັບຜູ້ຖືກເຄາະຮ້າຍ ແລະ ເບິ່ງບໍ່ເຫັນ). ກຸ່ມ Taylor & Francis

ສໍານັກງານໃຫຍ່ຄະນະກໍາມາທິການສິດທິມະນຸດ. *ຫຼັກການ ແລະ ຂໍ້ສະເໜີແນະນໍາວ່າດ້ວຍສິດທິມະນຸດ ແລະ ການຄ້າມະນຸດ.* (n.d.) https://www.ohchr.org/Documents/Publications/Traffickingen.pdf

ຫ້ອງການຂອງຜູ້ລາຍງານພິເສດ OSCE ແລະ ຜູ້ປະສານງານຮ່ວມສໍາລັບການຕ້ານການຄ້າມະນຸດ (2021), *ການນໍາໃຊ້ວິທີການທີ່ມີການຄໍານຶງເຖິງບົດບາດຍິງ-ຊາຍ ໃນການຕ້ານການຄ້າມະນຸດ.* ວຽນນາ:OSCE

ຫ້ອງການ OSCE ເພື່ອສະຖາບັນປະຊາທິປະໄຕ ແລະ ສິດທິມະນຸດ (ODIHR) (2004). *ກົນໄກການສົ່ງຕໍ່ລະດັບຊາດ. ຄວາມພະຍາຍາມຮ່ວມກັນໃນການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ຄູ່ມືການປະຕິບັດຕົວຈິງ.* Warsaw: OSCE.

ໂຄງການ Polaris (2018). *ເສັ້ນທາງລາດ, ສີ່ແຍກ ແລະ ທາງອອກ: ແຜນງານສໍາລັບລະບົບ ແລະ ອຸດສາຫະກໍາເພື່ອປ້ອງກັນ ແລະ ຂັດຂວາງການຄ້າມະນຸດ.* https://polarisproject.org/wp-content/uploads/2018/08/A-Roadmap-for-Systems-and-Industries-to-Prevent-and-Disrupt-Human-Trafficking-Health-Care.pdf

Surtees, R ແລະ Laura S. Johnson (2021) *ການຟື້ນຟູ ແລະ ກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຄູ່ມືສໍາລັບຜູ້ປະຕິບັດຕົວຈິງ.* ຫ້ອງການສະໜັບສະໜູນລະດັບພາກພື້ນຂອງຂະບວນການບາຫຼີ (RSO) ແລະ ວໍຊິງຕັນ ດີຊີ. ສະຖາບັນ NEXUS

Surtees, R. (2017). *ການສະໜັບສະໜູນ ການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍ: ຄູ່ມືສໍາລັບພາກພື້ນລຸ່ມແມ່ນໍ້າຂອງ.* ບາງກອກ: ສະຖາບັນ NEXUS, ອົງການ UN-ACT ແລະ ອົງການສຸພານິມິດ https://nexushumantrafficking.files.wordpress.com/2017/04/final-reintegration-guidebook-gms.pdf

ອົງການ UNICEF (2006). *ຄູ່ມືການປົກປ້ອງຜູ້ຖືກເຄາະຮ້າຍທີ່ເປັນເດັກ.* ບັນທຶກທາງວິຊາການຂອງອົງການ. ນິວຢອກ: ອົງການ UNICEF https://ec.europa.eu/antitrafficking/sites/antitrafficking/files/unicef_guidlines_on_protection_of_the_rights_of_teh_child_2006_en_2.pdf

ອົງການສະຫະປະຊາຊາດເພື່ອສົ່ງເສີມຄວາມສະເໝີພາບຍິງ-ຊາຍ (UN Women) (2020). *ການເຄື່ອນໄຫວທາງດ້ານບົດບາດຍິງ-ຊາຍຂອງການຄ້າມະນຸດໃນປະເທດກໍາປູເຈຍ, ມຽນມາ ແລະ ໄທ.* ບາງກອກ: ອົງການ UN Women. https://asiapacific.unwomen.org/-/media/field%20office%20eseasia/docs/publications/2020/02/ap-gendered-dynamics-of-trafficking-s.pdf?la=en&vs=327

ອົງການ UNODC (2009). *ຄູ່ມືການຕ້ານການຄ້າມະນຸດ ສໍາລັບຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທໍາທາງອາຍາ: ການປະເມີນຄວາມສ່ຽງໃນການສືບສວນ-ສອບສວນ ການຄ້າມະນຸດ.* ນິວຢອກ: ອົງການ UNODC. https://www.unodc.org/documents/human-trafficking/TIP_module5_Ebook.pdf

ອົງການ UNODC (2008). *ຊຸດເຄື່ອງມືເພື່ອຕ້ານການຄ້າມະນຸດ.* ນິວຢອກ: ອົງການສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກໍາ

ອົງການ UNODC (1999). *ຄູ່ມືຄວາມຍຸຕິທໍາສໍາລັບຜູ້ຖືກເຄາະຮ້າຍ: ກ່ຽວກັບການນໍາໃຊ້ ແລະ ການນໍາໃຊ້ຖະແຫຼງການວ່າດ້ວຍຫຼັກການພື້ນຖານຂອງຄວາມຍຸຕິທໍາ ສໍາລັບຜູ້ຖືກເຄາະຮ້າຍຈາກອາຊະຍາກໍາ ແລະ ການສວຍໃຊ້ອໍານາດ.* ນິວຢອກ: ອົງການ UNODC.

Zimmerman, C. & Watts, C. (2003). *ຄໍາແນະນໍາດ້ານຈັນຍາບັນ ແລະ ຄວາມປອດໄພໃນການສໍາພາດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັດເພດຍິງຂອງອົງການອະນາໄມໂລກ.* ລອນດອນ: ໂຮງຮຽນສຸຂະພາບ ແລະ ແພດສາດເຂດຮ້ອນຂອງລອນດອນ ໂດຍການສະໜັບສະໜູນຈາກແຜນງານດາຟີນີຂອງຄະນະກໍາມາທິການເອີລົບ ແລະ ອົງການອະນາໄມໂລກ. https://www.who.int/mip/2003/other_documents/en/Ethical_Safety-GWH.pdf

# ເອກະສານຊ້ອນທ້າຍ 1: ຕາຕະລາງ ສະແດງການແຍກຈຳນວນຜູ້ເຂົ້າຮ່ວມໃນກອງປະຊຸມປຶກສາຫາລືລະດັບຊາດ

| ປະເທດ | ລັດຖະບານ | ອົງການທີ່ບໍ່ສັງກັດລັດຖະບານ | ACWC | ທັງໝົດ |
|---|---|---|---|---|
| ກຳປູເຈຍ | 20 | 14 | 2 | 36 |
| ອິນໂດເນເຊຍ | 26 | 22 | 1 | 49 |
| ສປປ ລາວ | 30 | 7 | 0 | 37 |
| ມາເລເຊຍ* | 0 | 1 | 0 | 1 |
| ຟີລິບປິນ | 12 | 14 | 0 | 26 |
| ສິງກະໂປ* | 0 | 3 | 0 | 3 |
| ໄທ | 15 | 21 | 2 | 38 |
| ຫວຽດນາມ | 33 | 13 | 0 | 46 |
| **ທັງໝົດ** | **136** | **95** | **5** | **236** |

*ການປຶກສາຫາລື ສຳລັບມາເລເຊຍ ແລະ ສິງກະໂປດຳເນີນແບບທະວິພາຄີກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ

**ຄູ່ມືອາຊຽນ ວ່າດ້ວຍການບໍ່ເຮັດໃພອັນຕະລາຍ ສໍາລັບຜູ້ຕອບໂຕ້ດ່ານໜ້າ:**
ການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ